ໄກສອນ ພົມວິຫານ

# ບົນເສັ້ນທາງ ກ້າວຂຶ້ນສັງຄົມນິຍົມ ຢ່າງມີໄຊ

ສຳນັກພິມຈຳໜ່າຍ ສປປ. ລາວ
1981

ໄກສອນ ພົມວິຫານ

# ບົນເສັ້ນທາງ ກ້າວຂຶ້ນສັງຄົມນິຍົມ ຢ່າງມີໄຊ

I

ສຳນັກພິມຈຳໜ່າຍ ສປປ. ລາວ
1981

ບົດລາຍງານຂອງ

# ທ່ານ ໄກສອນ ພົມວິຫານ

ນາຍົກລັດຖະມົນຕີ ກ່າວຕໍ່ກອງປະຊຸມສະພາປະຊາຊົນສູງສຸດ

ຄັ້ງວັນທີ 6 ມັງກອນ 1981

* ທ່ານປະທານສຸພານຸວົງ ທີ່ນັບຖື,

ບັນດາທ່ານຮອງປະທານສະພາປະຊາຊົນສູງສຸດທີ່ນັບຖື,

ບັນດາທ່ານຮອງນາຍົກລັດຖະມົນຕີ ທີ່ນັບຖື,

ທ່ານທີ່ປຶກສາລັດຖະບານ ທີ່ນັບຖື,

ບັນດາທ່ານສະມາຊິກສະພາປະຊາຊົນສູງສຸດ ທີ່ນັບຖື,

ມື້ນີ້, ຂ້າພະເຈົ້າຖືເປັນກຽດຢ່າງສູງ ແລະຮູ້ສຶກປິຕິຊົມຊື່ນເປັນຢ່າງຍິ່ງ ທີ່ໄດ້ຕາງໜ້າສະພາລັດຖະມົນຕີມາລາຍງານຕໍ່ກອງປະຊຸມສະພາປະຊາຊົນສູງສຸດກ່ຽວກັບການສັງລວມຕີລາຄາສະພາບການທຸກດ້ານຂອງປະເທດເຮົາ ໃນ ໕ ປີຜ່ານມາ ແລະ ສະພາບການແຫ່ງການປະຕິບັດແຜນການ ໓ ປີ ( ໑໙໗໘ - ໑໙໘໐ ) ແລະ ທິດທາງໜ້າທີ່ຂອງແຜນການ ໕ ປີ ແຫ່ງລັດ ( ໑໙໘໑ - ໑໙໘໕ ) ຊຶ່ງເປັນແຜນການໄລຍະຍາວຄັ້ງທຳອິດ ແຫ່ງການປົກປັກຮັກສາ ແລະສ້າງສາປະເທດຊາດສັງຄົມນິຍົມ ທີ່ແສນຮັກ ຂອງພວກເຮົາ ອັນເປັນການພັນລະນາຍາຍ ການປະຕິບັດມະຕິຄັ້ງທີ ໒ ຂອງສູນກາງພັກປະຊາຊົນປະຕິວັດລາວ ໃຫ້ປາກົດເປັນຈິງ.

ພວກເຮົາຫາກໍ່ໄດ້ເຫັນກັບຕາກ່ຽວກັບບັນຍາກາດຖ່ວງທ່າອັນຟົດຟື້ນຄຶກຄື້ນ ແລະ ເຕັມໄປດ້ວຍຄວາມຫະນຶງໃຈອັນໃຫຍ່ຍິ່ງໃນມື້ສະເຫລີມສະຫລອງວັນຊາດ ຂອງພວກເຮົາຄົບຮອບ ໔ ປີ. ຕາມຂ້າພະເຈົ້າຄິດວ່າ ມີແຕ່ຊາດທີ່ໄດ້ຮັບການເຝິກຝົນຫລໍ່ຫລອມ ໃນການຕໍ່ສູ້ອັນຫຍຸ້ງຍາກລຳບາກ ແລະຍາວນານ,ເຊື່ອໝັ້ນຢ່າງຕາຍໃຈໃນໄຊຊະນະ ແລະອານາຄົດອັນໃສແຈ້ງຂອງຊາດຕົນ ເທົ່ານັ້ນຈຶ່ງຈະມີຖ່ວງທ່າຄືແນວນັ້ນໄດ້. ສິ່ງດັ່ງກ່າວຍິ່ງເຮັດໃຫ້ພວກເຮົາຜູ້ເຊິ່ງໄດ້ຮັບຄວາມໄວ້ວາງໃຈຈາກປະຊາຊົນບັນດາຊົນຊາດໃຫ້ເຮັດໜ້າທີ່ຄຸ້ມຄອງປະເທດຊາດ,ກຳໂຊກຊະຕາຂອງຊາດນັ້ນເຫັນຢ່າງເລິກເຊິ່ງກ່ຽວກັບຄວາມຮັບຜິດຊອບອັນໜັກໜ່ວງຂອງຕົນ.

## *ພາກທີ ໜຶ່ງ*

## ໄຊຊະນະອັນໃຫຍ່ຫລວງຫນັກແຫນ້ນ 5 ປີ ແຫ່ງການປົກປັກຮັກສາ ແລະກໍ່ສ້າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ການ ປະຕິບັດຕາມແຜນການ 3 ປີ ແຫ່ງລັດ 1978-1980

ບັນດາທ່ານ ທີ່ນັບຖື,

ໃນ ໕ ປີທີ່ຜ່ານມາ, ການປົກປັກຮັກສາປະເທດຊາດ, ຟື້ນຟູ ແລະກໍ່ສ້າງເສດຖະກິດ, ຂະຫຍາຍວັດທະນະທຳ, ສ້າງສາປະເທດຊາດຄືນໃຫມ່ ຂອງປະຊາຊົນເຮົາໄດ້ດຳເນີນໄປໃນເງື່ອນໄຂທີ່ມີຄວາມສະດວກໂດຍພື້ນຖານ, ແຕ່ກໍ່ຕ້ອງໄດ້ຜ່ານພົ້ນການທົດສອບຢ່າງດຸເດືອດຄັດຂຽວຂາດບໍ່ຈັກວ່າເທົ່າໃດ.

ດ້ວຍການກຳເນີດຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ຊາດຂອງພວກເຮົາ ໄດ້ກ້າວເຂົ້າສູ່ສັງກາດໃຫມ່, ສັງກາດແຫ່ງເອກະລາດ, ອິສະລະພາບ ແລະສັງຄົມນິຍົມ; ລະບອບການປົກຄອງລ່າເມືອງຂຶ້ນ, ສັກດີນາໄດ້ຖືກໂຄ່ນລົ້ມຢ່າງສິ້ນເຊີງ, ອຳນາດການປົກຄອງປະຊາຊົນໄດ້ຮັບການສ້າງຕັ້ງຂຶ້ນ, ປະຊາຊົນບັນດາຊົນຊາດ ໄດ້ກາຍເປັນເຈົ້າຂອງປະເທດຊາດ ແລະພວມທຸ້ມເທກຳລັງວັງຊາ, ສະຕິປັນຍາຂອງຕົນເຂົ້າໃນການສ້າງສາປະເທດຊາດບ້ານເມືອງຢ່າງເບີກບານຫ້າວຫັນ. ຄວາມອາດສາມາດອັນບົ່ມຊ້ອນ ແລະທ່າແຮງໃນຫລາຍດ້ານຂອງຊາດໄດ້ຮັບການຂຸດຄົ້ນແລະ

ເສີມຂະຫຍາຍເປັນກ້າວໆມາ.

ໃນຂະນະດຽວກັນນັ້ນ ການປະຕິວັດຫວຽດນາມກໍ່ໄດ້ ຮັບໄຊຊະນະຢ່າງບໍລິບູນ, ທົ່ວປະເທດໄດ້ເປັນເອກະພາບກັນ ແລະກ້າວເຂົ້າສູ່ການກໍ່ສ້າງສັງຄົມນິຍົມ. ສາທາລະນະລັດສັງຄົມນິຍົມຫວຽດນາມ ໄດ້ຕີເອົາຊະນະສົງຄາມຮຸກຮານ ຂອງພວກຂະຫຍາຍອານາເຂດແຜ່ອຳນາດຈາດໃຫຍ່ຈີນ ແລະ ລູກມື, ພ້ອມກັນນັ້ນ ກໍ່ໄດ້ຮັບຜົນສຳເລັດອັນໃຫຍ່ຫລວງໃນພາລະກິດກໍ່ສ້າງສັງຄົມນິຍົມ. ປະຊາຊົນກຳປູເຈຍໄດ້ໂຄ່ນລົ້ມກຸ່ມດັບສູນເຊື້ອຊາດໂປນປົດ-ອຽງສາລີລົງຢ່າງສິ້ນເຊີງ, ສະຖາປານາສາທາລະນະລັດ ປະຊາຊົນກຳປູເຈຍຂຶ້ນ, ເຮັດໃຫ້ປະເທດຊາດ ໄດ້ຮັບການຟື້ນຊີບຄືນໃໝ່ ແລະກ້າວເດີນໄປຕາມເສັ້ນທາງປະຕິວັດທີ່ແທ້ຈິງ ເສັ້ນທາງກ້າວຂຶ້ນສັງຄົມນິຍົມ. ການຂະຫຍາຍຕົວຢ່າງມີໄຊດັ່ງກ່າວນັ້ນໄດ້ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ ສາມ ປະເທດອາຊຽນອງ ໃນອິນດູຈີນ ລາວ, ຫວຽດນາມ ແລະ ກຳປູເຈຍ ໃນການເພີ່ມທະວີ ຄວາມສາມັກຄີຮ່ວມມື ແລະຊ່ວຍເຫລືອກັນ ຢ່າງຮອບດ້ານອັນແນໃສ່ປົກປັກຮັກສາເອກະລາດຂອງແຕ່ລະປະເທດ, ກໍ່ສ້າງສັງຄົມນິຍົມ ແລະພ້ອມກັນປົກປັກຮັກສາປ້ອມແນວໜ້າຂອງການປະຕິວັດ, ປະກອບສ່ວນເຂົ້າໃນການຮັກສາສັນຕິພາບ ແລະ ສະຖຽນລະພາບ ໃນພາກພື້ນອາຊີອາຄະເນ.

ຢູ່ໃນໂລກ, ສາມ ກະແສຟອງປະຕິວັດ ໄດ້ສືບຕໍ່ ຂະຫຍາຍຕົວຢ່າງແຂງແຮງ, ໂດຍສະເພາະຢ່າງຍິ່ງແມ່ນການເຕີບໃຫຍ່ເຂັ້ມແຂງຂອງສະຫະພາບໂຊວຽດ ກໍ່ຄືຂອງໝົດລະບົບສັງຄົມນິຍົມ-ກຳແພງ

ເພັດຂອງການປະຕິວັດ ແລະສັນຕິພາບຂອງໂລກ ໄດ້ສືບຕໍ່ຢູ່ໃນທ່າບຸກ ແລະຍາດເອົາໄຊຊະນະມາໄດ້ຢ່າງຕໍ່ເນື່ອງກັນ, ເຮັດໃຫ້ຈັກກະພັດນິຍົມ ແລະອິດທິກຳລັງປະຕິການສາກົນອື່ນໆນັບມື້ນັບຕົກເລິກເຂົ້າໃນທ່າຮັບຖຽງຕາແຈ ແລະຕົກເລິກເຂົ້າໃນວິກິດການທີ່ບໍ່ມີທາງອອກ. ທັງໝົດດັ່ງກ່າວນັ້ນໄດ້ປຸກລະດົມຢ່າງແຂງແຮງ ແລະເປັນບ່ອນອີງອັນໜັກແໜ້ນ ໃຫ້ແກ່ພາລະກິດປົກປັກຮັກສາແລະສ້າງສາປະເທດຊາດຂອງປະຊາຊົນເຮົາ.

ຢ່າງໃດກໍ່ດີ, ໔ ປີທີ່ຜ່ານມາ ເປັນຊ່ວງໄລຍະທີ່ການປະຕິວັດເຮົາໄດ້ຜ່ານຜ່າຄວາມຫຍຸ້ງຍາກ ແລະການທົດສອບນາໆປະການ.

ອັນທີ່ພົ້ນເດັ່ນກ່ອນໝູ່ ແມ່ນພວກເຮົາໄດ້ປະເຊີນໜ້າ ໂດຽກົງກັບການສຳພັນຝືນປະຕິວັດ ທີ່ໃຫຍ່ກວ່າໝູ່ ໃນປະຫວັດສາດລະຫວ່າງຈັກກະພັດນິຍົມ ກັບລັດທິຂະຫຍາຽອານາເຂດ, ແຜ່ອຳນາດຊາດໃຫຍ່ ໃນທັນທີ ທີ່ພວກເຮົາຍາດໄດ້ເອກະລາດ ພາຽຫລັງການຕໍ່ສູ້ເປັນເວລາ ໓໐ ກວ່າປີ. ພວກເຂົາໄດ້ດຳເນີນການມ້າງເພທຳລາຽ ສາທາລະນະລັດທີ່ໜຸ່ມນ້ອຍ ຂອງພວກເຮົາ ໃນທຸກດ້ານຢ່າງດື້ດ້ານປ່ວງບາ ແລະເລິກແລບ ໂຫດຫ້ຽມ ຫວັງເຮັດໃຫ້ພວກເຮົາອ່ອນເພັຽລົງ ແລະຮຸກຮານກືນກິນປະເທດເຮົາ.

ດ້ານນຶ່ງອີກ, ພວກເຮົາກໍ່ຕ້ອງຮີບຮ້ອນແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ,ສ້າງສາປະເທດຊາດໃນເງື່ອນໄຂທີ່ເສດຖະກິດ, ວັດທະນະທຳດ້ອຽພັດທະນາ, ຊ້ຳພັດຖືກສົງຄາມທຳລາຽຢ່າງ ໜັກໜ່ວງ ແລະເຕັມໄປດ້ວຍຜົນຮ້າຍ ອັນຮ້າຍແຮງທີ່ລະບອບເກົ່າປະໄວ້. ໃນຂະນະດຽວກັນນັ້ນພວກເຮົາກໍ່ພົບກັບຄວາມຫຍຸ້ງຍາກບໍ່ຈັກ

ວ່າເທົ່າໃດ ອັນເນື່ອງມາຈາກ ບໍ່ທັນມີປະສົບການກ່ຽວກັບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ ແລະຄຸ້ມຄອງສັງຄົມ ໃນບາດກ້າວເດີນທີວທີ ແຫ່ງການໄຂຂອງທາງຂຶ້ນສູ່ສັງຄົມນິຍົມ.

ຢ່າງໃດກໍ່ຕາມ ພາຍໃຕ້ການນຳພາອັນຖືກຕ້ອງສ່ອງໃສ່ຂອງພັກ ແລະລັດເຮົາ, ແລະດ້ວຍການສະໜັບ ສະໜູນຊ່ວຍເຫຼືອອັນໃຫຍ່ຫລວງຂອງບັນດາປະເທດອ້າຍນ້ອງ ແລະເພື່ອນມິດ, ປະຊາຊົນບັນດາຊົນຊາດ, ບັນດາກຳລັງປະກອບອາວຸດ ແລະກຳລັງປ້ອງກັນຄວາມສະຫງົບຂອງພວກເຮົາໄດ້ເສີມຂະຫຍາຍມູນເຊື້ອປະຕິວັດຂອງຊາດ, ເຊີດຊູນ້ຳໃຈຮັກຊາດຮັກສັງຄົມນິຍົມ, ບາກບັ່ນພະຍາຍາມກ້າວຂຶ້ນແລະຍາດເອົາໄຊຊະນະມາໄດ້ຢ່າງໃຫຍ່ຫລວງ,ຮອບດ້ານ ແລະມີລັກສະນະພື້ນຖານ.

*1. ໃນແນວຮົບປ້ອງກັນຊາດ, ປ້ອງກັນຄວາມສະຫງົບ*

ຈຸດດີທີ່ເດັ່ນກວ່າໝູ່ແມ່ນພັກ ແລະລັດເຮົາໄດ້ເຫັນແຈ້ງການທໍລະຍົດທີ່ອັນຕະລາຍຂອງພວກຂະຫຍາຍອານາເຂດ, ແຜ່ອຳນາດຊາດໃຫຍ່ແລະການສົມຮູ້ຮ່ວມຄິດລະຫວ່າງພວກເຂົາ ກັບຈັກກະພັດນິຍົມ ແລະອິດທິກຳລັງປະຕິການອື່ນໆ, ກໍ່ຄືກົນອຸບາຍເລລ່ຽມ ອັນເລິກແລບໂຫດຫຽມຂອງພວກເຂົາ. ບົນພື້ນຖານນັ້ນ ພັກ ແລະລັດເຮົາໄດ້ມີແຜນນະໂຍບາຍເອົາ ໔ ໜ້າທີ່ຍຸດທະສາດຄື ປົກປັກຮັກສາປະເທດຊາດ ແລະກໍ່ສ້າງສັງຄົມນິຍົມຕິດພັນກັນ,ຕັດສິນໃຈເພີ້ມທະວີກຳລັງໃນທຸກດ້ານ, ສຶກສາອົບຮົມທົ່ວກອງທັບ ທົ່ວປວງຊົນໃຫ້ເຊີດຊູສະຕິລະວັງຕົວກຽມພ້ອມສູ້ຮົບຢູ່ສະເໝີ,ເດັດດ່ຽວປົກປັກຮັກສາເອກະລາດ,ອະທິປະໄຕຂອງຊາດໄວ້ໃຫ້ໝັ້ນຄົງ, ພ້ອມກັນນັ້ນ

ພັກ ແລະລັດເຮົາກໍ່ໄດ້ປະຕິບັດຍຸດໂທບາຍອັນຄ່ອງແຄ່ວ, ລ້ອມປ່ຽວ ແລະພັນແຍກສັດຕູ, ຕີສັດຕູໃຫ້ຖອຍໄປເທື່ອລະກ້າວ, ທັບມ້າງກົນອຸບາຍຍຸດທະສາດແຕ່ລະອັນຂອງພວກເຂົາໃຫ້ແຕກທະລາຍໄປ.

ເວົ້າລວມແລ້ວພວກເຮົາທັບມ້າງແລະຕີຖອຍກົນອຸບາຍເລ່ລ່ຽມທຳລາຍມ້າງເພຂອງສັດຕູໃນຫລາຍຂົງເຂດ, ໄດ້ດັບສູນ ແລະເຮັດໃຫ້ກຳລັງໃຕ້ດິນກໍ່ດີກຳລັງຂອງສັດຕູທີ່ມາຈາກພາຍນອກຖືກແຕກທະລາຍໄປເປັນສ່ວນໃຫຍ່, ສະກັດກັ້ນ ແລະທັບມ້າງກົນອຸບາຍກໍ່ການກະບົດໂຄ່ນລົ້ມຂອງສັດຕູ, ປົກປັກຮັກສາຄວາມປອດໄພໃຫ້ແກ່ບັນດາອົງການນຳຂອງພັກແລະລັດໄວ້ໄດ້ເປັນຢ່າງດີ. ພວກເຮົາກໍ່ໄດ້ທັບມ້າງກົນອຸບາຍອັນໂຫດຫ້ຽມຂອງສັດຕູໃນການຍຸແຫຍ່ແບ່ງແຍກແລະກໍ່ກອງປຸ້ນຂຶ້ນໃນເຂດຊົນຊາດນັ້ນໃຫ້ແຕກທະລາຍໄປໂດຍພື້ນຖານ, ນຳເອົາປະຊາຊົນທີ່ຖືກສັດຕູຫລອກລວງກັບມາທາງການປະຕິວັດໄດ້ເປັນສ່ວນໃຫຍ່, ໄດ້ຈັດຕັ້ງຊີວິດການເປັນຢູ່ຄືນໃຫມ່ ໃຫ້ປະຊາຊົນເຫລົ່ານີ້ ແລະເຮັດໃຫ້ເຂດຊົນຊາດນັບມື້ນັບມີຄວາມ ສະຫງົບປົກກະຕິ. ພວກເຮົາກໍໄດ້ແກ້ໄຂໄພສັງຄົມເກົ່າໄດ້ເປັນຢ່າງດີພໍສົມຄວນ, ໄດ້ສຶກສາອົບຮົມ ແລະຊ່ວຍເຫລືອພວກປະສົບ ເຄາະຮ້າຍຈາກໄພສັງຄົມເກົ່າ ໃຫ້ສ້າງຊີວິດຄືນໃຫມ່ ແລະເຂົ້າຮ່ວມໃນການສ້າງສາບ້ານເມືອງ.

ໃນດ້ານອື່ນ ພວກເຮົາກໍ່ໄດ້ພະຍາຍາມເຮັດໃຫ້ຊັ້ນຄົນຕ່າງໆໃນຫມູ່ປະຊາຊົນ ເຊີດຊູສະຕິລະວັງຕົວຕໍ່ຖ້ອຍທຳນອງສົງຄາມຈິດຕະສາດ, ເລ່ລ່ຽມແຊກຊຶມມ້າງເພທຳລາຍ ແລະການພັນປ່ຽນ ໂດຍສັນຕິຂອງສັດຕູ, ເຮັດໃຫ້ຄວາມສາມັກຄີປວງຊົນ, ຄວາມສາມັກຄີ

ບັນດາຊົນຊາດນັບມື້ນັບໄດ້ຮັບການປັບປຸງ ໃຫ້ແໜ້ນແຟ້ນ ກໍ່ຄືເຮັດໃຫ້ຄວາມສາມັກຄີ ລະຫວ່າງປະເທດເຮົາ ກັບຫວຽດນາມ, ກຳປູເຈຍ, ສະຫະພາບໂຊວຽດ ແລະບັນດາປະເທດສັງຄົມນິຍົມ ອ້າຍນ້ອງນັບມື້ນັບໄດ້ຮັບການເພີ້ມທະວີ, ທັບມ້າງກົນອຸບາຍ ແບ່ງແຍກຂອງສັດຕູໃຫ້ປະລາໄຊໄປ.

ບັນດາກຳລັງປະກອບອາວຸດ ແລະກຳລັງປ້ອງກັນ ຄວາມສະຫງົບຂອງພວກເຮົາກໍ່ໄດ້ເຕີບໃຫຍ່ເຂັ້ມແຂງຂຶ້ນ ຢ່າງໄວວາໃນທຸກດ້ານ, ຫລາຍການຈັດຕັ້ງ ແລະເຫລົ່າຮົບໃໝ່ ໄດ້ຮັບການກໍ່ສ້າງຂຶ້ນ. ການປະກອບໃຫ້ກຳລັງທັບຂອງພວກເຮົາ ກໍ່ໄດ້ຮັບການເພີ້ມເຕີມ ແລະດັດແປງໃຫ້ດີຂຶ້ນ; ກອງທັບ ແລະກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໄດ້ເຂົ້າສູ່ການກໍ່ສ້າງເປັນລະບຽບແບບແຜນ ; ລັດໄດ້ປະກາດໃຊ້ລະບອບ ປະດັບຊັ້ນໃຫ້ກອງທັບ ແລະກຳລັງປ້ອງກັນຄວາມສະຫງົບ ອັນເປັນຂີດໝາຍ ແຫ່ງການເຕີບໃຫຍ່ຂອງບັນດາກຳລັງປະກອບອາວຸດຂອງພວກເຮົາ. ພາຍໃຕ້ການນຳພາຂອງຄະນະພັກ ແລະ ອຳນາດການປົກຄອງ ຂັ້ນຕ່າງໆ, ກອງທະຫານແລະກຳລັງປ້ອງກັນຄວາມສະຫງົບ ຂອງພວກເຮົາໄດ້ສູ້ຊົນຜ່ານຜ່າທຸກຄວາມຫຍຸ້ງຍາກລຳບາກເສຍສະລະ, ກໍ່ສ້າງກຳລັງຂອງຕົນໃຫ້ນັບມື້ນັບເຂັ້ມແຂງ, ກຽມພ້ອມສູ້ຮົບ ແລະສູ້ຮົບດີ, ສຳເລັດໜ້າທີ່ທີ່ໄດ້ຮັບມອບໝາຍຢ່າງດີເດັ່ນ.

ເຖິງຢ່າງນັ້ນກໍ່ຕາມ, ໃນໄລຍະທີ່ຜ່ານມາ ພະນັກງານ, ລັດຖະກອນ, ນັກຮົບກໍ່ຄືປະຊາຊົນເຮົາ ຈຳນວນນຶ່ງຍັງຮັບຮູ້ສັດຕູຢ່າງມະລຸ້ມມະລ່ວຍ, ຂາດສະຕິລະວັງຕົວອັນເປັນບ່ອນເພີໃຫ້ສັດຕູແລະ

ພວກຄົນບໍ່ດີສວຍໃຊ້ກໍ່ຄວາມເສັຽຫາຍໃຫ້ແກ່ພວກເຮົາຈຳນວນນຶ່ງ. ຄະນະພັກ, ອຳນາດການປົກຄອງ ແລະອົງການຈັດຕັ້ງ ມະຫາຊົນ ໃນຫລາຍບ່ອນຍັງບໍ່ທັນເອົາໃຈໃສ່ ຢ່າງເຕັມເມັດເຕັມໜ່ວຍເຖິງ ການສຶກສາອົບຮົມ, ລ້ຽງດູ ແລະນຳພາການເຄື່ອນໄຫວຂອງກອງ ທະຫານ ແລະກຳລັງປ້ອງກັນຄວາມສະຫງົບຂອງຕົນ. ຫລາຍທ້ອງ ຖິ່ນຍັງບໍ່ທັນຊີ້ນຳເປັນຢ່າງດີ ການປະສານສົມທົບ ລະຫວ່າງ ການ ເຄື່ອນໄຫວໃນ ໓ ດ້ານ ຄື: ການເມືອງ, ເສດຖະກິດ ແລະການ ທະຫານ, ການປ້ອງກັນຄວາມສະຫງົບ, ອັນເປັນການຈຳກັດໄຊຊະ ນະຂອງພວກເຮົາ.

## 2. *ໃນແນວຣົບເສດຖະກິດ-ການເງິນ*

ໃນ ໕ ປີທີ່ຜ່ານມາ, ການຟື້ນຟູເສດຖະກິດ, ຂະຫຍາຍ ການ ຜະລິດ, ດັດສ້າງ ແລະກໍ່ສ້າງເສດຖະກິດຕາມທິດທາງສັງຄົມນິຍົມ ຂອງພວກເຮົານັ້ນ ເຖິງວ່າມີຄວາມສະດວກອັນເປັນພື້ນຖານຫລາຍ ປະການກໍ່ຕາມ, ແຕ່ກໍ່ປະສົບກັບຄວາມຫຍຸ້ງຍາກສັບສົນ ໃນຫລາຍ ດ້ານ. ເສດຖະກິດຢູ່ໃນເຂດປົດປ່ອຍເກົ່າ ຊຶ່ງດ້ອຍພັດທະນາ ຢູ່ແລ້ວ ຊ້ຳຖືກສົງຄາມ ທຳລາຍຢ່າງໜັກໜ່ວງ, ສ່ວນຢູ່ໃນເຂດ ປົດປ່ອຍ ໃໝ່ພັດຖືກຜົນສະທ້ອນຢ່າງເລິກເຊິ່ງຈາກເສດຖະກິດລ່າເມືອງຂຶ້ນ ແບບໃໝ່ ແລະ ຂຶ້ນກັບຕະຫລາດຕ່າງປະເທດ ຢ່າງໜັກໜ່ວງ. ພວກເຮົາກໍ່ຍັງຕ້ອງໄດ້ຈັດແບ່ງກຳລັງຄົນ, ກຳລັງຊັບຢ່າງເໝາະ ສົມໃຫ້ແກ່ການປ້ອງກັນຊາດ ແລະໃຫ້ແກ່ປະຊາຊົນ ຈຳນວນຫລາຍ ແສນຄົນທີ່ຖືກສັດຕູກວາດເອົາໄປນັ້ນກັບຄືນບ້ານເດີມ ເພື່ອກໍ່ສ້າງຊີ ວິດໃໝ່ ໃຫ້ເປັນປົກກະຕິ. ຊ້ຳບໍ່ໜຳຫລາຍເຂດຂອງປະເທດຍັງ

ປະສົບກັບໄພທຳມະຊາດຢ່າງໜັກໜ່ວງ; ໄພແຫ້ງແລ້ງ ແລະໄພນ້ຳຖ້ວມໃນປີ ໑໙໗໘, ໑໙໗໙ ຢູ່ເຂດກາງ, ເຂດໃຕ້ນັບວ່າໃຫຍ່ໂຕເຊິ່ງບໍ່ເຄີຍມີໃນຫລາຍສິບປີມານີ້. ໃນຂະນະດຽວກັນນັ້ນ ສັດຕູຊ້ຳພັດຊຸນຂຽວ ດຳເນີນກົນອຸບາຍ ອັນເລິກແລບ ໃນການທຳລາຍເສດຖະກິດຂອງພວກເຮົາ ອັນເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນເຮົາພົບຄວາມຫຍຸ້ງຍາກ ແລະເຮັດໃຫ້ສະພາບເສດຖະກິດຢູ່ໃນບາງບໍລິເວນບໍ່ເປັນປົກກະຕິ.

ຢ່າງໃດກໍ່ດີ ຍ້ອນພັກ ແລະລັດມີແນວທາງຖືກຕ້ອງ, ປະຊາຊົນບັນດາຊົນຊາດ ມີຄວາມບາກບັ່ນ ພະຍາຍາມ ຢ່າງໃຫຍ່ຫລວງ ແລະໂດຍໄດ້ຮັບການຊ່ວຍເຫລືອອັນມີພົນສັກສິດຈາກບັນດາປະເທດອ້າຍນ້ອງຈາກບັນດາປະເທດເພື່ອນມິດ ແລະບັນດາອົງການຈັດຕັ້ງສາກົນ, ພວກເຮົາກໍ່ສາມາດຜ່ານຜ່າຂໍ້ຫຍຸ້ງຍາກຫລາຍປະການໄປໄດ້, ເຮັດໃຫ້ການຜະລິດມີການຂະຫຍາຍຕົວອັນຮັບປະກັນໃຫ້ຊີວິດການເປັນຢູ່ຂອງປະຊາຊົນ ບັນດາຊົນຊາດ ເປັນປົກກະຕິ, ມີບາງບ່ອນກໍ່ໄດ້ຮັບການປົວແປງ ໃຫ້ດີຂຶ້ນ, ຮັບປະກັນການ ເຄື່ອນໄຫວຕ່າງໆຂອງລັດ ໃນສະພາບການໃໝ່. ພ້ອມກັນນັ້ນ ພວກເຮົາ ກໍ່ໄດ້ເລີ່ມຕົ້ນກໍ່ສ້າງ ໂຄງປະກອບເສດຖະກິດໃໝ່, ຈັດຕັ້ງລະບອບແຈກຢາຍໃໝ່ໃຫ້ເປັນຮູບເປັນຮ່າງຂຶ້ນ ແລະດຳເນີນການບຳລຸງກໍ່ສ້າງຖັນແຖວພະນັກງານ ທີ່ເຮັດວຽກງານເສດຖະກິດ.

ໃນ ໕ ປີທີ່ຜ່ານມາ, ການຜະລິດກະສິກຳ-ປ່າໄມ້ ໄດ້ ຂະຫຍາຍຕົວຢ່າງຮອບດ້ານ ພໍສົມຄວນ ແລະມີຄວາມກ້າວໜ້າ ຢ່າງເປັນໜ້າປິຕິຊົມຊື່ນ. ຜົນງານທີ່ພົ້ນເດັ່ນຂຶ້ນແມ່ນປະລິມານການຜະ

ລິດ ທັນຍາຫານ ໃນທົ່ວປະເທດ ສຳລັບປີ ໑໙໘໐ ໄດ້ເພີ່ມ ຂຶ້ນ ໓໐໐.໐໐໐ ໂຕນ. ທຽບໃສ່ປີ ໑໙໗໔, ນັບວ່າເປັນຄັ້ງທຳອິດໃນປະຫວັດສາດທີ່ປະເທດເຮົາສາມາດທຳສະຖິຕິໃນດ້ານການປູກເຂົ້າດ້ວຍຜົນເກັບກ່ຽວ ໑.໐໐໐.໐໐໐ ກວ່າໂຕນຕໍ່ປີ. ໝາກຜົນ ດັ່ງກ່າວນັ້ນເວົ້າສຳລັບປະເທດເຮົາແລ້ວ ແມ່ນມີຄວາມໝາຍອັນໃຫຍ່ຫຼວງທີ່ສຸດ, ມັນມີຄຸນປະໂຫຍດອັນຕັ້ງໜ້າຕໍ່ການຜະລິດແລະຊີວິດການເປັນຢູ່ໃນທຸກດ້ານຂອງປະຊາຊົນ. ພາຍໃນ ໔ ປີ ພວກເຮົາສາມາດຟື້ນຟູນາເຮື້ອ ແລະ ຊ່າວນາໃໝ່ ໄດ້ເກືອບ ໑໐໐.໐໐໐ ເຮັກຕາ, ລະບົບເໝືອງຝາຍ ແລະ ຊົນລະປະທານກໍ່ໄດ້ຮັບການປັບປຸງ ແລະ ເປີດກວ້າງໃນຫຼາຍແຫ່ງ, ເຮັດໃຫ້ເນື້ອທີ່ໄດ້ຮັບນ້ຳຈາກຊົນລະປະທານເພີ່ມຂຶ້ນເປັນ ໑໑໔.໘໐໐ ເຮັກຕາ. ເນື້ອທີ່ນາແຊງກໍ່ເພີ່ມຂຶ້ນ ໓ ເທົ່າ, ການເຮັດນາແຊງ ໄດ້ກາຍເປັນຄວາມຊິນເຄີຍຂອງຊາວນາ ໃນຫຼາຍທ້ອງຖິ່ນ ແລະປະສິດທິພາບຂອງການເຮັດນາແຊງກໍ່ນັບມື້ນັບສູງຂຶ້ນ ອັນເປັນການປະກອບສ່ວນເຂົ້າໃນການປ່ຽນແປງຊີວິດການເປັນຢູ່ຂອງຊາວນາໃຫ້ດີຂຶ້ນ. ເນື້ອທີ່ປູກພືດທັນຍາຫານອື່ນໆແລະຕົ້ນໄມ້ອຸດສະຫະກຳກໍ່ເພີ່ມຂຶ້ນ ໘ ເທົ່າ.

ເພື່ອຮັບໃຊ້ການກະສິກຳລັດກໍ່ໄດ້ສ້າງພື້ນຖານອຸດສະຫະກຳຂຶ້ນຈຳນວນໜຶ່ງ ເຊັ່ນ : ໂຮງງານປຸງແຕ່ງ ຫົວອາຫານສັດ, ໂຮງງານຜະລິດຢາວັກຊີນສັດ, ໂຮງງານສ້ອມແປງລົດໄຖນາ ແລະໄດ້ຂະຫຍາຍອຸສາຫະກຳນ້ອຍຫຼາຍແຫ່ງ ເພື່ອຜະລິດເຄື່ອງມື ກະສິກຳສຳລັບຕອບສະໜອງຄວາມຕ້ອງການ ໃນການຜະລິດຂອງຊາວນາ. ເຄື່ອງຈັກຊະນິດຕ່າງໆ ທີ່ໃຊ້ເຂົ້າໃນການກະສິກຳ ໄດ້ເພີ່ມ ຂຶ້ນ-

ສານເທົ່າກ່ອນ. ເພື່ອຊຸກຍູ້ ຂະບວນການເຣັດກະເສດສູນເພີ່ມປະສິດທິພາບນັ້ນ ລັດໄດ້ສ້າງ ແລະເປີດກວ້າງຣາກຖານ ຈຳນວນນຶ່ງສຳລັບຄົ້ນຄວ້າທົດລອງພັນພືດ ແລະພັນສັດ, ຊຸກຍູ້ການສ້າງແບບຢ່າງຈຳນວນນຶ່ງກ່ຽວກັບການນຳໃຊ້ເຕັກນິກເຂົ້າໃນການປູກຝັງ , ລ້ຽງສັດ ເພື່ອຖອດຖອນບົດຮຽນ ແລະຂົນຂວາຍ ຊາວນາ ໃຫ້ນຳໃຊ້ວິທີການເຕັກນິກໃໝ່ເຂົ້າໃນການເພາະປູກ, ເຣັດກະເສດສູນ ແລະມີບາງຢ່າງອັນດີປະກົດຂຶ້ນໃນຫລາຍແຫ່ງ.

ການລ້ຽງສັດ ໄດ້ມີບາດກ້າວຂະຫຍາຍຕົວໃໝ່. ການລ້ຽງສັດຂອງຄອບຄົວໄດ້ຮັບການສົ່ງເສີມ, ການລ້ຽງສັດຂອງຣວມໝູ່ກໍ່ໄດ້ຮັບການສ້າງຂຶ້ນເທື່ອລະກ້າວ. ມີບາງບ່ອນໄດ້ນຳໃຊ້ວິທີ ການເຕັກນິກໃໝ່ເຂົ້າສູ່ການລ້ຽງສັດ, ການລ້ຽງປາ ກໍ່ແຜ່ຂະຫຍາຍຢູ່ໃນຫລາຍທ້ອງຖິ່ນ. ການກຳຈັດແກ້ໄຂພະຍາດ ແລະ ພະຍຸສັດໄດ້ຮັບການເອົາໃຈໃສ່ ຂຶ້ນກວ່າເກົ່າ. ດ້ວຍເຫດນັ້ນໃນ ໔ ປີທີ່ຜ່ານມາ ເຖິງວ່າມີຫລາຍບ່ອນໄດ້ເກີດພະຍຸສັດ ແລະບາງບ່ອນກໍ່ເກີດຂຶ້ນຢ່າງຮ້າຍແຮງກໍ່ຕາມ, ແຕ່ສັດລ້ຽງປະເພດໃຫຍ່ ແລະນ້ອຍກໍ່ຍັງຂະຫຍາຍຕົວໄວພໍສົມຄວນ, ເວົ້າສະເພາະ ແຕ່ງົວຄວາຍເທົ່ານັ້ນ ກໍ່ເພີ່ມຂຶ້ນ ນ໕໐.໐໐໐ ໂຕທຽບໃສ່ ປີ ໑໙໗໔.

ກ່ຽວກັບປ່າໄມ້ ເຊິ່ງເປັນທ່າແຮງອັນນຶ່ງຂອງຊາດເຮົານັ້ນກໍ່ໄດ້ຮັບການເອົາໃຈໃສ່. ລັດໄດ້ວາງວິທີການຫລາຍຢ່າງ ແລະໄດ້ລົງທຶນຢ່າງເໝາະສົມເຂົ້າ ໃນການປົກປັກຮັກສາ, ບຳລຸງ ແລະຂຸດຄົ້ນໄມ້ກໍ່ຄືເຄື່ອງປ່າຂອງດົງອື່ນໆ. ໄພທຳລາຍປ່າໄມ້ ໄດ້ມີການຈຳກັດເທື່ອລະກ້າວ, ການປູກຕົ້ນໄມ້ໃຫ້ເປັນດົງໄດ້ ເລີ່ມ

ເປັນຂະບວນການຢູ່ໃນຫລາຍທ້ອງຖິ່ນ. ປ່າໄມ້ທີ່ໄດ້ຮັບການ ສຳຫລວດແລ້ວມີ ໑.໔໐໐.໐໐໐ ເຮັກຕາ ເຊິ່ງດຳເນີນໄປ ດວຍ-ຫລາຍວິທີການ ນັບທັງວິທີການທີ່ທັນສະໄໝໂດຍການຊ່ວຍເຫລືອຂອງສະຫະພາບໂຊວຽດ. ເຄື່ອງຈັກຊະນິດຕ່າງໆ ທີ່ໃຊ້ເຂົ້າໃນການປ່າໄມ້ກໍເພີ່ມຂຶ້ນຫລາຍລວມທັງເຄື່ອງຈັກທີ່ທັນສະໄໝດວຍ. ປະລິມານເຄື່ອງປ່າຂອງດົງທີ່ຂຸດຄົ້ນໄດ້ໃນແຕ່ລະປີເພີ່ມຂຶ້ນ ປະ-ມານ ໓໐%, ໃນນັ້ນມີຫລາຍຊະນິດມີຄຸ່ນຄາສູງ.

ເພື່ອດັດສ້າງສັງຄົມນິຍົມ ຕໍ່ການກະສິກຳ, ນັບແຕ່ປີ ໑໙໗໘ ມາ, ພັກ ແລະລັດເຮົາ ໄດ້ມີແຜນນະໂຍບາຍ ເປີດຂະບວນການຫັນປ່ຽນ ເປັນສະຫະກອນກະເສດ ຢູ່ໃນທົ່ວປະເທດ. ໄລ່ມາຮອດທ້າຍປີ ໑໙໗໙,ຂະບວນການໄດ້ຂະຫຍາຍໃນ ໔໘% ຂອງຈຳນວນຕາແສງ, ໘໖ % ຂອງຈຳນວນບ້ານ ໃນທົ່ວປະເທດ, ປະມານ ໔໐% ຂອງຊາວນາໃນເຂດເຮັດນາໄດ້ເຂົ້າໃນສະຫະກອນກະເສດ. ປັດຈຸບັນນີ້ ຂະບວນການສະຫະກອນກະເສດພວມໄດ້ຮັບການປັບປຸງ ແລະ ກ້າວຂຶ້ນຢ່າງໜັກແໜ້ນພໍສົມຄວນ.

ແຜນນະໂຍບາຍຫັນເປັນສະຫະກອນກະເສດແມ່ນເພື່ອຈັດຕັ້ງການຜະລິດຄືນໃໝ່, ແບ່ງງານຄືນໃໝ່ຢູ່ໃນຊົນນະບົດ, ນຳເອົາການປະຕິວັດສາມປະການເຂົ້າໃນການຜະລິດ ແນໃສ່ຊຸກຍູ້ການຜະລິດກະສິກຳ,ຮັບປະກັນໃຫ້ຊາວນາມີຊີວິດອັນຢູ່ດີກິນດີ, ອີກດ້ານນຶ່ງທີ່ສຳຄັນແມ່ນເພື່ອເພີ່ມທະວີພັນທະພາບກຳມະກອນ - ຊາວນາ , ປັບປຸງຮາກຖານການເມືອງ ກໍ່ສ້າງຊົນນະບົດໃໝ່, ອັນນັ້ນ ເປັນແຜນນະໂຍບາຍທີ່ຖືກຕ້ອງ ແລະສອດຄ່ອງທີ່ສຸດກັບຄວາມຮຽກຮ້ອງ

ຕ້ອງການແຫ່ງການປົກປັກຮັກສາ ແລະສ້າງສາປະເທດຊາດ ຂອງພວກເຮົາ. ການຫັນປ່ຽນ ເປັນສະຫະກອນກະເສດນີ້ ເປັນບັນຫາອັນໃໝ່ອ່ຽມ, ອຳນາດການປົກຄອງຫລາຍຂັ້ນ ແລະຊາວນາ ໃນຫລາຍແຫ່ງຍັງບໍ່ທັນມີປະສົບການ, ແຕ່ວ່າ ໃນບ່ອນໃດ ທີ່ອົງການນຳທ່ອງຖິ່ນເຊື່ອມຊຶມແຜນນະໂຍບາຍດັ່ງກ່າວ, ສຸມການຊີ້ນຳ ດຳເນີນໄປຢ່າງຮອບຄອບ ແລະມີການກໍ່ສ້າງ ຈຸດທົດລອງ ເພື່ອຖອດຖອນບົດຮຽນນັ້ນ ຂະບວນການຫັນເປັນສະຫະກອນຢູ່ໃນບ່ອນນັ້ນ ກໍ່ກ້າວຂຶ້ນຢ່າງສະໝ່ຳສະເໝີ ແລະໜັກແໜ້ນ, ສະພາບຢູ່ໃນຊົນນະບົດໄດ້ເປັນປົກກະຕິ ແລະມີການຂະຫຍາຍຕົວໃນທຸກດ້ານ.

- ໃນຂົງເຂດອຸດສະຫະກຳ, ກໍ່ສ້າງພື້ນຖານ, ຄົມມະນາຄົມຂົນສົ່ງ, ອຸດສະຫະກຳນ້ອຍ ແລະຫັດຖະກຳ,ພວກເຮົາກໍ່ສ້າງຜົນງານໄດ້ຫລາຍປະການ. ດ້ວຍຄວາມພະຍາຍາມຂອງລັດ ແລະດ້ວຍຈິດໃຈປະຕິວັດຂອງອ້າຍເອື້ອຍນ້ອງກຳມະກອນ, ພວກເຮົາບໍ່ພຽງແຕ່ສາມາດຟື້ນຟູໂຮງຈັກໂຮງງານ ທີ່ຈຳເປັນໄດ້ເທົ່ານັ້ນ ຫາກຍັງສາມາດສ້າງໂຮງຈັກ ໂຮງງານໃໝ່ຂຶ້ນຕື່ມ ຫລາຍແຫ່ງເຊິ່ງມີຜົນປະໂຫຍດຕໍ່ເສດຖະກິດແຫ່ງຊາດແລະຊີວິດການເປັນຢູ່ຂອງປະຊາຊົນ. ເບິ່ງທົ່ວໄປແລ້ວ ພວກເຮົາໄດ້ຍົກຄວາມສາມາດ ຜະລິດຂອງບາງຂະແໜງອຸດສະຫະກຳທີ່ສຳຄັນຂຶ້ນ. ພວກເຮົາໄດ້ສຳເລັດການກໍ່ສ້າງເຂື່ອນໄຟຟ້ານ້ຳງື່ມໄລຍະ ໒ ອັນໄດ້ຍົກຄວາມສາມາດຜະລິດຂອງໄຟຟ້າຈາກ ໓໐.໐໐໐ ກິໂລວັດຂຶ້ນເປັນ ໑໑໐.໐໐໐ ກິໂລວັດ , ລະບົບສາຍສົ່ງໄຟຟ້າແຮງສູງ ໄດ້ຂະຫຍາຍຕົວອອກ ໒,໕ ເທົ່າ, ໂຮງຈັກໂຮງງານ ໓໐ ກວ່າແຫ່ງ ໄດ້ຖືກປ່ຽນແທນນ້ຳມັນດ້ວຍພະ

ລັງໄຟຟ້າ,ການເອົາໄຟຟ້າເຂົ້າຮັບໃຊ້ການຜະລິດກະສິກຳກໍ່ໄດ້ຮັບການປະຕິບັດໃນຂັ້ນຕົ້ນ; ສະເພາະຢູ່ວຽງຈັນ ໄດ້ໃຊ້ພະລັງໄຟຟ້າເຂົ້າຮັບໃຊ້ການຜະລິດກະສິກຳ ໃນເນື້ອທີ່ ໖.໐໐໐ ເຮັກຕາ,ຕາໜ່າງໄຟຟ້າທີ່ຮັບໃຊ້ປະຊາຊົນກໍ່ໄດ້ມີການເປີດກວ້າງອອກ.ມາຮອດປະຈຸບັນ, ປະຊາຊົນເຄິ່ງລ້ານຄົນ ໄດ້ໃຊ້ໄຟຟ້າແລ້ວ. ພວກເຮົາໄດ້ສ້າງໂຮງງານສ້ອມແປງລົດຍົນ, ລົດໄຖ, ກໍ່ສ້າງໂຮງງານຕຳແຜ່ນຊຸດົມໄຊ, ເພີ່ມທະວີພື້ນຖານຕຳແຜ່ນຢູ່ວຽງຈັນ, ສ້າງ ໂຮງງານນ້ຳປາປາຈິນາຊໂນ້ ດ້ວຍຄວາມສາມາດຜະລິດນ້ຳ ໔໐.໐໐໐ ແມັດກ້ອນຕໍ່ປີ. ບໍ່ກົ່ວໂພນຕີ້ວ ພວມໄດ້ຮັບການປັບປຸງ ແລະ ເປີດກວ້າງ ແນໃສ່ເຮັດໃຫ້ສະມັດຖະພາບ ຂອງການຜະລິດກົ່ວເພີ່ມຂຶ້ນອີກໃນປີຕໍ່ໄປ. ບໍ່ຫີນກາວ ໄດ້ນຳເຂົ້າສູ່ການຜະລິດ ແລະ ຂຸດຄົ້ນໄດ້ ໖໐.໐໐໐ ໂຕນ, ຮາກຖານຕົ້ມເກືອຢູ່ບ້ານບໍ່, ບ້ານເກີນ , ບໍ່ເຕັນ...ໄດ້ຮັບການຟື້ນຟູ ແລະເປີດກວ້າງ. ພ້ອມກັນນັ້ນ ພວກເຮົາກໍ່ພວມຕັ້ງໜ້າ ຜັນຂະຫຍາຍວຽກງານສຳຫລວດບົ່ງສືບ ແລະກຽມເງື່ອນໄຂທີ່ຈຳເປັນ ເພື່ອເປີດກວ້າງ ຂະແໜງອຸສະຫະກຳບໍ່ແຮ່ອອກເທື່ອລະກ້າວ. ພວກເຮົາໄດ້ປັບປຸງ ແລະ ສ້າງຮາກຖານອຸສະຫະກຳເບົາຈຳນວນນຶ່ງ ເຊັ່ນ: ເບຍ, ນ້ຳອັດລົມ, ນ້ຳປາ, ເຂົ້າຈີ່, ເຂົ້າໜົມ,ແປ້ງນົວ, ສະບູ, ອົກຊີແຢນ, ສາຍຢາງປະລາສະຕິກ, ເຄື່ອງໃຊ້ໄມ້ສອຍຕ່າງໆ. ຮາກຖານການຜະລິດ ອຸປະກອນກໍ່ສ້າງ ເຊັ່ນ : ໂຮງງານດິນຈີ່, ດິນຂໍ... ກໍ່ໄດ້ຮັບການສ້າງຂຶ້ນໃນຫລາຍແຫ່ງ.

ລັດໄດ້ເອົາໃຈໃສ່ຟື້ນຟູ ແລະສົ່ງເສີມການຂະຫຍາຍອຸສະຫະ

ກຳນ້ອຍ ແລະ ຫັດຖະກຳຂອງລວມໝູ່ ແລະຂອງປະຊາຊົນ. ຮາກຖານຫັດຖະກຳທີ່ຜະລິດເຄື່ອງໃຊ້ສອຍ ແລະສິນຄ້າຂາອອກ ກໍ່ໄດ້ຮັບການປັບປຸງ ແລະຂະຫຍາຍຕົວຢູ່ໃນທ້ອງຖິ່ນຕ່າງໆ ເຊັ່ນ: ຕີເຫຼັກ, ຕ່ຳຫູກ, ຫຍິບແສ່ວ, ເຮັດເຄື່ອງຫວາຍ, ເຄື່ອງໄມ້, ຈັກສານ, ເຮັດສາດ, ເຄື່ອງແສ່ວລວດລາຍ, ເຄື່ອງສິລະປະຫັດຖະກຳ... ສະເພາະຢູ່ຕົວເມືອງວຽງຈັນ ແລະສະຫວັນນະເຂດ ໄດ້ເຕົ້າໂຮມ ໔.໐໐໐ ກວ່າຄອບຄົວ ເພື່ອຜະລິດສິນຄ້າໃຊ້ສອຍ ແລະສິນຄ້າ ຫັດຖະກຳສຳຫລັບຂາອອກ.

ໃນຂົງເຂດກໍ່ສ້າງພື້ນຖານ,ພວກເຮົາໄດ້ສຳເລັດການກໍ່ສ້າງບາງກິດຈະການ ຊົນລະປະທານ ທີ່ສຳຄັນ, ໄດ້ກໍ່ສ້າງ ຮາກຖານອຸສະຫະກຳ ແລະກໍ່ສ້າງຕົວເມືອງນ້ອຍ, ເທດສະບານຫລາຍແຫ່ງທີ່ຖືກສົງຄາມທຳລາຍເຜົາຜານນັ້ນຄືນໃໝ່, ລະບົບສາງເຄື່ອງ, ທໍ່ສົ່ງນ້ຳມັນ, ອ່າງເກັບນ້ຳ, ໂຮງຮຽນ, ໂຮງໝໍ, ສຳນັກງານອົງການ ແລະກິດຈະການສາທາລະນະຢູ່ໃນນະຄອນຫລວງ ແລະໃນຕົວເມືອງອື່ນໆ ກໍ່ໄດ້ຮັບການສ້າງຂຶ້ນຕື່ມຈຳນວນນຶ່ງ.ພວກເຮົາໄດ້ສ້ອມແປງ ແລະສ້າງທາງໃໝ່ໄດ້ ໓.໐໐໐ ກວ່າກິໂລແມັດ, ໄດ້ສ້ອມແປງຟື້ນຟູຂົວເກົ່າ ແລະສ້າງຂົວໃໝ່ ໔໔໐ ແຫ່ງ,ສ້ອມແປງເສັ້ນທາງນ້ຳ, ປັບປຸງ ແລະສ້າງສະໜາມບິນ, ທ່າເຮືອຂຶ້ນຕື່ມຫລາຍແຫ່ງອັນເຮັດໃຫ້ລະບົບຂົນສົ່ງທາງບົກ, ທາງນ້ຳ ແລະທາງອາກາດ ໄດ້ຮັບການເປີດກວ້າງອອກ, ຈາກນັ້ນ ກໍ່ສາມາດຮັບໃຊ້ວຽກງານຈໍລະຈອນແຈກຢາຍ ແລະການໄປມາຂອງປະຊາຊົນ ໄດ້ດີຂຶ້ນກວ່າເກົ່າ. ການຕິດຕໍ່ລະຫວ່າງປະເທດເຮົາກັບປະເທດນອກ

ກໍ່ມີການຂະຫຍາຍຕົວ. ມາດຽວນີ້ ຄວາມສາມາດ ໃນການຂົນສົ່ງຂອງລັດໄດ້ເພີ່ມຂຶ້ນ ໘ ເທົ່າທຽບໃສ່ ປີ ໑໙໗໖.

ໃນຂົງເຂດຈໍລະຈອນແຈກຢາຍ, ພວກເຮົາໄດ້ຂະຫຍາຍຕາໜ່າງການຄ້າລັດວິສາຫະກິດ ແລະ ການຄ້າຮວມໝູ່ ລົງເຖິງທຸກໆເມືອງ ແລະສ່ວນໃຫຍ່ຂອງຕາແສງ; ການແຈກຢາຍກໍ່ຮັບການດັດແປງໃຫ້ດີຂຶ້ນ ໂດຍແນໃສ່ຮັບໃຊ້ ການຜະລິດ, ການກໍ່ສ້າງ, ຮັບໃຊ້ຄວາມຕ້ອງການຂອງລັດ ແລະ ຂອງປະຊາຊົນ. ພວກເຮົາໄດ້ເຮັດໃຫ້ເງິນຕາ ເປັນເອກະພາບ, ປະຕິບັດນະໂຍບາຍ ເງິນຕາແລະການເງິນທີ່ເປັນເອກະລາດ. ລັດໄດ້ດຳເນີນການດັດແປງລະບອບພາສີອາກອນກ້າວນຶ່ງ, ປະຕິບັດນະໂຍບາຍ ລາຄາຢ່າງມີພົບໄຫວ, ກຳສິດຜູກຂາດທາງດ້ານການຄ້າຕ່າງປະເທດເປັນກ້າວໆ. ນະໂຍບາຍເຫຼົ່ານັ້ນໄດ້ມີຄຸນປະໂຫຍດອັນຕັ້ງໜ້າໃນການຊຸກຍູ້ການຜະລິດ ແລະການຈໍລະຈອນ.

ພວກເຮົາ ໄດ້ຂະຫຍາຍການພົວພັນຮ່ວມມື ທາງດ້ານເສດຖະກິດ ກັບບັນດາປະເທດສັງຄົມນິຍົມອ້າຍນ້ອງ, ຍາດແຍ່ງເອົາການສະໜັບສະໜູນ ແລະ ຊ່ວຍເຫຼືອຂອງບັນດາປະເທດ ເພື່ອນມິດແລະອົງການຈັດຕັ້ງສາກົນ. ການຊ່ວຍເຫຼືອທາງດ້ານເສດຖະກິດນັບທັງທຶນ, ເຕັກນິກ ແລະ ແຮງງານຂອງສາກົນ ເປັນຕົ້ນ ແມ່ນຂອງບັນດາປະເທດສັງຄົມນິຍົມນັ້ນໄດ້ປະກອບສ່ວນຢ່າງສຳຄັນເຂົ້າໃນການຊ່ວຍເຫຼືອປະຊາຊົນເຮົາຂະຫຍາຍການຜະລິດກໍ່ຄືເຮັດໃຫ້ຊີວິດການເປັນຢູ່ ເປັນປົກກະຕິ,ຮັບປະກັນການເຄື່ອນໄຫວຂອງລັດພ້ອມກັນນັ້ນກໍ່ໄດ້ປະກອບສ່ວນເຂົ້າໃນການເພີ່ມທະວີຄວາມສາມາດ

ແຫ່ງການຜະລິດ, ການກໍ່ສ້າງ ແລະການລຳລຽງຂົນສົ່ງຢູ່ພາຍໃນປະເທດເຮົາ.

ລວມຄວາມວ່າ ຜົນສຳເລັດທາງດ້ານເສດຖະກິດ-ການເງິນ ໃນ ໔ ປີທີ່ຜ່ານມາໄດ້ມີຄຸນປະໂຫຍດອັນຕັ້ງໜ້າ ໃນການເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນເປັນປົກກະຕິ ແລະ ສ້າງປະຖົມປັດໃຈອັນສຳຄັນໃຫ້ແກ່ພາລະກິດດັດສ້າງ ແລະກໍ່ສ້າງສັງຄົມນິຍົມຂອງພວກເຮົາ. ອັນນັ້ນ ໄດ້ຢັ້ງຢືນວ່າແນວທາງເສດຖະກິດທີ່ພັກ ແລະ ລັດເຮົາວາງອອກ ແມ່ນຖືກຕ້ອງ. ພັກ ແລະລັດເຮົາມີແຜນນະໂຍບາຍເອົາການກະສິກຳ-ປ່າໄມ້ ເປັນພື້ນຖານ ໃຫ້ແກ່ການຫັນເປັນອຸສະຫະກຳ, ເອົາການຄ້າເປັນຕ່ອງໂສ້ຕົ້ນຕໍ ແລະເອົາການຄົມມະນາຄົມ ເປັນປາຍແຫລມ ເພື່ອຊຸກຍູ້ ການຜະລິດສິນຄ້າ, ນຳເສດຖະກິດທຳມະຊາດກຸ່ມຕົນເອງພໍໃຊ້ ພໍລາວ; ດຳເນີນການດັດສ້າງ ແລະກໍ່ສ້າງເສດຖະກິດຕາມທິດສັງຄົມນິຍົມ ໂດຍຖືເອົາການກໍ່ສ້າງເປັນຕົ້ນຕໍ ແລະ ນຳໃຊ້ ໔ ພາກສ່ວນເສດຖະກິດ ຢ່າງຖືກຕ້ອງ, ເຮັດໃຫ້ບັນດາ ພາກສ່ວນເສດຖະກິດສັງຄົມນິຍົມ ກວມທາດ ແລະ ເຮັດໃຫ້ເສດຖະກິດຂອງລັດດຳລົງບົດບາດເປັນເຈົ້າພາທາງ; ເອົາໃຈໃສ່ກໍ່ສ້າງ ແລະ ຂະຫຍາຍເສດຖະກິດທ້ອງຖິ່ນ, ເຮັດໃຫ້ເສດຖະກິດໃນທົ່ວປະເທດ ເປັນເອກະພາບເທື່ອລະກາວ; ພ້ອມກັນນັ້ນກໍ່ຍາດແຍ່ງເອົາການຊ່ວຍເຫລືອ ແລະການຮ່ວມມືທາງເສດຖະກິດຂອງສາກົນໃຫ້ໄດ້ດີ ແນໃສ່ຂຸດຄົ້ນຄວາມສາມາດບົ່ມຊ້ອນທາງດ້ານເສດຖະກິດ ຂອງຊາດ; ກ້າວຂຶ້ນກໍ່ສ້າງເສດຖະກິດ ຂອງປະເທດເຮົາໃຫ້ເປັນເອກະລາດເປັນເຈົ້າຕົນເອງ ແລະສັງຄົມນິຍົມ.

ຢ່າງໃດກໍ່ດີ, ພົນສຳເລັດ ທາງດ້ານເສດຖະກິດ–ການເງິນຂອງພວກເຮົາ ໃນໄລຍະທີ່ຜ່ານມາຍັງຖືກຈຳກັດຢູ່. ເປັນເຊັ່ນນັ້ນກໍ່ເນື່ອງຈາກ ສັດຕູທຳລາຍມ້າງເພ ແລະ ເນື່ອງຈາກເສດຖະກິດແຫ່ງຊາດມີສະພາບຂາດຄວາມດຸ່ນດ່ຽງທີ່ຮ້າຍແຮງຢູ່ແລ້ວ, ແຕ່ມູນເຫດສຳຄັນແມ່ນ ພວກເຮົາຍັງບໍ່ທັນເຊື່ອມຊຶມແນວທາງເສດຖະກິດຂອງພັກ ແລະລັດເຮົາ ໃນບາດກ້າວເດີນທິວທີ ຂອງສະໄໝຂ້າມຜ່ານຂັ້ນສູ່ສັງຄົມນິຍົມ, ໃນດ້ານຄຸ້ມຄອງເສດຖະກິດພວກເຮົາຍັງບໍ່ທັນມີບົດຮຽນ, ແຕ່ພະນັກງານສະມາຊິກພັກຂອງພວກເຮົາພັດບໍ່ທັນຕັ້ງໜ້າຕັດສິນໃຈຮ່ຳຮຽນເຮັດວຽກງານເສດຖະກິດ, ຍັງບໍ່ທັນກຳແລະຄຸ້ມຄອງເສດຖະກິດ ຢ່າງແໜ້ນໜາແທ້. ການປະຕິບັດຫລັກການແຈກຢາຍຕາມແຮງງານສຳລັບຂົງເຂດການຜະລິດ ແລະທຸລະກິດຍັງບໍ່ທັນດີ, ແກ່ຍາວການປະຕິບັດນະໂຍບາຍເບີກຈ່າຍບໍລິຫານແບບເກື້ອກູນອັນໄດ້ກໍ່ອຸປະສັກຫລາຍປະການໃຫ້ແກ່ການເຄື່ອນໄຫວທາງເສດຖະກິດຂອງປະເທດ, ມີບາງດ້ານ, ບາງຂະແໜງການແລະບາງບ່ອນນັບມື້ນັບສະງັກຈັກຊ້າລົງ, ບືນຕົວຂຶ້ນບໍ່ໄດ້ ຫລື ຂະຫຍາຍຕົວຢ່າງຝືດເຄືອງ.

### 3. ກ່ຽວກັບວັດທະນະທຳ, ສຶກສາ ແລະ ສາທາລະນະສຸກ

ໃນຂົງເຂດວັດທະນະທຳ, ສຶກສາ, ສາທາລະນະສຸກ ພວກເຮົາສ້າງຜົນງານອັນໃຫຍ່ຫລວງ ທີ່ເປັນໜ້າ ຊື່ນຊົມໄດ້ຫລາຍປະການ.

ໂດຍປະຕິບັດຕາມແຜນນະໂຍບາຍ ເອົາການປະຕິວັດ ທາງດ້ານແນວຄິດ–ວັດທະນະທຳໄປກ່ອນກ້າວນຶ່ງ ໃນການດຳເນີນການ

ປະຕິວັດທັງສາມປະການໄປພ້ອມໆກັນ (ຄືການປະຕິວັດ ທາງດ້ານການພົວພັນການຜະລິດ, ການປະຕິວັດທາງດ້ານວິທະຍາສາດ-ເຕັກນິກ ແລະການປະຕິວັດ ທາງດ້ານແນວຄິດ-ວັດທະນະທຳ) ພັກແລະລັດເຮົາໄດ້ດຳເນີນການໂຄສະນາ ສຶກສາອົບຮົມຢູ່ໃນທົ່ວພັກ, ທົ່ວກອງທັບ ແລະທົ່ວປວງຊົນເຮົາ ຢ່າງກວ້າງຂວາງ ແລະເນື່ອງນິດລຽນຕິດ, ເຮັດໃຫ້ທຸກຄົນເຫັນແຈ້ງການຫັນປ່ຽນຂອງການປະຕິວັດ, ລັກສະນະເລິກເຊິ່ງເຖິງຖອງ, ຂ່ຽວຂາດ ແລະຮອບດ້ານຂອງການຕໍ່ສູ້ຊົນຊັ້ນໃນການແກ້ໄຂບັນຫາ ໃຜເອົາຊະນະໃຜລະຫວ່າງສັງຄົມນິຍົມ ກັບທຶນນິຍົມ, ໂດຍສະເພາະຢ່າງຍິ່ງແມ່ນໄດ້ເຮັດໃຫ້ທຸກຄົນເຫັນແຈ້ງມິດ ແລະສັດຕູ ກໍ່ຄືໜ້າທີ່ລະອຽດຕົວຈິງ ໃນໄລຍະໃໝ່ຂອງການປະຕິວັດ.

ບົນພື້ນຖານແຫ່ງການເຮັດໃຫ້ມີການຫັນປ່ຽນທາງດ້ານຄວາມຮັບຮູ້ແນວຄິດ ແລະໂດຍຜ່ານຂະບວນການເຄື່ອນໄຫວປະຕິວັດ ອັນອຸດົມຮັ່ງມີຫລາຍຂະບວນການ, ນ້ຳໃຈຮັກຊາດຮັກສັງຄົມນິຍົມຂອງພະນັກງານ, ທະຫານ ແລະປະຊາຊົນ ບັນດາຊົນຊາດເຮົາໄດ້ຮັບການເຊີດຊູຂຶ້ນຕື່ມກ້າວນຶ່ງ, ຄວາມເຊື່ອໝັ້ນຕໍ່ການປະຕິວັດ ແລະຕໍ່ອະນາຄົດຂອງຊາດ ກໍ່ນັບມື້ນັບໄດ້ຮັບການປັບປຸງ ແລະມີພື້ນຖານອັນໜັກແໜ້ນ.

ວຽກງານຖະແຫລງຂ່າວ, ໂຄສະນາ, ວັດທະນະທຳ ກໍ່ມີບາດກ້າວ ຂະຫຍາຍຕົວໃໝ່. ພວກເຮົາໄດ້ເອົາໃຈໃສ່ການ ຂະຫຍາຍໜັງສືພິມປະຕິວັດ, ດັດແປງວຽກງານກະຈາຍສຽງ, ເຊີດຊູລັກສະນະສຶກສາອົບຮົມ, ຊີ້ນຳມະຫາຊົນຂອງໜັງສືພິມ ແລະ ວິ

ທະຍຸກະຈາຍສຽງໃຫ້ສູງຂຶ້ນເທື່ອລະກ້າວ, ເຣັດໃຫ້ວຽກງານເລົ່ານີ້ເຂົ້າສູ່ເປົ້າໝາຍຕ່າງໆ ໄດ້ເລິກເຊິ່ງກວ່າເກົ່າ ເຊັ່ນ: ກອງທະຫານ, ກຳມະກອນ, ຊາວໄຮ່ນາ, ຊາວໜຸ່ມ, ແມ່ຍິງ, ອະນຸຊົນ ແລະເຂົ້າສູ່ເປົ້າໝາຍໂຄສະນາອື່ນໆອີກຈຳນວນໜຶ່ງ. ການເຄື່ອນໄຫວທາງດ້ານສິລະປະວັນນະຄະດີ, ກິລາກາຍຍະກຳ ໄດ້ຮັບການຊຸກຍູ້ຢ່າງແຂງແຮງ. ດ້ານໜຶ່ງ, ພວກເຮົາໄດ້ປັບປຸງ, ກໍ່ສ້າງກອງສິລະປະກອນ, ກອງກາຍຍະສິນ, ໜ່ວຍວັນນະຄະດີ ຕ່າງ ໆ, ໜ່ວຍຮູບເງົາ, ກິລາ ກໍ່ມີການເຄື່ອນໄຫວປະດິດແຕ່ງ ແລະ ພິມຈຳໜ່າຍຂອງລັດ, ດ້ານໜຶ່ງອີກ ພວກເຮົາກໍ່ໄດ້ປຸກລະດົມມະຫາຊົນໃຫ້ປະດິດແຕ່ງ ແລະສະແດງ, ຈັດຕັ້ງໜ່ວຍສິລະປະວັນນະຄະດີ, ກິລາຂຶ້ນ ຢ່າງເປັນຂະບວນການ ຢູ່ໃນໂຮງຮຽນ, ໂຮງໝໍ, ຮາກຖານການຜະລິດ, ໃນໝູ່ບ້ານຕາແສງ, ສົ່ງເສີມນັກສິລະປິນປະຊາຊົນ, ໝໍລຳ, ໝໍແຄນໃຫ້ໝູນເວຍສະຕິປັນຍາ ແລະ ຄວາມສາມາດຂອງຕົນເຂົ້າໃນການຮັບໃຊ້ປະເທດຊາດແລະສັງຄົມນິຍົມ. ການເຄື່ອນໄຫວອັນອຸດົມຮັ່ງມີຂອງພວກເຮົາໃນແນວຮົບໂຄສະນາ, ສຶກສາ, ວັດທະນະທຳ, ສິລະປະວັນນະຄະດີ...ດັ່ງກ່າວນັ້ນ ໄດ້ປະກອບສ່ວນຢ່າງສຳຄັນເຂົ້າໃນການໂຄສະນາແນວທາງ, ແຜນນະໂຍບາຍ, ນະໂຍບາຍຂອງພັກ ແລະລັດ, ໃນການປຸກລະດົມ ນ້ຳໃຈປະຕິວັດ ຂອງມະຫາຊົນ, ຕອບສະໜອງຄວາມຮຽກຮ້ອງຕ້ອງການໃນຊີວິດດ້ານວັດທະນະທຳ, ຈິດໃຈຂອງມະຫາຊົນ ທີ່ຢາກໄດ້ຮັບການມ່ວນຊື່ນລື່ນເລີງທີ່ສົດໃສ ເພື່ອທຳການຜະລິດ ແລະປົກປັກຮັກສາປະເທດຊາດ; ພ້ອມກັນນັ້ນ ກໍ່ໄດ້ປະກອບສ່ວນເຂົ້າໃນການ

ຕີຖຽຣິດຄອງປະເພນີທີ່ຫລ້າຫລັງ, ສະສາງລ້າງສ່ວນໂພສັງຄົມທີ່ລະບອບເກົ່າປະໄວ້ ແລະໃນການຕໍ່ສູ້ດ້ານສົງຄາມຈິດຕະສາດຂອງສັດຕູ.

ໃນເວລາທີ່ທົ່ວປະເທດໄດ້ຮັບການປົດປ່ອຍຢ່າງສົມບູນນັ້ນ ປະຊາຊົນເຮົາກວ່າ ໗໐% ຍັງບໍ່ທັນຮູ້ໜັງສື, ມາດຽວນີ້ ພວກເຮົາໄດ້ສຳເລັດການລຶບລ້າງຄວາມບໍ່ຮູ້ໜັງສືໃຫ້ ໒໐% ຂອງເປົ້າໝາຍທີ່ຈະຕ້ອງລຶບລ້າງຄວາມບໍ່ຮູ້ໜັງສືແລ້ວ, ຢູ່ໃນທົ່ວປະເທດໄດ້ມີ ໑໐ ແຂວງ, ໓໔% ຂອງຈຳນວນ ຕາແສງ ແລະ ໒໗% ຂອງຈຳນວນບ້ານທັງໝົດໄດ້ສຳເລັດການລຶບລ້າງຄວາມບໍ່ຮູ້ໜັງສືໂດຍພື້ນຖານແລ້ວ. ຈຳນວນນັກຮຽນສາມັນສຶກສາ ຊັ້ນປະຖົມໄດ້ເພີ່ມຂຶ້ນ ໘ ເທົ່າ, ນັກຮຽນຊັ້ນມັດທະຍົມເພີ່ມຂຶ້ນ ໗ ເທົ່າ ແລະນັກຮຽນຊັ້ນອຸດົມເພີ່ມຂຶ້ນ ໑໑ ເທົ່າ. ມາຮອດດຽວນີ້ ພວກເຮົາມີນັກຮຽນອາຊີວະສຶກສາ ແລະມະຫາວິທະຍາໄລເກືອບ ໘໐.໐໐໐ ຄົນ, ໃນນັ້ນ ໑໐% ແມ່ນນັກຮຽນມະຫາວິທະຍາໄລ. ພວກເຮົາໄດ້ດຳເນີນການກໍ່ສ້າງ ແລະຂະຫຍາຍທັງ ໔ ຂະແໜງການສຶກສາ ໄປພ້ອມໆກັນຄື : ອະນຸບານ ສຶກສາ, ສາມັນ ສຶກສາ, ບຳລຸງວັດທະນະທຳ, ອາຊີວະສຶກສາ ແລະມະຫາວິທະຍາໄລ. ປະຈຸບັນນີ້, ໃນທົ່ວປະເທດຂອງພວກເຮົາ ພົນລະເມືອງ ໔ ຄົນໃດ ກໍ່ມີຜູ້ໜຶ່ງ ໄດ້ໄປຮຽນ. ໂຄງການ ແລະເນື້ອໃນຂອງການສຶກສາໄດ້ຮັບການ ດັດແປງເທື່ອລະກ້າວ ແລະເຮັດໃຫ້ເປັນເອກະພາບໃນທົ່ວປະເທດ . ຖັນແຖວຄູໄດ້ມີຄວາມພະຍາຍາມຫລາຍ ໃນການບຳລຸງເຝິກຝົນຄຸນສົມບັດ ແລະຍົກລະດັບຄວາມສາມາດຂອງຕົນໃຫ້ສູງຂຶ້ນ, ມີຄູຫລາຍ

ຄົນ ໄດ້ອາດຫານຕະລຸມບອນໄປເຂດທີ່ຢູ່ຫ່າງໄກສອກຫລີກ, ບໍ່ທໍ້ຖອຍຕໍ່ຄວາມຫຍຸ້ງຍາກ ແລະອຸປະສັກໃດໆ ເພື່ອນຳເອົາແສງສະຫວ່າງແລະຕົວໜັງສືຂອງການປະຕິວັດ ໄປສູ່ພື້ນຂອງບັນດາຊົນຊາດ ສ່ວນໜັນຣ...ຜົນງານໃນດ້ານສຶກສາທີ່ພວກເຣົາສ້າງຂຶ້ນນັ້ນໄດ້ປະກອບສ່ວນຢ່າງສຳຄັນເຂົ້າໃນການເຊີດຊູຄວາມຮູ້ຂອງພະນັກງານ, ລັດຖະກອນ, ຜູ້ອອກແຮງງານ ແລະຂອງທົ່ວສັງຄົມໃຫ້ສູງຂຶ້ນ, ໃນການປະຕິບັດໜ້າທີ່ປົກປັກຮັກສາ ແລະສ້າງສາປະເທດຊາດ ກໍ່ຄືໃນການກໍ່ສ້າງຄົນໃໝ່ສັງຄົມນິຍົມ, ໃນການບຳລຸງຄົນຮຸ້ນໜຸ່ມ.

ຢ່າງໃດກໍ່ດີ, ໃນໄລຍະທີ່ຜ່ານມາ, ຫລາຍຂະແໜງການ, ຫລາຍຂັ້ນ ແລະພະນັກງານຊີ້ນຳຫລາຍຄົນ ຍັງບໍ່ທັນຮັບຮູ້ຢ່າງເລິກເຊິ່ງກ່ຽວກັບຄວາມສຳຄັນທີ່ມີລັກສະນະຕັດສິນຊີ້ຂາດຂອງວຽກງານສຶກສາ, ຂອງວຽກງານແນວຄິດແລະວັດທະນະທຳທີ່ມີຕໍ່ການປະຕິວັດສັງຄົມນິຍົມຢູ່ໃນປະເທດເຣົາ. ດັ່ງນັ້ນ ຈຶ່ງບໍ່ທັນເອົາໃຈໃສ່ຕໍ່ວຽກງານເລົ່ານີ້ຢ່າງເຕັມເມັດເຕັມໜ່ວຍ. ການບຳລຸງແລະເບິ່ງແຍງດູແລຄູອາຈານກໍ່ຍັງເຮັດບໍ່ທັນດີ, ຮາກຖານ ແລະພາຫະນະສຳລັບຮັບໃຊ້ການຮ່ຳຮຽນຍັງຂາດເຂີນ, ສິ່ງເລົ່ານັ້ນ ໄດ້ເປັນຜົນສະທ້ອນບໍ່ໜ້ອຍເຖິງຄຸນນະພາບຂອງການສຶກສາ. ວຽກງານໂຄສະນາ ວັດທະນະທຳ ຂອງພວກເຮົາຍັງບໍ່ທັນລົງສູ່ຮາກຖານຢ່າງແທ້ຈິງ, ຍັງບໍ່ທັນສ່ອງແສງຢ່າງຄົບຖ້ວນ ແລະທັນການກ່ຽວກັບເລື່ອງດີຄົນເດັ່ນກໍ່ຄືການເຄື່ອນໄຫວອັນມີຊີວິດຊີວາ ແລະອຸດົມຮັ່ງມີ ຂອງປະຊາຊົນບັນດາຊົນຊາດ ໃນການປົກປັກຮັກສາ ແລະສ້າງສາປະເທດຊາດ, ການຕໍ່ສູ້ຕ້ານສົງຄາມຈິດຕະສາດຂອງສັດຕູກໍ່ຍັງບໍ່ທັນຄົມແຫລມ.

ພາຍໃຕ້ລະບອບໃໝ່, ວຽກງານສາທາລະນະສຸກ ກໍ່ໄດ້ຂະຫຍາຍຕົວຢ່າງວ່ອງໄວ ແລະທົ່ວເຖິງ. ມາຮອດປະຈຸບັນນີ້, ໝົດທຸກແຂວງ ແລະເມືອງໄດ້ມີໂຮງໝໍແລ້ວ, ຕາແສງກໍ່ມີໂຮງໝໍນ້ອຍເປັນສ່ວນຫລາຍ ແລະ ໑/໓ ຂອງຈຳນວນບ້ານທັງໝົດ ໄດ້ມີຖົງຢາປະຈຳບ້ານແລ້ວ. ຖັນແຖວພະນັກງານສາທາລະນະສຸກໄດ້ ຂະຫຍາຍຕົວໄວພໍສົມຄວນ, ພວກເຮົາໄດ້ສ້າງພະນັກງານ ແລະຜູ້ປະຕິບັດງານດ້ານສາທາລະນະສຸກໄດ້ເກືອບ ໖.໐໐໐ ຄົນ. ການປິ່ນປົວພະຍາດດ້ວຍຢາພື້ນເມືອງເຊິ່ງເປັນທ່າແຮງອັນໜຶ່ງຂອງສາທາລະນະສຸກສຳລັບປະເທດເຮົາ ໄດ້ຮັບການສົ່ງເສີມຢູ່ໃນຫລາຍທ້ອງຖິ່ນ ແລະກໍ່ສາມາດປິ່ນປົວພະຍາດຈຳນວນໜຶ່ງ ຢ່າງໄດ້ຮັບຜົນດີ, ການປູກຕົ້ນໄມ້ທີ່ເປັນຢາ ແລະການເກັບກູ້ເອົາຮາກຢາທຳມະຊາດກໍ່ນັບມື້ນັບຂະຫຍາຍຕົວ, ໂຮງໝໍຈຳນວນໜຶ່ງໄດ້ດຳເນີນການປິ່ນປົວພະຍາດດ້ວຍການສົມທົບຢາຫລວງ ແລະຢາພື້ນເມືອງໄດ້ດີພໍສົມຄວນ. ວຽກງານກັນພະຍາດ ແລະປົກປັກຮັກສາສຸຂະພາບ ໃຫ້ປະຊາຊົນກໍ່ໄດ້ຮັບຄວາມເອົາໃຈໃສ່ກວ່າເກົ່າ. ພວກເຮົາໄດ້ ຈັດຕັ້ງການພົ່ນຢາຂ້າຍຸງທີ່ກໍ່ໃຫ້ເກີດພະຍາດໄຂ້ປ່າຢູ່ໃນແຂວງໜຶ່ງ ແລະຫລາຍເມືອງໄດ້ເຕົ້າໂຮມພະນັກງານສາທາລະນະສຸກ ເພື່ອແກ້ໄຂໂລກລະບາດຈຳນວນໜຶ່ງທີ່ເປັນອັນຕະລາຍໄດ້ຢ່າງທັນການ, ໄດ້ຂົນຂວາຍຂະບວນການອະນາໄມກັນພະຍາດ ຕ້ານພະຍຸ,ພວກເຮົາກໍ່ໄດ້ມີຄວາມກ້າວໜ້າໃນການເບິ່ງແຍງຮັກສາສຸຂະພາບ ຂອງແມ່ແລະເດັກ. ອັດຕາສ່ວນເດັກນ້ອຍຕາຍໄປໃນເວລາຫາກໍ່ເກີດໃໝ່ກໍ່ໄດ້ລົດຜ່ອນລົງເປັນລຳດັບມາ.

ຢ່າງໃດກໍ່ດີ, ວຽກງານສາທາລະນະສຸກ ກໍ່ຍັງໄປບໍ່ທັນ ກັບຄວາມຮຽກຮ້ອງຕ້ອງການຂອງການປົກປັກຮັກສາສຸຂະພາບຂອງປະຊາຊົນ, ການເບິ່ງແຍງດູແລ ຄົນຊຸມນັ້ນ, ການຮັບໃຊ້ຊາວຜູ້ອອກແຮງງານຜະລິດ, ຜູ້ເຮັດໜ້າທີ່ສູ້ຮົບ ແລະເຮັດວຽກງານ,ລະດັບວິຊາສະເພາະ ແລະທັດສະນະຮັບໃຊ້ຂອງແພດໝໍ ກໍ່ຍັງເປັນສິ່ງທີ່ຈະຕ້ອງເອົາໃຈໃສ່ບຳລຸງໃຫ້ຫລາຍກວ່າເກົ່າ.

ໃນເງື່ອນໄຂທີ່ປະເທດເຮົາຍັງປະສົບກັບຄວາມຫຍຸ້ງຍາກໃນຫລາຍດ້ານ, ເສດຖະກິດ ແລະວັດທະນະທຳຂອງປະເທດເຮົາຊ້ຳພັດຂະຫຍາຍຕົວຊ້ານັ້ນ ພົນງານອັນໃຫຍ່ຫລວງ ທາງດ້ານສຶກສາ, ວັດທະນະທຳ ແລ່ະສາທາລະນະສຸກດັ່ງກ່າວນັ້ນແມ່ນມີຄວາມໝາຍອັນເລິກເຊິ່ງທີ່ສຸດ. ມັນຢັ້ງຢືນເຖິງລັກສະນະອັນດີເລີດ ແລະທາດແທ້ອັນຈົບງາມຂອງລະບອບໃໝ່ ເຊິ່ງຍາມໃດ ກໍ່ເອົາໃຈໃສ່ຈົດຈໍ່ເຖິງຊີວິດການເປັນຢູ່ທາງດ້ານວັດຖຸ ແລະຈິດໃຈ ຂອງຊາວຜູ້ອອກແຮງງານ ແລະປະຊາຊົນ ບັນດາຊົນຊາດ, ປະກອບສ່ວນຢ່າງສຳຄັນເຂົ້າໃນການລົບລ້າງຄວາມໂຕນກັນ ທາງດ້ານເສດຖະກິດ ວັດທະນະທຳລະຫວ່າງບັນດາຊົນຊາດໄດ້ເທື່ອລະກ້າວ, ເຮັດໃຫ້ຄວາມສາມັກຄີປອງດອງ ໄດ້ຮັບການເພີ່ມທະວີຂຶ້ນ ອັນແນໃສ່ປະຕິບັດ ໘ ໜ້າທີ່ ປົກປັກຮັກສາ ແລະສ້າງສາປະເທດຊາດໄດ້ເປັນຢ່າງດີ.

*4. ທາງດ້ານການຕ່າງປະເທດ*

ໃນ ໔ ປີ ທີ່ຜ່ານມາ ໂດຍປະຕິບັດແນວທາງ ຕ່າງປະເທດສັນຕິພາບ, ເອກະລາດ, ເປັນເຈົ້າຕົນເອງ ແລະ ສັງຄົມນິຍົມ, ພວກເຮົາສາມາດຍາດເອົາໄຊຊະນະອັນດີງາມມາໄດ້ຫລາຍ ປະ

ການ.

ພວກເຮົາ ໄດ້ເຮັດສຸດຄວາມສາມາດຂອງຕົນ ເພື່ອປະກອບສ່ວນເຂົ້າ ໃນການປົກປັກຮັກສາ ແລະເພີ່ມທະວີ ຄວາມເຂັ້ມແຂງຂອງລະບົບສັງຄົມນິຍົມ, ປົກປັກຮັກສາ ຄວາມຜ່ອງໃສ ຂອງລັດທິມາກ-ເລນິນ, ບາກບັ່ນພະຍາຍາມປະກອບສ່ວນເຂົ້າໃນພາລະກິດຕໍ່ສູ້ເພື່ອສັນຕິພາບ, ເອກະລາດ ແຫ່ງຊາດ, ປະຊາທິປະໄຕແລະກ້າວໜ້າທາງສັງຄົມໃນໂລກ ແລະປະກອບສ່ວນເຂົ້າໃນການເພີ່ມທະວີມິດຕະພາບ, ຮັກສາສັນຕິພາບ ແລະ ສະຖຽນລະພາບ ຢູ່ໃນພາກພື້ນອາຊີ ອາຄະເນ, ຕ້ານກົນອຸບາຍແບ່ງແຍກ, ມ້າງເພທຳລາຍ, ຮຸກຮານກືນກິນຂອງລັດທິ ຂະຫຍາຍອານາເຂດແຜ່ອຳນາດຊາດໃຫຍ່ ແລະຈັກກະພັດນິຍົມ.

ໃນດ້ານອື່ນພວກເຮົາ ກໍ່ໄດ້ຮັບການສະໜັບ ສະໜູນ ແລະຊ່ວຍເຫຼືອຢ່າງແຂງແຮງ, ມີຜົນສັກສິດໃນຫຼາຍດ້ານຈາກບັນດາປະເທດສັງຄົມນິຍົມອ້າຍນ້ອງ, ບັນດາປະເທດເພື່ອນມິດ ແລະອົງການຈັດຕັ້ງສາກົນ.

ພວກເຮົາໄດ້ເພີ່ມທະວີ ແລະເປີດກວ້າງການພົວພັນສາມັກຄີແລະຮ່ວມມືກັບບັນດາ ປະເທດສັງຄົມນິຍົມອ້າຍນ້ອງ. ການພົວພັນລະຫວ່າງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ກັບສາທາລະນະລັດສັງຄົມນິຍົມຫວຽດນາມ ໄດ້ຮັບການເພີ່ມທະວີໃນທຸກດ້ານ ປະເທດທັງສອງ ໄດ້ພ້ອມກັນແກ້ໄຂບັນຫາຊາຍແດນ ລະຫວ່າງປະເທດທັງສອງຢ່າງດີງາມ ແລະເປັນແບບຢ່າງ, ພວມພ້ອມກັນສ້າງຊາຍແດນໃຫ້ເປັນຊາຍແດນສັນຕິພາບ ແລະມິດຕະພາບ ຢ່າງຍາວ

ນານ. ພວກເຮົາໄດ້ເດັດດ່ຽວປົກປັກຮັກສາ ແລະສະໜັບສະໜູນ ຫວຽດນາມ ໃນການຕ້ານການຮຸກຮານຂອງພວກປະຕິການປັກກິ່ງ, ສະໜັບສະໜູນປະຊາຊົນ ກຳປູເຈຍ ໃນການໂຄ່ນລົ້ມລະບອບດັບສູນເຊື້ອຊາດໄປນປົດອຽງສາລີ ແລະໃນພາລະກິດຟື້ນຟູຊາດ, ປົກປັກຮັກສາ ແລະສ້າງສາ ສາທາລະນະລັດປະຊາຊົນກຳປູເຈຍຕ້ານກົນອຸບາຍມ້າງເພທຳລາຍ, ລ້ອນປ່ຽວ ແລະໂຄ່ນລົ້ມ ຂອງພວກທໍລະຍົດ ແຜ່ອຳນາດຊາດໄທຍ ທີ່ໄດ້ຮັບການໃຫ້ທ້າຍຈາກບັນດາອິດທິກຳລັງປະຕິການອື່ນໆ. ການພົວພັນລະຫວ່າງປະເທດເຮົາກັບສະຫະພາບໂຊວຽດ ກໍ່ໄດ້ຂະຫຍາຍຕົວ ຢ່າງຮອບດ້ານ. ແນວທາງຂອງພັກ ແລະລັດເຮົາທີ່ອີງໃສ່ລະບົບສັງຄົມນິຍົມຢ່າງຂາດຂັ້ນເພື່ອປົກປັກຮັກສາ ແລະສ້າງສາປະເທດຊາດ ຂອງພວກເຮົານັ້ນ ແມ່ນຖືກຕ້ອງທີ່ສຸດ. ການຊ່ວຍເຫລືອຢ່າງຈິງໃຈ ແລະມີຜົນສັກສິດ ໃນຫລາຍດ້ານຂອງຫວຽດນາມ, ສະຫະພາບໂຊວຽດ ແລະບັນດາປະເທດສັງຄົມນິຍົມອ້າຍນ້ອງອື່ນໆ ໄດ້ເຮັດໃຫ້ທ່າ ແລະກຳລັງ ຂອງປະເທດເຮົາເພີ່ມທະວີຂຶ້ນຢ່າງແຂງແຮງ ອັນເປັນສິ່ງຄ້ຳປະກັນໃຫ້ແກ່ພວກເຮົາຜ່ານຜ່າຄວາມຫຍຸ້ງຍາກສັບສົນແລະການທົດສອບນາໆປະການໄປໄດ້ຢ່າງມີໄຊ ໃນ ໕ ປີທີ່ຜ່ານມາ.

ພວກເຮົາໄດ້ຮັກສາ ແລະເປີດກ້ວາງການພົວພັນອັນເປັນປົກກະຕິກັບທຸກໆປະເທດ ໂດຍບໍ່ຈຳແນກລະບອບການເມືອງແຕກຕ່າງກັນບົນພື້ນຖານຫລັກການເຄົາລົບເອກະລາດ, ອະທິປະໄຕຂອງກັນບໍ່ແຊກແຊງເຂົ້າວຽກງານ ພາຍໃນຂອງກັນ, ສະເໝີພາບ ຕ່າງຝ່າຍຕ່າງໄດ້ຮັບຜົນ ແລະພ້ອມກັນຄົງຢູ່ໂດຍສັນຕິ.

ພວກເຮົາມີຄວາມປິຕິຊົມຊື່ນທີ່ເຫັນວ່າການພົວພັນມິດຕະພາບລະຫວ່າງປະເທດເຮົາ ກັບສາທາລະນະລັດອິນເດຽ ແລະປະເທດເພື່ອນມິດຈຳນວນໜຶ່ງພວມມີການຂະຫຍາຽຕົວຢ່າງດີງາມ. ພວກເຮົາກໍ່ໄດ້ເຊັນຖະແຫລງການຮ່ວມກັບລາຊະອານາຈັກໄທ ໃນເດືອນມັງກອນ ແລະ ເດືອນເມສາ ປີ ໑໙໗໙. ເປັນໜ້າເສັຽດາຽວ່າອຳນາດການປົກຄອງໄທປະຈຸບັນບໍ່ໄດ້ເຄົາລົບແລະປະຕິບັດຂໍ້ຄວາມຕ່າງໆທີ່ໄດ້ເຊັນກັນລະຫວ່າງປະເທດທັງສອງນັ້ນຢ່າງຄົບຖ້ວນ ອັນເຮັດໃຫ້ການພົວພັນລະຫວ່າງລາວ ກັບໄທມີການເຄັ່ງຕຶງ ແລະສັບສົນຂຶ້ນເປັນຄັ້ງ ເປັນຄາວ ອັນເປັນການຝືນຕໍ່ຜົນປະໂຫຍດອັນຊອບທຳ ແລະ ຄວາມມຸ່ງມາດປາດຖະໜາ ຂອງປະຊາຊົນປະເທດທັງສອງທີ່ຢາກພົວພັນກັນຄົງຢູ່ ໃນສັນຕິພາບ, ມິດຕະພາບ ເພື່ອກໍ່ສ້າງປະເທດຊາດ. ສິ່ງດັ່ງກາວມີແຕ່ຈະນຳຜົນໃຫ້ແກ່ລັດທິຂະຫຍາຽອານາເຂດ ແຜ່ອຳນາດຊາດໃຫຍ່ ແລະຈັກກະພັດນິຍົມເທົ່ານັ້ນ.

ຫລັກໝັ້ນອັນເດັດດ່ຽວ, ແນວທາງອັນຖືກຕ້ອງ ແລະຍຸດໂທບາຽອັນສອດຄ່ອງຂອງພວກເຮົາໃນດ້ານຕ່າງປະເທດນັ້ນ ໄດ້ເຮັດໃຫ້ອິດທິພົນຂອງສາທາລະນະລັດປະຊາທິປະໄຕ ປະຊາຊົນລາວນັບມື້ນັບໄດ້ຮັບການເຊີດຊູຂຶ້ນຢູ່ໃນເວທີສາກົນ, ອັນເປັນການປະກອບສ່ວນຢ່າງໃຫຍ່ຫລວງເຂົ້າໃນໄຊຊະນະລວມຂອງປະຊາຊົນເຮົາໃນພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດ ທີ່ແສນຮັກຂອງພວກເຮົາ ກໍ່ຄືໃນການປະຕິບັດໜ້າທີ່ ສາກົນອັນສູງສົ່ງ ຂອງພວກເຮົາ ໃນ ໔ ປີທີ່ຜ່ານມາ.

## 5. ການກໍ່ສ້າງ ແລະ ເຊີດຊູລະດັບຄວາມສາມາດໃນການນຳພາ ແລະ ຄຸ້ມຄອງປະເທດຊາດຂອງລະບົບພະເດັດການກຳມາຊີບ

ໂດຍຮັບຮູ້ຢ່າງເລິກເຊິ່ງວ່າ " ບັນຫາພື້ນຖານຂອງທຸກການປະຕິວັດແມ່ນອຳນາດການປົກຄອງ" ພໍແຕ່ປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ, ພວກເຮົາກໍ່ໄດ້ສຸມທຸກຄວາມພະຍາຍາມ ເພື່ອຈັດຕັ້ງ, ກໍ່ສ້າງລະບົບອຳນາດການປົກຄອງປະຊາຊົນ ແຕ່ສູນກາງລົງເຖິງຮາກຖານ, ເພີ່ມທະວີບັນດາພາຫະນະຂອງພະເດັດການ, ກໍ່ສ້າງບັນດາອົງການຈັດຕັ້ງມະຫາຊົນ ແລະເປີດກ້ວາງ ແນວໂຮມແຫ່ງຊາດ.

ພວກເຮົາໄດ້ລົບລ້າງກົງຈັກປົກຄອງເກົ່າທັງໝົດ ຢ່າງເດັດດ່ຽວ ແລະເຖິງຖອງ ແລະຢືນຢັນວ່າ ອຳນາດການປົກຄອງ ຂອງພວກເຮົາ ແມ່ນອຳນາດການປົກຄອງ ຂອງປະຊາຊົນ ຜູ້ອອກແຮງງານບັນດາຊົນຊາດ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ, ເປັນບ່ອນສະແດງອອກຢ່າງລວມສູນ ກ່ຽວກັບສິດເປັນເຈົ້າລວມໝູ່ຂອງປະຊາຊົນ.

ພາຍໃຕ້ການນຳພາຂອງພັກ, ປະຊາຊົນເຮົາໄດ້ເລືອກເຟັ້ນເອົາພະນັກງານຜູ້ທີ່ໄດ້ຮັບຄວາມໄວ້ເນື້ອວາງໃຈ ຂອງຕົນເຂົ້າຮັບຜິດຊອບວຽກງານ ໃນອຳນາດການປົກຄອງ ຂັ້ນຕ່າງໆ. ໃນດ້ານອື່ນ, ປັນຍາຊົນ, ຜູ້ຊົງຄຸນວຸດທິ, ຂ້າລາຊະການ ຜູ້ປະຕິບັດງານດ້ານເຕັກນິກວິຊາການ ທີ່ເຄີຍເຮັດວຽກ ໃນອົງການປົກຄອງເກົ່າ ເຊິ່ງມີນ້ຳໃຈຮັກຊາດ, ຮັກຄວາມກ້າວໜ້າ, ມີຄວາມສາມາດຄຸ້ມ

ຄອງເສດຖະກິດ ແລະມີລະດັບຄົ້ນຄວ້ານຳໃຊ້ວິທະຍາສາດເຕັກນິກນັ້ນ ກໍ່ໄດ້ຮັບມອບໜ້າທີ່ ອັນເໝາະສົມ ໃນອຳນາດການປົກຄອງໃໝ່ຂອງພວກເຮົາ. ແຜນນະໂຍບາຍອັນຖືກຕ້ອງດັ່ງກ່າວນັ້ນ ໄດ້ເປັນສິ່ງຮັບປະກັນຫລັກການ ໃນການກໍ່ສ້າງ ອຳນາດການປົກຄອງປະຕິວັດ ຂອງພວກເຮົາ, ພ້ອມກັນນັ້ນ ກໍ່ສາມາດ ຕອບສະໜອງຄວາມຮຽກຮ້ອງຕ້ອງການ ແຫ່ງການເສີມຂະຫຍາຍ ຄຸນປະໂຫຍດຂອງອຳນາດການປົກຄອງຂັ້ນຕ່າງໆ ໃນການຄຸ້ມຄອງປະເທດຊາດໄດ້ຢ່າງໄວວາ.

ພວກເຮົາໄດ້ດຳເນີນການສຶກສາອົບຮົມ ບຳລຸງບັນດາບັນຫາພື້ນຖານ ຂອງລັດທິມາກ-ເລນິນ, ແນວທາງນະໂຍບາຍ ແລະທັດສະນະເສດຖະກິດຂອງພັກ ໃຫ້ພະນັກງານອຳນາດການປົກຄອງຂັ້ນຕ່າງໆເປັນຢ່າງດີ, ພ້ອມກັນນັ້ນກໍ່ຮູ້ຜ່ານພຶດຕິກຳຕົວຈິງ ແຫ່ງການຈັດຕັ້ງປະຕິບັດ ແຜນນະໂຍບາຍ, ນະໂຍບາຍຂອງພັກ ແລະ ລັດ ເພື່ອບຳລຸງເຊີດຊູຄວາມສາມາດໃນການຄຸ້ມຄອງຂອງອຳນາດການປົກຄອງ.

ຍ້ອນແນວນັ້ນ ພວກເຮົາຈຶ່ງສາມາດແກ້ໄຂຄວາມຫຍຸ້ງເຫຍີງຂອງອຳນາດການປົກຄອງ ຂັ້ນຕ່າງໆ ໄດ້ເທື່ອລະກ້າວ, ອຳນາດການປົກຄອງ ໃນຫລາຍບ່ອນສາມາດປະຕິບັດ ແລະເສີມຂະຫຍາຍສິດເປັນເຈົ້າລວມໝູ່ຂອງປະຊາຊົນ, ນຳພາປະຊາຊົນ ເຮັດວຽກງານຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ທາງສັງຄົມໄດ້ດີພໍສົມຄວນ, ປຸກລະດົມ ແລະຈັດຕັ້ງປະຊາຊົນເຂົ້າໃນເສັ້ນທາງທຳມາຫາກິນແບບລວມໝູ່, ຊຸກຍູ້ການຜະລິດ, ປົວແປງຊີວິດ

ການເປັນຢູ່ທາງດ້ານວັດຖຸ ແລະຈິດໃຈ ຂອງປະຊາຊົນ, ໂດຍສະເພາະຢ່າງຍິ່ງແມ່ນໃນທຸກໆຄັ້ງທີ່ປະເທດເຮົາປະສົບໄພທຳມະຊາດຢ່າງໜັກໜ່ວງນັ້ນ ອຳນາດການປົກຄອງຂັ້ນຕ່າງໆໄດ້ສະແດງໃຫ້ເຫັນຢ່າງເດັ່ນຊັດ ເຖິງລັກສະນະອັນດີເລີດ ຂອງຕົນໃນການຊ່ວຍເຫລືອ, ປຸກລະດົມ ແລະຈັດຕັ້ງປະຊາຊົນບັນດາຊົນຊາດ ໃຫ້ຊຸມຊຸກັນແກ້ໄຂຜົນຮ້າຍຂອງໄພນ້ຳຖ້ວມ, ໄພແຫ້ງແລ້ງ, ຟື້ນຟູການຜະລິດ ແລະເຮັດໃຫ້ຊີວິດການເປັນຢູ່ໄດ້ຄືນສູ່ສະພາບປົກກະຕິ.

ໃນດ້ານອື່ນ, ໂດຍອີງຕາມຂໍ້ຕົກລົງຕ່າງໆຂອງສະພາປະຊາຊົນສູງສຸດ, ສະພາລັດຖະມົນຕີກໍ່ໄດ້ປະກາດໃຊ້ຂໍ້ກຳນົດກົດໝາຍ, ລະບອບການ ແລະນະໂຍບາຍຈຳນວນໜຶ່ງ ກ່ຽວກັບການປ້ອງກັນຊາດ ປ້ອງກັນຄວາມສະຫງົບ, ກ່ຽວກັບການເງິນ, ເສດຖະກິດ, ວັດທະນະທຳສັງຄົມ, ເຮັດໃຫ້ລັດປະຊາທິປະໄຕ ປະຊາຊົນ ຂອງພວກເຮົາເຂົ້າສູ່ຫລັກລະບຽບກົດໝາຍເທື່ອລະກ້າວ.

ໄປຄຽງຄູ່ກັບການກໍ່ສ້າງອຳນາດການປົກຄອງນັ້ນ ແນວໂຮມແຫ່ງຊາດ ຂອງພວກເຮົາກໍ່ໄດ້ຮັບການປັບປຸງ ແລະ ເປີດກວ້າງຢ່າງບໍ່ຢຸດຢັ້ງ. ແນວລາວສ້າງຊາດ ໄດ້ຮັບການສ້າງຕັ້ງຂຶ້ນອັນໄດ້ສືບຕໍ່ ແລະເສີມຂະຫຍາຍພາລະກິດແຫ່ງຄວາມສາມັກຄີບັນດາ ຊົນຊາດໃນການຕໍ່ສູ້ປົດປ່ອຍຊາດເຂົ້າໃນການປົກປັກຮັກສາ ແລະກໍ່ສ້າງສັງຄົມນິຍົມ ຂອງປະຊາຊົນເຮົາໃນປະຈຸບັນ. ນະໂຍບາຍ ສາມັກຄີອັນຈິງໃຈ, ເປີດອົກເປີດໃຈ ແລະກວ້າງຂວາງ ຂອງແນວລາວສ້າງຊາດນັ້ນ ສາມາດລະດົມ ທົ່ວປວງຊົນ, ທຸກຊັ້ນຄົນ, ຜູ້ຊົງຄຸນວຸດທິ, ພະສົງສາມະເນນ, ເຈົ້າກົກເຈົ້າເຫລົ່າ ແລະນັກທຸລະກິດ

ທີ່ຮັກຊາດໃຫ້ປະກອບກຳລັງວັງຊາ, ສະຕິປັນຍາ ແລະຊັບສິນຂອງ
ຕົນເຂົ້າໃນການປົກປັກຮັກສາ ແລະສ້າງສາປະເທດຊາດເປັນຢ່າງ
ດີ.

ບັນດາອົງການຈັດຕັ້ງມະຫາຊົນເຊັ່ນ: ກຳມະບານ, ຄະນະ
ຊາວໜຸ່ມ, ສະມາຄົມແມ່ຍິງ...ກໍ່ໄດ້ເສີມຂະຫຍາຍບົດບາດຂອງ
ຕົນເຂົ້າ ໃນການປຸກລະດົມການປະຕິບັດແຜນນະໂຍບາຍ, ນະໂຍ
ບາຍຂອງພັກ ແລະລັດ ກໍ່ຄືໃນການເສີມຂະຫຍາຍຈິດໃຈເປັນເຈົ້າ
ລວມໝູ່ຂອງປະຊາຊົນເຮົາ.

ຂໍ້ຄົງຄ້າງຂອງພວກເຮົາ ແມ່ນຍັງບໍ່ທັນວາງລະບົບກົດໝາຍ
ອັນຄົບຖ້ວນໄດ້ເທື່ອ ເພື່ອເປັນບ່ອນອີງໃຫ້ແກ່ອຳນາດການປົກຄອງ
ໃນການຄຸ້ມຄອງປະເທດຊາດ. ການກໍ່ສ້າງສະຕິເຄົາລົບກົດໝາຍ,
ການເພີ່ມທະວີລະບຽບວິໃນການປະຕິບັດ ແຜນການຂອງລັດ ແລະ
ໃນການປະຕິບັດແຜນນະໂຍບາຍ, ນະໂຍບາຍນັ້ນກໍ່ຍັງອ່ອນ. ກົງ
ຈັກລັດ ໃນຫລາຍຂັ້ນຍັງໃຫຍ່ໂຕ, ຄວາມສັກສິດໃນການເຮັດວຽກ
ງານຍັງມີໜ້ອຍ, ພະຍາດອາດຍາເຈົ້ານາຍ, ຫ່າງເຫີນ ຈາກປະ
ຊາຊົນ, ບໍ່ເດັດດ່ຽວຫັນລົງສູ່ຮາກຖານ ແລະຕິດແໜ້ນ ກັບຮາກ
ຖານ, ກໍ່ຄືການເຄື່ອນໄຫວຂອງອຳນາດການປົກຄອງບໍ່ທັນຕິດແໜ້ນ
ກັບໜ້າທີ່ການເມືອງ ຂອງພັກ ແລະ ລັດນັ້ນ ຍັງເປັນຂໍ້ຄົງຄ້າງຢູ່
ທົ່ວໄປ. ການປັບປຸງ ແລະ ກໍ່ສ້າງບັນດາອົງການຈັດຕັ້ງມະຫາຊົນ
ຍັງຊັກຊ້າ ອັນເປັນຜົນສະທ້ອນບໍ່ໜ້ອຍເຖິງການສ້າງຖ້ວງທ່າ ແລະ
ຂະບວນການແຂ່ງຂັນສັງຄົມນິຍົມຂອງມະຫາຊົນ.

## 6. ມູນເຫດແຫ່ງໄຊຊະນະແລະບາງບົດຮຽນທີ່ສຳຄັນ

ຜົນສຳເລັດທີ່ປະຊາຊົນບັນດາຊົນຊາດເຮົາສ້າງຂຶ້ນໃນ ໕ ປີ ທີ່ຜ່ານມານັ້ນ ແມ່ນໃຫຍ່ຫລວງ, ສະຫງ່າງາມ ແລະມີຄວາມໝາຍ ອັນເລິກເຊິ່ງທີ່ສຸດ.

ນັ້ນ ແມ່ນຜົນງານທີ່ໄດ້ຮັບຈາກການຕໍ່ສູ້ຢ່າງຮອບດ້ານ ແລະ ດຸເດືອດດ້ຽວຂາດກັບສັດຕູອັນໃຫຍ່ໂຕກ່ວາຍາມໃດໝົດ ໃນເງື່ອນໄຂທີ່ປະເທດເຮົາເປັນທີ່ຕັ້ງປ້ອມດ່ານໜ້າຂອງສັງຄົມນິຍົມ ແລະກໍ່ແມ່ນຜົນງານທີ່ຍາດມາໄດ້ດ້ວຍຄວາມບາກບັ່ນພະຍາຍາມຢ່າງໃຫຍ່ຫລວງທີ່ສຸດຂອງທົ່ວປວງຊົນ, ທົ່ວກອງທັບເຮົາໃນຂັ້ນຕົ້ນທີ ທີ່ເຕັມໄປດ້ວຍຄວາມຫຍຸ້ງຍາກສັບສົນ ຂອງການດັດສ້າງ ແລະກໍ່ສ້າງສັງຄົມນິຍົມ.

ໄຊຊະນະດັ່ງກ່າວນັ້ນ ໄດ້ສ້າງພື້ນຖານອັນໜັກແໜ້ນໃຫ້ແກ່ພາລະກິດປະຕິວັດ ຂອງປະຊາຊົນເຮົາໃນໄລຍະໃໝ່ ແລະຢັ້ງຢືນວ່າປະຊາຊົນເຮົາ, ຊາດເຮົາມີຄວາມມານະພະຍາຍາມ,ມີຄວາມສາມາດ ແລະຫົວຄິດປະດິດສ້າງອັນພຽງພໍ ເພື່ອຜ່ານຜ່າທຸກຄວາມຫຍຸ້ງຍາກ, ຕີເອົາຊະນະສັດຕູທຸກໂຕ, ເຮັດໃຫ້ພາລະກິດ ປົກປັກຮັກສາ ແລະສ້າງສາປະເທດຊາດສັງຄົມນິຍົມບັນລຸຜົນເປັນຈິງ.

ໄຊຊະນະເຫລົ່ານັ້ນ ກ່ອນອື່ນໝົດແມ່ນເກີດມາຈາກແນວທາງອັນຖືກຕ້ອງ ແລະການນຳພາອັນສະຫລາດສ່ອງໃສ່ຂອງພັກແລະລັດເຮົາ. ດ້ວຍຈິດໃຈປະຕິບັດສຸດກົກສຸດປາຍ, ດ້ວຍການໝູນໃຊ້ລັດທິມາກ-ເລນິນເຂົ້າໃນພຶດຕິກຳຕົວຈິງຂອງປະເທດເຮົາຢ່າງປະດິດສ້າງ ແລະດ້ວຍການຮ່ຳຮຽນເອົາບົດຮຽນຂອງບັນດາປະເທດອ້າຍ

ນ້ອງຢ່າງເຂັ້ມງວດ, ພັກ ແລະລັດເຮົາ ໄດ້ກຳນົດແນວທາງການປະຕິວັດໃນໄລຍະໃໝ່ຂອງປະເທດເຮົາຢ່າງຖືກຕ້ອງທີ່ສຸດ. ພວກເຮົາໄດ້ຍົກສູງສອງຄັນທຸງຊາດ ແລະສັງຄົມນິຍົມ,ບໍ່ລົດລະໃນການເພີ່ມທະວີຄວາມສາມັກຄີທົ່ວປວງຊົນ, ຄວາມສາມັກຄີບັນດາ ຊົນຊາດ, ແລະຄວາມສາມັກຄີສາກົນ, ກຳແໜ້ນພະເດັດການກຳມາຊີບ, ເສີມຂະຫຍາຍສິດເປັນເຈົ້າຮ່ວມໝູ່ ຂອງປະຊາຊົນ ຜູ້ອອກແຮງງານ, ດຳເນີນການປະຕິວັດ ໓ ປະການໄປພ້ອມໆກັນ; ການປະຕິວັດທາງດ້ານການພົວພັນ ແຫ່ງການຜະລິດ ມີຄຸນປະໂຫຍດໄຂຊ່ອງທາງ, ການປະຕິວັດທາງດ້ານວິທະຍາສາດເຕັກນິກເປັນຂໍກະແຈ, ການປະຕິວັດ ທາງດ້ານວັດທະນະທຳ ແນວຄິດຕ້ອງໄປກ່ອນກ້າວໜຶ່ງ,ທົ່ວປະເທດຕ້ອງເຮັດ ໔ ໜ້າທີ່ຍຸດທະສາດພ້ອມໆກັນ, ເພີ່ມທະວີ ກຳລັງປ້ອງກັນຊາດ ປ້ອງກັນຄວາມສະຫງົບ, ດຳເນີນການກໍ່ສ້າງ ການປ້ອງກັນຊາດ ປ້ອງກັນຄວາມສະຫງົບທົ່ວປວງຊົນເພື່ອປົກປັກຮັກສາປະເທດຊາດ, ປົກປັກຮັກສາລະບອບໃໝ່,ພ້ອມກັນນັ້ນ ກໍ່ຕັ້ງໜ້າດັດສ້າງ ແລະກໍ່ສ້າງເສດຖະກິດ, ຂະຫຍາຍວັດທະນະທຳ, ເອົາການກະສິກຳ-ປ່າໄມ້ເປັນພື້ນຖານ ໃຫ້ການ ຂະຫຍາຍອຸສະຫະກຳ ແລະຖືການຫັນເປັນອຸສະຫະກຳ ເປັນໜ້າທີ່ໃຈກາງຕະຫລອດສະໄໝຂ້າມຜ່ານຂຶ້ນສູ່ສັງຄົມນິຍົມ. ໃນດ້ານອື່ນພັກແລະລັດເຮົາກໍ່ກຳນົດວ່າຕ້ອງອີງໃສ່ລະບົບສັງຄົມນິຍົມຢ່າງຂາດຂັ້ນ, ເພີ່ມທະວີຄວາມສາມັກຄີແບບພິເສດ ແລະການຮ່ວມສຳພັນຢ່າງຮອບດ້ານກັບຫວຽດນາມ, ກຳປູເຈຍ, ສາມັກຄີ ຢ່າງແໜ້ນແຟ້ນແລະຮ່ວມມືຢ່າງຮອບດ້ານກັບສະຫະພາບໂຊວຽດ ແລະ ບັນດາປະ

ເທດສັງຄົມນິຍົມ, ຍາດແຍ່ງການສະໜັບສະໜູນ ແລະການຊ່ວຍເຫລືອຢ່າງກວ້າງຂວາງ ຂອງສາກົນ, ທັງນີ້ ເພື່ອປົກປັກຮັກສາ ແລະສ້າງສາປະເທດຊາດ. ພ້ອມກັນນັ້ນ ກໍ່ຮັດສຸດຄວາມສາມາດຂອງຕົນ ເພື່ອປະກອບສ່ວນເຂົ້າໃນການຮັກສາສັນຕິພາບ ແລະສະຖຽນລະພາບໃນອາຊີອາຄະເນ ແລະເຂົ້າໃນການຕໍ່ສູ້ ຂອງປະຊາຊົນ ໃນໂລກຕ້ານຈັກກະພັດນິຍົມ, ລັດທິຂະຫຍາຍອານາເຂດ ແຜ່ອຳນາດຊາດໃຫຍ່, ລັດທິລ່າເມືອງຂຶ້ນເກົ່າ ແລະໃໝ່, ລັດທິຈຳແນກເຊື້ອຊາດຜິວພັນ, ເພື່ອສັນຕິພາບ, ເອກະລາດ ແຫ່ງຊາດ, ປະຊາທິປະໄຕ ແລະສັງຄົມນິຍົມ.

ແນວທາງພາຍໃນ ແລະ ຕ່າງປະເທດອັນຖືກຕ້ອງ ຂອງພັກ ແລະ ລັດເຮົາດັ່ງກ່າວນັ້ນ ໄດ້ເປັນພື້ນຖານອັນໜັກແໜ້ນ ໃຫ້ແກ່ຄວາມສາມັກຄີເປັນເອກະພາບພາຍໃນກຳລັງປະຕິວັດ, ຄວາມສາມັກຄີປວງຊົນ, ສາມັກຄີບັນດາຊົນຊາດ ແລະ ສາມັກຄີສາກົນ ອັນໄດ້ສ້າງກຳລັງແຮງສັງລວມອັນໃຫຍ່ຫລວງໃຫ້ແກ່ການປະຕິວັດເຮົາ ແລະ ເປັນປັດໄຈຕັດສິນກ່ອນໝູ່ຕໍ່ທຸກໄຊຊະນະ ຂອງການປະຕິວັດເຮົາໃນໄລຍະທີ່ຜ່ານມາ.

ໄຊຊະນະດັ່ງກ່າວນັ້ນ ກໍ່ແມ່ນຍ້ອນປະຊາຊົນບັນດາຊົນຊາດ, ບັນດາກຳລັງປະກອບອາວຸດ, ພະນັກງານ, ກຳມະກອນ, ລັດຖະກອນໃນທົ່ວປະເທດໄດ້ເຊີດຊູນ້ຳໃຈຮັກຊາດ, ຮັກສັງຄົມນິຍົມ ໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ, ສາມັກຄີຢ່າງແໜ້ນແຟ້ນອ້ອມຂ້າງພັກ ແລະ ລັດ, ຜ່ານຜ່າຄວາມຫຍຸ້ງຍາກນາໆປະການຢ່າງອົງອາດກ້າແກ່ນ, ອອກແຮງງານ ດ້ວຍຄວາມຈູບຈາວຫ້າວຫັນ, ກ້າສູ້ຢັ້ນກັບສັດຕູທຸກ

ໄຕ ເພື່ອປົກປັກຮັກສາ ແລະສ້າງສາປະເທດຊາດ.

ໃນໂອກາດນີ້ ຂ້າພະເຈົ້າສະເໜີໃຫ້ສະພາປະຊາຊົນສູງສຸດ:

- ຍ້ອງຍໍຊົມເຊີຍບັນດາກຳລັງປະກອບອາວຸດ ແລະ ກຳລັງປ້ອງກັນຄວາມສະຫງົບ ທີ່ໄດ້ເຊີດຊູທາດແທ້ ມູນເຊື້ອປະຕິວັດ, ໄດ້ພ້ອມກັນກັບປະຊາຊົນບັນດາຊົນຊາດປົກປັກຮັກສາເອກະລາດ, ອະທິປະໄຕ ແລະຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ຂອງບ້ານເມືອງໄວ້ໄດ້ຢ່າງໝັ້ນຄົງ, ຕັ້ງໜ້າເຂົ້າຮ່ວມການຟື້ນຟູແລະກໍ່ສ້າງເສດຖະກິດ, ຂະຫຍາຍວັດທະນະທຳ, ສຳເລັດໜ້າທີ່ຢ່າງສະງ່າງາມ.

- ຍ້ອງຍໍຊົມເຊີຍຊົນຊັ້ນກຳມະກອນທີ່ໜຸ່ມນ້ອຍຂອງພວກເຮົາ ທີ່ໄດ້ຮັບຮູ້ແຈ້ງບົດບາດນຳພາ ຂອງຊົນຊັ້ນຕົນ, ຫ້າວຫັນອອກໜ້າໄປກ່ອນໃນພາລະກິດສ້າງສາປະເທດຊາດ, ເສີມຂະຫຍາຍຫົວຄິດປະດິດສ້າງ ໃນການດັດແປງເຕັກນິກ, ຍົກປະສິດທິພາບຂອງງານໃຫ້ສູງຂຶ້ນ ແລະສ້າງຜົນງານອັນໃຫຍ່ຫລວງໃນການກໍ່ສ້າງພື້ນຖານວັດຖຸເຕັກນິກຂັ້ນທຳອິດໃຫ້ແກ່ສັງຄົມນິຍົມຢູ່ໃນປະເທດເຮົາ.

- ຍ້ອງຍໍຊົມເຊີຍຊາວໄຮ່ນາ ບັນດາຊົນຊາດ ທີ່ໄດ້ກ້າຫານຜ່ານຜ່າຜົນຮ້າຍທີ່ເກີດຈາກໄພນ້ຳຖ້ວມ, ໄພແຫ້ງແລ້ງ, ຊຸກຍູ້ການຜະລິດ, ເຮັດໃຫ້ກະສິກຳມີບາດກ້າວ ຫັນປ່ຽນທີ່ແຂງແຮງ ແລະສ້າງຜົນງານອັນດີເດັ່ນ ດ້ວຍຜົນຜະລິດເຂົ້າ ໑.໐໐໐.໐໐໐ ກ່ວາໂຕນສຳລັບປີນີ້ ແລະຕອບສະໜອງຄວາມຮຽກຮ້ອງຂອງພັກ ແລະລັດ, ຫ້າວຫັນເຂົ້າສູ່ເສັ້ນທາງທຳມາຫາກິນແບບລວມໝູ່ສັງຄົມນິຍົມດ້ວຍຄວາມຕື່ນຕົວສະໝັກໃຈ.

- ຍ້ອງຍໍຊົມເຊີຍພະນັກງານ, ລັດຖະກອນໃນທຸກຂັ້ນ, ທຸກຂະແໜງການທີ່ໄດ້ເຊີດຊູນ້ຳໃຈຮັບໃຊ້ປະຊາຊົນ, ຮັບໃຊ້ປະເທດຊາດ, ບຸກບືນຮ່ຳຮຽນ, ເຝິກຝົນຫລໍ່ຫລອມຕົນເອງ, ຮັບໃຊ້ວຽກງານດ້ວຍຄວາມອົດທົນພາກພຽນ, ໃກ້ຊິດຕິດແທດມະຫາຊົນ, ປະກອບສ່ວນຢ່າງສຳຄັນເຂົ້າໃນການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຽ, ນະໂຍບາຽຂອງພັກ ແລະລັດຢ່າງມີໄຊ.

- ຍ້ອງຍໍຊົມເຊີຽປັນຍາຊົນປະຕິວັດ, ນັກວິທະຍາສາດ,ນັກວິສາວະກອນ, ແພດໝໍ, ຄູສອນ ໃນຂັ້ນຕ່າງໆ, ຜູ້ປະຕິບັດງານດ້ານເຕັກນິກ,ນັກປະພັນ,ນັກຂຽນ,ນັກສິລະປິນ, ນັກກິລາ... ທີ່ໄດ້ເຊີດຊູນ້ຳໃຈຮັກຊາດ ອັນແຮງກ້າ ທຸ່ມເທສະຕິປັນຍາ ແລະຈິດໃຈຂອງຕົນອຸທິດໃຫ້ແກ່ພາລະກິດ ປົກປັກຮັກສາ ແລະ ສ້າງສາປະເທດຊາດສັງຄົມນິຍົມ.

- ຍ້ອງຍໍຊົມເຊີຽພະສົງສາມະເນນ, ຜູ້ຊົງຄຸນວຸດທິ, ເຈົ້າກົກເຈົ້າເຫລົ່າ ທີ່ໄດ້ເຫັນແຈ້ງສະພາບການບ້ານເມືອງ, ຕັ້ງໜ້າເຂົ້າຮ່ວມໃນການກໍ່ສ້າງກອງກຳລັງສາມັກຄີປວງຊົນ ແລະສະໝັກໃຈສູ້ຊົນປະກອບສ່ວນເຂົ້າ ໃນການສ້າງສາປະເທດຊາດ ໃຫ້ຮັ່ງມີເຂັ້ມແຂງ.

- ຊົນເຊື້ອຊາວຕ່າງດ້າວທີ່ທຳມາຫາກິນຢູ່ໃນດິນແດນລາວທີ່ໄດ້ເຄົາລົບແລະປະຕິບັດແຜນນະໂຍບາຍ,ນະໂຍບາຽ,ລະບຽບກົດໝາຽຂອງລັດເຮົາ, ເຊີດຊູນ້ຳໃຈສາມັກຄີມິດຕະພາບ ກັບປະຊາຊົນລາວ, ຫາວຫັນປະກອບສ່ວນເຂົ້າໃນການຟື້ນຟູ ແລະຂະຫຍາຽເສດຖະກິດ, ວັດທະນະທຳ ແລະສ້າງສາປະເທດຊາດຂອງປະຊາ

ຊົນລາວ.

- ຊົນເຊີຍພີ່ນ້ອງຮ່ວມຊາດຂອງພວກເຮົາທີ່ຢູ່ຕ່າງປະເທດທີ່ ໄດ້ເຊີດຊູນ້ຳໃຈ ຮັກຊາດ,ຍາມໃດກໍ່ອວາຍໜ້າມາຫາ ປະເທດ ຊາດ, ປະກອບສ່ວນເຂົ້າໃນພາລະກິດສ້າງສາປະເທດຊາດ ທີ່ມີ ກຽດສະງ່າຂອງພວກເຮົາ.

ໄຊຊະນະອັນໃຫຍ່ຫລວງສະຫງ່າງາມຂອງປະຊາຊົນເຮົາ ນັ້ນ ຍັງແມ່ນໝາກຜົນອັນຮຸ່ງໃສ ແຫ່ງຄວາມສາມັກຄີແບບພິເສດ ແລະ ການຮ່ວມສຳພັນສູ້ຮົບ ຕ້ານສັດຕູລວມ ຂອງ ໓ ປະເທດອ້າຍນ້ອງ ລາວ, ຫວຽດນາມ ແລະ ກຳປູເຈຍ, ແມ່ນໝາກຜົນອັນຮຸ່ງ ໃສ ແຫ່ງຄວາມສາມັກຄີ, ການຮ່ວມມືຢ່າງຮອບດ້ານ ແລະ ການຊ່ວຍ ເຫລືອອັນໃຫຍ່ຫລວງຂອງສະຫະພາບໂຊວຽດ ແລະບັນດາປະເທດ ສັງຄົມນິຍົມອ້າຍນ້ອງ, ແຫ່ງການສະໜັບສະໜູນຊ່ວຍເຫລືອຂອງ ບັນດາປະເທດ ເພື່ອນມິດ ແລະອົງການຈັດຕັ້ງສາກົນ.

ໃນໂອກາດນີ້, ຂ້າພະເຈົ້າຂໍສະເໜີໃຫ້ສະພາປະຊາຊົນສູງ ສຸດສົ່ງຄວາມຮູ້ບຸນຄຸນອັນເລິກເຊິ່ງ ແລະຄວາມຂອບອົກຂອບໃຈອັນ ຈິງໃຈໄປຍັງພັກ, ລັດຖະບານ ແລະປະຊາຊົນຫວຽດນາມ, ກຳປູ ເຈຍ, ສະຫະພາບໂຊວຽດ ແລະບັນດາປະເທດສັງຄົມນິຍົມ ອ້າຍ ນ້ອງ, ໄປຍັງບັນດາປະເທດເພື່ອນມິດ ແລະອົງການຈັດຕັ້ງສາກົນ ທີ່ໄດ້ໃຫ້ການສະໜັບສະໜູນ ແລະຊ່ວຍເຫຼືອໃນຫລາຍດ້ານແກ່ປະ ຊາຊົນລາວ,

ບັນດາທ່ານ ທີ່ນັບຖື.

ຈາກພຶດຕິກຳຕົວຈິງແຫ່ງການສູ້ຊົນ ດ້ວຍຄວາມຍາກລຳບາກ ເພື່ອໄດ້ມາ ເຊິ່ງໄຊຊະນະອັນສະງ່າງາມ ໃນ ໔ ປີທີ່ຜ່ານມານັ້ນ. ພວກເຮົາອາດຈະຖອດຖອນບາງບົດຮຽນລະອຽດໄດ້ ຄື :

໑/ ຕ້ອງເຊື່ອມຊຶມຢ່າງເລິກເຊິ່ງ ແນວທາງ ແຜນນະໂຍບາຍ, ນະໂຍບາຍຂອງພັກກຽວກັບການປະຕິວັດສັງຄົມນິຍົມ, ເຮັດໃຫ້ພະນັກງານ, ລັດຖະກອນ, ນັກ ຮົບ ແລະປະຊາຊົນບັນດາຊົນຊາດໃນທົ່ວປະເທດຮັບຮູ້ແຈ້ງບາດກ້າວຫັນປ່ຽນໃຫ່ມ ຂອງການປະຕິວັດ, ເຫັນແຈ້ງສະພາບການ ຂອງຊາດ ແລະໜ້າທີ່ຂອງຕົນ, ໃນນັ້ນ ຕ້ອງສຸມໃສ່ເຮັດໃຫ້ທຸກຄົນຮັບຮູ້ແຈ້ງມິດ ແລະສັດຕູ ກໍ່ຄືໜ້າທີ່ຂອງການປະຕິວັດ. ມີແຕ່ເຮັດວຽກງານດັ່ງກ່າວໄດ້ດີເທົ່ານັ້ນ ພວກເຮົາຈຶ່ງຈະເຫັນແຈ້ງທິດທາງ ກ້າວຂຶ້ນອັນຖືກຕ້ອງຂອງຊາດເຮົາ, ຈຶ່ງຈະສາມາດເພີ່ມທະວີຄວາມສາມັກຄີປວງຊົນ ແລະປຸກລະດົມທຸກຄົນ ໃຫ້ເຊີດຊູສະຕິລະວັງຕົວ ປົກປັກຮັກສາໝາກຜົນ ຂອງການປະຕິວັດ, ເດັດດ່ຽວຜ່ານຜ່າທຸກຄວາມຫຍຸ້ງຍາກ, ອຸປະສັກເພື່ອປົກປັກຮັກສາ ແລະສ້າງສາປະເທດຊາດ, ແກ້ໄຂປາກົດການມະລຸ້ມມະລ້ວຍ, ສັບປົນຄົນເລລະຫວ່າງ ມິດກັບສັດຕູ, ຫວັ່ນໄຫວຄອນແຄນຕໍ່ໜ້າ ຄວາມຫຍຸ້ງຍາກ, ຂາດຄວາມເຊື່ອໝັ້ນຕໍ່ແນວທາງຂອງພັກ ແລະລັດອັນເປັນບັນຫາທີ່ເຄີຍເກີດມີ ໃນໄລຍະທີ່ການປະຕິວັດກ້າວເຂົ້າສູ່ບາດລ້ຽວໃຫ່ມ. ຕ້ອງເພີ່ມທະວີການສຶກສາອົບຮົມບັນດາບັນຫາພື້ນຖານຂອງລັດທິມາກ-ເລນິນ , ສຶກສາອົບຮົມກ່ຽວກັບສັງຄົມນິຍົມ ໃຫ້ແກ່ທົ່ວປວງຊົນ ເພື່ອເປັນພື້ນ

ຖານໃຫ້ແກ່ການຮັບເອົາແນວທາງ ແຜນນະໂຍບາຍ; ນະໂຍບາຍຂອງພັກ ແລະລັດໃນໄລຍະໃໝ່. ອັນນີ້ ເປັນກົດເກນໃນການດຳເນີນການປະຕິວັດສັງຄົມນິຍົມ; ຈາກນັ້ນ ມັນຈຶ່ງສາມາດກຳຈັດແກ້ໄຂແນວຄິດຮັກສາເດີມ,ຢຸດໆຢ່ອນໆ, ຂາດຈິດໃຈເປັນເຈົ້າ ແລະມານະຈິດປະຕິວັດ, ກຳຈັດແກ້ໄຂແນວຄິດອັດຕະວິໄສ,ວາຍຄາຍ, ຟ້າວຟັ່ງຮ້ອນຮົນ, ບໍ່ເອົາຫົວຊາ ນຳກົດເກນ, ເຮັດຕະພິດ ຕະພື ອັນເປັນການກໍ່ຄວາມເສັຽຫາຍໃຫ້ແກ່ການປະຕິວັດ.

໘/ ຕ້ອງເຮັດໃຫ້ວຽກງານຈັດຕັ້ງ ມີການຫັນປ່ຽນຢ່າງແຂງແຮງໂດຍໃຫ້ສອດຄ່ອງກັບໜ້າທີ່ໃນໄລຍະການປະຕິວັດສັງຄົມນິຍົມ,ຕ້ອງກຳແໜນໜ້າທີ່ອັນດັບໜຶ່ງຂອງວຽກງານການຈັດຕັ້ງໃນປະຈຸບັນ ຄືການບຳລຸງກໍ່ສ້າງພະນັກງານ, ຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ ແລະຈຳເປັນໃນປະຈຸບັນແມ່ນຕ້ອງເຊີດຊູຄວາມສາມາດຂອງບັນດາການຈັດຕັ້ງອຳນາດການປົກຄອງໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງໃຫ້ໄປທັນກັບຄວາມຮຽກຮ້ອງຕ້ອງການຂອງການຄຸ້ມຄອງປະເທດຊາດ ແລະກໍ່ສ້າງສັງຄົມນິຍົມ. ມີແຕ່ເຊີດຊູຄວາມສາມາດຂອງຖັນແຖວພະນັກງານເປັນຕົ້ນແມ່ນ ພະນັກງານ ຫົວຈັກຫລັກແຫລ່ງ ໃນທຸກຂັ້ນ ທຸກຂະແໜງການໃຫ້ສູງຂຶ້ນໂດຍໄວເທົ່ານັ້ນ ພວກເຮົາຈຶ່ງຈະສາມາດເຊີດຊູຄຸນນະພາບຂອງບັນດາການຈັດຕັ້ງອຳນາດການປົກຄອງໃຫ້ສູງຂຶ້ນໄດ້. ວຽກງານບຳລຸງກໍ່ສ້າງພະນັກງານ ທີ່ແນໃສ່ຕອບສະໜອງ ຄວາມຮຽກຮ້ອງຕ້ອງການ ແຫ່ງການກໍ່ສ້າງໂຄງປະກອບ ການຈັດຕັ້ງນັ້ນຕ້ອງໄດ້ເຮັດຢ່າງຮອບດ້ານ ລວມທັງດ້ານ ການເມືອງ, ດ້ານວັດ

ທະນະທຳ ແລະວິຊາສະເພາະ, ທັງໃນສະເພາະໜ້າ ແລະຍາວນານ, ທັງເກົ່າ ແລະໃໝ່, ແຕ່ຕ້ອງເອົາໃຈໃສ່ເປັນພິເສດການບຳລຸງພະນັກງານກ່ຽວກັບຄວາມສາມາດນຳພາ ແລະຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ ແລະກໍ່ສ້າງພະນັກງານວິທະຍາສາດເຕັກນິກ. ຕ້ອງເອົາວຽກງານກໍ່ສ້າງການຈັດຕັ້ງ, ກໍ່ສ້າງພະນັກງານຕິດແໜ້ນກັບການປະຕິບັດ ໔ ໜ້າທີ່ຍຸດທະສາດ ຄືປົກປັກຮັກສາ ແລະສ້າງສາປະເທດຊາດສັງຄົມນິຍົມ, ເອົາປະສິດທິຜົນ ໃນການປະຕິບັດວຽກງານ ແລະ ຂະບວນການຂອງມະຫາຊົນ ເພື່ອກວດກາຄຸນນະພາບຂອງການຈັດຕັ້ງ ແລະພະນັກງານ. ການຈັດຕັ້ງແຂວງ ແລະພະນັກງານມີຄວາມສາມາດແມ່ນຕ້ອງຈັດຕັ້ງປະຕິບັດບັນດາໜ້າທີ່ຕົ້ນຕໍໃນປະຈຸບັນໄດ້ເປັນຢ່າງດີ ຄືນຳພາ ແລະຈັດຕັ້ງປະຕິບັດເປັນຢ່າງດີໜ້າທີ່ການຜະລິດທຸລະກິດ, ຈັດຕັ້ງຊີວິດການເປັນຢູ່ຂອງມະຫາຊົນ; ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບທົ່ວປວງຊົນ ແລະ ກໍ່ສ້າງກຳລັງປ້ອງກັນຊາດປ້ອງກັນຄວາມສະຫງົບປະຊາຊົນ; ກໍ່ສ້າງອຳນາດການປົກຄອງ ແລະກໍ່ສ້າງບັນດາອົງການຈັດຕັ້ງ ມະຫາຊົນໃຫ້ໜັກແໜ້ນເຂັ້ມແຂງ, ຮັບປະກັນການປະຕິບັດ ແລະເສີມ ຂະຫຍາຍສິດເປັນເຈົ້າລວມໝູ່ຂອງປະຊາຊົນ. ກ່ຽວກັບວິທີການຈັດຕັ້ງປະຕິບັດແມ່ນຕ້ອງຖືເປັນສຳຄັນການຊີ້ນຳຈຸດທົດລອງ, ສ້າງຕົວຢ່າງຖອດຖອນບົດຮຽນ ເພື່ອຊີ້ນຳຂະບວນການລວມ; ອັນນີ້ ແມ່ນວິທີຈັດຕັ້ງຊີ້ນຳທີ່ແທດຕົວຈິງ ແລະມີຜົນດີກວ່າໝູ່ ໃນສະພາບການປະຈຸບັນ.

ນ/ ຕ້ອງກຳແໜ້ນແຜນນະໂຍບາຍ ຂອງພັກ ແລະລັດເຮົາ

ກ່ຽວກັບການສົມທົບ ລະຫວ່າງການດັດສ້າງ ກັບການກໍ່ສ້າງສັງຄົມນິຍົມ, ດັດແປງວຽກງານຄຸ້ມຄອງເສດຖະກິດໃຫ້ດີຂຶ້ນຢ່າງບໍ່ຢຸດຢັ້ງ ແນໃສ່ເຮັດໃຫ້ການຜະລິດ ແລະການທຸລະກິດໄດ້ຮັບປະສິດທິຜົນອັນນັບມື້ນັບສູງທາງເສດຖະກິດ.

- ໃນການດັດສ້າງ ແລະ ກໍ່ສ້າງ ເສດຖະກິດນັ້ນ ຕ້ອງກຳແໜ້ນທັດສະນະ ສົມທົບການດັດສ້າງກັບການກໍ່ສ້າງໂດຍເອົາການກໍ່ສ້າງເປັນຕົ້ນຕໍ.

ພຶດຕິກຳຕົວຈິງແຫ່ງການກໍ່ສ້າງເສດຖະກິດໃນ ໔ ປີທີ່ຜ່ານມາໄດ້ຢັ້ງຢືນວ່າ ການກໍ່ສ້າງ ແລະຂະຫຍາຍກຳລັງແຫ່ງການ ຜະລິດ ມີບົດບາດຕັດສິນກວ່າໝູ່ໃນການດັດສ້າງ ແລະກໍ່ສ້າງເສດຖະກິດໃນເງື່ອນໄຂເສດຖະກິດ ຂອງປະເທດເຮົາປະຈຸບັນ; ການພົວພັນແຫ່ງການຜະລິດ ຈະໄດ້ຮັບການປັບປຸງ ແລະເສີມຂະຫຍາຍຄຸນປະໂຫຍດຂອງມັນໄດ້ກໍ່ຕໍ່ເມື່ອກຳລັງແຫ່ງການຜະລິດ ໄດ້ຮັບການກໍ່ສ້າງຂຶ້ນ ແລະຂະຫຍາຍຕົວ. ໃນຂະບວນການຫັນເປັນສະຫະກອນກະເສດນັ້ນ ພາຍຫລັງທີ່ຊາວນາເຂົ້າສູ່ເສັ້ນທາງທຳມາຫາກິນແບບລວມໝູ່ແລ້ວ ບ່ອນໃດຫາກເອົາໃຈໃສ່ຈັດຕັ້ງການຜະລິດຄືນໃໝ່, ແບ່ງງານຄືນໃໝ່, ຂະຫຍາຍ ຂະແໜງອາຊີບຕ່າງໆ, ສ້າງຊົນລະປະທານ, ເຮັດກະເສດສຸມ, ນຳເອົາວິທີການເຕັກນິກ ເຂົ້າສູ່ການຜະລິດ, ເຮັດໃຫ້ການຜະລິດຂະຫຍາຍຕົວ, ຢູ່ບ່ອນນັ້ນ ຂະບວນການໄດ້ຮັບການປັບປຸງຢ່າງໜັກແໜ້ນ. ກົງກັນຂ້າມຢູ່ໃນບ່ອນໃດທີ່ບໍ່ເອົາໃຈໃສ່ກໍ່ສ້າງ ຂະຫຍາຍກຳລັງແຫ່ງການຜະລິດແລ້ວ ຢູ່

ບ່ອນນັ້ນ ຂະບວນການກໍ່ພົບຄວາມຫຍຸ້ງຍາກ, ຜົນຂອງມັນແມ່ນການພົວພັນແຫ່ງການຜະລິດໃໝ່ກໍ່ຖືກມ້າງຊ້ຳ.

- ເພື່ອຊຸກຍູ້ການຜະລິດຢ່າງແຂງແຮງ ບົນພື້ນຖານທີ່ແນວທາງຖືກຕ້ອງແລ້ວແມ່ນຕ້ອງເຮັດວຽກງານຄຸ້ມຄອງເສດຖະກິດໃຫ້ດີຕາມບັນດາກົດເກນເສດຖະກິດ ໃນໄລຍະຫົວທີ ຂອງສະໄໝຂ້າມຜ່ານຂຶ້ນສູ່ສັງຄົມນິຍົມ. ໃນຂະນະທີ່ເສດຖະກິດແຫ່ງຊາດຂອງພວກເຮົາຍັງມີ ໕ ພາກສ່ວນເສດຖະກິດ ຄົງຕົວຢູ່ ເຊິ່ງພາກສ່ວນເສດຖະກິດສັງຄົມນິຍົມຫາກໍ່ຢູ່ໃນທີ່ຕັ້ງເປັນເຈົ້າພາທາງ ແລະ ກົດເກນຄຸນຄ່າຍັງເສີມຂະຫຍາຍຄຸນປະໂຫຍດອັນກວ້າງໃຫຍ່ນັ້ນແມ່ນຕ້ອງຮູ້ສົມທົບຢ່າງແໜ້ນແຟ້ນລະຫວ່າງແຜນການກັບຕະຫລາດ, ນຳໃຊ້ບັນດາໄມ້ວັດເສດຖະກິດຢ່າງມີໄຫວພິບ(ລາຄາ, ເງິນຕາ, ພາສີ, ສິນເຊື່ອ, ເງິນເດືອນ, ຄ່າບຳເນັດ...) ຈຶ່ງຈະສາມາດຊຸກຍູ້ການຜະລິດໃຫ້ຂະຫຍາຍຕົວໄດ້.

ໃນການຜະລິດ ແລະ ທຸລະກິດ ແມ່ນຕ້ອງເຂົ້າສູ່ລະບອບຄຸ້ມຄອງດຸນດ່ຽງ ແລະໄດ້ຜົນກຳໄລ, ຕ້ອງປະຕິບັດຫລັກການ ແຈກຢາຍຕາມແຮງງານເປັນຢ່າງດີ. ທີ່ຜ່ານມາ ຢູ່ໃນວິສະຫະກິດ ຈຳນວນໜຶ່ງໄດ້ປະຕິບັດຕາມລະບອບຄຸ້ມຄອງດຸນດ່ຽງ ແລະໄດ້ຜົນກຳໄລ, ຮູ້ສົມທົບຢ່າງຖືກຕ້ອງລະຫວ່າງ ໓ ຜົນປະໂຫຍດຄື: ຜົນປະໂຫຍດຂອງລັດ, ຜົນປະໂຫຍດຂອງລວມໝູ່, ແລະ ຜົນປະໂຫຍດຂອງຜູ້ອອກແຮງງານ ເຊິ່ງໃນນັ້ນ ເອົາໃຈໃສ່ຢ່າງເໝາະສົມເຖິງຜົນປະໂຫຍດຂອງຜູ້ອອກແຮງງານ, ໝູນໃຊ້ໄມ້ວັດເງິນເດືອນ, ຈ່າຍເງິນເດືອນຕາມຜະລິດຕະພັນ ຫລື ຈ່າຍເງິນເດືອນ ຕາມລະບອບ

ໜ້າງານ, ເຮັດໃຫ້ຜູ້ອອກແຮງງານເອົາໃຈໃສ່ຈິດຕໍ່ເຖິງໝາກຜົນແຫ່ງການອອກແຮງງານຂອງຕົນ, ຢູ່ໃນວິສະຫະກິດເຫລົ່ານັ້ນກໍ່ສາມາດເຮັດໃຫ້ການຜະລິດເພີ້ມຂຶ້ນ, ຮັບປະກັນຕົວເລກຄາດໝາຽຂອງແຜນການໄດ້ດີ, ເຮັດໃຫ້ສະມັດທະພາບຂອງງານເພີ້ມຂຶ້ນເທື່ອລະກ້າວ ແລະຊີວິດການເປັນຢູ່ຂອງກຳມະກອນໄດ້ຮັບການປົວແປງ. ກົງກັນຂ້າມບ່ອນໃດຍັງຮັກສາລະບອບ ບໍລິຫານເກື້ອກຸມ ໂດຽບໍ່ຄິດໄລ່ເຖິງຜົນໄດ້ຜົນເສັຽຂອງການຜະລິດ, ບໍ່ປະຕິບັດຫລັກການແຈກຢາຽຕາມແຮງງານເປັນຢ່າງດີແລ້ວ ຢູ່ບ່ອນນັ້ນ ການຜະລິດຖືກສະງັກຊັກຊ້າ, ຂະຫຍາຽຕົວຢ່າງຝືດເຄືອງ, ທັງນຳຜົນເສັຽຫາຽມາໃຫ້ລັດ, ທັງນຳຜົນເສັຽຫາຽມາໃຫ້ຊາວຜູ້ອອກແຮງງານ, ທັງນີ້ກໍ່ເພາະວ່າ ຢູ່ບ່ອນນັ້ນບໍ່ມີໃຜຮັບຜິດຊອບກ່ຽວກັບໝາກຜົນແຫ່ງການຜະລິດຂອງຕົນ. ສະພາບການແນວນັ້ນມັນເປັນຄືຈິດໃຈ ທີ່ເລີນ-ໄດ້ສອນວ່າ ໃນເມື່ອຜູ້ອອກແຮງງານບໍ່ເປັນຫ່ວງເປັນໄຍເຖິງ ຜົນຂອງການຜະລິດແລ້ວ ພວກເຮົາກໍ່ຈະບໍ່ມີອັນໃດໝົດ.

໔/ <u>ເພີ້ມທະວີຄວາມສາມັກຄີພາຽໃນ, ຄວາມສາມັກຄີ ທົ່ວປວງຊົນ, ຄວາມສາມັກຄີ ບັນດາຊົນຊາດ, ເດັດດ່ຽວປົກປັກຮັກສາແນວທາງນະໂຍບາຽ ຂອງພັກ ແລະລັດ.</u>

ອັນນີ້ ທັງເປັນໜ້າທີ່ອັນດັບໜຶ່ງ ແລະໜ້າທີ່ເປັນຕາຽ ຂອງການປະຕິວັດ, ທັງເປັນການສະແດງອອກຕົວຈິງຂອງຄຸນສົມບັດ ແລະຄວາມສາມາດ ຂອງພະນັກງານ, ລັດຖະກອນທຸກຄົນ, ທັງເປັນຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ ໃນສະພາບການໃໝ່. ຕ້ອງສ້າງຄວາມສາມັກຄີເປັນເອກະພາບບົນພື້ນຖານເຊື່ອມຊຶມແນວທາງ,

ແຜນນະໂຍບາຍ, ນະໂຍບາຍຂອງພັກ ແລະ ລັດດ້ວຍຈິດໃຈເຫັນແກ່ສ່ວນລວມ, ບໍ່ເຫັນແກ່ສ່ວນຕົວ, ຫລັກໝັ້ນມິດ ແລະສັດຕູ ຈະແຈ້ງ ແລະມີນ້ຳໃຈສາກົນອັນຜ່ອງໃສ. ຕ້ອງເດັດດ່ຽວ ປົກປັກຮັກສາແນວທາງ, ແຜນນະໂຍບາຍ, ນະໂຍບາຍຂອງພັກ ແລະລັດ, ຕໍ່ສູ້ເຜີຍແບຖຍທຳນອງສົງຄາມ ຈິດຕະສາດ ແລະກົນອຸບາຍ ຂອງສັດຕູ ໃນການຍຸແຫຍ່ແບ່ງແຍກຄວາມສາມັກຄີພາຍໃນ, ຄວາມສາມັກຄີບັນດາຊົນຊາດ, ມີສະຕິລະວັງຕົວກັ້ນກາງກົນອຸບາຍຂອງພວກລັດທິ ຂະຫຍາຍອານາເຂດ, ແຜ່ອຳນາດຊາດໃຫຍ່, ພວກຈັກກະພັດນິຍົມ ແລະອິດທິກຳລັງປະຕິການ ໃນການແຊກຊຶມເຂົ້າພາຍໃນ ແລະແຊກຄຸມການຈັດຕັ້ງປະຕິວັດຂອງພວກເຮົາ.

໔/ <u>ເພີ່ມທະວີຄວາມສາມັກຄີສາກົນ</u>, ອີງໃສ່ລະບົບສັງຄົມນິຍົມຢ່າງຂາດຂັ້ນ, ຮ່ວມສຳພັນສູ້ຮົບຢ່າງແໜ້ນແຟ້ນ ແລະສາມັກຄີຮ່ວມມືຢ່າງຮອບດ້ານກັບຫວຽດນາມ, ກຳປູເຈຍ, ສະຫະພາບໂຊວຽດ ແລະບັນດາປະເທດສັງຄົມນິຍົມ ເພື່ອປົກປັກຮັກສາ ປະເທດຊາດ ແລະກໍ່ສ້າງສັງຄົມນິຍົມ. ອັນນີ້ ເປັນກົດເກນແຫ່ງການ ຂະຫຍາຍຕົວຂອງການປະຕິວັດເຮົາແຕ່ໃດໆມາ ແລະ ໃນປະຈຸບັນມັນຍິ່ງມີຄວາມສຳຄັນທີ່ສຸດ ໃນເມື່ອລັດທິຂະຫຍາຍອານາເຂດ ແຜ່ອຳນາດຊາດໃຫຍ່, ພວກຈັກກະພັດນິຍົມ ແລະ ອິດທິກຳລັງປະຕິການເພີ່ມທະວີການສົມຮູ້ຮ່ວມຄິດກັນ ເພື່ອຕ້ານຍັ້ນນາງເພຢ່າງດື້ດ້ານຕໍ່ການປະຕິວັດຂອງພວກເຮົາຫວັງສະກັດກັ້ນ ແລະເຮັດໃຫ້ພວກເຮົາອ່ອນເພຍລົງ ກ້າວໄປເຖິງກືນກິນປະເທດເຮົາ. ເປັນອັນຈະແຈ້ງວ່າ ນີ້ເປັນປັດໄຈອັນໜຶ່ງ ທີ່ຂາດບໍ່ໄດ້ສຳລັບເພີ່ມທະວີກຳລັງແຮງ

ຂອງການປະຕິວັດເຮົາ, ຮັບປະກັນໃຫ້ພວກເຮົາສາມາດຕີເອົາຊະນະສັດຕູທຸກໂຕ ແລະ ສຳເລັດທຸກໜ້າທີ່. ບັນຫານີ້ ກໍ່ຕ້ອງໄດ້ຮັບການຢືນຢັນຢ່າງເດັດຂາດຢູ່ພາຍໃນບັນດາກຳລັງປະຕິວັດ ແລະໃນໝູ່ປະຊາຊົນບັນດາຊົນຊາດຂອງພວກເຮົາ. ການສຶກສາອົບຮົມລັດທິ ຮັກຊາດ ຕ້ອງຕິດແໜ້ນກັບການສຶກສາອົບຮົມລັດທິສາກົນກຳມະຊີບ, ເຮັດໃຫ້ໝົດທຸກຄົນເຫັນແຈ້ງໜ້າທີ່ສາກົນ ຂອງພວກເຮົາໃນສະພາບການປະຈຸບັນ, ກຳຈັດແກ້ໄຂທຸກການສະແດງອອກຂອງແນວຄິດຊາດຄັບແຄບ, ເຫັນແກ່ແຕ່ຊາດຕົນ, ພ້ອມກັນນັ້ນ ກໍ່ເດັດດ່ຽວຕໍ່ສູ້ກັບກົນອຸບາຍອັນເລິກແລບໂຫດຫ້ຽມ ຂອງສັດຕູທຸກໂຕ ໂດຍສະເພາະແມ່ນພວກຂະຫຍາຍອານາເຂດ, ແຜ່ອຳນາດຊາດໃຫຍ່ ໃນການແບ່ງແຍກລະຫວ່າງພວກເຮົາກັບ ຫວຽດນາມ ແລະສະຫະພາບໂຊວຽດ.

ບັນດາທ່ານທີ່ນັບຖື,

ພາຍໃຕ້ການນຳພາ ອັນຖືກຕ້ອງສ່ອງໃສ ຂອງພັກ ແລະລັດເຮົາ, ໃນ ໔ ປີທີ່ຜ່ານມາ, ການປະຕິວັດຂອງປະເທດເຮົາກໍ່ສາມາດຍາດເອົາໄຊຊະນະມາໄດ້ຢ່າງໃຫຍ່ຫລວງ, ເປັນພື້ນຖານ , ຮອບດ້ານ ແລະ ມີລັກສະນະໜັກແໜ້ນ; ກຳລັງປະຕິວັດໄດ້ ຂະຫຍາຍຕົວເຕີບໃຫຍ່ ຢ່າງໄວວາ, ບັນດາປັດໄຈຕັດສິນ ໄຊຊະນະຂອງການປະຕິວັດໄດ້ຮັບການປັບປຸງ ແລະ ເສີມສ້າງຂຶ້ນຕື່ມຢ່າງບໍ່ຢຸດຢັ້ງ.

ແຕ່ໃນສະເພາະໜ້ານີ້ ຄວາມຫຍຸ້ງຍາກຂອງພວກເຮົາຍັງມີ

ຫລາຍຢູ່, ມັນຮຽກຮ້ອງໃຫ້ປະຊາຊົນເຮົາຕ້ອງບາກບັ່ນບຸກບືນຢ່າງສຸດຂັ້ນສຸດຂີດຈຶ່ງຈະສາມາດຜ່ານພົ້ນໄປໄດ້.

ໂດຍທີ່ປະເທດເຮົາຢູ່ໃນທີ່ຕັ້ງປ້ອມດ່ານໜ້າຂອງສັງຄົມນິຍົມ ແລະຢູ່ໃນໄລຍະຫົວທີຂອງສະໄໝຂ້າມຜ່ານຂຶ້ນສູ່ສັງຄົມນິຍົມ, ການຕໍ່ສູ້ເພື່ອແກ້ໄຂບັນຫາໃຜເອົາຊະນະໃຜລະຫວ່າງສັງຄົມນິຍົມກັບທຶນນິຍົມກໍ່ຄືການຕໍ່ສູ້ລະຫວ່າງບັນດາກຳລັງປະຕິວັດກັບການສຳພັນປະຕິການ ຂອງພວກຂະຫຍາຍອານາເຂດ ແລະຈັກກະພັດນິຍົມນັ້ນ ຍັງຈະສືບຕໍ່ພັນແປໄປຢ່າງຍືດເຍື້ອ, ດຸເດືອດ, ຂ້ຽວຂາດ ແລະ ສັບສົນທີ່ສຸດ. ໃນໄລຍະທີ່ຜ່ານມາ, ສັດຕູຂອງປະຊາຊົນເຮົາໄດ້ປະສົບກັບການປະລາໄຊໄປແລ້ວຫລາຍຄັ້ງຫລາຍຫົນ, ແຕ່ພວກເຂົາກໍ່ຍັງດື້ດ້ານ ແລະຍັງມີກົນອຸບາຍເລ່ຫລ່ຽມອັນເລິກແລບໂຫດຫ້ຽມທີ່ສຸດ, ພວກເຮົາຕ້ອງເຊີດຊູສະຕິລະວັງຕົວໃຫ້ສູງອີ່ຫລີ.

ຜົນຮ້າຍອັນໜັກໜ່ວງຂອງສົງຄາມ ແລະ ລະບອບເກົ່າປະໄວ້ກໍ່ຄືຄວາມຫຍຸ້ງຍາກຕ່າງໆ ບົນເສັ້ນທາງຈາກການຜະລິດນ້ອຍພັດທະນາຂຶ້ນສູ່ການຜະລິດໃຫຍ່ສັງຄົມນິຍົມໂດຍກົງນັ້ນຈະຕ້ອງມີເວລາ ແລະຮຽກຮ້ອງຄວາມພະຍາຍາມຢ່າງໃຫຍ່ຫລວງຂອງທົ່ວປວງຊົນຈຶ່ງສາມາດແກ້ໄຂໃຫ້ຕົກໄປໄດ້.

ບັນດາກຳລັງປະຕິວັດ ຂອງພວກເຮົາ ເຖິງວ່າ ໄດ້ມີຄວາມກ້າວໜ້າຢ່າງກະໂດດຂັ້ນ, ແຕ່ຫລຽວໃສ່ຄວາມຮຽກຮ້ອງຕ້ອງການຂອງການປະຕິວັດແລ້ວ ກໍ່ຍັງມີຈຸດອ່ອນຫລາຍປະການ ຄົງຄ້າງຢູ່. ຂະບວນການມະຫາຊົນຢູ່ຮາກຖານ ຍັງບໍ່ທັນສະໝ່ຳສະເໝີ ແລະ ໜັກແໜ້ນແທ້, ອຳນາດການປົກຄອງຂັ້ນຕ່າງໆຂອງພວກເຮົາຍັງ

ຂາດຄວາມຮູ້ກ່ຽວກັບການຄຸ້ມຄອງເສດຖະກິດ, ຄຸ້ມຄອງລັດ ແລະ ຄວາມຮູ້ກ່ຽວກັບການ ກໍ່ສ້າງສັງຄົມນິຍົມ. ແບບແຜນຕິດແໜ້ນກັບ ພຶດຕິກຳຕົວຈິງ, ໜັນລົງສູ່ຮາກຖານ ເພື່ອຮັບໃຊ້ ປະຊາຊົນ, ແກ້ ໄຂ ຄວາມຫຍຸ້ງຍາກ ໃນຂັ້ນລຸ່ມນັ້ນ ຍັງມີການໜັນປ່ຽນຊ້າ; ການ ຈັດຕັ້ງປະຕິບັດກໍ່ຍັງອືດຕະວິໄສ, ຟ້າວຟັ່ງຮ້ອນຮົນ, ຂາດການຄິດ ໄລ່ຕາມຫລັກວິທະຍາສາດ, ພະຍາດອາດຍາເຈົ້ານາຍ, ຂາດການ ເຄົາຣົບສິດເປັນເຈົ້າຂອງມະຫາຊົນຍັງຄົງຄ້າງຢູ່ຫລາຍພໍສົມຄວນ.

ເພື່ອປະຕິບັດໜ້າທີ່ ໃນ ໕ ປີຕໍ່ໜ້ານີ້ໃຫ້ໄດ້ຮັບໄຊຊະນະ, ພວກເຮົາ ຕ້ອງອອກແຮງສູ້ຊົນກຳຈັດແກ້ໄຂຄວາມຫຍຸ້ງຍາກ ແລະ ຈຸດອ່ອນເລົ່ານັ້ນໃຫ້ໄດ້ເປັນຢ່າງດີ.

ໂດຍຢຶດໝັ້ນແນວທາງເອກະລາດ, ເປັນເຈົ້າຕົນເອງ ແລະ ສັງຄົມນິຍົມ, ຍົກສູງ ໒ ຄັນທຸງຊາດ ແລະສັງຄົມນິຍົມ, ກຳແໜ້ນ ພະເດັດການກຳມາຊີບ, ເສີມຂະຫຍາຍສິດເປັນເຈົ້າຮ່ວມໝູ່ຂອງ ປະຊາຊົນຜູ້ອອກແຮງງານບັນດາຊົນຊາດຢ່າງແຂງແຮງ, ເສີມຂະ ຫຍາຍຈຸດດີ ແລະແກ້ໄຂຈຸດອ່ອນ, ເສີມຂະຫຍາຍທ່າແຮງທຸກຢ່າງ ຂອງຊາດ ສົມທົບຢ່າງແໜ້ນແຟ້ນກັບກຳລັງແຮງຂອງຍຸກສະໄໝ, ພວກເຮົາມີຄວາມສາມາດພຽງພໍ ເພື່ອຜ່ານຜ່າທຸກຄວາມຫຍຸ້ງຍາກ ແລະພາປະເທດຊາດຂອງພວກເຮົາກ້າວເດີນໄປຢ່າງໜັກແໜ້ນສູ່ ຈຸດໝາຍອັນສູງສົ່ງແຫ່ງສັງຄົມນິຍົມ.

*ພາກທີ ສອງ*

## ທິດທາງໜ້າທີ່ຂອງແຜນການ 5 ປີ ແຫ່ງລັດ 1981-1985

* ບັນດາທ່ານທີ່ນັບຖື,

ເມື່ອຫວນເບິ່ງຄືນເສັ້ນທາງປະຫວັດສາດຜ່ານມາ, ພວກເຮົາມີຄວາມທະນົງໃຈເປັນຢ່າງຍິ່ງຕໍ່ຜົນງານອັນໃຫຍ່ຫລວງທີ່ປະຊາຊົນເຮົາໄດ້ສ້າງຂຶ້ນ ແລະພວກເຮົາກໍ່ມີຄວາມເບີກບານມ່ວນຊື່ນ ເຊື່ອໝັ້ນກ້າວເຂົ້າສູ່ການປະຕິບັດໜ້າທີ່ຂອງແຜນການ ໕ ປີຄັ້ງທຳອິດໃນເງື່ອນໄຂສາກົນ ແລະພາຍໃນປະເທດທີ່ມີຄວາມສະດວກຫລາຍປະການ.

ຢູ່ໃນໂລກ ປີ ໑໙໘໐ ແມ່ນປີທີ່ໄດ້ເປີດສາກ ຂອງທົດສະວັດໃໝ່ດ້ວຍທ່າອ່ຽງທີ່ບໍ່ສາມາດຕ່າວປີ້ນໄດ້ຄືການຊິ່ງຊາກຳລັງໄດ້ສືບຕໍ່ປ່ຽນແປງທີ່ເປັນຜົນດີແກ່ການປະຕິວັດ ແລະສັນຕິພາບຂອງໂລກ. ເຖິງວ່າພວກຈັກກະພັດນິຍົມ, ພວກລັດທິຂະຫຍາຍອານາເຂດ ແຜ່ອຳນາດຊາດໃຫຍ່ ແລະບັນດາອິດທິກຳລັງປະຕິການ ໄດ້ເພີ່ມທະວີການສົມຮູ້ຮ່ວມຄິດກັນ, ດຳເນີນການຕ້ານຕີການປະຕິວັດ ຢ່າງປ່ອງບ້າ ແລະກໍ່ຄວາມເຄັ່ງຕຶງສັບສົນທີ່ສຸດໃຫ້ແກ່ສະພາບການຂອງໂລກກໍ່ຕາມ, ແຕ່ພວກເຂົາກໍ່ໄດ້ປະສົບ ແລະພວມປະສົບກັບການປະລາໄຊຢ່າງຕໍ່ເນື່ອງກັນມາ. ການສຳພັນຝົນປະຕິວັດທີ່ໃຫຍ່ຫລວງກວ່າໝູ່ ແລະເປັນອັນຕະລາຍທີ່ສຸດໃນປະຫວັດສາດເຊິ່ງໄດ້ເກີດຂຶ້ນໃນ

ທ່າຣັບ, ທ່າອ່ອນເພຣນັ້ນ ເຖິງແມ່ນວ່າໄດ້ກໍ່ຄວາມຫຍຸ້ງຍາກ ໃນຊົ່ວໄລຍະໃດໜຶ່ງໃຫ້ແກ່ແຫ່ງນີ້ ຫລືແຫ່ງອື່ນຂອງໂລກກໍ່ຕາມ, ແຕ່ພວກເຂົາກໍ່ບໍ່ສາມາດຕ່າວປີ້ນສະພາວະການ ແຫ່ງການຕົກຢູ່ໃນທ່າຣັບ, ທ່າອ່ອນເພຣ ແລະນັບມື້ນັບຖືກໂດດດ່ຽວ ຂອງພວກເຂົານັ້ນໄດ້ ມີ ກະແສຟອງປະຕິວັດຍັງຄົງເຕີບໃຫຍ່ເຂັ້ມແຂງຢ່າງບໍ່ຢຸດຢັ້ງ ແລະຍາດເອົາໄຊຊະນະມາໄດ້ຢ່າງໃຫຍ່ຫລວງ. ຕໍ່ໜ້າໄພອັນຕະລາຍຂອງການສຳພັນລະຫວ່າງລັດທິຂະຫຍາຍອານາເຂດກັບຈັກກະພັດນິຍົມນັ້ນ ແນວໂຮມປະຊາຊົນໃນໂລກຕ້ານການສຳພັນ ດັ່ງກ່າວໄດ້ປາກົດຕົວຂຶ້ນ; ການຕໍ່ສູ້ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕນັບມື້ນັບຕິດແໜນກັບສັງຄົມນິຍົມ. ລະບົບສັງຄົມນິຍົມອັນມີສະຫະພາບໂຊວຽດ ທີ່ຍິ່ງໃຫຍ່ເປັນຫລັກແຫລ່ງ ນັບມື້ນັບເຕີບໃຫຍ່ເຂັ້ມແຂງຂຶ້ນ ໃນທຸກດ້ານ, ມີການປ້ອງກັນຊາດ ທີ່ເຂັ້ມແຂງແຮງກ້າ ແລະ ຫລາຍຂະແໜງການວິທະຍາສາດເຕັກນິກ ທີ່ເປັນປາຍແຫລມໄດ້ລື່ນກາຍຈັກກະພັດນິຍົມຢ່າງຂາດຂັ້ນ. ອັນນັ້ນ ເປັນກຳແພງເພັດຂອງສັນຕິພາບ ແລະການປະຕິວັດໂລກ ເປັນບ່ອນອີງອັນໜັກແໜ້ນໃຫ້ແກ່ການປົກປັກຮັກສາ ແລະສ້າງສາປະເທດຊາດສັງຄົມນິຍົມຂອງພວກເຮົາ.

ຈັກກະພັດອາເມລິກາໄດ້ຕົກເຂົ້າ ໃນສະໜົມວິກິດການຢ່າງຮອບດ້ານຄື ເສດຖະກິດການເມືອງ ແລະສັງຄົມຢ່າງບໍ່ມີທາງອອກ ອັນໄດ້ດຶງເອົາລະບົບຈັກກະພັດນິຍົມທັງໝົດ ເຂົ້າສູ່ວິກິດການຢ່າງຮ້າຍແຮງຕາມໆກັນ, ເຮັດໃຫ້ຄວາມຂັດແຍ່ງລະຫວ່າງອາເມລິກາກັບບັນດາປະເທດຈັກກະພັດອື່ນໆ, ລະຫວ່າງບັນດາ ປະເທດທຶນນິ

ຍົນຂະຫຍາຍຕົວ ກັບບັນດາປະເທດພວມພັດທະນາເພີ່ມຄວາມເລິກເຊິ່ງເຂົ້າຕື່ມ.

ພວກລັດທິຂະຫຍາຍອານາເຂດແຜ່ອຳນາດຊາດໃຫຍ່ພວມຕົກເຂົ້າສູ່ຄວາມຫຍຸ້ງຍາກອັນມາກມາຍກ່າຍກອງ, ພວກເຂົາຕໍ່ສູ້ແຍ່ງຊີງອຳນາດຢູ່ພາຍໃນຢ່າງຊຳເຮື້ອແລະປົກປ້ຳກັນຢ່າງດຸເດືອດຂຽວຂາດທີ່ສຸດ; ແຜນການ " ໔ ທັນສະໄໝ " ມີໄພອັນຕະລາຍຖືກລົ້ມລະລາຍ, ການແຊກຊຶມຂອງຈັກກະພັດນິຍົມ ພວມເຮັດໃຫ້ຊີວິດການເມືອງ, ເສດຖະກິດ ແລະສັງຄົມ ຂອງປະຊາຊົນຈີນເຊິ່ງອັດຕະຄັດຂັດສົນຢູ່ແລ້ວຍິ່ງປີ້ນຂວ້ຳປີ້ນຫງາຍ ແລະຊຸດຕາແຈຂຶ້ນຕື່ມ

ຢູ່ໃນແຫຼມອິນດູຈີນ ໓ ປະເທດ ລາວ, ຫວຽດນາມ ແລະກຳປູເຈຍ ໄດ້ຮັບໄຊຊະນະອັນໃຫຍ່ຫຼວງທີ່ສຸດໃນພາລະກິດປົກປັກຮັກສາປະເທດຊາດ ແລະກໍ່ສ້າງສັງຄົມນິຍົມ ຂອງແຕ່ລະປະເທດ. ໂດຍທີ່ໄດ້ຜູກພັນກັນຢ່າງແໜ້ນແຟ້ນມາແລ້ວ ໃນການຕໍ່ສູ້ຕ້ານສັດຕູໂຕດຽວກັນ ເພື່ອເອກະລາດ, ອິດສະລະພາບ ແລະ ສັງຄົມນິຍົມນັ້ນ ໃນຊຸມປີມໍ່ໆມານີ້, ພາລະກິດສາມັກຄີຮ່ວມສຳພັນສູ້ຮົບ, ປົກປັກຮັກສາກັນ ແລະ ຮ່ວມມືກັນຢ່າງຮອບດ້ານ ລະຫວ່າງ ໓ ປະເທດອ້າຍນ້ອງ ນັບມື້ນັບໄດ້ຮັບການປັບປຸງ ແລະຂະຫຍາຍຕົວໃນເງື່ອນໄຂໃໝ່, ເຮັດໃຫ້ເຕົ້າພະລັງ ທາງດ້ານເສດຖະກິດ ແລະການປ້ອງກັນຊາດຂອງແຕ່ລະປະເທດທະວີຄູນຂຶ້ນຕື່ມ ຄັນໄດ້ສ້າງຄວາມສະດວກຫຼາຍຂຶ້ນໃຫ້ແຕ່ລະປະເທດເສີມຂະຫຍາຍທຸກຄວາມສາມາດແລະທ່າແຮງຂອງຊາດຕົນໃຫ້ໄດ້ຮັບຜົນສູງ ໃນພາລະກິດປົກປັກຮັກສາແລະສ້າງສາປະເທດຊາດ. ການເຕີບໃຫຍ່ເຂັ້ມແຂງຂອງລາວ,

ຫວຽດນາມ ແລະກຳປູເຈຍ, ນະໂຍບາຍຕ່າງປະເທດອັນຖືກຕ້ອງ
ແລະທ່າທີທີ່ເຕັມໄປດ້ວຍເຈຕະນາດີຂອງ ໓ ປະເທດ ໃນການພົວ
ພັນກັບບັນດາປະເທດໃກ້ຄຽງ ເຊິ່ງໄດ້ລະບຸໄວ້ ໃນຖະແຫລງການ
ຮ່ວມລະຫວ່າງລັດຖະມົນຕີຕ່າງປະເທດ ຂອງ ໓ ປະເທດ ລາວ,
ຫວຽດນາມ ແລະກຳປູເຈຍ ສະບັບລົງວັນທີ ໑໘ ກໍລະກົດ ໑໙໘໐
ນັ້ນເປັນປັດໃຈອັນສຳຄັນທີ່ສຸດ ປະກອບສ່ວນຢ່າງຕັ້ງໜ້າເຂົ້າ ໃນ
ການຮັກສາສັນຕິພາບ ແລະ ສະຖຽນລະພາບ ໃນພາກພື້ນນີ້. ທ່າ
ອຽງແຫ່ງການພົບປະສົນທະນາກັນລະຫວ່າງບັນດາປະເທດໃນພາກ
ພື້ນນີ້ພວມໄດ້ຮັບການເປີດກວ້າງອອກ, ກົນອຸບາຍ ຂອງພວກລັດທິ
ຂະຫຍາຍອານາເຂດແຜ່ອຳນາດຊາດໃຫຍ່ ແລະ ຂອງພວກຈັກກະ
ພັດນິຍົມ ໃນການຍຸແຍ່ໃຫ້ມີການປໍລະປັກກັນລະຫວ່າງບັນດາປະເທດ
ໃນອິນດູຈີນກັບບັນດາປະເທດອາຊຽນນັ້ນ ໄດ້ຖືກຕີຖອຍໄປກ້າວໜຶ່ງ.
ໃບໜ້າປະຕິການ ແລະການທໍລະຍົດອັນຊົ່ວຊ້າຂອງພວກເຂົາ ນັບ
ມື້ນັບຖືກປະຊາຊົນບັນດາປະເທດໃນພາກພື້ນນີ້ເພີຍແບ.

ຢູ່ພາຍ ໃນປະເທດ, ແນວທາງປົກປັກຮັກສາ ປະເທດຊາດ
ແລະກໍ່ສ້າງສັງຄົມນິຍົມ ເຊິ່ງສະແດງອອກເປັນອັນລະອຽດ ໂດຍ
ມະຕິຄັ້ງທີ ໔,໕,໖,໗ ຂອງພັກປະຊາຊົນປະຕິວັດລາວ ແລະໂດຍ
ມະຕິຕ່າງໆຂອງສະພາປະຊາຊົນສູງສຸດ ແລະສະພາລັດຖະມົນຕີນັ້ນ
ໄດ້ຮັບການຢັ້ງຢືນຈາກພຶດຕິກຳຕົວຈິງແລ້ວວ່າ ມັນຖືກຕ້ອງຢ່າງສົມ
ບູນ. ພັກ ແລະລັດເຮົາສາມາດສະສົມບົດຮຽນທີ່ສຳຄັນໄດ້ຈຳນວນ
ໜຶ່ງ ໃນການດັດສ້າງ ແລະ ກໍ່ສ້າງສັງຄົມນິຍົມ, ໃນການກໍ່ສ້າງ
ເສດຖະກິດ, ຂະຫຍາຍວັດທະນະທຳ, ລະບົບຜະເດັດການກຳມາ

ຊົນໄດ້ຮັບການປັບປຸງ ໃຫ້ນັບມື້ນັບໜັກແໜ້ນ, ສາມາດຮັບປະກັນການປະຕິບັດ ແລະ ເສີມຂະຫຍາຍສິດເປັນເຈົ້າ ຂອງປະຊາຊົນຜູ້ອອກແຮງງານ ບັນດາຊົນຊາດ, ຄວາມສາມາດຄຸ້ມຄອງ ປະເທດຊາດຂອງລັດເຮົາກໍ່ນັບມື້ນັບກ້າວໜ້າຂຶ້ນ ປະຊາຊົນບັນດາຊົນຊາດເຮົາເຊິ່ງມີມູນເຊື້ອສາມັກຄີ, ຮັກຊາດໝັ້ນ ໄດ້ຂະຫຍັນຫ້າວຫັນທຸ່ມເທຄວາມສາມາດ, ກຳລັງວັງຊາ ແລະ ຊີວິດຊັບສິນຂອງຕົນເຂົ້າໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ ທີ່ແສນຮັກຕາມເສັ້ນທາງສັງຄົມນິຍົມ. ສະພາບການທຸກດ້ານ ຂອງຊາດໄດ້ເຂົ້າສູ່ຄວາມສະຫງົບປົກກະຕິໂດຍພື້ນຖານ, ຄວາມອາດສາມາດບົ່ມຊ້ອນໃນທຸກດ້ານຂອງຊາດພວມໄດ້ຮັບການຂຸດຄົ້ນ ແລະເສີມຂະຫຍາຍ. ທັງໝົດນັ້ນ ເປັນສິ່ງຄ້ຳປະກັນທີ່ໜັກແໜ້ນສຳລັບໄຊຊະນະ ຂອງປະຊາຊົນເຮົາບົນເສັ້ນທາງປະຕິວັດທີ່ພວກເຮົາພວມກ້າວເດີນໄປ. ພວກເຮົາຕ້ອງເສີມຂະຫຍາຍຂໍ້ສະດວກອັນເປັນພື້ນຖານ ທັງຢູ່ພາຍໃນ ແລະນອກປະເທດດັ່ງກ່າວນັ້ນບາກບັ່ນພະຍາຍາມຢ່າງສຸດຂີດ, ຍາດແຍ່ງເວລາ ເພື່ອສ້າງສາປະເທດຊາດໃຫ້ໜັກແໜ້ນ ໃນທຸກດ້ານ, ພ້ອມກັນນັ້ນ ກໍ່ຕ້ອງເຊີດຊູສະຕິລະວັງຕົວຢູ່ສະເໝີ, ເພີ່ມທະວີ ແລະປັບປຸງການປ້ອງກັນຊາດປ້ອງກັນຄວາມສະຫງົບ, ກຽມພ້ອມໃນທຸກດ້ານ ເພື່ອທັບມ້າງກົນອຸບາຍຕານຢັນມາງເພ, ກໍ່ການຈະລາຈົນໂຄ່ນລົ້ມ ແລະ ການຮຸກຮານກືນກິນ ຂອງສັດຕູ. ອັນນັ້ນແມ່ນ ໔ ໜ້າທີ່ຍຸດທະສາດ ທີ່ສອດຄ່ຽງຕະຫລອດ ໃນຂະບວນວິວັດແຫ່ງການປົກປັກຮັກສາ ແລະສ້າງສາປະເທດຊາດສັງຄົມນິຍົມຂອງພວກເຮົາ, ແລະ ມັນກໍ່ເປັນ ໔ ໜ້າທີ່ການເມືອງພື້ນຖານ ແລະ

ສຳຄັນກ່ວາໝູ່ຂອງພົນລະເມືອງທຸກຄົນໃນທົ່ວປະເທດ.

## I- ທິດທາງລວມ, ຈຸດໝາຍຕົ້ນຕໍ ແລະ ໜ້າທີ່ຂອງ ແຜນການ 5 ປີ 1981-1985

*ກ) ທິດທາງລວມ*

ບົນພື້ນຖານສືບຕໍ່ປະຕິບັດມະຕິຂອງກອງປະຊຸມສູນກາງພັກຄັ້ງທີ ໗ ແລະທິດທາງໜ້າທີ່ ຂອງສະພາລັດຖະມົນຕີ ເຊິ່ງສະພາປະຊາຊົນສູງສຸດ ໄດ້ຮັບຮອງເອົາ ໃນເດືອນກຸມພາ ປີ ໑໙໘໐ ແລະ ໂດຍອີງໃສ່ຈິດໃຈຂອງກອງປະຊຸມສູນກາງພັກປະຊາຊົນປະຕິວັດລາວຄັ້ງທີ ໘, ທິດທາງຂອງແຜນການ ໕ ປີແຫ່ງລັດ ຄັ້ງທຳອິດມີດັ່ງນີ້:

ເພີ່ມທະວີຄວາມສາມັກຄີປວງຊົນ, ຄວາມສາມັກຄີບັນດາຊົນຊາດ, ກຳແໜ້ນພະເດັດການກຳມາຊີບ, ເສີມຂະຫຍາຍສິດເປັນເຈົ້າຮວມໝູ່ ຂອງປະຊາຊົນຜູ້ອອກແຮງງານ, ສືບຕໍ່ດຳເນີນການປະຕິວັດທັງ ໓ ປະການໄປພ້ອມໆກັນ, ຊຸກຍູ້ການດັດສ້າງ ແລະກໍ່ສ້າງເສດຖະກິດ, ຂະຫຍາຍວັດທະນະທຳໄປຄຽງຄູ່ກັບການ ເພີ່ມທະວີ ແລະ ປັບປຸງການປ້ອງກັນຊາດ, ປ້ອງກັນ ຄວາມສະຫງົບ, ເສີມຂະຫຍາຍຄວາມສາມາດບົ່ມຊ້ອນໃນທຸກດ້ານຂອງຊາດ ສົມທົບຢ່າງແໜ້ນແຟ້ນກັບການນຳໃຊ້ ການຊ່ວຍເຫຼືອຂອງສາກົນ ເປັນຢ່າງດີ, ເພີ່ມທະວີການຮ່ວມມືຢ່າງຮອບດ້ານກັບຫວຽດນາມ ກຳປູເຈຍ, ສະຫະພາບໂຊວຽດ ແລະ ບັນດາປະເທດສັງຄົມນິຍົມອ້າຍນ້ອງ, ປັບປຸງບູລະນະໂຄງປະກອບການຈັດຕັ້ງ ແລະເຊີດຊູຄວາມສາມາດຄຸ້ມຄອງເສດຖະກິດ ຂອງມັນແນໃສ່ເຮັດໃຫ້ການກະສິກຳ-

ປ່າໄມ້ມີບາດກ້າວຫັນປ່ຽນໃຫມ່ຢ່າງເດັ່ນຊັດ, ພ້ອມກັນນັ້ນກໍ່ດຳເນີນການກໍ່ສ້າງພື້ນຖານວັດຖຸເຕັກນິກຂອງສັງຄົມນິຍົມເທື່ອລະກ້າວຢ່າງຫນັກແຫນ້ນ, ຮັບປະກັນຈັ່ງຫວະຄວາມໄວ ແລະ ຄວາມຫມັ້ນທ່ຽງຂອງການຜະລິດທາງສັງຄົມ, ເຮັດໃຫ້ຊີວິດການເປັນຢູ່ໃນທຸກດ້ານຂອງປະຊາຊົນບັນດາຊົນຊາດ ເປັນປົກກະຕິ, ພ້ອມກັນນັ້ນ ກໍ່ເດັດດ່ຽວທັບມ້າງທຸກເລຫລ່ຽມສົງຄາມຈິດຕະສາດ, ນັກສືບສອດແນມ, ການຫັນປ່ຽນໂດຍສັນຕິ ແລະການກະທຳມ້າງເພຂອງສັດຕູ, ເຊີດຊູສະຕິລະວັງຕົວໃຫ້ສູງ, ກຽມພ້ອມຜາບແພ້ທຸກການກະທຳກໍ່ສົງຄາມຮຸກຮານຂອງສັດຕູ, ປົກປັກຮັກສາປະເທດຊາດໄວ້ໃຫ້ຫມັ້ນຄົງ, ປະກອບສ່ວນຢ່າງຕັ້ງຫນ້າເຂົ້າໃນການຕໍ່ສູ້ເພື່ອປົກປັກຮັກສາສັນຕິພາບ ແລະສະຖຽນລະພາບ ໃນອາຊີອາຄະເນ ກໍ່ຄືໃນການຕໍ່ສູ້ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ສັງຄົມນິຍົມໃນໂລກ.

*ຂ) ຈຸດຫມາຍຕົ້ນຕໍ*

ເພື່ອປະຕິບັດທິດທາງລວມດັ່ງກ່າວນັ້ນໃຫ້ປະກົດເປັນຈິງຕ້ອງມີການຈັດວາງຍຸດທະສາດຢ່າງຖືກຕ້ອງ, ເຫມາະສົມໃນບັນດາຂະແຫນງການເສດຖະກິດແຫ່ງຊາດໂດຍໃຫ້ມັນມີການເຄື່ອນໄຫວຢ່າງເຂົ້າແກັບເຂົ້າເກຍກັນ, ຄົບຊຸດ, ຮັບປະກັນຈັ່ງຫວະ ຄວາມໄວ-ແລະຫນັກແຫນ້ນຂອງການຜະລິດທາງສັງຄົມ ແນໃສ່ປະຕິບັດ ໔ ຈຸດຫມາຍຕົ້ນຕໍດັ່ງລຸ່ມນີ້ :

໑/ ເຮັດໃຫ້ຊີວິດການເປັນຢູ່ທາງດ້ານວັດຖຸ ແລະວັດທະນະທຳຂອງປະຊາຊົນບັນດາຊົນຊາດເປັນປົກກະຕິ.

ການຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸແລະວັດທະນະທຳຂອງປະຊາຊົນ ໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ ເປັນໜ້າທີ່ອັນດັບໜຶ່ງຂອງພັກ ແລະລັດເຮົາ, ເປັນຄວາມຮຽກຮ້ອງຕ້ອງການ ຂອງກົດເກນເສດຖະກິດພື້ນຖານຂອງສັງຄົມນິຍົມ, ເປັນວັດຖຸປະສົງອັນສູງສຸດຂອງແຜນການຂະຫຍາຍເສດຖະກິດແຫ່ງຊາດ.

ໃນ ໔ ປີທີ່ຜ່ານມາ ພັກແລະລັດເຮົາໄດ້ມີຄວາມພະຍາຍາມຫລາຍຢ່າງ ໃນການຊຸກຍູ້ການຜະລິດໃຫ້ຂະຫຍາຍຕົວ,ແກ້ໄຂຂອດຈຳລະຈອນແຈກຢາຍ, ຊຸກຍູ້ວຽກງານສຶກສາ, ສາທາລະນະສຸກ , ວັດທະນະທຳຢ່າງແຂງແຮງ, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນບັນດາຊົນຊາດເປັນປົກກະຕິເທື່ອລະກ້າວ ແລະ ມີຫລາຍດ້ານກໍ່ດີຂຶ້ນກວ່າເກົ່າ. ຢ່າງໃດກໍ່ດີເບິ່ງທົ່ວໄປແລ້ວ ຊີວິດການເປັນຢູ່ຂອງປະຊາຊົນຜູ້ອອກແຮງງານຢູ່ໃນຕົວເມືອງ ແລະຢູ່ໃນບາງບໍລິເວນຊົນນະບົດ, ເຂດຊົນຊາດຈຳນວນໜຶ່ງກໍ່ຍັງບໍ່ທັນເປັນປົກກະຕິຢ່າງແທ້ຈິງເທື່ອ. ພວກເຮົາເຂົ້າໃຈຢ່າງຈະແຈ້ງວ່າ ເສດຖະກິດຂອງປະເທດເຮົາດ້ອຍພັດທະນາ,ຍັງເຕັມໄປດ້ວຍລັກສະນະທຳມະຊາດ,ກຸມຕົນເອງພໍໃຊ້ພໍລາວ, ຖືກຂຶ້ນກັບຕະຫລາດຂອງພາຍນອກຊ້ຳຖືກສົງຄາມທຳລາຍຢ່າງໜັກໜ່ວງ, ຍິ່ງໄປກວ່ານັ້ນ ສັດຕູກໍ່ພວມ ຊອກທຸກວິທີທາງເພທຳລາຍ. ໃນເງື່ອນໄຂຄືແນວນັ້ນ ການແກ້ໄຂຊີວິດການເປັນຢູ່ ຂອງປະຊາຊົນແມ່ນເປັນໜ້າທີ່ອັນໜັກໜ່ວງທີ່ສຸດ , ຄວາມຫຍຸ້ງຍາກຕ່າງໆໃນຊີວິດການເປັນຢູ່ຂອງມະຫາຊົນແມ່ນ ບໍ່ອາດຈະແກ້ໄຂໃຫ້ຕົກໄປໄດ້ໃນໜຶ່ງຍາມດຽວ. ດ້ວຍເຫດນັ້ນ ໃນໜ້າທີ່ຂອງແຜນການ ໔ ປີຄັ້ງທຳອິດນີ້ພວກເຮົາຕ້ອງພະຍາຍາມ

ຢ່າງສຸດຂີດໃນການປະຕິບັດຈຸດໝາຍດັ່ງກ່າວໃຫ້ປາກົດເປັນຈິງບົນພື້ນຖານແຫ່ງການຊຸກຍູ້ການຜະລິດ ໃຫ້ຂະຫຍາຍຕົວ. ໃນ ໜ້າທີ່ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນເປັນປົກກະຕິນັ້ນ ກ່ອນອື່ນໝົດພວກເຮົາຕ້ອງເອົາໃຈໃສ່ເຖິງກອງທະຫານ, ກຳມະກອນ,, ຊາວຜູ້ອອກແຮງງານ, ເຂດຊົນຊາດສ່ວນໜ້ອຍ, ເຂດເສດຖະກິດລວມສູນ, ປະຊາຊົນໃນບໍລິເວນທີ່ປະສົບໄພທຳມະຊາດ.

ໃນ ໕ ປີຕໍ່ໜ້ານີ້, ຕ້ອງອອກແຮງຂະຫຍາຍການຜະລິດທັນຍາຫານ, ຂະຫຍາຍການລ້ຽງສັດປະເພດໃຫຍ່ ແລະນ້ອຍ, ລ້ຽງປາ, ຂະຫຍາຍອຸສະຫະກຳ, ອຸສະຫະກຳນ້ອຍ ແລະ ຫັດຖະກຳທີ່ຜະລິດເຄື່ອງໃຊ້ໃນສອຍ, ຂະຫຍາຍວັດທະນະທຳ, ສຶກສາ, ສາທາລະນະສຸກ ຮັບປະກັນໃຫ້ໝົດທຸກຄົນທີ່ມີແຮງງານມີວຽກເຮັດງານທຳ, ພະຍາຍາມຮັບປະກັນໃຫ້ໝົດທຸກຄົນມີເຂົ້າກິນພຽງພໍ ແລະມີຊີ້ນປາອາຫານສ່ວນໜຶ່ງ, ມີເຄື່ອງນຸ່ງຫົ່ມ, ມີເຈັ້ຍສໍ ສຳລັບໃຊ້ໃນການຮ່ຳຮຽນ, ມີຢູກຢາກັນ ແລະປົວພະຍາດທົ່ວໄປ.

ໃນດ້ານໜຶ່ງອີກຕ້ອງເປີດກວ້າງຕາມທາງຈໍລະຈອນແຈກຢາຍ, ຈັດຕັ້ງການເອົາສິນຄ້າລົງໄປເຖິງບໍລິເວນຕ່າງໆ ທີ່ຢູ່ຫ່າງໄກສອກຫລີກ, ແຈກຢາຍຢ່າງຍຸດຕິທຳ, ສົມເຫດສົມຜົນ, ອຳນວຍຄວາມສະດວກໃຫ້ປະຊາຊົນ, ເປີດກວ້າງຕາມທາງການສ້ອມແປງ, ບໍລິການ, ຕ້ອງເອົາໃຈໃສ່ເປັນສຳຄັນເຖິງການຈັດຕັ້ງຊີວິດການເປັນຢູ່ ຂອງລວມໝູ່ກໍ່ຄືຂອງແຕ່ລະຄອບຄົວ.

ສຶກສາອົບຮົມໃຫ້ມີສະຕິປະຫຍັດມັດທະຍັດໃນການໃຊ້ສອຍ, ສະຕິໃຊ້ສອຍໂດຍອີງໃສ່ຄວາມສາມາດຂອງການຜະລິດ ແລະຕະຫລາດ

ພາຣູໃນປະເທດ, ສົ່ງເສີມການດຳລົງຊີວິດ ແບບໃໝ່, ຕ້ານຜົນສະທ້ອນ ແລະ ຄວາມຈຸ່ມເຄີຣຂອງການໃຊ້ສູຣແບບລັດທິລ່າເມືອງຂຶ້ນແບບໃໝ່ ເປັນຕົ້ນຢູ່ໃນຕົວເມືອງຕ່າງໆ.

໔/ <u>ສຸມໃສ່ການກໍ່ສ້າງບາງກິດຈະການທີ່ມີຄວາມໝາຍ ຍຸດທະສາດທາງດ້ານເສດຖະກິດ ແລະ ການປ້ອງກັນຊາດໃຫ້ແລ້ວຢ່າງຂາດຕົວ ແນໃສ່ກໍ່ສ້າງພື້ນຖານວັດຖຸເຕັກນິກໃຫ້ແກ່ເສດຖະກິດແຫ່ງຊາດ ເທື່ອລະກ້າວຢ່າງໜັກແໜ້ນ.</u>

ການກໍ່ສ້າງພື້ນຖານວັດຖຸເຕັກນິກ, ການດຳເນີນ ການປະຕິວັດທາງດ້ານເຕັກນິກ ແລະການດັດແປງເຕັກນິກສຳລັບເສດຖະກິດແຫ່ງຊາດທັງໝົດນັ້ນ ມີບົດບາດເປັນກະແຈ ໃນການປະຕິວັດ ທັງ ໓ ປະການທີ່ຈະຕ້ອງດຳເນີນໄປພ້ອມໆກັນ ເຊິ່ງໄດ້ກຳນົດໄວ້ ໃນແນວທາງການປະຕິວັດສັງຄົມນິຍົມຢູ່ປະເທດເຮົາ.

ແຕ່ຢາກປະຕິບັດແຜນການກໍ່ສ້າງພື້ນຖານວັດຖຸເຕັກນິກ ຂອງສັງຄົມນິຍົມ ໃນຂະໜາດໃຫຍ່ນັ້ນ ຕ້ອງສ້າງເງື່ອນໄຂ ເບື້ອງຕົ້ນເຊັ່ນ : ຕ້ອງສະສົມທຶນ, ຕ້ອງມີຖັນແຖວພະນັກງານວິທະຍາສາດເຕັກນິກ, ພະນັກງານຄຸ້ມຄອງ ແລະຖັນແຖວກຳມະກອນເຕັກນິກທີ່ໜາແໜ້ນ, ຕ້ອງເຮັດໃຫ້ການຂະຫຍາຍເສດຖະກິດ ແລະວັດທະນະທຳເຂົ້າແຜນກຳນົດ ແລະ ເຂົ້າແຜນການ, ຕ້ອງດຳເນີນການຄົ້ນສືບ ແລະຂຶ້ນແຜນ, ຕ້ອງມີໂຄງລ່າງຮັບໃຊ້ການຜະລິດ, ການກໍ່ສ້າງ ແລະຊີວິດການເປັນຢູ່...

ດ້ວຍເຫດນັ້ນໃນແຜນການ ໔ ປີຄັ້ງນີ້ຕ້ອງສຸມໃສ່ການກໍ່ສ້າງ

ບາງກິດຈະການໃຫຍ່ທີ່ມີຄວາມໝາຍຍຸດທະສາດທາງດ້ານເສດຖະກິດ ແລະການປ້ອງກັນຊາດໃຫ້ແລ້ວຢ່າງຂາດຕົວ ແລະ ສ້າງບາງເຂດຈຸດໜັກ ໃນການຜະລິດເຂົ້າ, ການຜະລິດແຫລ່ງສິນຄ້າ ຂາອອກທີ່ມີຄຸນຄ່າສູງ.

ຄ) <u>ໜ້າທີ່</u>

ເພື່ອປະຕິບັດທິດທາງ ແລະ ຈຸດໝາຍດັ່ງກ່າວມານັ້ນໃຫ້ປາກົດເປັນຈິງ ໜ້າທີ່ຂອງແຜນການ ໕ ປີມີດັ່ງນີ້ :

໑/ ອອກແຮງສູ້ຊົນ ດຳເນີນການຜະລິດກະສິກຳ ເພື່ອໃຫ້ມີເຂົ້າ, ອາຫານພໍກິນ ແລະມີສ່ວນແຮໄວ້ ແລະມີແຫລ່ງສິນຄ້າ ຂາອອກຈຳນວນໜຶ່ງທີ່ມີຄຸນຄ່າ(ກາເຟ, ຢາງູດ, ໄມ້...).

໒/ ສຸມໃສ່ການກໍ່ສ້າງບາງກິດຈະການ ທີ່ມີຄວາມໝາຍຍຸດທະສາດທາງດ້ານເສດຖະກິດ ແລະການປ້ອງກັນຊາດໃຫ້ແລ້ວຢ່າງຂາດຕົວ ເຊັ່ນ : ທາງເລກ ໙ , ທໍ່ສົ່ງນ້ຳມັນຖາວອນ, ໂຮງງານຊີມັງ, ກອງລົດຂົນສົ່ງສິນຄ້າຂາອອກຂາເຂົ້າ...

໓/ ເພີ່ມທະວີ ແລະປັບປຸງບັນດາຮາກຖານເສດຖະກິດ ລັດວິສາຫະກິດໃນດ້ານກະສິກຳ, ອຸສະຫະກຳ, ປ່າໄມ້, ຂົນສົ່ງ, ກໍ່ສ້າງ, ການຄ້າ ແລະການສະໜອງວັດຖຸປະກອບ; ປັບປຸງ ແລະຂະຫຍາຍຂະບວນການຫັນເປັນສະຫະກອນໃນດ້ານກະສິກຳ,ຫັດຖະກຳແລະອຸສະຫະກຳນ້ອຍ, ເຮັດໃຫ້ເສດຖະກິດສັງຄົມນິຍົມຢຶດໄດ້ທາດີແລະເຮັດໃຫ້ເສດຖະກິດຂອງລັດ ສາມາດເສີມຂະຫຍາຍບົດບາດເປັນເຈົ້າພາທາງ ໃນເສດຖະກິດແຫ່ງຊາດທັງໝົດ,ການຄ້າຂອງລັດຕ້ອງເຂົ້າແທນທີ່ເອກະຊົນໃນການທຸລະກິດຂາອອກຂາເຂົ້າແລະ

ການຄ້າຂາຍຍົກ.

໔/ ອອກແຮງກໍ່ສ້າງຖັນແຖວພະນັກງານຄຸ້ມຄອງເສດຖະກິດ, ພະນັກງານ ແລະ ກຳມະກອນເຕັກນິກ ເພື່ອຕອບສະໜອງຄວາມຕ້ອງການໃນສະເພາະໜ້າ ແລະ ຍາວນານຂອງບັນດາຂະແໜງການເສດຖະກິດແຫ່ງຊາດແລະຂອງບັນດາ ຂະແໜງການ ວັດທະນະທຳ, ສຶກສາ ແລະສາທາລະນະສຸກ.

໕/ ຕ້ອງສຳເລັດການລຶບລ້າງໄພບໍ່ຮູ້ໜັງສືແລະພະຍາຍາມເຮັດໃຫ້ທົ່ວປວງຊົນມີລະດັບການສຶກສາຂັ້ນປະຖົມຢ່າງທົ່ວເຖິງ.

໖/ ປັບປຸງບູລະນະໂຄງປະກອບການຈັດຕັ້ງຄຸ້ມຄອງເສດຖະກິດ, ຄຸ້ມຄອງລັດແຕ່ສູນກາງເຖິງຮາກຖານ ແລະລະບົບກົງຈັກຄຸ້ມຄອງເສດຖະກິດຕື່ມອີກກ້າວໜຶ່ງ.

໗/ ຍາດແຍ່ງ ແລະນຳໃຊ້ການຊ່ວຍເຫຼືອ ແລະການຮ່ວມມືທາງດ້ານເສດຖະກິດ ກັບຕ່າງປະເທດ ໃຫ້ມີປະສິດທິຜົນ, ເປີດກ້ວາງການຮ່ວມມືທາງດ້ານເສດຖະກິດ ແລະວິທະຍາສາດເຕັກນິກກັບສະຫະພາບໂຊວຽດ, ຫວຽດນາມ ແລະບັນດາປະເທດສັງຄົມນິຍົມອື່ນໆ, ປະຕິບັດການຮ່ວມມືທາງດ້ານເສດຖະກິດຢ່າງຮອບດ້ານລະຫວ່າງ ໓ ປະເທດ ລາວ, ຫວຽດນາມ ແລະກຳປູເຈຍ.

## II – ໜ້າທີ່ຂະຫຍາຍແລະດັດສ້າງບັນດາຂະແໜງການເສດຖະກິດ

ໃນເງື່ອນໄຂຕົວຈິງ ຂອງປະເທດເຮົາປະຈຸບັນ, ເພື່ອປະຕິບັດແນວທາງ, ທິດທາງໜ້າທີ່ຂອງພັກ ແລະລັດກ່ຽວກັບການ ດັດສ້າງ ແລະກໍ່ສ້າງເສດຖະກິດໃຫ້ດີນັ້ນ ຕ້ອງກຳແໜນທັດສະນະ ທີ່

ວ່າສຸມທຸກຄວາມພະຍາຍາມເຂົ້າໃນການຊຸກຍູ້ ການຜະລິດກະສິກຳ ປ່າໄມ້, ຖືເປັນສຳຄັນການຂະຫຍາຍຫັດຖະກຳ ແລະ ອຸສະຫະກຳ ນ້ອຍ, ຂະຫຍາຍການຜະລິດເຄື່ອງໃຊ້ສອຍ ຂະຫຍາຍການຄົມມະນາ ຄົມຂົນສົ່ງທ້ອງຖິ່ນ, ຈັດຕັ້ງຂອດຈຳລະຈອນແຈກຢາຍໃຫ້ໄດ້ດີ, ເປີດ ກ້ວາງຕະຫລາດພາຍໃນປະເທດ, ຕັ້ງໜ້າກໍ່ສ້າງເສດຖະກິດທ້ອງ ຖິ່ນ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນບັນດາຊົນຊາດເປັນປົກ ກະຕິໂດຍໄວ ແລະໄດ້ຮັບການປັບປຸງໃຫ້ດີຂຶ້ນເລື້ອຍໆ.

ກ່ຽວກັບການກໍ່ສ້າງພື້ນຖານ ແມ່ນ<u>ເອົາໃຈໃສ່ກໍ່ສ້າງຢ່າງ ມີ ຈຸດສຸມແລະໃຫ້ແລ້ວຢ່າງຂາດຕົວ</u>, ຮັບປະກັນປະສິດທິຜົນສູງ ທາງ ດ້ານເສດຖະກິດ ແລະ ຮັບປະກັນການເອົາກິດຈະການນັ້ນ ເຂົ້າສູ່ ການເຄື່ອນໄຫວໄດ້ຕາມກຳນົດເວລາ.

໑/ <u>ຕອງຂະຫຍາຍການກະສິກຳ-ປ່າໄມ້ຢ່າງຮອບດ້ານລວມ ທັງການປູກຝັງ, ທັງການລ້ຽງສັດ ແລະ ການປ່າໄມ້</u> ແນໃສ່ເຮັດ ໃຫ້ມີເຂົ້າ ແລະອາຫານພໍກິນ, ທັງມີແຮໄວ້ສ່ວນໜຶ່ງ ແລະມີເຄື່ອງ ປ່າຂອງນາຫລາຍຊະນິດສຳລັບເປັນສິນຄ້າຂາອອກ, ມີຜະລິດ ຕະ ພັນກະສິກຳ ເພື່ອເອົາເປັນວັດຖຸດິບ ປ້ອນອຸສະຫະກຳ ແລະ ເປັນ ພື້ນຖານໃຫ້ການຂະຫຍາຍອຸສະຫະກຳ.

*- ດ້ານການປູກຝັງ*

ໃນຊຸມປີທີ່ຜ່ານມາ, ການຜະລິດທັນຍາຫານ ໄດ້ມີການ ຂະ ຫຍາຍຕົວ, ແຕ່ກໍ່ບໍ່ທັນສາມາດຕອບສະໜອງຄວາມຕ້ອງການຂອງ ລັດ ແລະ ຂອງປະຊາຊົນໄດ້ເທື່ອ, ພວກເຮົາຍັງຈຳເປັນໄດ້ເອົາ ທັນຍາຫານ ມາຈາກຕ່າງປະເທດຢູ່. ໃນ ໕ ປີຕໍ່ໜ້ານີ້, ຕ້ອງຖື

ການຂະຫຍາຽການກະສິກຳ-ປ່າໄມ້ເປັນຫນ້າທີ່ອັນດັບຫນຶ່ງ. ການກະສິກຳ-ປ່າໄມ້ຕ້ອງຂະຫຍາຽຕົວ ຢ່າງຮອບດ້ານ, ແຕ່ເອົາການຜະລິດເຂົ້າເປັນໃຈກາງ, ຕ້ອງສູ້ຊົນປະຕິບັດໃຫ້ໄດ້ຕາມຈຸດຫມາຽທີ່ວ່າ ມີເຂົ້າ ແລະພືດທັນຍາຫານພຽງພໍສຳລັບກິນ ແລະ ເປັນສິນຄ້າ. ທັງມີສ່ວນສະສົມໄວ້ແດ່, ຄິດສະເລັ່ຽແຕ່ລະຫົວຄົນໄດ້ ໓໕໐ ກິໂລເຂົ້າເປືອກຕໍ່ປີ (ນັບທັງພືດທັນຍາຫານອື່ນໆ ທີ່ໄລ່ເປັນເຂົ້າເປືອກ).

ຕ້ອງເຮັດໃຫ້ພະນັກງານ ແລະ ທົ່ວປວງຊົນເຊື່ອມຊຶມຄວາມຫມາຽຍຸດທະສາດຂອງການຜະລິດທັນຍາຫານສຳລັບເປັນສິນຄ້າ . ອຳນາດການປົກຄອງຂັ້ນຕ່າງໆຕ້ອງສຸມການນຳພາເຂົ້າໃສ່ການປະຕິບັດຈຸດຫມາຽດັ່ງກ່າວນັ້ນ ໃຫ້ປາກົດເປັນຈິງດ້ວຽຄວາມຕັດສິນໃຈສູງ. ເພື່ອຮັບປະກັນການປະຕິບັດຈຸດຫມາຽດັ່ງກ່າວນັ້ນ ທຸກໆທ້ອງຖິ່ນຕ້ອງສຳລວດກວດກາການຈັດຕັ້ງປະຕິບັດ ວິທີການຕ່າງໆ ທີ່ໄດ້ວາງອອກ, ບົນພື້ນຖານນັ້ນ ແລ້ວຊອກຫາວິທີການລະອຽດເພື່ອແນໃສ່ຊຸກຍູ້ການຜະລິດເຂົ້າ ແລະທັນຍາຫານອື່ນໆ. ຕ້ອງເອົາໃຈໃສ່ລະດົມຂົນຂວາຽປະຊາຊົນເພີ່ມວັນງານຂຶ້ນ, ເປີດກວ້າງ ຂະບວນການເຮັດກະເສດສູມ, ຍົກປະສິດທິພາບ ຂອງການປູກເຂົ້າໃຫ້ສູງຂຶ້ນ ດ້ວຽການນຳໃຊ້ວິທີການເຕັກນິກທຳມະດາ ເຊັ່ນ : ໄຖເລິກຄາດແຫລກ, ປັກດຳທັນລະດູການ, ປ່ານຄັນນາໃຫ້ດີ ເພື່ອຮັກສານ້ຳໄວ້, ສ້າງຊົນລະປະທານ ຂະຫນາດນ້ອຽ, ໃສ່ຝຸ່ນຄອກ ແລະຝຸ່ນຂຽວ, ເລືອກແນວປູກທີ່ດີ ທີ່ເຫມາະສົມກັບທ້ອງຖິ່ນ; ພ້ອມກັນນັ້ນກໍ່ຣັດຊົນລະປະທານ ເພື່ອເພີ່ມລະດູການປູກຝັງຂຶ້ນ,ຂະຫຍາຽ

ເນື້ອທີ່ນາແຊງ ແລະປູກພືດທັນຍາຫານອື່ນໆ; ຈຳກັດການຖາງໄຮ່, ຖືການຟື້ນຟູນາເຮື້ອເປັນສຳຄັນ, ໃນບ່ອນໃດທີ່ຕ້ອງການ ແລະ ມີເງື່ອນໄຂກໍ່ເປີດກວ້າງ ເນື້ອທີ່ດິນ. ການຄ້າລັດວິສະຫະກິດ ແລະ ສະຫະກອນຊື້-ຂາຍຕ້ອງເປີດກວ້າງການແລກປ່ຽນສິນຄ້າລະຫວ່າງ ຕົວເມືອງກັບຊົນນະບົດຕາມແບບວິທີຊື້-ຂາຍຢ່າງສະດວກ ແລະລາຄາກໍ່ສົມເຫດສົມຜົນ, ເອົາໃຈໃສ່ເປັນສຳຄັນການສະໜອງເຄື່ອງມືກະເສດໃຫ້ຊາວໄຮ່ນາ.

ດ້ານໜຶ່ງອີກ. ລັດຕ້ອງກຳນົດໃຫ້ຈະແຈ້ງວ່າ ເຂດໃດເປັນເຂດຈຸດໜັກຂອງການປູກເຂົ້າ ທັງນີ້ ກໍ່ເພື່ອຈະໄດ້ສຸມການລົງທຶນ ດ້ານການເງິນ ແລະ ເຕັກນິກເຂົ້າໃສ່ ເພື່ອເຮັດກະເສດສຸມ ຍົກ ປະສິດທິພາບ ການຜະລິດເຂົ້າໃຫ້ສູງຂຶ້ນ. ການນຳຂອງພັກ ແລະ ອຳນາດການປົກຄອງຢູ່ໃນເມືອງຈຸດໜັກຂອງການປູກເຂົ້ານັ້ນຕ້ອງ ໄດ້ຮັບການເພີ່ມທະວີສຳລັບການຫັນເປັນສະຫະກອນກະເສດ ຢູ່ທີ່ນີ້ ຕ້ອງມີແຜນນະໂຍບາຍ ແລະວິທີການປັບປຸງ ແລະຂະຫຍາຍໃຫ້ ມີ ຜົນສັກສິດ. ທະນາຄານແຫ່ງຊາດຕ້ອງລົງທຶນ ໂດຍໃຫ້ເຂດປູກຝັງ ເຫຼົ່ານີ້ກູ້ຢືມ, ປະສານສົມທົບການລົງທຶນດ້ານການເງິນ ກັບການ ລົງທຶນດ້ານເຕັກນິກ. ກ່ຽວກັບວິທີການ ເຕັກນິກນັ້ນ ຕ້ອງເອົາໃຈ ໃສ່ເປັນສຳຄັນການສ້າງຊົນລະປະທານ ແລະນຳໃຊ້ຝຸ່ນຄອກ, ຝຸ່ນ ຂຽວ ສົມທົບກັບຝຸ່ນເຄມີ ໂດຍປະຕິບັດຕາມຄຳ ແນະນຳຂອງ ພະ ນັກງານເຕັກນິກ.

ການກໍ່ສ້າງເຂດຈຸດໜັກ ຂອງການປູກເຂົ້າ ຕ້ອງໄປຄຽງຄູ່ ກັບການກໍ່ສ້າງພື້ນຖານວັດຖຸເຕັກນິກຂອງການກະສິກຳ ແລະ ການ

ນຳໃຊ້ເຕັກນິກທີ່ກ້າວໜ້າເຂົ້າໃນການກະສິກຳ ພ້ອມກັນນັ້ນກໍ່ຕ້ອງເອົາໃຈໃສ່ກໍ່ສ້າງນິຄົມກະເສດຂອງລັດເພື່ອຜະລິດສິນຄ້າຢ່າງລວມສູນ.

*– ກ່ຽວກັບພືດພັນທັນຍາຫານອື່ນໆ*

ສືບຕໍ່ລະດົມຂົນຂວາຍປະຊາຊົນຂະຫຍາຍການຜະລິດ ແລະບໍລິໂພກພືດທັນຍາຫານອື່ນໆ ດ້ວຍຫຼາຍວິທີເຊັ່ນ : ໃຊ້ເປັນ ອາຫານສັດ, ຕາກ ແລະອົບໃຫ້ແຫ້ງ ເພື່ອເກັບໄວ້, ປຸງແຕ່ງໃຫ້ເປັນອາຫານ.ເຮັດແປ້ງ,ເຮັດຂະໜົມ,ສົ່ງອອກຂາຍຕ່າງປະເທດ ໆລໆ.. ກະຊວງອຸສະຫະກຳການຄ້າ ຕ້ອງມີການຄົ້ນຄວ້າວິທີປຸງແຕ່ງ ແລະຮູ້ການຈັດຕັ້ງເກັບຊື້ມັນດ້າງ ,ມັນຕົ້ນ, ສາລີຢູ່ປະເທດອື່ນເພື່ອນຳໃຊ້ເຂົ້າໃນປະເທດເຮົາແນໃສ່ແກ້ໄຂບັນຫາການເກັບຊື້ ແລະການປຸງແຕ່ງພືດເຫຼົ່ານີ້ໃຫ້ຈົບໄດ້. ອັນນີ້ ເປັນວິທີການອັນດັບໜຶ່ງ ເພື່ອຊຸກຍູ້ການຜະລິດພືດທັນຍາຫານເຫຼົ່ານີ້.

*– ກ່ຽວກັບຕົ້ນໄມ້ອຸສະຫະກຳ*

ຕ້ອງເປີດກວ້າງເນື້ອທີ່ປູກຕົ້ນໄມ້ອຸສະຫະກຳ ປະເພດຕ່າງໆເຊັ່ນ : ກາເຟ, ຢາສູບ,ອ້ອຍ, ຖົ່ວເຫຼືອງ, ຖົ່ວດິນ, ຝ້າຍ , ຄັ່ງຍານ...ເພື່ອເປັນສິນຄ້າຂາອອກ ແລະຄວາມຕ້ອງການຢູ່ພາຍໃນປະເທດ. ຕ້ອງສ້າງເຂດຈຸດໜັກປູກກາເຟເຊັ່ນ:(ບໍລະເວນ, ປາກຊ່ອງ, ເມືອງບາຈຽງ, ລະມາມ ແລະເຫຼົ່າງາມ). ເຂດຈຸດໜັກປູກຢາສູບ(ວຽງຈັນ,ຫລວງນ້ຳທາ), ເຂດຈຸດໜັກປູກອ້ອຍ(ວຽງຈັນ)ປູກຝ້າຍ(ເຫຼົ່າງາມ) ເຂດຈຸດໜັກປູກພືດຊະນິດອື່ນໆ (ສຳລັບລ້ຽງສັດ) ປູກຜັກ ແລະ ໝາກໄມ້ຢູ່ອ້ອມແອ້ມ ວຽງຈັນ.

ຕ້ອງດຳເນີນການຄົ້ນສືບເພື່ອຂຶ້ນໂຄງການດຳເນີນງານຕົວຈິງແລະຄົ້ນຄວ້າແບບວິທີຮ່ວມມືກັບບັນດາປະເທດອ້າຍນ້ອງເພື່ອກໍ່ສ້າງເຂດຈຸດໜັກຂອງການປູກຕົ້ນໄມ້ອຸສະຫະກຳເຫຼົ່ານີ້ຕາມຂະໜາດໃຫຍ່ ແລະ ມີເຕັກນິກສູງ.

- *<u>ກ່ຽວກັບການລ້ຽງສັດ</u>*

ເອົາໃຈໃສ່ເປັນສຳຄັນກ່ຽວກັບການລ້ຽງສັດ ຢູ່ໃນເຂດອ້ອມແອ້ມວຽງຈັນ, ເຂດຍຸດທະສາດຕ່າງໆ ໂດຍແນໃສ່ຮັບປະກັນການສະໜອງຊີ້ນ ໃຫ້ກອງທະຫານ, ພະນັກງານ, ກຳມະກອນ ແລະລັດຖະກອນ; ຂະຫຍາຍການລ້ຽງສັດ ຢ່າງຮອບດ້ານ ຄື ; ໝູ, ເປັດ, ໄກ່,ງົວ, ຄວາຍ, ປາ,ຂະຫຍາຍການລ້ຽງສັດຂອງລັດ, ຂອງສະຫະກອນ ແລະຂອງຄອບຄົວໂດຍຖືເອົາການລ້ຽງສັດ ຂອງຄອບຄົວເປັນຕົ້ນຕໍ.

ເພື່ອຊຸກຍູ້ການລ້ຽງສັດໃຫ້ຂະຫຍາຍຕົວ ຕ້ອງເອົາໃຈໃສ່ແກ້ໄຂທັງ ໓ ຂອດທີ່ຕິດພັນກັນ ໃຫ້ໄດ້ ດີ : ເລືອກແນວພັນສັດ ທີ່ດີເປັນຕົ້ນແນວພັນສັດທີ່ດີຢູ່ກັບທ່ອງຖິ່ນ; ມີຫົວອາຫານສັດ ແລະມີຢາປົວສັດເພື່ອກັນ ແລະຕ້ານພະຍຸສັດ ພ້ອມກັນນັ້ນກໍ່ເປີດກວ້າງສູນທົດລອງຜະລິດພັນສັດໃຫ້ລົງຮອດຂັ້ນເມືອງ ເພື່ອສະໜອງພັນສັດ ທີ່ດີໃຫ້ຕາແສງຕ່າງໆ.

ເສີມຂະຫຍາຍທ່າແຮງຂອງທົ່ງຫຍ້າທຳມະຊາດ ໃນປະເທດເຮົາທີ່ມີເນື້ອທີ່ ໒ ແສນກວ່າເຮັກຕານັ້ນ ຢ່າງສູດຂີດ, ຂະຫຍາຍການລ້ຽງງົວ, ຄວາຍ, ຢ່າງກວ້າງຂວາງ, <u>ສ້າງເຂດຈຸດໜັກ</u>ລ້ຽງສັດ (ນາກາຍ, ທົ່ງໄຫຫີນ, ບໍລະເວນ) ຕາມໂຄງການລະ

ອຽດ.

*- ກ່ຽວກັບຊົນລະປະທານ*

ພວກເຮົາຕ້ອງສືບຕໍ່ປະຕິບັດແຜນນະໂຍບາຍທີ່ວ່າ ຖືການຊົນລະປະທານເປັນວິທີການເຕັກນິກອັນດັບໜຶ່ງ ສຳລັບຂະຫຍາຍການກະສິກຳ, ຕ້ອງເຮັດຊົນລະປະທານ ຂະໜາດນ້ອຍ, ເຮັດໜອງ ຝາຍ, ຂຸດນ້ຳສ້າງ, ສ້າງສະຖານີສູບນ້ຳແລ່ນດ້ວຍແຮງນ້ຳ, ແລ່ນດ້ວຍນ້ຳມັນ, ແລະແລ່ນດ້ວຍໄຟຟ້າໂດຍແມ່ນປະຊາຊົນເປັນຜູ້ເຮັດດ້ວຍການຊ່ວຍໜູນຂອງລັດ ສົມທົບກັບການສ້າງຊົນລະປະທານຂະໜາດກາງໂດຍແມ່ນລັດ ແລະປະຊາຊົນພ້ອມກັນເຮັດ ແລະຊົນລະປະທານຂະໜາດໃຫຍ່ໂດຍແມ່ນລັດເປັນຜູ້ເຮັດ. ຖືຊົນລະປະທານ ຂະໜາດນ້ອຍເປັນຕົ້ນຕໍ, ສືບຕໍ່ ປັບປຸງ ແລະສ້າງກິດຈະການ ຊົນລະປະທານຂະໜາດກາງ ທີ່ພວມດຳເນີນຢູ່ນັ້ນ ໃຫ້ສຳເລັດ ແລະ ກຽມລົງມື ສ້າງກິດຈະການອື່ນໆໃຫ້ຖືກຕາມລຳດັບ ແລະ ລະບອບການກໍ່ສ້າງພື້ນຖານ.

*- ກ່ຽວກັບການປ່າໄມ້*

ແຜນນະໂຍບາຍ ແລະ ວິທີການຕ່າງໆທີ່ກອງປະຊຸມສູນກາງ ຄັ້ງທີ ກ ວາງອອກນັ້ນ ແມ່ນຖືກຕ້ອງແຕ່ຫາກບໍ່ທັນໄດ້ຮັບການປະຕິບັດຢ່າງຄົບຖ້ວນເທື່ອ. ກະຊວງກະສິກຳ-ປ່າໄມ້ ແລະ ຊົນລະປະທານ ແລະ ແຂວງຕ່າງໆຕ້ອງດຳເນີນການສະຫລຸບ ຖອດຖອນບົດຮຽນໃນປີທີ່ຜ່ານມາ ເພື່ອວາງແຜນຈັດຕັ້ງປະຕິບັດແຜນນະໂຍບາຍ ແລະ ວິທີການນັ້ນໃຫ້ຄົບຖ້ວນ.

ຕ້ອງເອົາໃຈໃສ່ເປັນພິເສດການເຮັດວຽກງານປົກປັກຮັກສາ

ປ່າໄມ້, ປົກປັກຮັກສາຊັບພະຍາກອນປ່າໄມ້, ຈຳກັດການຖາງໄຮ່ຢ່າງຊະຊາຍ, ປະກາດໃຊ້ ແລະ ຊີ້ນຳການປະຕິບັດ ລະບອບຄຸ້ມຄອງການທຸລະກິດ ເຄື່ອງປ່າຂອງດົງ, ຄຸ້ມຄອງການຂຸດຄົ້ນໄມ້ . ມີແຜນການປົກປັກຮັກສາ, ຂຸດຄົ້ນ ແລະປູກເຄື່ອງປ່າຂອງດົງ ຊະນິດຕ່າງໆຕື່ມອີກ ເຊັ່ນ : ຫວາຍ, ຍານ...ແລະໂອສົດຕະພັນທີ່ມີຄ່າ ເຊັ່ນ: ໂສມ, ມັນອ້ອນລີງ, ໝາກຂາໄກ່...ໃຫ້ຖືກຕາມລະບອບການ,ຂໍ້ກຳນົດຂອງລັດ. ມີແຜນການປົກປັກຮັກສາປ່າໄມ້, ບຳລຸງລ້ຽງປ່າໄມ້, ປູກຕົ້ນໄມ້ໃຫ້ເປັນປ່າແລະຂຸດຄົ້ນໄມ້ຕາມແຜນກຳນົດຂອງກະຊວງກະສິກຳ-ປ່າໄມ້ ແລະ ຊົນລະປະທານ. ການຄ້າລັດວິສາຫະກິດຕ້ອງເປີດກວ້າງຕານ່າງເກັບຊື້ເຄື່ອງປ່າຂອງດົງດ້ວຍລາຄາອັນສົມເຫດສົມຜົນແນໃສ່ສົ່ງເສີມຊາວໄຮ່ນາ ໃຫ້ຂຸດຄົ້ນແລະ ເກັບເຄື່ອງປ່າຂອງດົງມາຂາຍໃຫ້ລັດ.

*2. ການຂະຫຍາຍອຸສະຫະກຳ*

ໃນປີ ໑໙໘໐,ການຜະລິດອຸສະຫະກຳໄດ້ມີການຂະຫຍາຍຕົວຫຼຽບໃສ່ປີ ໑໙໗໗, ແຕ່ຈັ່ງຫວະການຂະຫຍາຍຕົວຍັງຊ້າ, ສະມັດຖະພາບ,ຂອງໂຮງງານຕ່າງໆ ຍັງບໍ່ທັນເຄື່ອນໄຫວເຕັມສະມັດຖະພາບ ເທື່ອຍ້ອນຂາດວັດຖຸດິບ, ຂາດເຄື່ອງອາໄຫຼ່, ຍ້ອນການຈັດຕັ້ງ ແລະຄຸ້ມຄອງບໍ່ທັນດີ.

ໃນໄລຍະຕໍ່ໜ້ານີ້ ຕ້ອງເພີ້ມທະວີການຈັດຕັ້ງ ຄຸ້ມຄອງໂຮງງານໃຫ້ຖືກຕ້ອງຕາມຂໍ້ກຳນົດວ່າດ້ວຍລັດວິສາຫະກິດ ທີ່ໄດ້ປະກາດໃຊ້ແລ້ວ. ຕ້ອງກຳນົດທິດທາງການຜະລິດ, ຈັດຕັ້ງການຜະລິດຄືນໃໝ່, ວາງແຜນການຜະລິດ ແລະທຸລະກິດ, ກຽມວັດຖຸດິບ ແລະ

ອຸປະກອນຕ່າງໆແຮໄວ້ ເພື່ອສາມາດດຳເນີນການຜະລິດຢ່າງລຽນຕິດ ແລະນຳໃຊ້ສະມັດຖະພາບຂອງເຄື່ອງຈັກທີ່ມີຢູ່ແລ້ວຢ່າງສຸດຂີດ.

ຂະຫຍາຍຂະແໜງການຕ່າງໆເຊັ່ນ: <u>ໄຟຟ້າ, ຂຸດຄົ້ນບໍ່ແຮ່, ກົນຈັກສ້ອມແປງ, ຜະລິດອຸປະກອນກໍ່ສ້າງ, ແລະຜະລິດເຄື່ອງໃຊ້ສອຍ, ສິນຄ້າຂາອອກ, ປຸງແຕ່ງຜະລິດຕະພັນກະສິກຳ.</u>

- ກ່ຽວກັບໄຟຟ້າ, ໃນ ໔ ປີຕໍ່ໜ້ານີ້ ແມ່ນເນັ້ນສາຍສົ່ງໄຟຟ້າແຮງສູງ ແລະສ້າງຈຸດແບ່ງໄຟຟ້າທັງນີ້ ເພື່ອຈະໄດ້ເປີດກວ້າງການນຳໃຊ້ໄຟຟ້າເຂົ້າໃນການຜະລິດຢູ່ທົ່ງຮາບວຽງຈັນ ແລະ ສະໜອງໄຟຟ້າໃຫ້ໂຮງງານຊີມັງ ແລະຕົວເມືອງວັງວຽງ, ດຳເນີນການສ້ອມແປງ ແລະຟື້ນຟູເຂື່ອນໄຟຟ້ານ້ຳດົງ, ເຊລະບຳ, ຕອບສະໜອງຄວາມຕ້ອງການໄຟຟ້າຂອງຫລວງພະບາງ, ຈຳປາສັກ, ຄົ້ນຄວ້າສຳຫລວດຂຶ້ນແຜນ ແລະກໍ່ສ້າງສະຖານີໄຟຟ້ານ້ຳຕົກ ຂະໜາດນ້ອຍຢູ່ພາກເໜືອ, ຊຳເໜືອ, ຊຽງຂວາງ ແລະ ພາກໃຕ້ ຫ້ວຍຈຳປີ ຫ້ວຍຫີນບຸນ...) ດຳເນີນການຄົ້ນຄວ້າສຳຫລວດ ແລະຂຶ້ນແຜນກິດຈະການໄຟຟ້ານ້ຳຕົກຢູ່ເຊບັ້ງໄຟ ສຳລັບໃຊ້ການຜະລິດຢູ່ແຂວງສະຫວັນນະເຂດ ແລະຄຳມ່ວນ.

*- ກ່ຽວກັບການຂຸດຄົ້ນບໍ່ແຮ່*

ເປີດກວ້າງການຂຸດຄົ້ນກົ່ວຢູ່ບໍ່ແໜ່ງແລະໂພນຕິ້ວ ໂດຍມີການປະກອບເຄື່ອງຈັກ ແລະ ເຕັກນິກໃໝ່, ຂຸດຄົ້ນຫີນກາວ, ຂຸດຄົ້ນເກືອໃຫ້ພໍໃຊ້ໂດຍພື້ນຖານ.

*- ກ່ຽວກັບອຸສະຫະກຳເຄມີ*

ກໍ່ສ້າງໂຮງງານອົກຊີແຢນ ແລະໂຮງງານອາເຊຕີແລນ ໃຫ້

ສຳເລັດແລະນຳເຂົ້າສູ່ການຜະລິດ, ຂະຫຍາຍການຜະລິດສະບູຝຸ່ນ, ສະບູກ້ອນ, ຢາປາບສັດຕູພືດ ແລະຜະລິດເສັ້ນໂປລີຕີແລນ.

*- ກ່ຽວກັບອຸສະຫະກຳຫຼອມໂລຫະ*

ຕ້ອງເພີ່ມຄວາມສາມາດຜະລິດຂອງໂຮງງານຫລອມໂລຫະ, ຂອງໂຮງງານຜະລິດເຄື່ອງມືກະສິກຳ ຢູ່ວຽງຈັນ ແລະ ຂອງໂຮງງານສ້ອມແປງກົນຈັກທີ່ຫາກໍ່ສ້າງຂຶ້ນໃໝ່ຢູ່ວຽງຈັນ.

*- ກ່ຽວກັບກົນຈັກ*

ໃນ ໔ ປີຕໍ່ໜ້ານີ້ ດຳເນີນການກໍ່ສ້າງໂຮງງານກົນຈັກສ້ອມແປງເຄື່ອງຈັກ ກະສິກຳ ໔ ແຫ່ງ, ເປີດກວ້າງໂຮງງານ ຜະລິດຫຼັກຕາປູຢູ່ວຽງຈັນ ແລະປະກອບເຄື່ອງກົນຈັກຂະໜາດນ້ອຍ ໃຫ້ແກສະຫະກອນກະເສດ.

- ເພີ່ມບໍລິມາດການຂຸດຄົ້ນ ແລະປຸງແຕ່ງໄມ້, ບໍລິມາດໄມ້ເລື່ອຍ, ໄມ້ອັດ, ໄມ້ປູພື້ນ, ເຄື່ອງໄມ້ ແລະເຄື່ອງຫວາຍ ດ້ວຍຈັງຫວະໄວ ເພື່ອເປັນສິນຄ້າຂາອອກ.

- ກ່ຽວກັບອຸສະຫະກຳຜະລິດອຸປະກອນກໍ່ສ້າງ: ຕ້ອງກໍ່ສ້າງໂຮງງານຜະລິດດິນຈີ່ ທີ່ສະຫະພາບໂຊວຽດ ແລະຫວຽດນາມຊ່ວຍເຫຼືອນັ້ນໃຫ້ສຳເລັດແລະນຳເຂົ້າສູ່ການຜະລິດ. ເປີດກວ້າງການຂຸດຄົ້ນຫີນກາວຢູ່ດົງເຫັນ, ຂະຫຍາຍການຜະລິດອຸປະກອນກໍ່ສ້າງຊະນິດຕ່າງໆທີ່ຈຳເປັນດ້ວຍເຄື່ອງປະກອບເຕັກນິກ ທີ່ ສະຫະພາບໂຊວຽດສະໜອງໃຫ້; ລົງມືກໍ່ສ້າງໂຮງງານຊີມັງຂະໜາດ໒໐໐.໐໐໐ ໂຕນຕໍ່ປີຢູ່ວັງວຽງ.

- ກ່ຽວກັບອຸສະຫະກຳເບົາ ແລະ ອຸສະຫະກຳອາຫານຕ້ອງ

ຂະຫຍາຍຢ່າງແຂງແຮງ ເຊັ່ນ: ການຜະລິດເຄື່ອງນຸ່ງຫົ່ມສຳເລັດຮູບ(ສິ້ນ, ເຄື່ອງນຸ່ງຜູ້ໃຫຍ່ ແລະເດັກນ້ອຍ, ເສື້ອຍືດ, ຜ້າສະໂຫລ້ງ, ແພເຊັດໜ້າ, ເຄື່ອງນຸ່ງຂອງຊົນຊາດ...), ເກືອ, ຂະໜົມ, ເຂົ້າຈີ່, ນ້ຳປາ, ເບຍ, ນ້ຳອັດລົມ, ແປ້ງອາຫານເດັກນ້ອຍ,ຢາງູດ ເພື່ອຕອບສະໜອງຄວາມຕ້ອງການ ໃນຊີວິດການເປັນຢູ່ຂອງປະຊາຊົນ. ຂະຫຍາຍອຸສະຫະກຳ ແລະ ຫັດຖະກຳປຸງແຕ່ງຜະລິດຕະພັນກະສິກຳຢ່າງແຂງແຮງ.

ຂະແໜງການອຸສະຫະກຳນ້ອຍ ແລະຫັດຖະກຳອື່ນໆກໍ່ຕ້ອງໄດ້ຂະຫຍາຍຢ່າງແຂງແຮງໂດຍອີງໃສ່ແຜນນະໂຍບາຍ ແລະວິທີການຕ່າງໆ ທີ່ກອງປະຊຸມສຸນກາງຄັ້ງທີ ກ ໄດ້ວາງອອກ. ເອົາໃຈໃສ່ຂະຫຍາຍບັນດາວິຊາຊ່າງສິລະປະ ຫັດຖະກຳ ເພື່ອສົ່ງຂາຍອອກນອກປະເທດ. ວິທີການອັນຕົ້ນຕໍແມ່ນການຄ້າລັດວິສາຫະກິດຕ້ອງເປີດກວ້າງ ການເກັບຊື້ ການເອົາວັດຖຸດິບໃຫ້ຮັບເໝົາ ປຸງແຕ່ງແລ້ວເກັບເອົາເຄື່ອງ ສຳເລັດຮູບ ແລະການຈອງຊື້ສິນຄ້າຈາກອຸສະຫະກຳນ້ອຍ ແລະຫັດຖະກຳ.

### 3 *ການຄົມມະນາຄົມຂົນສົ່ງ ແລະ ໄປສະນີ*

ຂະແໜງຄົມມະນາຄົມຂົນສົ່ງເປັນປາຍແຫລມໃນເສດຖະກິດແຫ່ງຊາດ ຂອງປະເທດເຮົາ. ມັນເປັນໂຄງລ່າງທີ່ຮັບໃຊ້ການຜະລິດ, ການສູ້ຮົບ ແລະຊີວິດການເປັນຢູ່. ດ້ວຍເຫດນັ້ນຕ້ອງຖືການຂະຫຍາຍການຄົມມະນາຄົມຂົນສົ່ງ ນັບທັງການຄົມມະນາຄົມຂົນສົ່ງທາງບົກ ແລະທາງນ້ຳ, ຄົມມະນາຄົມຂົນສົ່ງ ທີ່ສູນກາງເປັນຜູ້ຄຸ້ມຄອງຫລື ທີ່ທ້ອງຖິ່ນເປັນຜູ້ຄຸ້ມຄອງນັ້ນ ເປັນໜຶ່ງໃນໜ້າທີ່ອັນ ດັບ

ໜຶ່ງຂອງແຜນການຂະຫຍາຍເສດຖະກິດແຫ່ງຊາດສຳລັບປີ ໑໙໘໑ -໑໙໘໕.

ກ່ອນອື່ນໝົດ ຕ້ອງສ້າງທາງເລກ ໙ ຄືນໃໝ່ ໃຫ້ສຳເລັດ ແລະປັບປຸງເສັ້ນທາງເລກ ໑໓, ເສັ້ນທາງຫລວງຕ່າງໆ ເຊັ່ນ : ທາງເລກ ໗,໘,໑໓ ເບ ແລະ ໔໓ ກໍ່ຕ້ອງກໍ່ສ້າງຄືນໃໝ່ ເທື່ອລະກ້າວ. ສ່ອມແປງເສັ້ນທາງຕ່າງໆຢູ່ພາກເໜືອທາງເລກ ໗ ໂດຍແນໃສ່ຮັບປະກັນການຕິດຕໍ່ລະຫວ່າງວຽງຈັນກັບບັນດາ ແຂວງພາກເໜືອ, ຊຽງຂວາງ ແລະ ຊຳເໜືອ, ຂະຫຍາຍເສັ້ນທາງທ້ອງຖິ່ນໃຫ້ຕິດຈອດກັນລະຫວ່າງຕາແສງຕໍ່ຕາແສງ ເມືອງຕໍ່ເມືອງທັງນີ້ ເພື່ອຮັບປະກັນຄວາມຕ້ອງການແຫ່ງການເປີດກວ້າງການ ຈໍລະຈອນສິນຄ້າລະຫວ່າງທ້ອງຖິ່ນຕ່າງໆດ້ວຍກັນ.

ພາຫະນະຂົນສົ່ງທາງບົກ, ທາງນ້ຳກໍ່ຄືພາຫະນະຂົນສົ່ງ ກົນຈັກ, ພາຫະນະຂົນສົ່ງດັດແປງແລະພາຫະນະຂົນສົ່ງພື້ນເມືອງ ລ້ວນແຕ່ຕ້ອງໄດ້ຂະຫຍາຍເພື່ອຮັບປະກັນຄວາມຕ້ອງການຂອງ ການຂົນສົ່ງທີ່ເພີ່ມຂຶ້ນເປັນທະວີຄູນ. ລົດເມຮັບໃຊ້ຜູ້ໂດຍສານ ກໍ່ຕ້ອງເພີ່ມຂຶ້ນເພື່ອຕອບສະໜອງຄວາມຕ້ອງການໄປມາຂອງປະຊາຊົນ. ພ້ອມກັນນັ້ນກໍ່ຕ້ອງເພີ່ມສະມັດຖະພາບຂອງການນຳໃຊ້ລົດ ແລະ ຮັບປະກັນການສ້ອມແປງລົດໃຫ້ວ່ອງໄວ. ຕ້ອງມີແຜນການລະດົມນຳໃຊ້ພາຫະນະຂົນສົ່ງຂອງເອກະຊົນເຂົ້າໃນການຮັບໃຊ້ການຂົນສົ່ງໃຫ້ໄດ້ດີ, ຂົນຂວາຍ ແລະຈັດຕັ້ງເຂົາເຈົ້າໃຫ້ປະຕິບັດນະໂຍບາຍ ຂອງ ລັດ ເປັນຢ່າງດີ.

ຂະແໜງການໄປສະນີຕ້ອງໄດ້ເພີ່ມທະວີ ແລະປັບປຸງ, ທັງ

ນີ້ກໍ່ເພື່ອຕອບສະໜອງຄວາມຕ້ອງການຂອງການຄຸ້ມຄອງລັດ ແລະຄວາມຕ້ອງການຂອງປະຊາຊົນ. ເພີ່ມທະວີການປະກອບເຄື່ອງຈັກ, ພາຫະນະຕິດຕໍ່ສື່ສານ, ເຄື່ອງໂທລະສັບ, ສະຖານີວິທະຍຸໂທລະເລກ, ລົດເມ, ລົດ ມໍ ລໍ້ ເພື່ອສົ່ງຈົດໝາຍ ແລະ ໜັງສືພິມ, ທັງນີ້ ກໍ່ເພື່ອຮັບປະກັນການຕິດຕໍ່ສື່ສານຢູ່ພາຍໃນປະເທດ ແລະກັບພາຍນອກປະເທດໃຫ້ໄດ້ທະລຸລົ່ງ ແລະວ່ອງໄວ. ສ້າງສະຖານີຕິດຕໍ່ສື່ສານດາວທຽມໃຫ້ສຳເລັດ.

### 4 *ເປີດກ້ວາງການກໍ່ສ້າງພື້ນຖານ*

ກອງປະຊຸມສູນກາງຄັ້ງທີ ກ ໄດ້ຖືເປັນສຳຄັນທີ່ສຸດວຽກງານກໍ່ສ້າງພື້ນຖານ, ການກໍ່ສ້າງພື້ນຖານວັດຖຸເຕັກນິກຂັ້ນທຳອິດ ຂອງປະເທດເຮົາ. ໃນ ໔ ປີ ທີ່ຜ່ານມາ, ພວກເຮົາຫາກໍ່ປະຕິບັດໄດ້ແຕ່ ໑/໔ ຂອງກິດຈະການກໍ່ສ້າງພື້ນຖານທີ່ມີແຫລ່ງຕົ້ນທຶນແລ້ວ . ສ່ວນແຫລ່ງທຶນຮອນພາຍໃນປະເທດນັ້ນປີໃດກໍ່ໃຊ້ບໍ່ໝົດ.

ໃນຊຸມປີ ໑໙໘໑-໑໙໘໕, ພວກເຮົາຕ້ອງຂຸດຄົ້ນຄວາມອາດສາມາດບົ່ມຊ້ອນ ທີ່ມີຢູ່ແລ້ວນັ້ນ ເພື່ອເພີ່ມປໍລິມາດທຶນຮອນ ສຳລັບການກໍ່ສ້າງໃນປະເທດຂຶ້ນ, ຍາດແຍ່ງການຊ່ວຍເຫລືອສາກົນ ແລະຂະຫຍາຍການພົວພັນຮ່ວມມືທາງດ້ານເສດຖະກິດກັບບັນດາປະເທດສັງຄົມນິຍົມ ແລະປະເທດອື່ນໆ ເພື່ອໃຫ້ມີທຶນພຽງພໍສຳຫລັບກໍ່ສ້າງພື້ນຖານວັດຖຸເຕັກນິກເບື້ອງຕົ້ນຂອງສັງຄົມນິຍົມ. ອັນນີ້ແມ່ນໜ້າທີ່ຍຸດທະສາດທາງດ້ານເສດຖະກິດເຊິ່ງພັກແລະລັດເຮົາຕ້ອງເອົາໃຈໃສ່ນຳພາຢ່າງຈົດຈໍ່ ເພື່ອຮັບປະກັນໃຫ້ມີທຶນກໍ່ສ້າງຢ່າງພຽງພໍ, ຮັບປະກັນການໃຊ້ທຶນຮອນດັ່ງກ່າວໃຫ້ໝົດ ໂດຍມີປະສິດທິຜົນສູງທາງ

ດ້ານເສດຖະກິດ ແລະປະຕິບັດຕາມແຜນການລົງທຶນກໍ່ສ້າງພື້ນຖານຢ່າງເໝາະສົມ, ຮັບປະກັນການປະຕິບັດແຜນການດັ່ງກ່າວໃຫ້ສຳເລັດຢ່າງຄົບຖ້ວນ ແລະຖືກກຳນົດເວລາ.

ທຶນຮອນສຳລັບການກໍ່ສ້າງພື້ນຖານ ຕ້ອງໄດ້ຮັບການຄຸ້ມຄອງຕາມລະບອບການອັນເຄັ່ງຄັດ ແລະຕ້ອງເອົາໃຈໃສ່ຈັດວາງເປັນພິເສດໃຫ້ແກ່ຂະແໜງກະສິກຳ, ຄົມມະນາຄົມຂົນສົ່ງ, ອຸສະຫະກຳຂຸດຄົ້ນບໍ່ແຮ່, ສ່ອມແປງກົນຈັກ ແລະອຸສະຫະກຳຜະລິດວັດຖຸປະກອນກໍ່ສ້າງ. ແບ່ງທຶນຮອນຢ່າງເໝາະສົມໃຫ້ແກ່ການກໍ່ສ້າງໂຮງຮຽນ, ໂຮງໝໍ, ສະຖານີວິທະຍຸກະຈາຍສຽງ ແລະໂທລະໂຄ່ງ, ສະຖານີວິທະຍຸໂທລະພາບ, ໃຫ້ແກ່ກິດຈະການສຳຫລວດພື້ນຖານ, ການວາງແຜນກຳນົດ ແລະ ການຂຶ້ນແຜນເພື່ອຮັບໃຊ້ແຜນການຂະຫຍາຍເສດຖະກິດແຫ່ງຊາດຢ່າງຍາວນານໃນພາຍໜ້າ.

ການລົງທຶນຕ້ອງສຸມໃສ່ກິດຈະການຈຸດໜັກທີ່ສາມາດສ້າງໃຫ້ສຳເລັດຢ່າງຂາດຕົວ ໃນກຳນົດເວລາ ທີ່ໄດ້ວາງໄວ້, ຕ້ອງຫລີກເວັ້ນທີ່ສຸດການລົງທຶນແບບກະແຈກກະຈາຍເຂົ້າໃສ່ກິດຈະການທີ່ບໍ່ມີຜົນຕົວຈິງ, ບໍ່ສຳເລັດຖືກກຳນົດເວລາທີ່ໄດ້ວາງໄວ້ຢ່າງຮັບປະກັນ

ເພື່ອຮັບປະກັນໃຫ້ກິດຈະການຕ່າງໆ ໃຫ້ສຳເລັດຕາມກຳນົດເວລາທີ່ໄດ້ວາງໄວ້ ແລະເອົາເຂົ້າສູ່ການຜະລິດນັ້ນ, ຕ້ອງມີການດຸ່ນດ່ຽງວັດຖຸປະກອນ, ແຮງງານ, ແຫລ່ງທຶນຮອນໃຫ້ແກ່ແຕ່ລະກິດຈະການ, ສະໜອງວັດຖຸປະກອນ, ແຮງງານ, ທຶນຮອນໃຫ້ແຕ່ລະກິດຈະການຢ່າງພຽງພໍ.

ທຸກໆ ກິດຈະການກໍ່ສ້າງພື້ນຖານຕ້ອງໄດ້ດຳເນີນໄປ ໃຫ້ຖືກ

ຕາມລຳດັບທີ່ກຳນົດໄວ້ ໃນລະບອບຄຸ້ມຄອງ ການກໍ່ສ້າງພື້ນຖານ, ຕ້ອງມີຫລັກການພິນິດເສດຖະກິດເຕັກນິກ ໂດຍໄດ້ຮັບການພິຈາລະນາອະນຸມັດຈາກຂັ້ນເທິງທີ່ມີສິດອຳນາດເຕັມ, ຕ້ອງມີການຂຶ້ນແຜນເຕັກນິກ, ຕ້ອງໄດ້ບັນທຶກເຂົ້າໃນແຜນການ ແລະງົບປະມານ ສາກ່ອນຈຶ່ງລົງມືກໍ່ສ້າງໄດ້. ຕ້ອງສ້າງຕັ້ງບໍລິສັດກໍ່ສ້າງລັດວິສະຫະກິດ ແລະບໍລິສັດສະໜອງວັດຖຸປະກອນກໍ່ສ້າງ,ຕ້ອງຂະຫຍາຍຮາກຖານການຜະລິດວັດຖຸປະກອນກໍ່ສ້າງຂອງລັດ ແລະຂອງປະຊາຊົນເຊັ່ນ: ຜະລິດຊີມັງ, ດິນຈີ່,ດິນຂໍ, ປູນ, ຂີ້ຊາຍ, ຫີນແຮ່ ແລະໄມ້.

ຕ້ອງສ້າງຕັ້ງ ບໍລິສັດກໍ່ສ້າງລັດວິສະຫະກິດ ໃຫ້ໜັກແໜ້ນ, ເຂັ້ມແຂງ ແລະ ມີຄວາມສາມາດພຽງພໍ ເພື່ອບືນຕົວຂຶ້ນຮັບພາລະການກໍ່ສ້າງກິດຈະການກໍ່ສ້າງພື້ນຖານຢູ່ສູນກາງແລະແຂວງຕ່າງໆ. ກຳລັງກໍ່ສ້າງ ຂອງເອກະຊົນກໍ່ຕ້ອງໄດ້ນຳໃຊ້ຕາມຂໍ້ຜູກພັນເສດຖະກິດທີ່ເຊັນກັນໂດຍໃຫ້ຖືກຕ້ອງຕາມກົດໝາຍຂອງລັດ.

### *5 ກ່ຽວກັບການພົວພັນທາງດ້ານເສດຖະກິດຕ່າງປະເທດ*

ກອງປະຊຸມສູນກາງຄັ້ງທີ ກ ໄດ້ກຳນົດ ຢ່າງຈະແຈ້ງວ່າ : ຢາກກໍ່ສ້າງພື້ນຖານວັດຖຸເຕັກນິກໃຫ້ໄດ້ແນ່ນ ຕ້ອງອີງໃສ່ການຮ່ວມມືທາງດ້ານເສດຖະກິດ ຂະຫຍາຍການພົວພັນຮ່ວມມືທາງດ້ານເສດຖະກິດກັບບັນດາປະເທດສັງຄົມນິຍົມ ແລະ ບາງປະເທດທຶນນິຍົມ ທີ່ມີຄວາມສາມາດຮ່ວມມືກັບພວກເຮົາ ຕາມຫລັກການສະເໝີພາບ, ຕ່າງຝ່າຍຕ່າງໄດ້ຮັບຜົນ, ເຄົາລົບເອກະລາດ ແລະອະທິປະໄຕຂອງກັນ.

ໃນສະໄໝສົງຄາມ ການເຄື່ອນໄຫວ ທາງດ້ານເສດຖະກິດ

ຂອງພວກເຮົາມີຂໍ້ຫຍຸ້ງຍາກ, ບໍ່ສາມາດຮັບປະກັນຄວາມຕ້ອງການຂອງສົງຄາມ, ຂອງການຜະລິດ ແລະຊີວິດການເປັນຢູ່ຂອງປະຊາຊົນ,ດ້ວຍເຫດນັ້ນ ບັນດາປະເທດອ້າຍນ້ອງ ຈຶ່ງພ້ອມແລ້ວໃຫ້ການຊ່ວຍເຫລືອ ທາງດ້ານເສດຖະກິດແກ່ພວກເຮົາ ໂດຍບໍ່ຄິດຄ່າຕອບແທນ. ແຕ່ໃນເມື່ອສັນຕິພາບ ໄດ້ກັບຕ່າວຄືນມາແລ້ວ ພວກເຮົາຕ້ອງຫັນເທື່ອລະກ້າວໄປນຳໃຊ້ຮູບການຮ່ວມມືທາງດ້ານເສດຖະກິດຕາມຫລັກການ ຊ່ວຍເຫລືອກັນ, ຂຶ້ນຕໍ່ກັນ, ສະເໝີພາບ, ຕ່າງຝ່າຍຕ່າງໄດ້ຮັບຜົນ,ກູ້ຢືມກໍ່ຕ້ອງສົ່ງໜີ້, ມີການຊື້ການຂາຍ ນຳກັນກໍ່ຕ້ອງມີການສຳລະສະສາງນຳກັນຢ່າງຮຽບຮ້ອຍ, ເຮັດແນວນັ້ນຈຶ່ງຖືກກັບຈິດໃຈສາກົນກຳມາຊີບ.

ການຮ່ວມມືທາງດ້ານເສດຖະກິດກັບບັນດາປະເທດອ້າຍນ້ອງເປັນບັນຫາທີ່ມີຄວາມໝາຍຍຸດທະສາດ, ມັນສ້າງແຫລ່ງທຶນໃຫ້ແກ່ປະເທດເຮົາ ເພື່ອກໍ່ສ້າງພື້ນຖານວັດຖຸເຕັກນິກ ຂອງສັງຄົມນິຍົມ, ພ້ອມກັນນັ້ນ ກໍ່ເປັນການສົ່ງເສີມພວກເຮົາ ໃຫ້ເອົາໃຈໃສ່ດັດແປງການຄຸ້ມຄອງເສດຖະກິດໃຫ້ກ້າວໜ້າອີກດ້ວຍ.

ໃນການຮ່ວມມື ທາງດ້ານເສດຖະກິດນັ້ນ ມັນຮຽກຮ້ອງ ໃຫ້ພວກເຮົາຕ້ອງມີການສຳຫລວດຄົ້ນຄວ້າ, ຂຶ້ນແຜນຢ່າງລະອຽດລັດແນ່, ເພື່ອຮັບປະກັນ ປະສິດທິຜົນທາງດ້ານເສດຖະກິດ, ເສີມຂະຫຍາຍທ່າແຮງຂອງພວກເຮົາສ້າງແຫລ່ງສິນຄ້າຂາອອກ ທີ່ມີຄຸນຄ່າສູງ ເຊິ່ງບໍ່ພຽງແຕ່ສາມາດສົ່ງໜີ້ ຢ່າງພຽງພໍເທົ່ານັ້ນ ຫາກຍັງມີສ່ວນສະສົມໄວ້ເພື່ອການຜະລິດສຳລັບເປີດກວ້າງອີກດ້ວຍ.

ຕໍ່ຫວຽດນາມ ແລະກຳປູເຈຍນັ້ນ ປະເທດເຮົາໄດ້ມີການພົວ

ພັນມິດຕະພາບແບບພິເສດ, ມີການຮ່ວມມືກັນທາງດ້ານເສດຖະກິດຢ່າງຮອບດ້ານ, ຕາມຈິດໃຈຊ່ວຍເຫລືອ ຄ້ຳຊູກັນ, ເຄົາລົບກັນ ແລະຂຶ້ນຕໍ່ກັນ. ອັນນັ້ນແມ່ນຂຶ້ນຢູ່ກັບຈຸດພິເສດທາງດ້ານເສດຖະກິດ, ສັງຄົມແລະປະຫວັດສາດຂອງ ໓ ປະເທດຂອງພວກເຮົານັ້ນເອງ.

ການຮ່ວມມືທາງດ້ານເສດຖະກິດ, ແລະວິທະຍາສາດເຕັກນິກຢ່າງຮອບດ້ານ ລະຫວ່າງ ໓ ປະເທດນັ້ນ ຈະຊ່ວຍໃຫ້ ແຕ່ລະປະເທດເສີມຂະຫຍາຍທ່າແຮງຂອງຕົນໄດ້, ພ້ອມກັນນັ້ນ ກໍ່ຊ້ຳພັດມີຄວາມສາມາດສວຍໃຊ້ກຳລັງແຮງສັງລວມຂອງປະເທດທັງ ໓ ໄດ້ເພື່ອກໍ່ສ້າງເສດຖະກິດໄດ້ໄວກວ່າ, ແຂງແຮງກວ່າ ແລະມີຜົນກວ່າ.

ທັງຫມົດເຫລົ່ານັ້ນ ແມ່ນແຜນນະໂຍບາຍທີ່ມີຄວາມຫມາຍຍຸດທະສາດ ແລະ ຖືກຕ້ອງ. ໃນຊຸມ ປີ໑໙໘໑–໑໙໘໕, ພວກເຮົາຕ້ອງເປີດກວ້າງການພົວພັນຮ່ວມມືທາງດ້ານເສດຖະກິດ ກັບສະຫະພາບໂຊວຽດ, ຫວຽດນາມ ແລະ ບັນດາປະເທດສັງຄົມນິຍົມ ຍິ່ງຂຶ້ນກວ່າເກົ່າ, ທັງນີ້ກໍ່ເພື່ອປະຕິບັດໂຄງການໃຫຍ່ກ່ຽວກັບການຂຸດຄົ້ນ ແລະປຸງແຕ່ງກົ່ວ, ຫີນກາວ, ຂຸດຄົ້ນພູພຽງ ບໍລະເວນ, ,ຂຸດຄົ້ນໄມ້, ປູກອ້ອຍ ເພື່ອຜະລິດ ນ້ຳຕານ, ປູກຢາດູດ, ສ້າງທາງເລກທີ ໙ , ສ້າງທໍ່ສົ່ງນ້ຳມັນ, ສ້າງບາງນິຄົມປູກຝັງ ແລະລ້ຽງສັດ.

ພ້ອມກັນນັ້ນ ພວກເຮົາຕ້ອງຂະຫຍາຍການພົວພັນຮ່ວມມືທາງດ້ານເສດຖະກິດກັບປະເທດອື່ນໆ ບົນຫລັກການເຄົາລົບເອກະລາດອະທິປະໄຕຂອງກັນ, ສະເຫມີພາບ, ຕ່າງຝ່າຍຕ່າງມີຜົນ, ຕັ້ງຫນ້າຍາດແຍ່ງ ແລະ ນຳໃຊ້ການຊ່ວຍເຫລືອ ຂອງບັນດາປະເທດ

ເພື່ອນມິດ ເຊັ່ນ: ອິນເດຽ, ຊູແອັດ, ໂຮນລັງ...ແລະອົງການຈັດຕັ້ງສາກົນອື່ນໆ ໃຫ້ໄດ້ດີເພື່ອດຳເນີນການຂຸດຄົ້ນ ແລະປູງແຕ່ງໄມ້, ກໍ່ສ້າງກິດຈະການ ຊົນລະປະທານ,ຂະຫຍາຍເສັ້ນທາງເລກ ໑໓, ເປີດກວ້າງການຜະລິດເຄື່ອງໃຊ້ສອຽໃນຄອບຄົວ ແລະເພື່ອຊື້ຢູກຢາອຸປະກອນການແພດ.

ພວກເຮົາສືບຕໍ່ການພົວພັນທາງດ້ານເສດຖະກິດ ກັບປະເທດໄທຕາມຫລັກການດັ່ງກ່າວ.

ການພົວພັນທາງດ້ານເສດຖະກິດກັບຕ່າງປະເທດນັ້ນ ບໍ່ພຽງແຕ່ລວມມີການພົວພັນໃນດ້ານສິນເຊື່ອ, ໃນດ້ານຊ່ວຍເຫລືອໂດຍບໍ່ຄິດຄ່າຕອບແທນ, ໃນດ້ານຮ່ວມມືຜະລິດ ແລະ ທຸລະກິດ, ຂຸດຄົ້ນຊັບພະຍາກອນເທົ່ານັ້ນ ຫາກຍັງລວມມີການພົວພັນດ້ານການຄ້າກັບຕ່າງປະເທດອີກດ້ວຍ.

<u>ກ່ຽວກັບການຄ້າກັບຕ່າງປະເທດ</u>. ໂດຍທົ່ວໄປແລ້ວ ບັນດາປະເທດສັງຄົມນິຍົມແມ່ນປະຕິບັດລະບອບຜູກຂາດການຄ້າພາຍນອກ. ສ່ວນການຄ້າຂາຍລະຫວ່າງປະເທດເຮົາກັບຕ່າງປະເທດກໍ່ຕ້ອງດຳເນີນໄປບົນພື້ນຖານລັດຜູກຂາດດ້ານການຄ້າພາຍນອກເທື່ອລະກ້າວ.

ໃນຊຸມປີ ໑໙໘໑-໑໙໘໕, ການພົວພັນການຄ້າພາຍນອກກັບບັນດາປະເທດສັງຄົມນິຍົມຈະຕ້ອງເປີດກວ້າງອອກກວ່າເກົ່າ. ນັບແຕ່ປີ ໑໙໘໑ ພວກເຮົາ ຈະເລີ່ມຕົ້ນສົ່ງສິນຄ້າ ຂາອອກໄປສະຫະພາບໂຊວຽດ ແລະຕ້ອງພະຍາຍາມສູ້ຊົນເຮັດໃຫ້ຍອດມູນຄ່າ ຂອງສິນຄ້າຂາອອກ ເພີ່ມຂຶ້ນແຕ່ລະປີ.

ຕໍ່ບັນດາປະເທດທຶນນິຍົມ, ພວກເຮົາຍັງສືບຕໍ່ພົວພັນການຄ້າ

ພາຍນອກກັບບັນດາປະເທດທີ່ໄດ້ມີການພົວພັນກັບພວກເຮົາມາແລ້ວ ໂດຍປະຕິບັດຕາມຫລັກການສະເໝີພາບ, ຕ່າງຝ່າຍ ຕ່າງໄດ້ຮັບຜົນ ແລະພະຍາຍາມສູ້ຊົນ ເພື່ອເພີ່ມມູນຄ່າຂອງສິນຄ້າຂາອອກແນໃສ່ດູນດ່ຽງລະຫວ່າງຂາອອກກັບຂາເຂົ້າ.

ການຂາອອກຂາເຂົ້າກັບຕ່າງປະເທດຕ້ອງໄດ້ຈັດຕັ້ງແລະຄຸ້ມຄອງຢ່າງແໜ້ນໜາ. <u>ການຄ້າລັດວິສະຫະກິດຂອງສູນກາງ ແລະ ຂອງທ້ອງຖິ່ນ ຕ້ອງແບ່ງກັນກໍາສິດຜູກຂາດກ່ຽວກັບຂາອອກ, ສໍາລັບ</u> ການຄ້າຊາຍແດນຢູ່ໃນດ້ານຕ່າງໆນັ້ນ ບໍລິສັດຂອງແຂວງ ອາດຈະອະນຸຍາດໃຫ້ພໍ່ຄ້າແມ່ຄ້ານຍດໍາເນີນການຂາເຂົ້າບາງປະເພດ ສິນຄ້າທີ່ລັດບໍ່ເກືອດຫ້າມ ຫລື ທີ່ລັດບໍ່ຜູກຂາດການຂາເຂົ້າ, ແຕ່ເຂົາຕ້ອງດໍາເນີນໄປພາຍໃຕ້ເງື່ອນໄຂເຄົາຣົບ ແລະ ປະຕິບັດຕາມກົດໝາຍ ວ່າດ້ວຍການຄຸ້ມຄອງການຂາອອກຂາເຂົ້າ ແລະ ພາສີຂາອອກຂາເຂົ້າ.

*6 ກ່ຽວກັບການຄ້າ ແລະ ລາຄາ .*

ໃນ ໕ ປີຕໍ່ໜ້ານີ້, ຕ້ອງຂະຫຍາຍການຄ້າລັດວິສາຫະກິດ- ແລະ ສະຫະກອນຊື້ຂາຍຢ່າງແຂງແຮງອື່ຫລື ທັງນີ້ ກໍ່ເພື່ອຕອບສະໜອງຄວາມຕ້ອງການຂອງການກໍ່ສ້າງ ແລະ ຂະຫຍາຍເສດຖະກິດ, ຂະຫຍາຍວັດທະນະທໍາ.

ການຄ້າລັດວິສາຫະກິດ ຕ້ອງເພີ່ມທະວີການເກັບຊື້ ເພື່ອກໍາເອົາທັນຍາຫານ ທີ່ເປັນສິນຄ້າໄວ້ ໃນມືຂອງລັດ ເປັນສ່ວນໃຫຍ່- ເພີ່ມທະວີການເກັບຊື້ອາຫານການກິນ ແລະເກັບຊື້ເຄື່ອງປ່າ ຂອງນາຊະນິດຕ່າງໆດ້ວຍວິທີສົມທົບກັບການເກັບຊື້ເຄື່ອງປ່າຂອງນາກັບ

ການຂາຍສິນຄ້າອຸສະຫະກຳຕາມຫລັກການ ເຫັນດີເຫັນພ້ອມນຳກັນ ແລະ ອຳນວຍຄວາມສະດວກໃຫ້ແກ່ຊາວໄຮ່ນາ. ຕ້ອງເປີດກວ້າງການຈໍລະຈອນສິນຄ້າລະຫວ່າງຕົວເມືອງ ແລະ ຊົນນະບົດຢ່າງສຸດຂີດ, ເຮັດໄດ້ແນວນີ້ ການຄ້າຈິ່ງຈະສົມກັບບົດບາດ ເປັນຕ່ອງໂຊ້ຕົ້ນຕໍໃນສາຍໂຊ້ເສດຖະກິດ, ຈິ່ງຈະສາມາດຮັບປະກັນ ສະໜອງພາຫະນະແຫ່ງການຜະລິດ ແລະ ເຄື່ອງໃຊ້ໄມ້ສອຍທີ່ຈຳເປັນຕ່າງໆໃຫ້ແກ່ຊາວໄຮ່ນາ, ຈິ່ງຈະຮັບປະກັນການສະໜອງເຂົ້າປາອາຫານແລະວັດຖຸດິບ ໃຫ້ແກ່ອຸສາຫະກຳ ຊຸກຍູ້ການກະສິກຳ ແລະອຸສາຫະກຳໃຫ້ຂະຫຍາຍຕົວ, ຊຸກຍູ້ການກໍ່ສ້າງໂຄງປະກອບກະສິກຳ-ອຸສາຫະກຳທີ່ສົມເຫດສົມຜົນໄປແຕ່ຫົວທີໂລດ, ຈິ່ງຈະສາມາດຊຸກຍູ້ການແບ່ງງານໃໝ່ທາງສັງຄົມ, ຊຸກຍູ້ການດຳເນີນການປະຕິວັດສັງຄົມນິຍົມທັງ ໓ ປະການຢູ່ໃນຊົນນະບົດໃຫ້ປະກົດເປັນຈິງ ແລະປັບປຸງພັນທະພາບກຳມະກອນຊາວນາໄດ້.

ຕ້ອງສົມທົບຢ່າງແໜ້ນແຟ້ນລະຫວ່າງການຂະຫຍາຍການຄ້າລັດວິສາຫະກິດ ກັບການຂະຫຍາຍສະຫະກອນຊື້ຂາຍ ເພື່ອເຮັດໃຫ້ຕາໜ່າງການຄ້າສັງຄົມນິຍົມ ຂະຫຍາຍອອກຢ່າງກວ້າງຂວາງ ທົ່ວເຖິງໃນທົ່ວປະເທດຮັບປະກັນການນຳເອົາສິນຄ້າທີ່ເປັນພື້ນຖານໃຫ້ລົງເຖິງຕາແສງແລະໝູ່ບ້ານທີ່ຢູ່ຫ່າງໄກສອກຫລີກເຊັ່ນ: ແພນແພ, ເກືອ, ເຄື່ອງມືກະເສດ, ເຈ້ຍຂຽນ, ນ້ຳມັນກາດ, ຯລຯ.

ທຸກໆເຫດສະບານເມືອງລ້ວນແຕ່ຕ້ອງຈັດຕັ້ງໃຫ້ເປັນສູນການຄ້າ, ເປັນຕະຫລາດ, ມີຮ້ານຄ້າຂອງລັດ ຫລື ຂອງສະຫະກອນຊື້ຂາຍ, ມີຮ້ານບໍລິການກິນດື່ມ, ສ້ອມແປງ, ມີຮ້ານຂາຍປຶ້ມ, ໜັງ

ສື່ພິມ, ຮູບພາບ, ມີຮ້ານຕັດຜົມ, ຮ້ານຕັດເຄື່ອງນຸ່ງ, ສ້ອມແປງລົດຖີບ, ມີກອງຂົນສົ່ງທີ່ໃຊ້ພາຫະນະພື້ນຖານເມືອງຫລືກົນຈັກ, ມີໂຮງຮຽນ, ມີຫ້ອງຖະແຫລງຂ່າວ, ມີການເຄື່ອນໄຫວສິລະປະວັນນະຄະດີ, ກິລາກາຍຍະກຳ...

ຢູ່ໃນເຫດສະບານແຂວງ ຕ້ອງເປີດກວ້າງຕາໜ່າງ ການຄ້າອອກ, ນັບທັງຕາໜ່າງບໍລິການໆກິນດື່ມສາທາລະນະ, ບໍລິການ ໆ ຕັດເຄື່ອງ, ຕັດຜົມ, ສ້ອມແປງ, ສ້ອມແປງໂມງ, ສ້ອມແປງລົດຖີບ, ລົດຈັກ, ຕ້ອງເປີດກວ້າງການຊື້ຂາຍອາຫານການກິນ, ຮັບປະກັນການສະໜອງອາຫານການກິນໃຫ້ກຳມະກອນ, ລັດຖະກອນ, ກອງທະຫານຕາມອັດຕາທີ່ໄດ້ກຳນົດໄວ້ແລະເຮັດໃຫ້ລາຄາອາຫານການກິນໃນຕະຫລາດໝັ້ນທ່ຽງເປັນປົກກະຕິ, ຕອບສະໜອງຄວາມຕ້ອງການໃນຊີວິດດ້ານວັດທະນະທຳຂອງປະຊາຊົນ.

ຂອບເຂດປະເພດສິນຄ້າລັດວິສະຫະກິດ ແລະ ສະຫະກອນຊື້ຂາຍດຳເນີນການທຸລະກິດນັ້ນ ຕ້ອງໄດ້ຮັບການເປີດກວ້າງອອກໃຫ້ຫລາຍຕື່ມ ນັບທັງເຄື່ອງບໍລິໂພກ, ອຸປະໂພກ, ເຄື່ອງໃຊ້ ສຳລັບຫ້ອງການ ແລະຜະລິດຕະພັນ ວັດທະນະທຳ, ເຄື່ອງໃຊ້ໄມ້ສອຍໃນຄອບຄົວ, ເຄື່ອງກິລາ, ອຸປະກອນກໍ່ສ້າງເຄື່ອງມື, ເຄື່ອງໄຟຟ້າຯລຯ...

ໃນ ໔ ປີ ຕໍ່ໜ້ານີ້, ການຄ້າລັດວິສະຫະກິດ ບໍ່ພຽງແຕ່ຈະຕ້ອງເພີ່ມທະວີການເກັບຊື້ ແລະກຳແຫລ່ງສິນຄ້າບໍລິໂພກ ແລະຜະລິດຕະພັນກະສິກຳອື່ນໆເທົ່ານັ້ນ ຫາກຍັງຕ້ອງເພີ່ມທະວີການກຳທັງແຫລ່ງສິນຄ້າອຸສະຫະກຳອີກດ້ວຍ ໂດຍໃຊ້ວິທີການຕ່າງໆ ເຊັ່ນ :

ກຳສິດຜູກຂາດການຂາອອກຂາເຂົ້າ, ເປີດກ້ວາງ ການເອົາວັດຖຸດິບໃຫ້ບັນດາຮາກຖານອຸສະຫະກຳ, ອຸສະຫະກຳນ້ອຍ ແລະ ຫັດຖະກຳ, ຮັບເຫມົາປຸງແຕ່ງ ແລະ ເກັບເອົາເຄື່ອງ ສຳເລັດຮູບ ຫລືຈອງຊື້ສິນຄ້າກັບຮາກຖານເຫລົ່ານີ້, ຈັດຕັ້ງການຜະລິດ ແລະ ປຸງແຕ່ງເອົາເອງ.

ກ່ຽວກັບແບບວິທີຂາຍສິນຄ້າ ຍັງຄົງຮັກສາລະບອບສະໜອງສິນຄ້າ ໓ ປະເພດ ທີ່ເປັນຄວາມຕ້ອງການພື້ນຖານ ສຳລັບກຳມະກອນ, ລັດຖະກອນ ແລະກອງທະຫານ.

ໃນເງື່ອນໄຂຂອງປະເທດເຮົາ ປະຈຸບັນຕ້ອງນຳໃຊ້ການພົວພັນທາງດ້ານຕະຫລາດ ເພື່ອຊຸກຍູ້ການຜະລິດອຸສະຫະກຳ, ຮັບໃຊ້ຊີວິດການເປັນຢູ່ຂອງປະຊາຊົນ, ຊຸກຍູ້ການກໍ່ສ້າງ ແລະ ດັດສ້າງສັງຄົມນິຍົມ. ແຕ່ຕ້ອງເພີ່ມທະວີການຄຸ້ມຄອງຕະຫລາດດ້ວຍສາມວິທີການ: ເສດຖະກິດ, ບໍລິຫານ, ສຶກສາອົບຮົມ. ກ່ຽວກັບວິທີການເສດຖະກິດນັ້ນ ຕ້ອງເສີມຂະຫຍາຍຢ່າງແຂງແຮງ ບົດບາດ ເປັນເຈົ້າພາທາງຂອງການຄ້າ ລັດວິສາຫະກິດ ແລະ ບົດບາດຊ່ວຍຊຸຍູ້ຫນູນ ຂອງສະຫະກອນຊື້ຂາຍ. ບົນພື້ນຖານດັ່ງກ່າວ ເພື່ອປະຕິບັດນະໂຍບາຍນຳໃຊ້, ຈຳກັດ ແລະດັດສ້າງການຄ້າທຶນນິຍົມຢ່າງ ມີຜົນ; ຕ້ອງປະຕິບັດນະໂຍບາຍລາຄາເກັບຊື້ ຢ່າງຖືກຕ້ອງ, ປະຕິບັດສິດຜູກຂາດທາງດ້ານການຄ້າຕ່າງປະເທດ ເພື່ອເພີ່ມທະວີການກຳແຫລ່ງສິນຄ້າບໍລິໂພກ, ເຄື່ອງປ່າຂອງນາ ແລະ ແຫລ່ງສິນຄ້າອຸສະຫະກຳ, ຫັດຖະກຳໄວ້ ໃນມືຂອງລັດ. ກ່ຽວກັບວິທີການ ບໍລິຫານ, ພໍ່ຄ້າແມ່ຄ້າເອກະຊົນທຸກຄົນຕ້ອງຂຶ້ນທະບຽນທຸລະກິດ ແລະ

ໃຫ້ປະກອບທຸລະກິດໄດ້ ແຕ່ໃນຂອບເຂດທີ່ລັດອະນຸຍາດໃຫ້ເທົ່ານັ້ນ ຕ້ອງເສັຽພາສີຢ່າງຖືກຕ້ອງ, ຫ້າມບໍ່ໃຫ້ເຄື່ອນໄຫວ ສວຍໂອກາດ ກັກຕຸນສິນຄ້າ,ປັ່ນປ່ວນຕະຫລາດ. ກ່ຽວກັບວິທີການສຶກສາອົບຮົມ, ແມ່ນຕ້ອງໃຊ້ທຸກພາຫະນະ ແລະທຸກວິທີການ ເພື່ອໂຄສະນາເຜີຍ-ແຜ່ແຜນນະໂຍບາຍ, ນະໂຍບາຍ, ລະບອບການ ແລະ ຂໍ້ກຳນົດຕ່າງໆກ່ຽວກັບການຄ້າຂອງລັດໃຫ້ປະຊາຊົນແລະພໍ່ຄ້າແມ່ຄ້າເອກະຊົນຢ່າງກວ້າງຂວາງ ເພື່ອໃຫ້ຫມົດທຸກຄົນປະຕິບັດຕາມ. ພະແນກການຄ້າຂອງແຂວງຕ້ອງຈັດຕັ້ງການເຜີຍແຜ່ນະໂຍບາຍ, ລະບອບຄຸ້ມຄອງການຄ້າ, ການເງິນສຳລັບພໍ່ຄ້າແມ່ຄ້າເອກະຊົນ.

ເພື່ອປະຕິບັດຈຸດຫມາຍເຮັດໃຫ້ການຜະລິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນເປັນປົກກະຕິນັ້ນ ແມ່ນຕ້ອງສ້າງລະບົບລາຄາຊື້ຂາຍຢ່າງຖືກຕ້ອງ ແລະສູ້ຊົນ ເພື່ອເຮັດໃຫ້ລະບົບລາຄາເປັນປົກກະຕິ. ບັນດາຂະແຫນງການຜະລິດກະສິກຳ, ອຸສະຫະກຳ,ຄົມມະນາຄົມຂົນສົ່ງ ແລະບັນດາຂະແຫນງການຈໍລະຈອນແຈກຢາຍ ລ້ວນແຕ່ມີຄວາມຮັບຜິດຊອບປະສານກັນ ໃນການສູ້ຊົນ ເພື່ອປະຕິບັດຈຸດຫມາຍອັນນີ້ ໃຫ້ປະກົດເປັນຈິງບົນພື້ນຖານເພີ່ມທະວີການກຳແຫລ່ງສິນຄ້າໄວ້ໃນມືຂອງລັດ, ລັດກຳສິດຜູກຂາດການຄ້າຕ່າງປະເທດ, ລັດຄຸ້ມຄອງ ການແຈກຢາຍວັດຖຸປະກອນເຕັກນິກ ຢ່າງເປັນເອກະພາບແລະລັດເປັນຜູ້ກຳທັນຍາຫານສິນຄ້າເປັນສ່ວນໃຫຍ່ໄວ້ໃນກຳມື.

*– ກ່ຽວກັບລາຄາຂາຍຍ່ອຍ*

ສືບຕໍ່ປະຕິບັດນະໂຍບາຍສອງປະເພດລາຄາ :

*ສຳລັບສິນຄ້າປະເພດຕ່າງໆທີ່ຂາຍແບ່ງປັນໃຫ້ກຳມະກອນ,

ລັດຖະກອນຕາມອັດຕານັ້ນ ຕ້ອງຂາຍຕາມລາຄາທີ່ສະພາລັດຖະມົນຕີໄດ້ກຳນົດໄວ້, ແຕ່ຕ້ອງຄົ້ນຄວ້າຕິດຕາມ, ຖ້າເຫັນຈຳເປັນກໍ່ອາດຈະດັດແປງໃຫມ່, ຫ້າມບໍ່ໃຫ້ເປີດກ້ວາງຫລືຈຳກັດຮັດແຄບປະເພດສິນຄ້າຂາຍແບ່ງປັນຕາມອັດຕາ, ບໍ່ໃຫ້ຂຶ້ນລາຄາລົງລາຄາຕາມລຳພັງຢ່າງເດັດຂາດ. ຖ້າວ່າຈະປ່ຽນແປງກໍ່ຕ້ອງມີມະຕິຕົກລົງ ຂອງສະພາລັດຖະມົນຕີ.

ລາຄາຂາຍຍ່ອຍຕ້ອງກຳນົດຕາມຫລັກການສົ່ງເສີມການໃຊ້ສອຍສິນຄ້າ ທີ່ຜະລິດຢູ່ພາຍໃນປະເທດ, ນຳພາການໃຊ້ສອຍ, ການປະຫຍັດມັດທະຍັດ, ຫັນປ່ຽນຄວາມເຄີຍຊິນ ໃນການໃຊ້ສອຍແບບລັດທິລ່າເມືອງຂຶ້ນແບບໃຫມ່.

* ຕໍ່ຊາວໄຮ່ຊາວນາ, ພາຍຫລັງທີ່ໄດ້ປະຕິບັດພັນທະ ຕໍ່ລັດແລ້ວ ພວກເຂົາຕ້ອງປະຕິບັດ ຢ່າງຖືກຕ້ອງນະໂຍບາຍຊື້ຂາຍຕາມຫລັກການເຫັນດີເຫັນພ້ອມນຳກັນ, ສົມທົບການຂາຍສິນຄ້າອຸສະຫະກຳກັບການເກັບຊື້ທັນຍາຫານ, ເຄື່ອງປ່າ ຂອງນາ, ລະຫວ່າງລາຄາເກັບຊື້ຜະລິດຕະພັນກະສິກຳຂອງຊາວໄຮ່ຊາວນາ ກັບລາຄາຂາຍສິນຄ້າອຸສະຫະກຳໃຫ້ຊາວໄຮ່ຊາວນານັ້ນ ຕ້ອງຮັບປະກັນການພົວພັນອັດຕາສ່ວນອັນສົມເຫດສົມຜົນ.

ລາຄາເກັບຊື້ເຄື່ອງປ່າຂອງນາປະເພດຕ່າງໆກໍ່ຄືລາຄາເກັບຊື້ທັນຍາຫານ ຕ້ອງຄິດໄລ່ບົນພື້ນຖານເງື່ອນໄຂການຜະລິດຂອງແຕ່ລະບໍລິເວນ ແລະຮັບປະກັນໃຫ້ຜູ້ຜະລິດໄດ້ຮັບຜົນຍົນເຫມາະສົມ.

ຕ້ອງກຳນົດລະບົບລາຄາຂາຍຜະລິດຕະພັນ ທີ່ໂຮງງານລັດວິສະຫະກິດຜະລິດອອກຕາມກຳນົດຫມາຍເຕັກນິກ ແລະ ລາຄາຂາຍ

ຍົກກ່ຽວກັບປະເພດສິນຄ້າທີ່ສູນກາງຂາຍໃຫ້ແຂວງຕ່າງໆ. ລາຄາຂາຍຍົກອັນນີ້ ຕ້ອງຮັບປະກັນໃຫ້ລັດ ແລະ ໂຮງງານສາມາດປະຕິບັດການສະສົມສັງຄົມນິຍົມໄດ້. ຕ້ອງກຳນົດລາຄາ ສະໜອງວັດຖຸປະກອບເຕັກນິກທີ່ຂຶ້ນກັບ <u>ຂອບເຂດທຸລະກິດ</u> ຂອງບັນດາບໍລິສັດສະໜອງວັດຖຸ ປະກອບລັດວິສາຫະກິດ ແລະ ບໍ່ປະໃຫ້ລັດຕ້ອງຖົມຊຸມຈາກການທຸລະກິດວັດຖຸປະກອບດັ່ງກ່າວ.

ສຳລັບສິນຄ້າບາງປະເພດເຊິ່ງເຫັນວ່າຈະຫລຸບທຶນ ແຕ່ຫາກຈຳເປັນຕ້ອງດຳເນີນທຸລະກິດ ເຊັ່ນ : ເຄື່ອງບໍລິໂພກ, (ເຂົ້າ, ຊີ້ນງົວ, ຊີ້ນໝູ, ຊີ້ນຄວາຍ...) ບໍລິສັດການຄ້າຕ້ອງສູ້ຊົນເພື່ອລຶດຜ່ອນລາຍຈ່າຍລົງເທົ່າທີ່ຈະລຶດຜ່ອນໄດ້, ຖ້າວ່າຫາກຫລຸບທຶນຢູ່ລັດກໍ່ຈະຕ້ອງຖົມຊຸມຕາມແຜນການ ( ຖ້າຫາກຫລຸບທຶນຫລາຍກວ່າທີ່ໄດ້ຄາດກະໄວ້ໃນແຜນການອັນເນື່ອງມາຈາກຂໍ້ບົກພ່ອງຂອງບໍລິສັດແລ້ວກໍ່ຈະບໍ່ຖົມຊຸມໃຫ້ແຕ່ຢ່າງໃດ).

ທັນຍາຫານເປັນສິນຄ້າປະເພດພິເສດ ເປັນວັດຖຸປະກອບຍຸດທະສາດປະເພດໜຶ່ງ ສຳລັບທຸກໆປະເພດ. ກ່ຽວກັບຄວາມໝາຍຍຸດທະສາດຂອງທັນຍາຫານນີ້ ເລນິນໄດ້ຊີ້ອອກວ່າ : ລັດພະເດັດການກຳມາຊີບ ຈະດຳລົງຢູ່ຢ່າງໝັ້ນຄົງໄດ້ ກໍ່ຕໍ່ເມື່ອມັນກຳທັນຍາຫານ ໄວ້ໃນມືຢ່າງແໜ້ນແຟ້ນແລ້ວເທົ່ານັ້ນ; ອັນນັ້ນ ເປັນເຄື່ອງໝາຍທີ່ຊີ້ອອກວ່າ ພັນທະພາບກຳມະກອນ-ຊາວນາ ໄດ້ຮັບການປັບປຸງຢ່າງແໜ້ນແຟ້ນແລ້ວ. ໃນເມື່ອລັດກຳທັນຍາຫານໄວ້ ໃນມືຢ່າງແໜ້ນແຟ້ນແລ້ວ ລັດກໍ່ຈະມີເງື່ອນໄຂຄຸ້ມຄອງແຮງງານ, ຄຸ້ມຄອງຕະຫລາດໄດ້, ເຮັດໃຫ້ລາຄາສິນຄ້າ, ເງິນຕາເປັນປົກກະຕິ

ໄດ້ ແລະຮັບປະກັນການສະໜອງໃຫ້ແກ່ຄວາມຕ້ອງການຂອງການປ້ອງກັນຊາດ, ກົງກັນຂ້າມ ຖ້າວ່າລັດກຳທັນຍາຫານໄວ້ໃນມືບໍ່ໄດ້ແລ້ວ ກໍ່ຈະຂຶ້ນກັບຕະຫລາດຕ່າງປະເທດ ແລະຈະບໍ່ມີກຳລັງສິນຄ້າພຽງພໍ ເພື່ອເຮັດໃຫ້ຕະຫລາດ, ລາຄາ ແລະ ຊີວິດການເປັນຢູ່ຂອງປະຊາຊົນພາຍໃນປະເທດ ເປັນປົກກະຕິໄດ້, ພັນທະພາບກຳມະກອນ-ຊາວນາ ຈະໄດ້ຮັບຄວາມເສັຽຫາຍ. ດ້ວຍເຫດນັ້ນ ໃນຊຸມປີຕໍ່ໜ້ານີ້ ພວກເຮົາຕ້ອງສູ້ຊົນເພື່ອຂະຫຍາຍການຜະລິດທັນຍາຫານ, ເຮັດໃຫ້ມີທັນຍາຫານສຳລັບເປັນສິນຄ້ານັບມື້ນັບຫລາຍ, ບໍ່ພຽງແຕ່ເທົ່ານັ້ນ ລັດຕ້ອງກຳເອົາທັນຍາຫານທີ່ເປັນສິນຄ້າໄວ້ໃນມືໃຫ້ໄດ້ສ່ວນໃຫຍ່ອີກດ້ວຍ.

### *7 ກ່ຽວກັບການເງິນ ແລະ ທະນາຄານ*

ມະຕິຂອງກອງປະຊຸມສຸມກາງຄັ້ງທີ ໗ ແລະມະຕິຂອງສະພາລັດຖະມົນຕີເຊິ່ງສະພາປະຊາຊົນສູງສຸດໄດ້ຜ່ານໃນເດືອນກຸມພາ ປີ ໑໙໘໐ ນັ້ນໄດ້ກຳນົດບັນດາທັດສະນະພື້ນຖານ, ແຜນນະໂຍບາຍ, ນະໂຍບາຍໃຫຍ່ ກ່ຽວກັບວຽກງານການເງິນ, ເງິນຕາ, ທະນາຄານແລ້ວ, ຕ້ອງຄົ້ນຄວ້າໃຫ້ເຊື່ອມຊຶມ ພ້ອມທັງຈັດຕັ້ງປະຕິບັດຕົວຈິງໃຫ້ຖືກຕ້ອງເຂັ້ມງວດ, ພ້ອມກັນນັ້ນ ກໍ່ຕ້ອງຕັ້ງໜ້າສູ້ຊົນ ເພື່ອດຸ່ນດ່ຽງລາຍຮັບລາຍຈ່າຍການເງິນ, ດຸ່ນດ່ຽງລາຍຮັບ ລາຍຈ່າຍເງິນສົດ.

ໃນສະໄໝແຜນການ ໕ ປີຄັ້ງທີ ໑ (໑໙໘໑-໑໙໘໕) ນີ້, ການຜະລິດອຸສະຫະກຳ ຈະຂະຫຍາຍຕົວຢ່າງແຂງແຮງ, ລາຍໄດ້ແຫ່ງຊາດ ຈະເພີ່ມຂຶ້ນ ການຊ່ວຍເຫລືອ ໂດຍບໍ່ຄິດຄ່າຕອບແທນ,

ເງິນກູ້ຢືມ ຂອງບັນດາປະເທດສັງຄົມນິຍົມ, ບັນດາອົງການຈັດຕັ້ງສາກົນ ແລະບັນດາປະເທດທຶນນິຍົມກໍ່ຈະເພີ່ມຂຶ້ນອັນເຮັດໃຫ້ແຫລ່ງລາຍຮັບເຂົ້າງົບປະມານ ມີຄວາມອາດສາມາດ ເພີ່ມຂຶ້ນຫລາຍ. ແຫລ່ງລາຍຮັບ ພາຍໃນປະເທດ ກໍ່ມີຄວາມອາດສາມາດ ເພີ່ມຂຶ້ນຫລາຍ, ເປັນຕົ້ນແມ່ນແຫລ່ງລາຍຮັບຈາກຜົນກຳໄລ ແລະພາສີຂອງບັນດາຮາກຖານລັດວິສະຫະກິດ. ດ້ວຍເຫດນັ້ນໄປຄຽງຄູ່ກັບການສຸມໃສ່ຄຸ້ມຄອງທຶນຮອນທີ່ໄດ້ຈາກການຊ່ວຍເຫລືອຂອງຕ່າງປະເທດນັ້ນ, ຕ້ອງເອົາໃຈໃສ່ເປັນສຳຄັນການເພີ່ມທະວີ ແລະ ດັດແປງການຄຸ້ມຄອງບັນດາຮາກຖານລັດວິສະຫະກິດ, ສ້າງເງື່ອນໄຂ ໃຫ້ບັນດາຮາກຖານລັດວິສະຫະກິດປະຕິບັດຢ່າງຖືກຕ້ອງຕາມລະບອບຄຸ້ມຄອງດຸ່ນດ່ຽງ ແລະໄດ້ຜົນກຳໄລ, ຮັບປະກັນການສຳເລັດແຜນການຢ່າງຮອບດ້ານດ້ວຍປະສິດທິຜົນສູງ ທາງດ້ານເສດຖະກິດ. ການເງິນແລະທະນາຄານຕ້ອງເສີມຂະຫຍາຍບົດບາດຄວບຄຸມຂອງຕົນຕໍ່ການເຄື່ອນໄຫວເສດຖະກິດຂອງບັນດາຮາກຖານລັດວິສະຫະກິດ, ພ້ອມກັນນັ້ນ ກໍ່ຕ້ອງສະໜອງທຶນ ຢ່າງທັນການ ແລະ ຖືກຕ້ອງຕາມລະບອບການໃຫ້ແກ່ບັນດາຮາກຖານລັດວິສະຫະກິດ. ເອົາໃຈໃສ່ ສະໜອງທຶນໃຫ້ບໍລິສັດການຄ້າຢ່າງພຽງພໍ ແລະທັນການ ເພື່ອເກັບຊື້ທັນຍາຫານແລະເຄື່ອງປ່າຂອງນາອື່ນໆສຳລັບເປັນສິນຄ້າຂາອອກ, ເປັນວັດຖຸດິບປ້ອນອຸດສະຫະກຳ ແລະ ສຳເລັດແຜນການເກັບຊື້ຂອງລັດ. ເມື່ອລັດກຳແຫລ່ງສິນຄ້າເຫລົ່ານີ້ໄດ້ຄັກແນ່ແລ້ວ ຈິ່ງຈະສາມາດເປັນເຈົ້າ ກ່ຽວກັບຕະຫລາດ, ລາຄາ, ເງິນຕາໄດ້. ການເປັນເຈົ້າທາງດ້ານຂາອອກຂາເຂົ້າ ແລະແຫລ່ງເງິນຕາ ຕ່າງປະ

ເທດໄດ້ ຈະສ້າງເງື່ອນໄຂໃຫ້ການປັບປຸງພັນທະພາບກຳມະກອນ-ຊາວນາ ເພີ່ມທະວີພະເດັດການກຳມະຊີບ; ເມື່ອລັດສາມາດເປັນເຈົ້າແຫລ່ງສິນຄ້າທັນຍາຫານ, ເຄື່ອງປ່າຂອງນາ ເຊັ່ນດຽວ ກັນກັບສາມາດເປັນເຈົ້າແຫລ່ງສິນຄ້າຂາເຂົ້າໄດ້ ລັດກໍ່ຈະມີວັດຖຸ ປະກອນສຳລັບຄ້ຳປະກັນຄຸນຄ່າຂອງເງິນຕາທີ່ໄດ້ຈຳໜ່າຍອອກ, ເຮັດໃຫ້ລາຄາຕະຫລາດ ມີຄວາມໝັ້ນທ່ຽງເປັນປົກກະຕິ, ທັງສາມາດເກັບພາສີ ແລະລາຍໄດ້ໃຫ້ແກ່ງົບປະມານຂອງລັດ. ອັນນີ້ເປັນວິທີການພື້ນຖານກວ່າໝູ່ສຳລັບຮັກສາຄຸນຄ່າຂອງເງິນຕາໄວ້ຢ່າງໝັ້ນທ່ຽງ ແລະດຸ່ນດ່ຽງລາຍຈ່າຍການເງິນ.

ກ່ຽວກັບລາຍຈ່າຍ ຕ້ອງຮັບປະກັນຄວາມຕ້ອງການ ທີ່ ປະການດີ ການຜະລິດກໍ່ສ້າງ, ການສູ້ຮົບ ແລະຊີວິດການເປັນຢູ່ແລະຕ້ອງຄຸ້ມຄອງການຈ່າຍຢ່າງເຄັ່ງຄັດ, ຮັບປະກັນການຈ່າຍຖືກຕ້ອງຕາມລະບອບ ແລະປະຫຍັດມັດທະຍັດ. ສູ້ຊົນເພື່ອເຮັດໃຫ້ລາຍຮັບແລະລາຍຈ່າຍງົບປະມານດຸ່ນດ່ຽງກັນ ແລະ ເຖິງຊຸມປີທ້າຍຂອງແຜນການ ໕ ປີໃຫ້ມີເງິນສະສົມໄວ້ ເພື່ອດຳເນີນການຜະລິດ ສຳລັບເປີດກວ້າງ.

ໃນໄລຍະຕໍ່ໜ້ານີ້, ກ່ຽວກັບດ້ານການເງິນແມ່ນຕ້ອງປັບປຸງບູລະນະ ພາກສ່ວນຄຸ້ມຄອງການເງິນ ຢູ່ໃນທຸກຂັ້ນ, ທຸກຂະແໜງການ, ທຸກວິສາຫະກິດ, ທຸກສະຫະກອນ, ຈັດຕັ້ງການເຝິກອົບຮົມໃຫ້ພະນັກງານການເງິນ ແລະ ການບັນຊີ; ປະກາດໃຊ້ ລະບອບການເບີກຈ່າຍ ການເງິນໃຫ້ແກ່ການກໍ່ສ້າງພື້ນຖານ, ປະກາດໃຊ້ລະບອບການສະໜອງທຶນໝູນວຽນ ແລະ ລະບອບການອື່ນໆ (ຄ່າ

ຫລຸ້ຽຫ້ຽນ, ແຈກຢາຍຜົນກຳໄລ...) ພ້ອມກັບກຳນົດໝາຍທີ່ຈຳເປັນສຳລັບການໝູນໃຊ້ລະບອບຄຸ້ມຄອງງົບດຸ່ນ ແລະ ໄດ້ຜົນກຳໄລຢູ່ໃນວິສະຫະກິດຕ່າງໆ. ຕ້ອງຄຸ້ມຄອງຢ່າງເຄັ່ງຄັດ ການປະຕິບັດລະບອບລາຍຈ່າຍ, ບໍ່ປ່ອຍປະລະເລີຍໃຫ້ສຳນັກງານ, ວິສາຫະກິດຕ່າງໆ ຮັບໄດ້ເທົ່າໃດ ກໍ່ຕີເທົ່ານັ້ນ, ຈ່າຍຕາມລຳພັງໃຈ, ຈ່າຍຜິດຫລັກການ, ໝົດເທົ່າໃດ ກໍ່ຕາມຊາງ ອັນຈະພາໃຫ້ເກີດຄວາມຟຸມເຟືອຍຢ່າງຂະໜາດໃຫຍ່. ຕ້ອງສຶກສາອົບຮົມໃຫ້ພະນັກງານທຸກຂັ້ນ, ທຸກຂະແໜງການເຊີດຊູລະບຽບວິໃນ ຕໍ່ລາຍຮັບລາຍຈ່າຍການເງິນ.

ຕ້ອງດັດແປງ ນະໂຍບາຍພາສີກະສິກຳ, ພາສີອຸສະຫະກຳ ແລະ ການຄ້າ ແລະພາສີຂາອອກຂາເຂົ້າຕາມຫລັກການ ສົ່ງເສີມການຂະຫຍາຍການຜະລິດ, ຊຸກຍູ້ການກໍ່ສ້າງ ແລະດັດແປງສັງຄົມນິຍົມ, ດຳເນີນການແຈກຢາຍລາຍໄດ້ ຢ່າງສົມເຫດສົມຜົນ ແລະ ຈັດຕັ້ງ ການເກັບພາສີຢ່າງແໜ້ນໜາ, ຖືກກັບນະໂຍບາຍ ແລະ ໃຫ້ໄດ້ຕາມແຜນການ, ຕາມກຳນົດ.

ກ່ຽວກັບທະນາຄານ ຕ້ອງປັບປຸງບູລະນະການຈັດຕັ້ງ, ເພີ່ມເຕີມລະບອບການຕ່າງໆແລະເປີດກວ້າງການເຄື່ອນໄຫວທາງດ້ານວິຊາການ ກ່ຽວກັບການສິນເຊື່ອ, ການຄຸ້ມຄອງການພິມຈຳໜາຍທະນະບັດ, ການຄຸ້ມຄອງເງິນສົດ ແລະການສຳລະສະສາງໂດຍບໍ່ໃຊ້ເງິນສົດ.ຮັບປະກັນການເສີມຂະຫຍາຍບົດບາດຂອງທະນາຄານເຊິ່ງເປັນເຄື່ອງມືອັນໜຶ່ງທີ່ແຫລມຄົມ ຂອງພະເດັດການກຳມະຊີບເປັນໃຈກາງເສັ້ນປະສາດ ທີ່ຄອບງຳການເຄື່ອນໄຫວຕ່າງໆ ຂອງ

ເສດຖະກິດແຫ່ງຊາດໂດຍຜ່ານເງິນຕາ, ເປັນໃຈກາງພົນຈຳໜ່າຍ ແລະຄຸ້ມຄອງເງິນຕາ. ທັງນີ້ ແນໃສ່ປະຕິບັດບັນດາໜ້າທີ່ຜະເດັດການກຳມະຊີບ, ກໍ່ສ້າງ ແລະດັດສ້າງສັງຄົມນິຍົມ. ພ້ອມກັນນັ້ນກໍ່ຕ້ອງຈັດຕັ້ງການຕິດຕໍ່ສື່ສານລະຫວ່າງທະນາຄານສູນກາງກັບສາຂາຢູ່ໃນແຂວງຕ່າງໆເປັນຢ່າງດີ ແນໃສ່ຮັບປະກັນການຈຳໜ່າຍແລະສະເລັ່ຍການໝູນວຽນເງິນຕາຢ່າງທະລຸລົ່ງ, ວອງໄວ ແລະມີພົນສັກສິດໃນທົ່ວປະເທດ, ຮັບປະກັນເຮັດໃຫ້ຄວາມໄວຂອງການໝູນວຽນເງິນຕາ ເພີ່ມຂຶ້ນ, ເຮັດໃຫ້ຄຸນຄ່າ ຂອງເງິນກີບໝັ້ນທ່ຽງ, ຕ້ອງເປີດສາຂາທະນາຄານຂຶ້ນຢູ່ໃນເມືອງຕ່າງໆ.

## *8 ກ່ຽວກັບແຮງງານ ແລະ ເງິນເດືອນ*

ແຜນການຂະຫຍາຍເສດຖະກິດ, ຂະຫຍາຍວັດທະນະທຳໃນຊຸມປີຕໍ່ໜ້ານີ້ຮຽກຮ້ອງໃຫ້ມີແຮງງານຫລາຍ ມີຖັນແຖວພະນັກງານວິທະຍາສາດເຕັກນິກ ແລະຄຸ້ມຄອງເສດຖະກິດ, ມີຖັນແຖວກຳມະກອນເຕັກນິກດ້ວຍໂຄງປະກອບອັນເໝາະສົມ. ບົດຮຽນໃນຊຸມປີທີ່ຜ່ານມາໄດ້ຊີ້ໃຫ້ພວກເຮົາເຫັນແຈ້ງວ່າ ການທີ່ ແຜນການໆຜະລິດແລະກໍ່ສ້າງທີ່ພວກເຮົາວາງອອກ ບໍ່ໄດ້ຮັບການປະຕິບັດໃຫ້ສຳເລັດຢ່າງຄົບຖ້ວນນັ້ນ ແມ່ນຍ້ອນສາຍເຫດຫລາຍປະການ, ໃນນັ້ນສາຍເຫດຕົ້ນຕໍແມ່ນຍັງບໍ່ທັນເອົາໃຈໃສ່ເທົ່າທີ່ຄວນຕໍ່ບັນຫາດູນດຽງແຮງງານ, ການຈັດຕັ້ງແຮງງານຢ່າງວິທະຍາສາດ, ການຈັດວາງ ກຳລັງແຮງງານ ຯລ ຯ...

ປະຈຸບັນນີ້ ແຮງງານ ຢູ່ໃນປະເທດເຮົາມີປະມານໜຶ່ງລ້ານເຄິ່ງ, ເຖິງ ປີ ໑໙໘໕ ພວກເຮົາ ອາດຈະ ມີແຮງງານເກືອບ

໒.໐໐໐.໐໐໐ (ສອງລ້ານ). ແຮງງານໃນການກະສິກຳປະຈຸບັນ
ນີ້ ຫາກໍ່ໃຊ້ວຽກປະມານ ໑໐໐ ວັນງານຕໍ່ປີ, ສ່ວນໃນອຸສະຫະກຳ
ຫາກໍ່ໃຊ້ວຽກປະມານ ໑໕໐ ວັນງານຕໍ່ປີ. ຈຳນວນຄົນ ສັງກັດລັດ
ໄດ້ເພີ່ມຂຶ້ນໄວ, ໃນນັ້ນ ມີຫລາຍພໍສົມຄວນ ຍັງບໍ່ທັນມີວຽກເຮັດ
ງານທຳຢ່າງພຽງພໍ. ເມື່ອເປັນເຊັ່ນນັ້ນ ຄວາມອາດສາມາດ ບົ່ມ
ຊ້ອນທາງດ້ານແຮງງານກໍ່ຍັງມີຢູ່, ຕ້ອງປຸກລະດົມຄວາມອາດ ສາ
ມາດເຫລົ່ານີ້ໃຫ້ໄດ້ຫມົດ, ຈັດວາງກຳລັງແຮງງານສັງຄົມລະຫວ່າງ
ທ້ອງຖິ່ນຕ່າງໆ ລະຫວ່າງຂະແຫນງການຕ່າງໆ ຄືນໃຫມ່ ແນ່ໃສ່,
ແບ່ງງານສັງຄົມ ຄືນໃຫມ່; ໄປຄຽງຄູ່ກັບການຈັດຕັ້ງ ການຜະລິດ
ຄືນໃຫມ່ ຕ້ອງຈັດຕັ້ງແຮງງານຢ່າງວິທະຍາສາດ, ຕ້ອງເພີ່ມແຮງ
ງານ ໃຫ້ຂະແຫນງ ການຜະລິດຕື່ມອີກ, ພ້ອມກັນນັ້ນ ກໍ່ຮັບປະກັນ
ຄວາມຕ້ອງການຂອງການປ້ອງກັນຊາດ ແລະຄວາມຕ້ອງການຂອງ
ການຮ່ຳຮຽນ. ຕ້ອງມີແຜນການບຳລຸງ ແລະ ຍົກລະດັບ ເຕັກນິກ
ຂອງກຳມະກອນໃຫ້ສູງຂຶ້ນ, ຕ້ອງເພີ່ມເຄື່ອງຈັກ, ເຄື່ອງປະກອບ
ຂຶ້ນຕື່ມ ເພື່ອຍົກປະສິດທິພາບ ຂອງງານໃຫ້ສູງຂຶ້ນ, ຕ້ອງດັດແປງ
ລະບອບເງິນເດືອນນຳໃຊ້ ຢ່າງກ້ວາງຂວາງ ລະບອບ ຈາຍເງິນ
ເດືອນຕາມຜະລິດຕະພັນທີ່ຜະລິດໄດ້, ເງິນເດືອນແບບ ເຫມົາງານ
ແນ່ໃສ່ສິ່ງເສີມການຍົກປະສິດທິພາບຂອງງານສັງຄົມໃຫ້ສູງຂຶ້ນ, ຮັບ
ປະກັນການສຳເລັດຫນ້າທີ່ແຜນການຂະຫຍາຍເສດຖະກິດແຫ່ງຊາດ.

ຕ້ອງຂຶ້ນຕາຕະລາງດຸນດ່ຽງແຮງງານໃນທົ່ວປະເທດ ແລະ
ເປັນແຕ່ລະແຂວງ, ຮັບປະກັນດຸນດ່ຽງແຮງງານໃຫ້ຄວາມ ຕ້ອງ
ການ ມີ ປະການ ຄື : ການຜະລິດ-ກໍ່ສ້າງ, ການສູ້ຮົບ ການ

ຮ່ຳຮຽນກໍ່ສ້າງພະນັກງານ ແລະກຳມະກອນ.

ຕ້ອງມີລະບອບການຄຸ້ມຄອງແຮງງານ, ຍົກສູງລະບຽບ ວິໄນອອກແຮງງານ, ມີລະບອບການຄັດເລືອກເອົາຄົນເຂົ້າເຮັດວຽກ ຍົກຍ້າຍ ແລະນຳໃຊ້ກຳມະກອນ, ລັດຖະກອນ ມີລະບອບ ໃຫ້ຄ່າບຳເນັດ ແລະປັບໃໝ່ຢ່າງເຂັ້ມງວດແລະທ່ຽງທຳ.

ດ້ານໜຶ່ງອີກແມ່ນຕ້ອງດັດແປງລະບອບເງິນເດືອນຕາມຫລັກການແຈກຢາຍຕາມແຮງງານເຊັ່ນ: ຜູ້ອອກແຮງງານຫລາຍ,ອອກແຮງງານເຮັດວຽກໜັກ, ມີປະສິດທິພາບ ຂອງງານສູງ ແມ່ນໄດ້ເງິນເດືອນສູງ, ໄດ້ເງິນຄ່າບຳເນັດຫລາຍ, ຜູ້ອອກແຮງງານໜ້ອຍ ປະສິດທິພາບຂອງງານຕ່ຳແມ່ນໄດ້ເງິນເດືອນຕ່ຳ, ຜູ້ມີແຮງງານແຕ່ຫາກບໍ່ອອກແຮງງານແມ່ນບໍ່ຈ່າຍເງິນເດືອນໃຫ້. ລະບອບເງິນເດືອນຕ້ອງແນ່ໃສ່ສົ່ງເສີມພະນັກງານ, ກຳມະກອນ, ລັດຖະກອນຮ່ຳຮຽນ, ເຝິກຝົນ ແລະ ເຊີດຊູລະດັບເຕັກນິກ, ວິຊາສະເພາະຂອງຕົນໃຫ້ສູງຂຶ້ນ, ສົ່ງເສີມແຮງງານ ໃນຂົງເຂດການຜະລິດ. ສັບຊ້ອນຈຳນວນຄົນທີ່ສັງກັດໃນອົງການ, ວິສາຫະກິດຕ່າງໆຊອງສຸມ ແລະຂອງຫ້ອງຖົ່ມຄືນໃໝ່ຕາມຈິດໃຈກະທັດລັດເບົາບາງ ແລະມີຄວາມສັກສິດ ຕ້ອງຫັນຜູ້ທີ່ບໍ່ມີວຽກເຮັດງານທຳ ຢ່າງພຽງພໍ ໃນການຈັດຕັ້ງບໍລິຫານໄປສູ່ຮາກຖານ ການຜະລິດ, ສະຖານທີ່ ກໍ່ສ້າງ ແລະໄປຮ່ຳຮຽນວິຊາການຕ່າງໆ.

ເອົາໃຈໃສ່ເປັນສຳຄັນການຈ່າຍເງິນເດືອນຢ່າງສະໝ່ຳສະເໝີເປັນປະຈຳແຕ່ລະເດືອນ ແລະຮັບປະກັນການສະໜອງສິນຄ້າໃຫ້ພະນັກງານ, ກຳມະກອນ ລັດຖະກອນ, ໃຫ້ຖືກຕ້ອງ ຕາມລະ

ບອບອັດຕາ, ແກ້ໄຂບັນຫາເຣືອນຢູ່ຂອງພະນັກງານ ກຳມະກອນ, ລັດຖະກອນ ແລະຈັດຕັ້ງຊີວິດທາງດ້ານວັດຖຸ ແລະຈິດໃຈຂອງ ພະນັກງານ ກຳມະກອນ ລັດຖະກອນໃຫ້ດີຍິ່ງຂຶ້ນ.

### ໑ ດັດສ້າງສັງຄົມນິຍົມຕໍ່ອຸສະຫະກຳການຄ້າທຶນນິຍົມ ແລະ ຕໍ່ກະສິກຳ

ການດັດສ້າງ ແລະ ກໍ່ສ້າງສັງຄົມນິຍົມ ເປັນໜ້າທີ່ພື້ນຖານ ຂອງພະເດັດການກຳມາຊີບ. ໂດຍອີງໃສ່ຈຸດພິເສດທາງດ້ານເສດຖະກິດ ແລະສັງຄົມຂອງປະເທດເຮົາ, ພັກເຮົາໄດ້ຕົກລົງວ່າຕ້ອງດຳເນີນການປະຕິວັດ ທັງ ໓ ປະການໄປພ້ອມໆກັນ ໃນນັ້ນ ການປະຕິວັດທາງດ້ານການພົວພັນ ແຫ່ງການຜະລິດມີບົດໄຂຂອງທາງ. ດ້ວຍເຫດນັ້ນ ພັກແລະລັດເຮົາຈຶ່ງດຳເນີນການດັດສ້າງສັງຄົມນິຍົມຕໍ່ອຸສະຫະກຳ - ການຄ້າທຶນນິຍົມ ແລະຕໍ່ກະສິກຳແຕ່ຫົວທີ. ກອງປະຊຸມສູນກາງຄັ້ງທີ ໗ ແລະກອງປະຊຸມປະສົມລະຫວ່າງສະພາປະຊາຊົນສູງສຸດ ກັບສະພາລັດຖະມົນຕີໄດ້ມີແຜນນະໂຍບາຍ, ນະໂຍບາຍ ແລະວິທີການອັນລະອຽດ ເພື່ອຊຸກຍູ້ການດັດສ້າງສັງຄົມນິຍົມຕໍ່ການພົວພັນແຫ່ງການຜະລິດເກົ່າ ກໍ່ສ້າງການພົວພັນແຫ່ງການຜະລິດໃໝ່; ນີ້ເປັນວິທີການທີ່ແນ່ໃສ່ຮັບປະກັນໄຊຊະນະຂອງສັງຄົມນິຍົມ ໃນການຕໍ່ສູ້ໃຜເອົາຊະນະໃຜ ໃນສະໄໝຂ້າມຜ່ານຢູ່ ໃນປະເທດເຮົາ. ການຕໍ່ສູ້ດັ່ງກ່າວພວມເປັນໄປຢ່າງດູເດືອດ ຂຽວຂາດ ເຊິ່ງສະແດງອອກຢ່າງຈະແຈ້ງໃນຂົງເຂດການຄ້າ.

ໃນໄລຍະຕໍ່ໜ້ານີ້, ຕ້ອງໃຊ້ທຸກມາດຕາການທາງດ້ານເສດຖະກິດ, ບໍລິຫານ ແລະ ສຶກສາອົບຮົມ ເພື່ອປະຕິບັດແຜນນະ ໂຍ

ບາຽ, ນະໂຍບາຽກ່ຽວກັບການດັດສ້າງສັງຄົມນິຍົມ ຕໍ່ການຄ້າທຶນນິຍົມ, ອັນສຳຄັນແມ່ນຕ້ອງປະກາດໃຊ້ກົດໝາຽ ວ່າດ້ວຽການຄຸ້ມຄອງການຂາອອກ-ຂາເຂົ້າ, ປະຕິບັດສິດຜູກຂາດຂອງລັດກ່ຽວກັບການຄ້າພາຽນອກ, ພ້ອມກັນນັ້ນ ກໍ່ຕ້ອງປັບປຸງ ແລະຂະຫຍາຽລັດວິສາຫະກິດຂາອອກ-ຂາເຂົ້າ ແລະ ສຶກສາອົບຮົມມະຫາຊົນ ຢ່າງກວ້າງຂວາງ ໃຫ້ມີສະຕິເຄົາລົບຕໍ່ກົດໝາຽ ວ່າດ້ວຽການຄຸ້ມຄອງການຂາອອກ-ຂາເຂົ້າຂອງລັດ.

ສຳລັບນາຽທຶນທີ່ປະກອບທຸລະກິດ ດ້ານອຸສະຫະກຳ, ຂົນສົ່ງ ແລະກໍ່ສ້າງນັ້ນ ພວກເຂົາກໍ່ຍັງຄົງສືບຕໍ່ປະຕິບັດນະໂຍບາຽນຳໃຊ້, ຈຳກັດ ແລະດັດສ້າງ ແຕ່ຕ້ອງຂະຫຍາຽເສດຖະກິດຂອງລັດ ຢ່າງແຂງແຮງ, ເສີມຂະຫຍາຽບົດບາດເປັນເຈົ້າພາທາງຂອງເສດຖະກິດຂອງລັດສຳລັບນາຽທຶນການຄ້າທີ່ຢາກຫັນທຶນມາປະກອບທຸລະກິດດ້ານການຜະລິດນັ້ນ ລັດກໍ່ຈະສົ່ງເສີມ ແລະ ໃຫ້ການຊ່ວຽແກ່ເຂົາເຈົ້າ.

ສຳລັບອຸສະຫະກຳນ້ອຽ ແລະ ຫັດຖະກຳນັ້ນ ລັດໃຫ້ການສົ່ງເສີມຂະຫຍາຽການຜະລິດການຄ້າລັດວິສາຫະກິດຕ້ອງໃຫ້ການຊ່ວຽເຫລືອບັນດາກຸ່ມການຜະລິດ ແລະສະຫະກອນຫັດຖະກຳໃນການກຳນົດທິດການຜະລິດ ການສະໜອງວັດຖຸດິບ ແລະການຈຳໜ່າຽຜະລິດຕະພັນ.

ກ່ຽວກັບການດັດສ້າງສັງຄົມນິຍົມຕໍ່ການກະສິກຳນັ້ນ ໃນຊຸມປີຕໍ່ໜ້ານີ້, ຕ້ອງສືບຕໍ່ປັບປຸງ ແລະຂະຫຍາຽຂະບວນການຫັນເປັນສະຫະກອນກະເສດ, ສົມທົບຢ່າງແໜ້ນແຟ້ນລະຫວ່າງການປັບປຸງ

ແລະ ຂະຫຍາຍສະຫະກອນກັບຂະບວນການເຮັດກະເສດສຸມ ສ້າງຊົນລະປະທານ. ໃນໄລຍະ ໔ ປີ ຕ້ອງສູ້ຊົນໃຫ້ສຳເລັດການ ຫັນເປັນສະຫະກອນກະເສດຢູ່ໃນເຂດເຮັດນາ ຢູ່ໃນເຂດທີ່ມີຂະແໜງອາຊີບ ແລະອຸປະກອນການຜະລິດເປັນປົກກະຕິ ເຊັ່ນ: ລ້ຽງສັດ, ປູກຕົ້ນໄມ້ອຸສະຫະກຳ ແລະປະກອບອາຊີບການປ່າໄມ້ ຯລຯ...

ກ່ຽວກັບວິທີການ ປັບປຸງສະຫະກອນກະເສດນັ້ນ ແມ່ນຕ້ອງກໍ່ສ້າງແບບຢ່າງທີ່ດີກ່ຽວກັບການຈັດຕັ້ງ ແລະຄຸ້ມຄອງສະຫະກອນ, ຊ່ວຍເຫລືອສະຫະກອນຕ່າງໆ ໃນການກຳນົດທິດການຜະລິດໃຫ້ຖືກຕ້ອງສອດຄ່ອງກັບເງື່ອນໄຂ ທຳມະຊາດ, ເງື່ອນໄຂເສດຖະກິດ ແລະສັງຄົມຂອງແຕ່ລະໜ່ວຍສະຫະກອນ, ບົນພື້ນຖານດັ່ງກ່າວນັ້ນ ແລ້ວຈັດຕັ້ງການຜະລິດຄືນໃໝ່, ແບ່ງງານຄືນໃໝ່, ເປີດກ້ວາງການທຸລະກິດຫລາຍຂະແໜງອາຊີບ, ເພີ່ມວັນງານຂຶ້ນ, (ປີໜຶ່ງອອກແຮງງານ ບໍ່ຕ່ຳກວ່າ ໒໐໐ ວັນງານ ດຳເນີນການເຮັດ ກະເສດສຸມ ເພື່ອເພີ່ມປະສິດທິພາບຂອງການປູກພືດຊະນິດຕ່າງໆຂຶ້ນ. ຕ້ອງຍົກລະດັບຄວາມສາມາດໃນດ້ານການຈັດຕັ້ງແລະຄຸ້ມຄອງຂອງຄະນະອຳນວຍການສະຫະກອນໃຫ້ສູງຂຶ້ນດ້ວຍວິທີຈັດຕັ້ງການອົບຮົມການສະຫລຸບຖອດຖອນບົດຮຽນ ເພື່ອນຳອອກເຜີຍແຜ່ ຢ່າງກວ້າງຂວາງ, ວາງກຳນົດໝາຍແຮງງານ, ຈັດຕັ້ງການບັນທຶກຄະແນນວັນງານ, ທັງນີ້ ເພື່ອໃຫ້ມີພື້ນຖານສຳລັບປະຕິບັດ ການແຈກຢາຍຢ່າງຍຸດຕິທຳ; ຕ້ອງຖືເປັນສຳຄັນເສດຖະກິດສຳຮອງຂອງຄອບຄົວ.

ໃນການຂະຫຍາຍສະຫະກອນກະເສດນັ້ນ ຕ້ອງໄດ້ກະກຽມຢ່າງຮອບຄອບ, ຕ້ອງມີຫລັກແຫລ່ງນຳພາ, ຕ້ອງກໍ່ສ້າງພະນັກງານ

ຄຸ້ມຄອງ ແລະ ຕ້ອງຖືຫລັກການສະໝັກໃຈເປັນສຳຄັນ ຖືການຂະຫຍາຍການຜະລິດໄປຄຽງຄູ່ກັບການກໍ່ສ້າງການພົວພັນແຫ່ງການຜະລິດໃໝ່ເປັນສຳຄັນ. ໃນການຫັນເປັນສະຫະກອນກະເສດນັ້ນຕ້ອງຮັບປະກັນໃຫ້ໄດ້ຜົນທີ່ວ່າ ການຜະລິດກະສິກຳມີການຂະຫຍາຍຕົວ, ຊີວິດການເປັນຢູ່ ໄດ້ຮັບການປົວແປງໃຫ້ດີຂຶ້ນ, ການປ້ອງກັນຊາດປ້ອງກັນຄວາມສະຫງົບ, ຮາກຖານພັກ ອຳນາດການປົກຄອງ ແລະ ອົງການຈັດຕັ້ງມະຫາຊົນໄດ້ຮັບການປັບປຸງ.

ໄປຄຽງຄູ່ກັບການປັບປຸງ ແລະຂະຫຍາຍ ຂະບວນການຫັນເປັນສະຫະກອນກະເສດນັ້ນ ຕ້ອງປັບປຸງນິຄົມກະເສດຂອງລັດທີ່ມີຢູ່ແລ້ວ ຕາມທິດທາງທີ່ໄດ້ກຳນົດໄວ້ ໃນມະຕິຄັ້ງທີ ໗ ຂອງສູນກາງ ແລະກໍ່ສ້າງນິຄົມກະເສດ ຂອງລັດຂຶ້ນຕື່ມ ໂດຍມີຈຸດໜັກດວຍການຮ່ວມມືກັບບັນດາປະເທດ ອ້າຍນ້ອງ. ນິຄົມກະເສດຂອງລັດ ແຫ່ງຕ່າງໆຕ້ອງມີແຜນກຳນົດ, ຂຶ້ນແຜນ ມີທິດການຜະລິດ, ເຕັກນິກ. ການເງິນປະຈຳປີ, ຕ້ອງວາງກຳນົດໝາຍແຮງງານ, ກຳນົດໝາຍການໃຊ້ຈ່າຍປະເພດຕ່າງໆ, ຕ້ອງນຳໃຊ້ລະບອບ ຄຸ້ມຄອງດຸນດ່ຽງແລະໄດ້ຜົນກຳໄລຢ່າງຖືກຕ້ອງ.ສຳລັບນິຄົມກະເສດ ຂອງລັດທີ່ກະຈະກໍ່ສ້າງຂຶ້ນໃໝ່ນັ້ນ ແມ່ນຕ້ອງປະຕິບັດໃຫ້ຖືກຕ້ອງ ຕາມລະບອບການຄຸ້ມຄອງ ການກໍ່ສ້າງພື້ນຖານຂອງລັດ. ຜະລິດຕະພັນຕ່າງໆຂອງນິຄົມກະເສດລັດ(ນັບທັງນິຄົມກະເສດຂອງກອງທະຫານຕ້ອງມອບໃຫ້ບໍລິສັດການຄ້າ ລັດວິສາຫະກິດຕາມລາຄາທີ່ລັດໄດ້ກຳນົດໄວ້.

## III/ ຂະຫຍາຍການສຶກສາ, ວັດທະນະທຳ, ສາທາລະນະສຸກ

ຣີບຮ້ອນນຳເອົາການສຶກສາວັດທະນະທຳໄປກ່ອນກ້າວໜຶ່ງ ທັງນີ້ ເພື່ອຮັບໃຊ້ຢ່າງມີຜົນດີ ໜ້າທີ່ປົກປັກຮັກສາ ແລະ ສ້າງສາປະເທດຊາດຕາມທິດກ້າວຂຶ້ນສັງຄົມນິຍົມ.

໑/ <u>ວັດທະນະທຳ, ສຶ ສາ ແລະ ສາທາລະນະສຸກ ເປັນແນວຣົບທີ່ມີຄວາມສຳຄັນທີ່ສຸດ</u>, ມັນປະກອບສ່ວນເຂົ້າໃນການກໍ່ສ້າງສັງຄົມໃໝ່ ສັງຄົມນິຍົມ, ເປັນພາຫະນະຕໍ່ສູ້ ທີ່ມີຄວາມສັກສິດເພື່ອຕີຖອຍ ແລະລົບລ້າງຮ່ອງຮອຍເສດເຫຼືອອັນເຊື່ອມຊາມທາງດ້ານວັດທະນະທຳທີ່ສັງຄົມເກົ່າປະໄວ້, ເປັນເຄື່ອງມືອັນແຫຼມຄົມ ເພື່ອຕໍ່ສູ້ຕ້ານຖ້ອຍທຳນອງສົງຄາມຈິດຕະສາດ: ການບິດເບືອນຫລອກລວງຂອງສັດຕູ,ພ້ອມກັນນັ້ນ ກໍ່ປະກອບສ່ວນເຂົ້າ ໃນການເສີມຂະຫຍາຍລັກສະນະດີເລີດຂອງລະບອບໃໝ່ ໃນຂະນະທີ່ຊີວິດການເປັນຢູ່ທາງດ້ານວັດຖຸຍັງພົບຄວາມຫຍຸ້ງຍາກຢູ່, ໃນດ້ານອື່ນ ມັນຍັງປະກອບສ່ວນເຂົ້າໃນການແນະນຳຄວາມຍອດຍິ່ງ ທາງດ້ານວັດທະນະທຳຂອງຊາດເຮົາ ແລະແນະນຳແນວທາງ ເປັນທຳ ແລະ ລັກສະນະດີເລີດຂອງລະບອບເຮົາ ຕໍ່ຕ່າງປະເທດອີກດ້ວຍ.

ການທີ່ວຽກງານສຶກສາ, ວັດທະນະທຳ ແລະ ສາທາລະນະສຸກດຳເນີນໄປເປັນຢ່າງດີນັ້ນ ເວົ້າສະເພາະໜ້ານີ້ແລ້ວ ແມ່ນຈະເປັນການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການປະຕິບັດໜ້າທີ່ຮັດໃຫ້ສະພາບການໃນທຸກໆດ້ານໄດ້ເປັນປົກກະຕິໂດຍໄວ, ເປັນການປຸກລະດົມທຸກໆຄົນໃຫ້ມີຖວງທ່າເບີກບານທ້າວຫັນແຂ່ງຂັນກັນເຮັດວຽກງານດັດສ້າງ ແລະກໍ່ສ້າງເສດຖະກິດ, ເຮັດວຽກງານສູ້ຣົບ, ຮຳ

ຣຽນ ແລະສ້າງສາບ້ານເມືອງ.

ຈຸດໝາຍຂອງພວກເຮົາ ໃນການກໍ່ສ້າງຄົນໃໝ່ ແມ່ນກໍ່ສ້າງຄົນໃໝ່ ທີ່ມີວັດທະນະທຳ, ມີຄຸນສົມບັດສິນທຳ, ມີຄວາມຮັກຊາດ ແລະຮັກສັງຄົມນິຍົມຢ່າງແຮງກາ, ຮັກທອມ ແລະ ມັກການອອກແຮງງານ,ຮູ້ອອກແຮງງານຢ່າງມີປະສິດທິພາບສູງຂຶ້ນເລື້ອຍໆ, ເຄົາຣົບລະບຽບວິໄນອອກແຮງງານ ແລະກົດໝາຍຂອງລັດ,ແພງຖະໜອມ ແລະປົກປັກຮັກສາຊັບສົມບັດຂອງສ່ວນລວມເປັນຢ່າງດີ, ແພງຖະໜອມ ແລະປົກປັກຮັກສາຜົນປະໂຫຍດຂອງລວມໝູ່, ດຳລົງຊີວິດຢ່າງຂາວສະອາດ ແລະງາຍໆ, ຮູ້ຕໍ່ສູ້ຕ້ານຄວາມຊິນເຄີຍອັນບໍ່ດີທາງສັງຄົມເຊັ່ນ: ຂີ້ຄ້ານ, ເກາະກິນ, ຊຸດຊິດ, ດຳລົງຊີວິດຢ່າງຟູມເຟືອຍ, ເສື່ອມຊາມ, ເຊື່ອຖືຢ່າງງົມງວາຍ ຯລຯ.. ຮູ້ດຳລົງຊີວິດ ຕາມແບບທີ່ວ່າ "ຕົນເອງເພື່ອທຸກຄົນ, ທຸກຄົນເພື່ອຕົນເອງ" ຮູ້ຄຽດແຄ້ນສັດຕູ ແລະເດັດດ່ຽວຕໍ່ສູ້ຕ້ານສັດຕູ,ພ້ອມກັນນັ້ນ ກໍ່ຮູ້ແພງຖະໜອມ ແລະ ອອກແຮງກໍ່ສ້າງຄວາມສາມັກຄີ ມິດຕະພາບກັບອ້າຍນ້ອງ ແລະເພື່ອນມິດສາກົນ. ໃນສະພາບການປະຈຸບັນ ພວກເຮົາຕ້ອງສຸມໃສ່ການສຶກສາອົບຮົມນ້ຳໃຈຮັກຊາດ, ຮັກສັງຄົມນິຍົມ, ກຳນົດໃຫ້ຈະແຈ້ງມິດ ແລະສັດຕູ, ເດັດດ່ຽວຕໍ່ສູ້ກັບລັດທິຂະຫຍາຍອານາເຂດ ແຜ່ອຳນາດຊາດໃຫຍ່ ແລະຈັກກະພັດນິຍົມ; ຮ່ວມສຳພັນສູ້ຣົບ,ສາມັກຄີຢ່າງແໜ້ນແຟ້ນ ແລະ ຮ່ວມມືຢ່າງຮອບດ້ານ ກັບຫວຽດນາມ, ກຳປູເຈຍ, ສະຫະພາບໂຊວຽດແລະບັນດາປະເທດສັງຄົມນິຍົມ,ບາກບັ່ນບຸກບືນຮ່ຳຮຽນ ແລະອອກແຮງງານເຮັດ ໔ ໜ້າທີ່ ດີປົກປັກຮັກສາ ແລະ ສ້າງສາປະເທດຊາດ

ສົ່ງຄືນນິຍົມເປັນຢ່າງດີ.

*2 ກ່ຽວກັບການສຶກສາໃນ 5 ປີຕໍ່ໜ້ານີ້ແມ່ນຕ້ອງ :*

- ສືບຕໍ່ເຮັດໃຫ້ມະຕິຂອງພັກ ວ່າດ້ວຍການສຶກສາ ໄດ້ຮັບການເຊື່ອມຊຶມໃນທຸກຂະແໜງການ ແລະທຸກຂັ້ນ, ເປັນຕົ້ນໃນໝູ່ພະນັກງານນຳພາ, ທັງນີ້ ເພື່ອເຮັດໃຫ້ພາລະກິດເອົາການສຶກສາໄປກ່ອນກ້າວໜຶ່ງມີການຫັນປ່ຽນຢ່າງເດັ່ນຊັດ ຢູ່ໃນທຸກໆຂະແໜງສຶກສາເຊັ່ນ: ອະນຸບານສຶກສາ, ສາມັນສຶກສາ, ບຳລຸງວັດທະນະທຳ, ອາຊີວະສຶກສາ ແລະ ມະຫາວິທະຍາໄລ.

ກ່ຽວກັບປະຊາສຶກສາ ແລະບຳລຸງວັດທະນະທຳ ແມ່ນຕ້ອງສືບຕໍ່ການລຶບລ້າງ ຄວາມບໍ່ຮູ້ໜັງສືໃຫ້ເປົ້າໝາຍ ທີ່ຕ້ອງການລຶບລ້າງ ຕ້ອງມີວິທີການເຊີດຊູຄຸນນະພາບຂອງຄູ ແລະ ເພີ່ມທະວີພາຫະນະສຳລັບການຮ່ຳຮຽນ ເພື່ອເຮັດໃຫ້ຜູ້ທີ່ໄດ້ລຶບລ້າງ ຄວາມບໍ່ຮູ້ໜັງສືແລ້ວນັ້ນ ໄດ້ຮ່ຳຮຽນຈົບຫລັກສູດ ບ. ມ. ໃນບັນຫານີ້ຕ້ອງສຸມໃສ່ປະຕິບັດລະດັບຄາດໝາຍທີ່ກຳນົດໄວ້ໃນມະຕິຄັ້ງທີ ໓ ຂອງສູນກາງໃຫ້ຈົນໄດ້, ສູ້ຊົນ ເພື່ອຍົກລະດັບວັດທະນະທຳຂອງພະນັກງານນຳພາ ແລະ ຊາວໜຸ່ມໃຫ້ສູງຂຶ້ນ ເຮັດໃຫ້ພະນັກງານ ຮາກຖານໄດ້ຮ່ຳຮຽນຈົບຂັ້ນປະຖົມ ແລະ ປະມານ ໑/໓ ໄດ້ຂຶ້ນຂັ້ນມັດທະຍົມ, ພະນັກງານຂັ້ນເມືອງຂຶ້ນໄປໃຫ້ຮຽນຈົບຂັ້ນມັດທະຍົມແລະປະມານ ໑/໓ ໃຫ້ໄດ້ຂຶ້ນຂັ້ນອຸດົມ.

ອອກແຮງປັບປຸງບູລະນະ ແລະ ເປີດກ້ວາງຂະແໜງອະນຸບານສຶກສາ ແລະສາມັນສຶກສາ, ສູ້ຊົນຮອດທ້າຍແຜນການ ໕ ປີ ໃຫ້ເປີດກ້ວາງ ໂຮງຮຽນອະນຸບານອອກຕື່ມ ເພື່ອຈະສາມາດຮັບ

ເອົາ ແລະ ສຶກສອນພວກເດັກ ໃນໄວອາຍຸນີ້ ໃຫ້ໄດ້ປະມານ ໓໐ ໔໐%, ພ້ອມກັນນັ້ນ ເຮັດໃຫ້ໂຮງງານ, ສະຖານທີ່ກໍ່ສ້າງນິຄົມກະເສດ, ນິຄົມປ່າໄມ້, ສຳນັກງານອົງການ, ກົມກອງສ່ວນໃຫ່ຍທີ່ມີກຳມະກອນ,ລັດຖະກອນເພດຍິງເຕົ້າໂຮມຢູ່ຫລາຍ ແລະໜ່ວຍສະຫະກອນກະເສດທີ່ມີເງື່ອນໄຂນັ້ນ ມີໜ່ວຍ,ຈຸ ຫລືໂຮງຝາກເດັກ. ທັມລະບົບໂຮງຮຽນອະນຸບານ, ໂຮງຝາກເດັກທັງໝົດ ໄປໃຫ້ກະຊວງສຶກສາຄຸ້ມຄອງ, ຕັ້ງໜ້າກໍ່ສ້າງຄູອະນຸບານ ແລະ ນາງລ້ຽງເດັກ ໂດຍເອົາວຽກນີ້ເຂົ້າຢູ່ໃນລະບົບໂຮງຮຽນສາງຄູ. ຍາດແຍ່ງເອົາການຊ່ວຍເຫລືອຂອງຕ່າງປະເທດ ແລະການປະກອບ ສ່ວນຂອງປະຊາຊົນ ເພື່ອກໍ່ສ້າງໂຮງລ້ຽງເດັກຕົວຢ່າງຂຶ້ນຈຳນວນໜຶ່ງຢູ່ໃນຕົວເມືອງ ແລະຊົນນະບົດ.

ພະຍາຍາມເຮັດໃຫ້ປະຊາຊົນໃນທົ່ວປະເທດ ມີລະດັບການສຶກສາຊັ້ນປະຖົມ. ຕ້ອງຂະຫຍາຍ ໂຮງຮຽນສາມັນສຶກສາ ໃຫ້ລົງເຖິງໝູ່ບ້ານ, ຕາແສງ ທີ່ຢູ່ຫ່າງໄກສອກຫລີກ, ເຮັດໃຫ້ໝົດທຸກຕາແສງ ມີໂຮງຮຽນຊັ້ນປະຖົມບໍລິບູນ, ຮັບປະກັນໃຫ້ພວກຫລານທີ່ຢູ່ໃນອາຍຸຮຽນ ລ້ວນແຕ່ໄດ້ເຂົ້າໂຮງຮຽນ, ປັບປຸງໂຮງຮຽນ ກິນນອນ, ໂຮງຮຽນຊາວໜຸ່ມຊົນຊາດ, ຂະຫຍາຍຊັ້ນມັດທະຍົມຢ່າງແຂງແຮງ, ໂດຍຖືເອົາຊັ້ນມັດທະຍົມ ເປັນຈຸດໜັກ ແຫ່ງການຂະຫຍາຍການສຶກສາ, ເຮັດໃຫ້ນັກຮຽນທີ່ສຳເລັດຫລັກສູດ ຊັ້ນປະຖົມແລ້ວ ໄດ້ເຂົ້າຮຽນຊັ້ນມັດທະຍົມເປັນສ່ວນໃຫ່ຍ. ຂະຫຍາຍຊັ້ນ ຈຸດົມ ຢ່າງມີແຜນການໜັກແໜ້ນ. ສູ້ຊົນເຮັດໃຫ້ ໒/໓ ຂອງຕາແສງທັງໝົດໄດ້ມີໂຮງຮຽນຊັ້ນມັດທະຍົມ ແລະທຸກໆເມືອງ ມີໂຮງ

ຮຽນຊັ້ນອຸດົມ. ລົດຜ່ອນອັດຕາສ່ວນນັກຮຽນຄ້າງຫ້ອງ ເຮັດໃຫ້ຈຳນວນນັກຮຽນທີ່ຮຽນຈົບຊັ້ນປະຖົມເພີ່ມຂຶ້ນ ໗໐-໘໐%. ໃນສະເພາະໜ້ານີ້, ບັນຫາພື້ນຖານ ແມ່ນຕ້ອງເຊີດຊູຄູນນະພາບ ຂອງຄູຂຶ້ນ, ເປີດກ້ວາງຖັນແຖວຄູ, ບຳລຸງຄູທີ່ມີແລ້ວທັງ ໃນ ໔ ດ້ານ ການເມືອງ, ວັດທະນະທຳ, ວິຊາການ, ປັບປຸງບຸລະນະ ແລະ ເປີດກ້ວາງໂຮງຮຽນສ້າງຄູ ແຫ່ງຕ່າງໆອອກ ເປັນຕົ້ນແມ່ນ ໂຮງຮຽນສ້າງຄູຊັ້ນກາງ, ຊັ້ນຕົ້ນ. ເຮັດໃຫ້ຄູທຸກຄົນ ກາຍເປັນພະນັກງານປະຕິວັດຢ່າງແທ້ຈິງ. ພ້ອມກັນນັ້ນ ຕ້ອງລົງທຶນຮອນໃຫ້ການສຶກສາຢ່າງເໝາະສົມ, ເອົາໃຈໃສ່ເປັນສຳຄັນ ການກໍ່ສ້າງໂຮງຮຽນ, ການປະກອບອຸປະກອນການຮຽນ, ແກ້ໄຂຂອດລ້ຽງດູ ຢ່າງຮອບຄອບ, ຕ້ອງມີເຈ້ຍ, ສໍປຶ້ມຫລັກສູດໃຫ້ນັກຮຽນ, ໃຫ້ຄ່າເບ້ຍລ້ຽງຢ່າງເຕັມສ່ວນແກ່ນັກຮຽນແຕ່ຊັ້ນອຸດົມຂຶ້ນໄປ ແລະ ໃຫ້ແກ່ນັກຮຽນໃນໂຮງຮຽນຊາວໜຸ່ມຊົນຊາດ.

- ເພີ່ມທະວີ ແລະດັດແປງຂະແໜງອາຊີວະສຶກສາ ແລະມະຫາວິທະຍາໄລ ແລະເຮັດວຽກງານສົ່ງນັກຮຽນໄປຮຽນຕ່າງປະເທດໃຫ້ດີ. ກະຊວງສຶກສາຕ້ອງພ້ອມກັນກັບຄະນະກຳມະການແຜນຜັງແຫ່ງຊາດ, ກະຊວງຕ່າງໆທີ່ກ່ຽວຂ້ອງ ພິຈາລະນາ ເບິ່ງແຜນການ ແລະກຳນົດວາດວຽກການກໍ່ສ້າງບຳລຸງພະນັກງານກຳມະກອນວິຊາອາຊີບຄືນໃໝ່, ທັງນີ້ ເພື່ອຕອບສະໜອງ ໃຫ້ແກ່ໜ້າທີ່ ກໍ່ສ້າງ ແລະປົກປັກຮັກສາປະເທດຊາດ ໃນສະເພາະໜ້າ ແລະໃນຍາວນານ; ຕ້ອງມີການແບ່ງງານ ແບ່ງຂັ້ນຢ່າງລະອຽດລະຫວ່າງຂະແໜງການຕ່າງໆ,ລະຫວ່າງສູນກາງກັບແຂວງ. ສ່ວນໃດທີ່ພວກ

ເຮົາສາມາດເຮັດ ຢູ່ພາຍໃນປະເທດໄດ້ດ້ວຍຕົນເອງ ກໍ່ເດັດດ່ຽວເຮັດເອົາ, ສ່ວນໃດທີ່ຕ້ອງອາໄສບັນດາປະເທດສັງຄົມນິຍົມຊ່ວຍກໍ່ສ້າງໃຫ້ນັ້ນ ກໍ່ຕ້ອງແລກປ່ຽນຕົກລົງກັບເພື່ອນບ້ານຢ່າງຄັກແນ່.

ຕັ້ງໜ້າສູ້ຊົນ ເພື່ອປັບປຸງບູລະນະ ແລະ ເປີດກວ້າງໂຮງຮຽນ ມະຫາວິທະຍາໄລສ້າງຄູ ແລະ ໂຮງຮຽນມະຫາວິທະຍາໄລແພດສາດທີ່ມີຢູ່ແລ້ວ, ກໍ່ສ້າງໂຮງຮຽນມະຫາວິທະຍາໄລສັບພະວິຊາ ແລະສະຖາບັນການກະເສດ, ປ່າໄມ້ ແລະຊົນລະປະທານຂັ້ນສູງ, ທັງນີ້ ເພື່ອຮັບໃຊ້ການກໍ່ສ້າງ ພະນັກງານເຕັກນິກ ສຳລັບຕອບສະໜອງຄວາມຕ້ອງການຂອງແຜນການເສດຖະກິດໃນໄລຍະຕໍ່ໜ້ານີ້. ເອົາໃຈໃສ່ເປັນສຳຄັນເນື້ອໃນຂອງຫລັກສູດການຮຽນ, ການກໍ່ສ້າງຄູ, ການເຊີນເອົາຄູມາຈາກຕ່າງປະເທດ, ການປະກອບພາຫະນະຕ່າງໆສຳລັບການສິດສອນ, ການທົດລອງ, ປຶ້ມຕ່າງໆ ແລະຫລັກສູດການສຶກສາ ໆລໆ...

3 ກ່ຽວກັບວັດທະນະທຳ

ວັດທະນະທຳ ເປັນແນວຮົບໜຶ່ງທີ່ສຳຄັນ ໃນພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດ ສັງຄົມນິຍົມຂອງພວກເຮົາ, ອັນນີ້ ກໍ່ເປັນຄວາມຮຽກຮ້ອງຕ້ອງການອັນໜຶ່ງຂອງປະຊາຊົນ ບັນດາຊົນຊາດເຮົາ ໃນການກໍ່ສ້າງຊີວິດໃໝ່ທີ່ເບີກບານສົດໃສ.

ເພາະສະນັ້ນ ຄະນະພັກ ແລະອຳນາດການປົກຄອງ ຕ້ອງນຳພາແນວຮົບນີ້ໂດຍກົງ, ນຳໃຊ້ບັນດາພາຫະນະ ທາງວັດທະນະທຳໃຫ້ດີ ເພື່ອຮັບໃຊ້ພາລະກິດປະຕິວັດ, ຮັບໃຊ້ປະຊາຊົນ. ຢາກເຮັດໄດ້ແນວນັ້ນຕ້ອງ:

- ເຊີດຊູຄຸນນະພາບຂອງການດຳເນີນ ຊີວິດດ້ານວັດທະນະທຳ, ການດຳເນີນຊີວິດດ້ານສັງຄົມ ຂອງປະຊາຊົນ, ພະນັກງານນັກຮົບ, ກຳມະກອນ, ລັດຖະກອນໃຫ້ສູງຂຶ້ນຕື່ມອີກ, ທັງນີ້ ແນໃສ່ຮັບໃຊ້ການປະຕິບັດໜ້າທີ່ການເມືອງໃຫ້ໄດ້ດີຍິ່ງຂຶ້ນ ແລະຕອບສະໜອງຄວາມຕ້ອງການທາງດ້ານຈິດໃຈ ວັດທະນະທຳ ອັນນັບມື້ນັບສູງ ແລະຫລາຍຍິ່ງຂຶ້ນຂອງປະຊາຊົນບັນດາຊົນຊາດ, ຕໍ່ສູ້ເພື່ອຕິຖຸຍຮີດຄອງ ປະເພນີອັນບໍ່ດີຕ່າງໆ, ການເຊື່ອຖື ຢ່າງງົມງວາຍອັນເປັນຜົນຮ້າຍຕໍ່ການຜະລິດ, ຕໍ່ຊີວິດການເປັນຢູ່ ແລະຄວາມສາມັກຄີຂອງປະຊາຊົນ, ຕໍ່ສູ້ເພື່ອທັບມ້າງຖຸຍທຳນອງໂຄສະນາສົງຄາມຈິດຕະສາດ, ເລຫລ່ຽມຫລອກລວງຕ່າງໆຂອງສັດຕູ ແລະຂອງພວກຄົນບໍ່ດີ, ຕໍ່ສູ້ຕ້ານການແຊກຊຶມຂອງວັດທະນະທຳ ເສື່ອມຊາມປະຕິການທີ່ມາຈາກພາຍນອກ. ຕ້ອງອອກແຮງຄັດຈ້ອນ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມຂອງຊາດ, ຮູບການດຳເນີນຊີວິດມວນຊື່ນລື້ນເລີງອັນສົດໃສຂອງມະຫາຊົນ, ພ້ອມກັນນັ້ນກໍ່ຕ້ອງເອົາໃຈໃສ່ຮັບເອົາສິ່ງຍອດຍິ່ງ ທາງດ້ານວັດທະນະທຳ ຂອງໂລກເປັນຕົ້ນຂອງບັນດາປະເທດສັງຄົມນິຍົມອ້າຍນ້ອງ. ການຂະຫຍາຍວັດທະນະທຳ ຕ້ອງໄປຕາມທິດທີ່ວ່າ ທັງມີລັກສະນະ ແຜ່ຂະຫຍາຍຢ່າງກວ້າງຂວາງທົ່ວເຖິງ ທັງເຊີດຊູຄຸນນະພາບໃຫ້ສູງຂຶ້ນ, ແກ້ໄຂວິທີເຮັດຕາມແບບທຳມະຊາດນິຍົມ, ແບບຫຍາບຊ້າໃຫ້ໄດ້ເປັນລຳດັບໄປ, ສືບຕໍ່ການຕໍ່ສູ້ ເພື່ອກວາດລ້າງຮ່ອງຮອຍເສດເຫລືອ ຂອງວັດທະນະທຳເສື່ອມຊາມປະຕິການຂອງລັດທິລ່າເມືອງຂຶ້ນແບບໃໝ່ແລະສັກດີນາ, ກໍ່ສ້າງແບບແຜນດຳລົງຊີວິດທີ່ດູໝັ້ນພາກພູມ, ກະ

ທັກຣັກງ່າຍກາຍ, ເບີກບານສົດໃສ, ສະຫາມິພາບ, ເຄົາຣົບກັນ, ມີຄວາມຣັບຜິດຊອບຕໍ່ກັນ, ຄົນເພື່ອໝູ່ຄົນ, ໝູ່ຄົນເພື່ອຄົນ.

ຂະແໜງການຖະແຫລງຂ່າວ ວັດທະນະທຳແຕ່ສູນກາງ ລົງເຖິງແຂວງ, ເມືອງ ຕ້ອງກຳແໜ້ນ ແລະນຳໃຊ້ບັນດາພາຫະນະທີ່ເຣັດວຽກງານ ຖະແຫລງຂ່າວ ວັດທະນະທຳ ໃຫ້ດີຂຶ້ນກ່ວາເກົ່າ ເຊັ່ນ : ວິທະຍຸກະຈາຍສຽງ, ວິທະຍຸໂທລະພາບ, ໜັງສືພິມໃບຂ່າວ, ການພິມຈຳໜ່າຍ, ກອງສິລະປະວັນນະຄະດີ, ຣູບເງົາ ຯລຯ...ເຣັດໃຫ້ພາຫະນະຕ່າງໆເຫລົ່ານີ້ສາມາດຣັບໃຊ້ປະຊາຊົນໄດ້ເປັນຢ່າງດີ ແລະທົ່ວເຖິງ ເປັນຕົ້ນແມ່ນຣັບໃຊ້ ການອອກແຮງງານຜະລິດ, ການສູ້ຣົບ ແລະເຂດຊົນຊາດ.

ຕ້ອງຈັດຕັ້ງການຄົ້ນຄວ້າເພີ່ມເຕີມ ພາສາ ແລະ ຄຳສັບທີ່ຈຳເປັນ ເພື່ອຕອບສະໜອງຄວາມຕ້ອງການ ຂອງການຍົກລະດັບວັດທະນະທຳ, ວິທະຍາສາດເຕັກນິກ ຂອງພະນັກງານ, ນັກຣົບ ແລະ ປະຊາຊົນໃຫ້ສູງຂຶ້ນ.

ຕ້ອງກໍ່ສ້າງສະຖານີວິທະຍຸກະຈາຍສຽງ ຂະໜາດ ໑໕໐-ກິໂລວັດດ້ວຍການຊ່ວຍເຫລືອຂອງສະຫະພາບໂຊວຽດໃຫ້ສຳເລັດ, ປັບປຸງສະຖານີວິທະຍຸກະຈາຍສຽງແຫ່ງຕ່າງໆ ທີ່ມີຢູ່ແລ້ວ, ກໍ່ສ້າງສະຖານີ ວິທະຍຸໂທລະພາບ, ເປີດກວ້າງລະບົບໂທລະໂຄ່ງ ໃຫ້ຣາກຖານຕ່າງໆທີ່ສຳຄັນຕື່ມອີກ ແລະສະໜອງວິທະຍຸຣັບຟັງໃຫ້ແກ່ບ້ານທີ່ຢູ່ຫ່າງໄກສອກຫລີກ. ເອົາໃຈໃສ່ນຳພາການຈຳໜ່າຍໜັງສືພິມ, ໃບຂ່າວໃຫ້ແໜ້ນໜາ ແລະຕ້ອງຣັບປະກັນການຈຳໜ່າຍໃຫ້ລົງຣອດຣາກຖານ. ເປີດກ້ວາງ ຕາໜ່າງສາຍຣູບເງົາ ອອກ,

ເຮັດໃຫ້ເມືອງຫນຶ່ງ ຢ່າງຫນ້ອຍທີ່ສຸດກໍ່ມີຫນ່ວຍສາຍຮູບເງົາເຄື່ອນທີ່ຫນ່ວຍຫນຶ່ງ ແລະຕ້ອງນຳພາຫນ່ວຍສາຍຮູບເງົາ ຢ່າງແຫນ້ນຫນາເພື່ອຮັບໃຊ້ປະຊາຊົນບັນດາຊົນຊາດ. ຄຸ້ມຄອງຢ່າງແຫນ້ນຫນາຜະລິດຕະພັນການພິມຕ່າງໆ, ປື້ມຫນັງສືພິມ ຟີມຮູບເງົາ ຮູບພາບ ທີ່ເອົາມາຈາກຕ່າງປະເທດ. ຕ້ອງມີການກວດສອບຢ່າງ ລະອຽດເນື້ອໃນລາຍການສະແດງຂອງຄະນະສິລະປະວັນນະຄະດີ ຂອງລັດຂອງປະຊາຊົນ ກ່ອນອະນຸຍາດໃຫ້ນຳອອກສະແດງ, ເນື້ອໃນຂອງການສະແດງຕ້ອງມີລັກສະນະສຶກສາອົບຮົມ, ດູດດື່ມ ແລະ ມະຫາຊົນຮັບເອົາໄດ້ງ່າຍ ຕ້ອງປັບປຸງ ແລະເປີດກວ້າງໂຮງພິມ ຂອງສູນກາງ ແລະກໍ່ສ້າງປັບປຸງຮາກຖານການພິມໃຫ້ແຂວງຕ່າງໆເພື່ອຮັບໃຊ້ວຽກງານຖະແຫລງຂ່າວວັດທະນະທຳ ແລະຮັບໃຊ້ວຽກງານອື່ນໆຂອງພັກ, ຂອງລັດ ແລະວຽກງານສຶກສາ.

ຄົ້ນຄວ້າ ແລະນຳໃຊ້ລະບອບການວິສາຫະກິດ ສຳລັບ ກອງສິລະປະກອນ, ກາຍຍະສິນ, ຮູບເງົາຂອງລັດ, ເຮັດໃຫ້ກອງເຫລົ່ານີ້ສາມາດສ້າງຄັງຂອງຕົນຂຶ້ນໄດ້ເທື່ອລະກ້າວ ເພື່ອປະກອບໃຫ້ແກ່ຕົນເອງ, ເພື່ອກໍ່ສ້າງ ແລະ ເພີ່ມຮາກຖານວັດຖຸ ທີ່ຈຳເປັນເອົາເອງສ່ວນຫນຶ່ງ ແລະ ມີຄັງ ສຳລັບປະຕິບັດ ລະບອບເງິນເດືອນ, ນະໂຍບາຍໃຫ້ຄ່າແຮງງານແກ່ນັກສິລະປິນ.

ຕ້ອງຖືເປັນສຳຄັນຍິ່ງການນຳພາຂະບວນການວັດທະນະ ທຳມະຫາຊົນ, ສົ່ງເສີມຂະຫຍາຍທຸກຮູບການມ່ວນຊື່ນລື່ນເລີງທີ່ສົດໃສແລະທຶນຮອນທາງສິລະປະວັນນະຄະດີຂອງປະຊາຊົນບັນດາຊົນຊາດ

ຕ້ອງອອກແຮງປັບປຸງບູລະນະ ຫໍພິພິດທະພັນທີ່ມີຢູ່ແລ້ວ, ກໍ່

ສ້າງ ຫໍມູນເຊື້ອປະຕິວັດ ຢູ່ໃນແຕ່ລະເຂດ, ແຕ່ລະແຂວງ; ເປີດກວ້າງຫ້ອງສະໝຸດຢູ່ໃນສຳນັກງານອົງການ, ໃນວິສາຫະກິດ,ສະຫະກອນ, ກົມກອງທະຫານ, ກົມກອງປ້ອງກັນຄວາມສະຫງົບ;ຮີບຮ້ອນ ກໍ່ສ້າງຫໍສະໝຸດແຫ່ງຊາດ ຯລຯ...ທັງນີ້ ເພື່ອປະກອບສ່ວນເຂົ້າໃນການເຊີດຊູລະດັບວັດທະນະທຳ ແລະສຶກສາອົບຮົບສະຕິປະເທດຊາດເປັນເອກະພາບ, ເຊີດຊູຈິດໃຈຮັກຊາດ,ຮັກສັງຄົມນິຍົມ ແລະຈິດໃຈສາກົນອັນຖືກຕ້ອງ ຂອງປະຊາຊົນບັນດາຊົນຊາດໃຫ້ສູງຂຶ້ນ.

ບັນຫາສຳຄັນກ່ວາໝູ່ແມ່ນຂະແໜງຖະແຫລງຂ່າວວັດທະນະທຳ ຕ້ອງມີແຜນກຳນົດແຜນການກ່ຽວກັບການກໍ່ສ້າງພະນັກງານສຳລັບຮັບໃຊ້ພາຍໃນຂະແໜງການ ແລະຮັບໃຊ້ໃນຕານ່າງຂອງ ຂະແໜງການໂດຍທັນທີ. ຕ້ອງເອົາໃຈໃສ່ການໄຂໂຮງຮຽນ ກໍ່ສ້າງພະນັກງານ ວັດທະນະທຳ ວັນນະຄະດີນະຫາຊົນ. ທັງນີ້ ເພື່ອຈັດວາງສັບຊ້ອນໃຫ້ເມືອງ ແລະຫົວໜ່ວຍຮາກຖານຕ່າງໆ. ຮີບຮ້ອນປັບປຸງ ແລະຂະຫຍາຍຕານ່າງໂຄສະນາ ດ້ວຍປາກເປົ່າ, ພະນັກງານປາຖະກະຖາ ແລະຖັນແຖວພະນັກງານສື່ຂ່າວຢູ່ໃນຮາກ ຖານ ແລະ ໃນຂະແໜງການຕ່າງໆ. ປັບປຸງຄະນະສິນລະປະອາຊີບ ທີ່ພອນມີຢູ່ (ກອງສິລະປະກອນ, ການຍະສິນ,ລຳເລື່ອງ). ໃນສະເພາະໜ້ານີ້ ຕ້ອງເອົາໃຈໃສ່ເຊີດຊູຄຸນນະພາບຂອງຖັນແຖວຜູ້ປະດິດແຕ່ງ, ຜູ້ສະແດງ ແລະມີນະໂຍບາຍຕໍ່ພະນັກງານ,ກຳມະກອນພາລະກອນ ໃນຂະແໜງການ ເປັນຕົ້ນແມ່ນນັກປະພັນ, ນັກສິລະປິນອາຊີບ ແລະສະໝັກຫລິ້ນ.

### *4 ກ່ຽວກັບສາທາລະນະສຸກ*

ຕ້ອງເຮັດໃຫ້ຂະແໜງການສາທາລະນະສຸກ ມີການຫັນປ່ຽນ ຢ່າງແຂງແຮງ ເພື່ອໃຫ້ສາມາດປະຕິບັດໜ້າທີ່ເບິ່ງແຍງສຸຂະພາບ ຂອງປວງຊົນ ເຊິ່ງກ່ອນອື່ນໝົດ ແມ່ນເບິ່ງແຍງສຸຂະພາບ ໃຫ້ແກ່ ຊາວຜູ້ອອກແຮງງານຜະລິດ, ສູ້ຮົບ, ປົກປັກຮັກສາແມ່ ແລະເດັກ ຂະຫຍາຍເຊື້ອຊາດ, ກຳຈັດປັດເປົ່າ ພະຍາດຕ່າງໆ ທີ່ພວມທຳ ລາຍສຸຂະພາບ ຂອງປະຊາຊົນເຮົາ ໃຫ້ໄດ້ເທື່ອລະກ້າວ ແລະຈົນ ເຖິງກົກເຖິງຮາກ ເຊັ່ນ: ພະຍາດໄຂ້ປ່າ, ພະຍາດລຳໄສ້,ປອດ ແຫ້ງ. ປະກອບສ່ວນເຂົ້າ ໃນການລົບລ້າງຮີດຄອງປະເພນີ ແລະ ການເຊື່ອຖືງົມງວາຍທີ່ເປັນພິນຮ້າຍຕໍ່ສຸຂະພາບ ແລະການຜະລິດ- ຂອງປະຊາຊົນ. ຕ້ອງເອົາໃຈໃສ່ລົງໄປສູ່ບັນດາບໍລິເວນຊົນຊາດ. ຢາກເຮັດໄດ້ແນວນັ້ນຕ້ອງ :

ເປີດກວ້າງຕານ່າງສາທາລະນະສຸກ ເປັນຕົ້ນແມ່ນ ຕານ່າງ ອະນາໄມກັນພະຍາດໃຫ້ລົງຮອດຮາກຖານ, ຊຸກຍູ້ຂະບວນການອະ ນາໄມສາມສະອາດ ແລະກໍ່ສ້າງລະບຽບແບບແຜນແຫ່ງການດຳລົງ ຊີວິດແບບໃໝ່, ເອົາໃຈໃສ່ເປັນສຳຄັນ ໃນເຂດທີ່ມີປະຊາຊົນອາ ໄສຢູ່ຢ່າງໜາແໜ້ນ (ຕົວເມືອງ,ສະຖານທີ່ກໍ່ສ້າງ, ຕະຫລາດ, ບ່ອນຈອດລົດ, ທ່າເຮືອ) ແລະໃນເຂດຊົນຊາດ ທີ່ຢູ່ຫ່າງໄກສອກ ຫລີກ.

ດັດແປງຄຸນນະພາບການປິ່ນປົວພະຍາດໃຫ້ປະຊາຊົນໂດຍສຸມ ໃສ່ພະຍາດຕ່າງໆທີ່ເປັນອັນແຜ່ພາຍໃນໝູ່ປະຊາຊົນຄືທີ່ໄດ້ກ່າວມາ ເທິງນັ້ນ. ເຜີຍແຜ່ຄວາມຮູ້ ແລະບົດຮຽນໃນການ ປິ່ນປົວພະຍາດ

ເຫລົ່ານີ້. ສະຫລຸບບົດຮຽນກ່ຽວກັບການກັນ ແລະຕ້ານພະຍາດໄຂ້ປ່າທີ່ຈຳປາສັກໄດ້ເຮັດມາແລ້ວເພື່ອເປີດກວ້າງອອກໃນທົ່ວປະເທດໃນຊຸມປີຕໍ່ໜ້ານີ້.

ຕ້ອງສຶກສາອົບຮົມແນວທາງສາທາລະນະສຸກ ຂອງພັກໃຫ້ຖັນແຖວພະນັກງານສາທາລະນະສຸກຢ່າງເປັນລະບົບ, ເອົາໃຈໃສ່ເປັນສຳຄັນການເຊີດຊູຄຸນນະພາບ ດ້ານວິຊາອາຊີບ ແລະ ຄຸນນະພາບດ້ານຮັບໃຊ້ຂອງຖັນແຖວພະນັກງານສາທາລະນະສຸກ, ກໍ່ສ້າງແພດໝໍໃຫ້ເປັນດັ່ງຜູ້ເປັນແມ່ໃຈດີ. ບຳລຸງຄວາມຮູ້ກ່ຽວກັບວິຊາອາຊີບເປັນຕົ້ນແມ່ນຄວາມຮູ້ທີ່ຈຳເປັນສຳລັບການກັນ ແລະປິ່ນປົວພະຍາດທີ່ແຜ່ຫລາຍຢູ່ໃນໝູ່ປະຊາຊົນ ແລະບຳລຸງບາງຄວາມຮູ້ ທີ່ກ້າວໜ້າຂອງສາທາລະນະສຸກໃນໂລກໃຫ້ແກ່ພະນັກງານສາທາລະນະສຸກ.

ຕ້ອງເອົາໃຈໃສ່ສືບທອດ ແລະເສີມຂະຫຍາຍມູນເຊື້ອ ອັນດີງາມທາງດ້ານການປິ່ນປົວພະຍາດ ດ້ວຍຢາພື້ນເມືອງເຊິ່ງເປັນທ່າແຮງອັນໜຶ່ງທາງດ້ານສາທາລະນະສຸກປະຊາຊົນ ຂອງພວກເຮົາ. ສົມທົບຕຳລາຢາພື້ນເມືອງກັບວິທະຍາສາດ ດ້ານສາທາລະນະສຸກທີ່ກ້າວໜ້າ ເພື່ອຍົກລະດັບການປິ່ນປົວ ດ້ວຍຢາພື້ນເມືອງໃຫ້ສູງຂຶ້ນເທື່ອລະກ້າວຕາມຫລັກວິທະຍາສາດ, ຂະຫຍາຍການປູກຕົ້ນໄມ້ ທີ່ເປັນຢາ ແລະເກັບກູ້ເອົາຮາກຢາອັນປະເສີດຢູ່ທ້ອງຖິ່ນຕ່າງໆ. ຄົ້ນຄວ້າການເອົາວິທີປິ່ນປົວພະຍາດດ້ວຍຕຳລາຢາພື້ນເມືອງສົມທົບກັບຢາຫລວງເຂົ້າໃນການປິ່ນປົວພະຍາດຢູ່ໃນໂຮງໝໍຕ່າງໆຂອງພວກເຮົາ.

ປັບປຸງໂຮງໝໍໃນທຸກດ້ານ, ດັດແປງວຽກງານຄຸ້ມຄອງແລະ

ຮັບໃຊ້ຢູ່ໃນໂຮງໝໍ, ເອົາໃຈໃສ່ແກ້ໄຂບັນດາພື້ນຖານວັດຖຸສຳລັບການປິ່ນປົວ, ຢູກຢາ, ການກິນຢູ່ ແລະ ທ່າທີຮັບໃຊ້. ຕ້ອງສູ້ຊົນເພື່ອປັບປຸງບູລະນະໂຮງໝໍແຂວງ, ເຮັດໃຫ້ແຕ່ລະເມືອງ ມີໂຮງໝໍແຫ່ງໜຶ່ງເຊິ່ງມີຂະແໜງພາຍໃນ, ພາຍນອກ, ຂະແໜງປະສູດລູກ ແລະເດັກ, ມີພາກສ່ວນຊ່ວຍຊູ ກະທັນຫັນ ເພື່ອຕອບສະໜອງຄວາມຕ້ອງການຂອງປະຊາຊົນ ຢ່າງທັນການ; ຂະຫຍາຍ, ໂຮງໝໍຕາແສງ ແລະ ເຮັດໃຫ້ໝູ່ບ້ານມີຖົງຢາປະຈຳບ້ານ. ທົວໜ່ວຍການຜະລິດ ແລະ ທຸລະກິດ, ໂຮງຮຽນໃຫຍ່ຕ້ອງມີໜ່ວຍສາທາລະນະສຸກຮັບໃຊ້ ຯລຯ...

ຕັ້ງໜ້າຊຸກຍູ້ການສ້າງຕັ້ງສະຖາບັນອະນາໄມກັນພະຍຸ, ສະຖາບັນໄຂ້ປ່າ ຯລຯ...ທັງນີ້ ເພື່ອກັນແລະຕ້ານພະຍາດທີ່ແຜ່ພາຍໃນໝູ່ປະຊາຊົນ. ເອົາໃຈໃສ່ຈັດຕັ້ງການສຳຫລວດພື້ນຖານ ກ່ຽວກັບສຸຂະພາບ, ສິລະສາດຂອງປະຊາຊົນ ໃນບໍລິເວນຕ່າງໆ, ທັງນີ້ເພື່ອຮັບໃຊ້ການກັນ ແລະການປິ່ນປົວພະຍາດໄດ້ດີຍິ່ງຂຶ້ນ.

ປັບປຸງວຽກງານຄຸ້ມຄອງ ແລະ ແຈກຢາຍຢູກຢາໃຫ້ດີ, ຕັ້ງໜ້າສ້າງເງື່ອນໄຂ ເພື່ອເປີດກວ້າງວຽກງານປຸງຢາ ຢູ່ໃນແຂວງຕ່າງໆ ແລະຢູ່ສູນກາງ ເຊິ່ງຕົ້ນຕໍແມ່ນປຸງດ້ວຍໂອສົດຕະພັນ ທີ່ມີຢູ່ກັບທ້ອງຖິ່ນ. ປັບປຸງກໍ່ສ້າງໂຮງງານປຸງຢາຢູ່ສູນກາງ ແລະໜ່ວຍປຸງຢາຢູ່ແຂວງ, ເມືອງ, ສ້າງຕານ່າງການຢາຂອງລັດໃຫ້ຈົນໄດ້. ຂະແໜງສາທາລະນະສຸກຕ້ອງບົນຕົວຂຶ້ນກຳສິດຜູກຂາດໃນການສັ່ງຢາມາຈາກຕ່າງປະເທດ, ການປຸງຢາ ແລະແຈກຢາຍຢາ ໃນໝູ່ປະຊາຊົນ.

- ອອກແຮງກໍ່ສ້າງພະນັກງານ ສາທາລະນະສຸກປະຊາຊົນ, ເອົາໃຈໃສ່ສູ້ຊົນເຮັດແນວໃດໃນບໍ່ທໍ່ໃດປີຕໍ່ຫນ້ານີ້ໃຫ້ສາມາດມີແພດຫມໍຢ່າງພຽງພໍ (ຕົ້ນຕໍແມ່ນແພດຊັ້ນຕົ້ນ ແລະຊັ້ນກາງ). ຍາດແຍ່ງເອົາການຊ່ວຍເຫລືອຂອງບັນດາປະເທດສັງຄົມນິຍົມອ້າຍນ້ອງເພື່ອກໍ່ສ້າງພະນັກງານຊັ້ນສູງ ແລະກໍ່ສ້າງບາງຂະແຫນງວິຊາສະເພາະທີ່ຈຳເປັນ.

## IV/ ບັນດາວິທີການໃຫຍ່ເພື່ອຮັບປະກັນການປະຕິບັດແຜນການ 5 ປີ ຄັ້ງທີນຶ່ງ ໃຫ້ປະກົດເປັນຈິງ

ວິທີການພື້ນຖານ ແມ່ນກໍ່ສ້າງ ລະບົບກົງຈັກເສດຖະກິດ ທີ່ມີຄວາມສັກສິດ.

ພັກ ແລະລັດເຮົາໄດ້ກໍ່ສ້າງລະບົບກົງຈັກເສດຖະກິດ ແລະກໍ່ສ້າງ ໂຄງປະກອບຄຸ້ມຄອງເສດຖະກິດ. ພວກເຮົາໄດ້ປະກາດໃຊ້ນະໂຍບາຍ, ລະບອບການຄຸ້ມຄອງເສດຖະກິດ ຫລາຍອັນ. ໂຄງປະກອບຄຸ້ມຄອງເສດຖະກິດ ກໍ່ໄດ້ເປັນຮູບເປັນຮ່າງຂຶ້ນ ແຕ່ສະພາລັດຖະມົນຕີ, ກະຊວງຕ່າງໆ, ຄະນະກຳມະການປົກຄອງຂັ້ນຕ່າງໆ ຈົນຮອດ ບັນດາຫົວຫນ່ວຍເສດຖະກິດຮາກຖານ. ແຕ່ວ່າລະບົບກົງຈັກດັ່ງກ່າວຍັງບໍ່ທັນສອດຄ່ອງ. ດັ່ງນັ້ນ ກອງປະຊຸມສຸມກາງ ຄັ້ງທີກ ຈຶ່ງໄດ້ຕົກລົງລົບລ້າງລະບົບກົງຈັກບໍລິການເບີກຈ່າຍ ແລະ ຫັນມາປະຕິບັດລະບົບກົງຈັກທີ່ປະສານສົມທົບລະຫວ່າງແຜນການກັບຕະຫລາດ.

ການທີ່ຕ້ອງປະຕິບັດລະບົບກົງຈັກສົມທົບລະຫວ່າງ ແຜນການກັບຕະຫລາດນັ້ນ ກໍ່ຍ້ອນວ່າ ພາຍໃຕ້ລະບອບສັງຄົມນິຍົມ ມັນມີການ

ເຄື່ອນໄຫວຂອງກົດເກນຂະຫຍາຍເສດຖະກິດແຫ່ງຊາດຢ່າງມີແຜນ ການ ແລະສົມສ່ວນ, ພ້ອມກັນນັ້ນ ກໍ່ຍັງມີການເຄື່ອນໄຫວຂອງກົດ ເກນຄຸນຄ່າເຊິ່ງຄົງຕົວຢູ່ບົນພື້ນຖານແຫ່ງການພົວພັນ ທາງດ້ານສິນ ຄ້າ-ເງິນຕາຄົງຕົວຢູ່, ສະນັ້ນ ລັດຜະເດັດການກຳມາຊີບຈຶ່ງຕ້ອງ ສົມທົບການໝູນໃຊ້ກົດເກນທັງສອງປະເພດນັ້ນ ພ້ອມກັບບັນດາກົດ ເກນເສດຖະກິດສັງຄົມນິຍົມອື່ນໆ ທັງຄຸ້ມຄອງເສດຖະກິດຕາມແຜນ ການ, ທັງຄຸ້ມຄອງເສດຖະກິດ ດ້ວຍການໃຊ້ບັນດາໄມ້ວັດເສດຖະ ກິດ ທີ່ຍັງຄົງຕົວຢູ່ບົນພື້ນຖານ ຂອງກົດເກນຄຸນຄ່າ, ການພົວພັນ ທາງດ້ານຕະຫລາດ(ການພົວພັນທາງດ້ານສິນຄ້າ-ເງິນຕາ); ຄຸ້ມ ຄອງດ້ວຍບັນດານະໂຍບາຍ, ລະບອບການຄິ ເງິນເດືອນ, ລາຍ ຮັບລາຍຈ່າຍການເງິນ, ລາຄາ, ການແຈກຢາຍຜົນກຳໄລ,ການ ຊື້ການຂາຍ, ການຂາອອກຂາເຂົ້າ, ການສິນເຊື່ອ,ການຄຸ້ມຄອງ ດຸ່ນດຽງ ແລະໄດ້ຜົນກຳໄລ.

ໃນການປະຕິບັດລະບົບກົງຈັກສົມທົບແຜນການກັບຕະຫລາດຢູ່ ໃນປະເທດເຮົານັ້ນ ແມ່ນຕ້ອງພິຈາລະນາເຖິງເງື່ອນໄຂ ຂອງປະ ເທດເຮົາທີ່ຍັງຢູ່ໃນບາດກ້າວເດີນທົວທີຂອງສະໄໝຂ້າມຜ່ານເຊິ່ງ ການພົວພັນແຫ່ງການຜະລິດສັງຄົມນິຍົມຫາກໍ່ໄດ້ຮັບການສ້າງຕັ້ງຂຶ້ນ ກົດເກນຂະຫຍາຍເສດຖະກິດແຫ່ງຊາດ ຢ່າງມີແຜນການ ແລະສົມ ສ່ວນໄດ້ເກີດມີຄຸນປະໂຫຍດແລ້ວ ແຕ່ຍັງບໍ່ທັນແຂງແຮງເທື່ອ. ໃນ ເງື່ອນໄຂເຊັ່ນນັ້ນ ການພົວພັນທາງດ້ານຕະຫລາດແມ່ນມີຂອບເຂດ ອັນກວ້າງຂວາງ ແລະກົດເກນຄຸນຄ່າກໍ່ມີຄຸນປະໂຫຍດອັນແຂງແຮງ ຢູ່. ດ້ວຍເຫດນັ້ນ ໃນການຄຸ້ມຄອງເສດຖະກິດ ບັນດານະໂຍບາຍ

ການເງິນ, ສິນເຊື່ອ, ເງິນຕາ , ລາຄາ, ການຄ້າ, ການຂາ
ອອກຂາເຂົ້າ...ຈຶ່ງມີບົດບາດເປັນໄມ້ງັດເສດຖະກິດທີ່ແຂງແຮງທີ່
ສຸດ, ຕ້ອງຊ່າງໝູນໃຊ້ມັນຢ່າງຖືກຕ້ອງ ແລະມີໄຫວພິກ.

*ກ. ກ່ຽວກັບການຫັນເສດຖະກິດແຫ່ງຊາດ ເປັນແຜນການ*

ບົນພື້ນຖານທີ່ຜະເດັດການກຳມາຊີບໄດ້ຮັບການສ້າງຕັ້ງຂຶ້ນ. ແລະບົນພື້ນຖານ ທີ່ລະບອບກຳມະສິດລວມກ່ຽວກັບພາຫະນະ ແຫ່ງການຜະລິດໄດ້ຮັບການກໍ່ຕັ້ງຂຶ້ນຢູ່ໃນບັນດາຂະແໜງການ ເສດຖະກິດແຫ່ງຊາດ ທີ່ເປັນກະແຈແລວນັ້ນ ປະເທດເຮົາມີເງື່ອນໄຂ ຫັນເສດຖະກິດແຫ່ງຊາດເປັນແຜນການ. ມີເງື່ອນໄຂປະຕິບັດ ລະບົບກົງຈັກເສດຖະກິດສັງຄົມນິຍົມ, ສົມທົບລະຫວ່າງແຜນການ ກັບຕະຫລາດ ໂດຍເອົາແຜນການເປັນໃຈກາງ ແລະ ນຳໃຊ້ການພົວພັນທາງດ້ານຕະຫລາດ, ການພົວພັນ ທາງດ້ານສິນຄ້າ-ເງິນຕາເປັນໄມ້ງັດ ເພື່ອຊຸກຍູ້ເສດຖະກິດແຫ່ງຊາດໃຫ້ຂະຫຍາຍຕົວຕາມຄວາມຕ້ອງການຂອງແຜນການແຫ່ງລັດ.

ແຜນການຂະຫຍາຍເສດຖະກິດແຫ່ງຊາດແມ່ນມີຄວາມສຳຄັນທີ່ສຸດ, ມັນເປັນສິ່ງສະແດງອອກເຊິ່ງແນວທາງເສດຖະກິດຂອງພັກໃນແຕລະສະໄໝຢ່າງລະອຽດຕົວຈິງ. ຄະນະພັກແລະອຳນາດການປົກຄອງຂັ້ນຕ່າງໆຕ້ອງຮັບຜິດຊອບໃນການວາງ ແລະປະຕິບັດແຜນການຂອງຂັ້ນຕົ້ນ ແນໃສ່ປະຕິບັດໜ້າທີ່ກໍ່ສ້າງສັງຄົມນິຍົມ ຢູ່ໃນປະເທດເຮົາໃຫ້ປະກົດເປັນຈິງເທື່ອລະກ້າວ. ນີ້ແມ່ນລະບຽບວິໃນຂອງພັກແລະແມ່ນກົດໝາຍຂອງລັດ. ແຜນການຕ້ອງມີລັກສະນະພັກ, ລັກສະນະວິທະຍາສາດ, ລັກສະນະມະຫາຊົນ, ລັກສະນະນຳໜ້າ ແລະ

ເປັນຈິງ, ລັກສະນະກົດຄຳສັ່ງ. ມັນຕ້ອງໄດ້ຮັບການສ້າງຂຶ້ນໂດຍອີງໃສ່ແນວທາງນະໂຍບາຍ, ມະຕິຄຳສັ່ງຂອງພັກ, ອີງໃສ່ຄວາມຕ້ອງການຂອງບັນດາກົດເກນເສດຖະກິດພາວະວິໄສເຊິ່ງເກີດມີຄຸນປະໂຫຍດໃນເງື່ອນໄຂຕົວຈິງຂອງປະເທດເຮົານັ້ນ ແລະອີງໃສ່ການໄຈ້ແຍກສະພາບການ ສຳເລັດແຜນການສະໄໝກ່ອນ ແລະບັນດາຈຸດພິເສດທາງດ້ານເສດຖະກິດ,ສັງຄົມຂອງສະໄໝແຜນການນັ້ນ; ແຜນການຕ້ອງໃຫ້ມະຫາຊົນເປັນຜູ້ສ້າງຂຶ້ນ ແລະເປັນຜູ້ປະຕິບັດ , ດ້ວຍເຫດນັ້ນ ຈຶ່ງຕ້ອງເອົາໃຈໃສ່ເປັນສຳຄັນການສ້າງແຜນ ການແຕ່ຂັ້ນລຸ່ມ ແຕ່ຂັ້ນພື້ນຖານຂຶ້ນມາ ໂດຍມີການແນະນຳຂອງຂັ້ນເທິງ. ຖ້າຫາກວ່າ ມີແຕ່ຄະນະກຳມະການແຜນຜັງແຫ່ງຊາດ ເປັນຜູ້ສ້າງແຜນການແຕ່ຜູ້ດຽວ, ສ່ວນກະຊວງ, ແຂວງ,ວິສາຫະກິດຕ່າງ ໆ ພັດບໍ່ສ້າງແຜນການ, ອັນນັ້ນ ເປັນການບໍ່ດີ.

ການກໍ່ສ້າງສັງຄົມນິຍົມເປັນພາລະກິດອັນໃຫຍ່ຍິ່ງ, ຕ້ອງໃຊ້ເວລາອັນແນ່ນອນຈຶ່ງປະຕິບັດໃຫ້ປາກົດເປັນຈິງໄດ້. ດ້ວຍເຫດນັ້ນ, ບັນດາປະເທດສັງຄົມນິຍົມຈຶ່ງມີແຜນການຂະຫຍາຍເສດຖະກິດແຫ່ງຊາດໄລຍະຍາວ ( ໕ ປີ-໑໐ ປີ ).

ປະເທດເຮົາພວມຢູ່ໃນບາດກ້າວເດີນທົວທີຂອງສະໄໝຂ້າມຜ່ານ, ການພົວພັນແຫ່ງການຜະລິດ ແລະກຳລັງແຫ່ງການຜະລິດມີການປ່ຽນແປງຢ່າງບໍ່ຢຸດຢັ້ງ, ສ່ວນພວກເຮົາຊ້ຳພັດບໍ່ທັນມີບົດຮຽນໃນການຄຸ້ມຄອງເສດຖະກິດ, ດ້ວຍເຫດນັ້ນຈຶ່ງບໍ່ພຽງແຕ່ຕ້ອງເອົາໃຈໃສ່ສ້າງ ແລະປະຕິບັດແຜນການ ໕ ປີເທົ່ານັ້ນ, ຫາກຍັງຕ້ອງຖືການສ້າງ ແລະປະຕິບັດແຜນການປະຈຳປີ ເປັນສິ່ງສຳຄັນຍິ່ງອີກ

ດ້ວຍ.

ແຜນການເປັນຂອດໃຈກາງ ຂອງລະບົບກົງຈັກເສດຖະກິດ. ດ້ວຍເຫດນັ້ນຢາກຄຸ້ມຄອງເສດຖະກິດໄດ້ເປັນຢ່າງດີ ກ່ອນອື່ນໝົດຕ້ອງເອົາໃຈໃສ່ສ້າງແຜນການໃຫ້ດີອີຫລີ.

ພວກເຮົາຕ້ອງວາງແຜນການ ໕ ປີແຫ່ງການຂະຫຍາຍເສດຖະກິດແຫ່ງຊາດຄັ້ງທີ່ໜຶ່ງ ແລະຂຶ້ນແຜນການປະຈຳປີ, ກະທັ້ງເຖິງຂຶ້ນແຜນການເປັນແຕ່ລະງວດອີກດ້ວຍ. ກະຊວງ, ຄະນະ ກຳມະການປົກຄອງແຂວງ, ບັນດາຫົວໜ່ວຍເສດຖະກິດຮາກຖານ (ໂຮງງານ, ບໍລິສັດ) ກໍ່ຕ້ອງຂຶ້ນແຜນການເຊັ່ນດຽວກັນ. ຄະນະກຳມະການແຜນຜັງແຫ່ງຊາດຕ້ອງລວບລວມແຜນການເຫລົ່ານັ້ນ ເພື່ອສະເໜີໃຫ້ສະພາລັດຖະມົນຕີ ພິຈາລະນາ ແລະສະເໜີໃຫ້ສະພາປະຊາຊົນສູງສຸດອະນຸມັດ. ຕໍ່ຈາກນັ້ນ ລັດຖະມົນຕີ ແລະຄະນະກຳມະການປົກຄອງຈຶ່ງອີງໃສ່ອັນນັ້ນເພື່ອພິຈາລະນາໃຫ້ອະນຸມັດແຜນການຜະລິດ, ເຕັກນິກ ແລະການເງິນຂອງໂຮງງານ ແລະບໍລິສັດຕ່າງໆ ທື້ຂນກັບສິດຄຸ້ມຄອງຂອງຕົນ.

ໃນເງື່ອນໄຂພາວະວິໄສ ແລະອັດຕະວິໄສຂອງພວກເຮົາໃນປະຈຸບັນ ເຊິ່ງການພົວພັນແຫ່ງການຜະລິດສັງຄົມນິຍົມ ແລະກຳລັງແຫ່ງການຜະລິດ ຍັງບໍ່ທັນແຂງແຮງ, ລະດັບຄວາມຮູ້ ແລະລະດັບໝູນໃຊ້ ບັນດາກົດເກນເສດຖະກິດ ຂອງພວກເຮົາ ເວົ້າລວມຍັງອ່ອນຢູ່ນັ້ນ ແຜນການຂອງລັດກໍ່ຍັງມີລັກສະນະເປັນທິດຊີ້ນຳ. ການໝູນໃຊ້ກົດເກນຄຸນຄ່າ, ໝູນໃຊ້ການພົວພັນທາງດ້ານຕະຫລາດ, ໝູນໃຊ້ໄມ້ວັດເສດຖະກິດຕ່າງໆ ໃນສະໄໝນີ້ ມີຄວາມໝາຍສຳ

ຄົນຍິ່ງ ສຳລັບການຊຸກຍູ້ການສຳເລັດໜ້າທີ່ແຜນການ. ດ້ວຽເຫດນັ້ນ ຕ້ອງມີການຂຶ້ນແຜນດຸ່ນດ່ຽງວັດຖຸປະກອນສິນຄ້າ(ດຸ່ນດ່ຽງກ່ຽວກັບຍອດມູນຄ່າ ແລະດຸ່ນດ່ຽງກ່ຽວກັບວັດຖຸປະກອນ ແລະສິນຄ້າຕົ້ນຕໍເປັນແຕລະປະເພດ), ດຸ່ນດ່ຽງການຂາອອກຂາເຂົ້າ (ຍອດມູນຄ່າສິນຄ້າ ແລະສິນຄ້າຕົ້ນຕໍແຕລະຊະນິດ), ດຸ່ນດ່ຽງກ່ຽວກັບການຂົນສົ່ງ(ການຂົນສົ່ງຢູ່ພາຽໃນປະເທດ ແລະຂົນສົ່ງຜ່ານແດນ),ດຸ່ນດ່ຽງ ການໝູນສິນຄ້າ(ຊື້ເຂົ້າ, ຂາຽອອກ, ແຮໄວ), ດຸ່ນດ່ຽງແຮງງານ ແລະການເງິນ.

ຕ້ອງຂຶ້ນໂຄງການ, ຂຶ້ນແຜນຮ່າງກໍ່ສ້າງກິດຈະການຕ່າງໆຢູ່ໃນບັນດາເຂດຈຸດໜັກ ທີ່ໄດ້ກຳນົດໄວ້ແລ້ວເຊັ່ນ: ກໍ່ສ້າງເຂດຈຸດໜັກຂອງການປູກເຂົ້າ,ກໍ່ສ້າງທາງເລກ ໙, ກໍ່ສ້າງທໍ່ສົ່ງນ້ຳມັນ, ກໍ່ສ້າງກອງລົດຂົນສົ່ງສິນຄ້າ ຂາອອກຂາເຂົ້າ, ຂຸດຄົ້ນພູພຽງບໍລະເວນ, ກໍ່ສ້າງເຂດຈຸດໜັກຂອງການຜະລິດກາເຟ, ຢາຄູດ,ອ້ຽ, ລ້ຽງສັດ ຯລຯ..ສຳລັບ ແຕ່ລະກິດຈະການນັ້ນ ຕ້ອງຮັບປະກັນການດຸ່ນດ່ຽງວັດຖຸປະກອນ, ແຮງງານ, ການເງິນ, ເຄື່ອງປະກອບການກໍ່ສ້າງ, ຕ້ອງກຳນົດໃຫ້ຈະແຈ້ງວ່າ ຜູ້ໃດຮັບຜິດຊອບຂຶ້ນແຜນ ແລະຜູ້ໃດຮັບຜິດຊອບການກໍ່ສ້າງຕົວຈິງ,ກຳນົດມື້ລົງມືກໍ່ສ້າງ ກຳນົດມື້ສຳເລັດການກໍ່ສ້າງ. ສຳລັບກິດຈະການໃຫຍ່ຕ້ອງແມ່ນນາຍົກລັດຖະມົນຕີເປັນຜູ້ພິຈາລະນາໃຫ້ອະນຸມັດ,ສ່ວນກິດຈະການອື່ນໆແມ່ນກະຊວງ ແລະຄະນະກຳມະການປົກຄອງແຂວງເປັນຜູ້ພິຈາລະນາໃຫ້ອະນຸມັດຕາມຂອບເຂດສິດຂອງຕົນ.

**ຕ້ອງປະກາດໃຊ້ລະບອບການຄຸ້ມຄອງວັດຖຸປະກອນ,ລະບອບ**

ຄຸ້ມຄອງການກໍ່ສ້າງພື້ນຖານ ແລະສ້າງຕັ້ງບັນດາບໍລິສັດ ສະໜອງວັດຖຸປະກອນ ເພື່ອຮັບປະກັນຄວາມຕ້ອງການດ້ານວັດຖຸໃຫ້ແກ່ກິດຈະການແຕ່ລະແຫ່ງ. ປະກາດໃຊ້ລະບອບຜູກພັນທາງດ້ານເສດ ຖະກິດ, ເຮັດວຽກງານສື່ສານໄດ້ດີ (ສະຖິຕິ,ການບັນຊີ,ລາຍງານ, ໄປສະນີໂທລະເລກ), ເພີ່ມທະວີການຈັດຕັ້ງ ແລະ ພາຫະນະ ສື່ສານອື່ນ.

*ຂ. ກ່ຽວກັບການຄຸ້ມຄອງດຸນດ່ຽງແລະໄດ້ ຜົນກຳໄລ*

ຢາກລົບລ້າງລະບົບກົງຈັກ ບໍລິຫານເບີກຈ່າຍນັ້ນ ຈຸດທີ່ເປັນກະແຈ ແມ່ນຕ້ອງປະຕິບັດລະບອບຄຸ້ມຄອງດຸນດ່ຽງ ແລະໄດ້ຜົນກຳໄລເຊິ່ງໃນນັ້ນຕ້ອງກຳນົດໃຫ້ແຈ້ງກ່ຽວກັບຂອບເຂດສິດເປັນເອກະລາດທາງດ້ານເສດຖະກິດຂອງວິສາຫະກິດ, ການທີ່ພວກເຮົາຕ້ອງເຮັດແນວນັ້ນກໍ່ຍ້ອນວ່າ ແຜນການຂະຫຍາຍເສດຖະກິດ ແຫ່ງຊາດສ່ອງແສງເຖິງຜົນປະໂຫຍດຂອງ ໝົດທັງສັງຄົມ, ແຕ່ຊ້ຳພັດແມ່ນລັດວິສາຫະກິດ ແລະກຳມະກອນ ໃນວິສາຫະກິດຕ່າງໆເປັນຜູ້ປະຕິບັດໃຫ້ເປັນຈິງ. ຜົນປະໂຫຍດຂອງໝົດທັງສັງຄົມ, ຜົນປະໂຫຍດຂອງລັດວິສະຫະກິດແລະຜົນປະໂຫຍດຂອງຜູ້ອອກແຮງງານນັ້ນເວົ້າລວມແລ້ວແມ່ນເປັນເອກະພາບກັນ, ແຕ່ເວົ້າລະອຽດແລ້ວ ອາດມີການຂັດແຍ່ງກັນ. ດ້ວຍເຫດນັ້ນ, ຖ້າຢາກຮັບປະກັນການສຳເລັດໜ້າທີ່ແຜນການແຫ່ງລັດແລ້ວ ກໍ່ຕ້ອງມີວິທີການສົມທົບຢ່າງຖືກຕ້ອງຜົນປະໂຫຍດຂອງໝົດທັງສັງຄົມ, ຂອງລວມໝູ່ວິສະຫະກິດ ແລະຂອງຜູ້ອອກແຮງງານ. ໃນເງື່ອນໄຂ ທີ່ສັງຄົມຍັງມີກົດເກນຄຸນຄ່າແລະການພົວພັນ ທາງດ້ານຕະຫຼາດຄົງຕົວຢູ່ນັ້ນ ຈະຕ້ອງສວຍໃຊ້

ກົດເກນຄຸນຄ່າ, ການພົວພັນທາງດ້ານຕະຫລາດເພື່ອມີການສົມທົບຢ່າງຖືກຕ້ອງຜົນປະໂຫຍດຂອງສັງຄົມ, ຂອງລວມໝູ່ ແລະ ຂອງບຸກຄົນຜູ້ອອກແຮງງານ. ດ້ວຍວິທີນຳໃຊ້ລະບອບຄຸ້ມຄອງດຸ່ນດ່ຽງ, ແລະໄດ້ຜົນກຳໄລ.

ລະບອບຄຸ້ມຄອງດຸ່ນດ່ຽງ ແລະໄດ້ຜົນກຳໄລ ໄດ້ກຳນົດຢ່າງຈະແຈ້ງກ່ຽວກັບສິດ ແລະໜ້າທີ່ຂອງ ລັດວິສາຫະກິດ ຄື :

- ວິສາຫະກິດມີໜ້າທີ່ປະຕິບັດໜ້າທີ່ແຜນການ ຂອງລັດໃຫ້ປາກົດເປັນຈິງຢ່າງຄົບຖ້ວນ, ຮັບປະກັນຜົນປະໂຫຍດຂອງລັດ ແລະ ປະຕິບັດບັນດານະໂຍບາຍ, ລະບອບການຄຸ້ມຄອງເສດຖະກິດຂອງລັດຢ່າງຖືກຕ້ອງ.
- ເພື່ອຮັບປະກັນ ການສຳເລັດໜ້າທີ່ດັ່ງກ່າວນັ້ນ ວິສາຫະກິດມີສິດອັນຈຳເປັນດັ່ງນີ້ :
  + ມີຖານະນິຕິບຸກຄົນ,
  + ໄດ້ຮັບການສະໜອງທຶນ, ໄດ້ກູ້ຢືມທຶນ ແລະມີສິດນຳໃຊ້ທຶນ ເພື່ອດຳເນີນທຸລະກິດ,
  + ມີສິດໃຫ້ບຳເນັດ ແລະປັບໃໝຜູ້ເຮັດວຽກ,
  + ມີສິດເຊັນຂໍ້ຜູກພັນຕິດຕໍ່ຊື້ຂາຍ.

ບັນດາຂັ້ນຄຸ້ມຄອງບໍລິຫານ (ລັດຖະມົນຕີ, ຄະນະກຳມະການແຂວງ) ມີແຕ່ດຳເນີນການກວດກາການປະຕິບັດນະໂຍບາຍ, ລະບອບການ ແລະແຜນການຂອງວິສາຫະກິດເທົ່ານັ້ນ, ຕ້ອງເຄົາລົບສິດອຳນາດ ຂອງຜູ້ອຳນວຍການວິສາຫະກິດ, ບໍ່ເຂົ້າຫຍຸ້ງກ່ຽວໃນວຽກງານທຸລະກິດລະອຽດຂອງຜູ້ອຳນວຍການວິສາຫະກິດ.

ບັນດານະໂຍບາຍ ວ່າດ້ວຍລາຍຮັບລາຍຈ່າຍການເງິນ (ອາກອນລາຍໄດ້ ຂອງລັດວິສາຫະກິດ, ອາກອນຕົວເລກ, ຄ່າຫລຸ້ຍຫ້ຽນ) ນະໂຍບາຍແຮງງານ, ເງິນເດືອນ, ເງິນຄ່າບຳເນັດນະໂຍບາຍຊື້ຂາຍ, ລາຄາລວມແຕ່ແມ່ນ ລັດເປັນຜູ້ປະກາດໃຊ້; ວິສາຫະກິດຕ່າງໆຕ້ອງປະຕິບັດຕາມຢ່າງຄົບຖ້ວນແລະຕ້ອງຢູ່ໃຕ້ ການກວດກາຂອງກະຊວງ, ຄະນະກຳມະການປົກຄອງແຂວງ ໃນດ້ານເຫລົ່ານີ້. ແຕ່ວ່າ ນະໂຍບາຍ ແລະ ລະບອບການດັ່ງກ່າວນັ້ນ ກໍ່ໄດ້ໃຫ້ຜູ້ອຳນວຍການວິສາຫະກິດມີສິດອຳນາດໃນຂອບເຂດໃດໜຶ່ງທີ່ແນ່ນອນໃນການຮັບເອົາຄົນເຂົ້າເຮັດວຽກ, ໃນການຍ້ອງຍໍແລະໃຫ້ຄ່າບຳເນັດ ຜູ້ເຮັດວຽກດີເດັ່ນ, ໃນການກຳນົດລາຄາຊື້ ແລະຂາຍຜະລິດຕະພັນຈຳນວນໜຶ່ງ, ມີສິດນຳໃຊ້ຜົນກຳໄລສ່ວນໜຶ່ງ, ມີສິດດຳເນີນການຜະລິດແລະຈຳໜ່າຍສິນຄ້ານອກແຜນການງລງ..

ເພື່ອປະຕິບັດລະບອບຊຸມຄອງດູນດຽງ ແລະໄດ້ຜົນກຳໄລນັ້ນຕ້ອງມີການອອກດຳລັດກ່ຽວກັບການສ້າງຕັ້ງ ບັນດາບໍລິສັດຊູສະຫະກຳ, ການຄ້າ, ກໍ່ສ້າງ, ຂົນສົ່ງ, ນິຄົມກະເສດ, ນິຄົມປ່າໄມ້ລັດວິສາຫະກິດແລະອອກດຳລັດແຕ່ງຕັ້ງຜູ້ອຳນວຍການວິສາຫະກິດ, ຮັບປະກັນໃຫ້ວິສາຫະກິດມີຖານະນິຕິບຸກຄົນ. ດຳເນີນການກວດກາຂຶ້ນບັນຊີ ແລະຕີລາຄາຊັບສົມບັດຂອງລັດວິສາຫະກິດ, ກຳນົດທິດການຜະລິດຂອງລັດວິສາຫະກິດໃຫ້ຈະແຈ້ງ, ຈັດຕັ້ງການຜະລິດຂອງລັດວິສາຫະກິດຄືນໃໝ່ຕາມທິດດັ່ງກ່າວນັ້ນ, ຂຶ້ນແຜນການຜະລິດ, ເຕັກນິກ, ການເງິນຂອງວິສາຫະກິດ. ແຜນການຕ້ອງໄດ້ຮັບອະນຸມັດຈາກຂັ້ນເທິງທີ່ມີສິດອຳນາດເຕັມ, <u>ວິສາຫະກິດຕ້ອງໄດ້ຮັບການສະ</u>

ໜອງທຶນໃຫ້ຕາມລະບອບການ, ກຳນົດໜາຽເພື່ອຮັບປະກັນການ
ສຳເລັດແຜນການຢ່າງຮອບດ້ານ. ກຳນົດໜາຽກ່ຽວກັບການສະ
ໜອງທຶນນັ້ນ ຕ້ອງໄດ້ກຳນົດຕາມຈຸດພິເສດ ການເຄື່ອນໄຫວທຸລະ
ກິດຂອງແຕ່ລະວິສາຫະກິດ, ສຳລັບວິສາຫະກິດການຄ້າ ມີອັນແຕກ
ຕ່າງກັບວິສາຫະກິດອຸສະຫະກຳ, ຂົນສົ່ງ, ກໍ່ສ້າງ,,,

ກຳນົດລາຄາຂາຽຍົກ ສຳລັບສິນຄ້າທີ່ວິສາຫະກິດຜະລິດອອກ
ແລະກຳນົດລາຄາວັດຖຸປະກອນແຕ່ລະປະເພດ ທີ່ສະໜອງໃຫ້ວິສາ
ຫະກິດ, ວາງກຳນົດໜາຽທາງດ້ານເສດຖະກິດທີ່ຈຳເປັນ ເຊັ່ນ
ກຳນົດໜາຽແຮງງານ, ກຳນົດໜາຽການຊົມໃຊ້ເປືອງ ນ້ຳມັນເຊື້ອ
ໄຟ, ວັດຖຸດິບ, ກຳນົດໜາຽລາຽຈ່າຽສຳລັບຈໍລະຈອນ, ກຳນົດ
ໜາຽກຳໄລ, ກຳນົດໜາຽຄ່າຫລຸ້ຽຫ້ຽນ. ປະກາດໃຊ້ລະບອບ
ການແຈກຢາຽຜົນກຳໄລຂອງວິສະຫະກິດໂດຽຮັບປະກັນການສົມທົບ
ຢ່າງຖືກຕ້ອງ ລະຫວ່າງຜົນປະໂຫຽດຂອງລັດ, ຂອງວິສາຫະກິດ
ແລະຂອງຜູ້ອອກແຮງງານ.

ຕັ້ງໜ້າກໍ່ສ້າງ, ປັບປຸງບຸລະນະ ແລະເຝິກອົບຮົບພາກສ່ວນ
ພະນັກງານທີ່ເຮັດວຽກງານການເງິນ, ການບັນຊີຢູ່ໃນວິສະຫະກິດ
ຕ່າງໆ.

### *ຄ. ກ່ຽວກັບການນຳໃຊ້ການພົວພັນທາງດ້ານຕະຫຼາດ, ການນຳໃຊ້ບັນດາໄມ້ງັດເສດຖະກິດ.*

ໄມ້ງັດເສດຖະກິດ ມີ: ການຄ້າ,ລາຄາ,ເງິນເດືອນ,ເງິນ
ຄ່າບຳເນັດ,ເງິນຕາ,ສິນເຊື່ອ,ການເງິນ,ກຳໄລ..ທັງໝົດເຫຼົ່າ

ນີ້ ລ້ວນແຕ່ເປັນເຄື່ອງມື, ເປັນມາດຕະການເສດຖະກິດ ທີ່ຄົງຕົວຢູ່ບົນພື້ນຖານແຫ່ງການພົວພັນທາງດ້ານສິນຄ້າ-ເງິນຕາ, ການພົວພັນທາງດ້ານຕະຫຼາດ, ກົດເກນຄຸນຄ່າ. ໃນເມື່ອການພົວພັນທາງດ້ານສິນຄ້າ-ເງິນຕາ, ການພົວພັນທາງດ້ານຕະຫຼາດ, ກົດເກນຄຸນ ຄ່າຍັງຄົງຕົວຢູ່ໃນສັງຄົມນັ້ນ ການຄ້າ, ລາຄາ, ເງິນເດືອນ, ເງິນຄ່າບຳເນັດ, ເງິນຕາ, ສິນເຊື່ອ, ການເງິນ, ກຳໄລ...ກໍ່ຍັງຄົງຕົວ ຢູ່ໃນຂົງເຂດການແຈກຢາຽຈຳລະຈອນເຊິ່ງເປັນຂົວຕໍ່ລະຫວ່າງ ການຜະລິດກັບການໃຊ້ສອຽ. ຖ້າວ່າ ຊ່າງນຳໃຊ້ໄມ້ວັດເສດຖະກິດຢ່າງຄົບຊຸດແລ້ວມັນກໍ່ສາມາດພາໃຫ້ເກີດຄຸນປະໂຫຍດອັນຕັ້ງໜ້າຕໍ່ການຜະລິດ ແລະຊີວິດການເປັນຢູ່; ຖ້າເຮັດຢ່າງກົງກັນຂ້າມແລ້ວມັນກໍ່ອາດຈະເກີດມີຄຸນປະໂຫຍດໃນທາງຫຍໍ້ທໍ້ຂຶ້ນ. ເພື່ອເສີມຂະຫຍາຽຄຸນປະໂຫຍດ ຂອງບັນດາໄມ້ວັດ ເສດຖະກິດ ໃນເງື່ອນໄຂຕົວຈິງຂອງປະເທດເຮົາໃນປະຈຸບັນນີ້ໃຫ້ແຂງແຮງຍິ່ງຂຶ້ນກວ່າເກົ່ານັ້ນຈະຕ້ອງດັດແປງ ບັນດານະໂຍບາຽ, ລະບອບການຄຸ້ມຄອງ ການຈຳລະຈອນແຈກຢາຽໃຫ້ເໝາະສົມດີດັ່ງໄດ້ກ່າວມາເທິງນັ້ນແລ້ວ.

ໃນເມື່ອສຳລວດດວຽກງານທຸກດ້ານຂອງພວກເຮົາໃນ ໔ ປີທີ່ຜ່ານມາ ພວກເຮົາເຫັນວ່າ ແນວທາງເສດຖະກິດ ທີ່ພັກ ແລະລັດເຮົາວາງອອກນັ້ນ ແມ່ນຖືກຕ້ອງ, ແຕ່ການຈັດຕັ້ງປະຕິບັດຍັງບໍ່ທັນໄດ້ດີ, ດັ່ງນັ້ນ ຜົນທີ່ໄດ້ຮັບຈຶ່ງຖືກຈຳກັດຫຼາຍ, ສະພາບດັ່ງກ່າວນີ້ ສ່ວນໜຶ່ງແມ່ນມາຈາກໂຄງປະກອບການຈັດຕັ້ງຄຸ້ມຄອງເສດຖະກິດຍັງອ່ອນ, ຄວາມສາມາດໃນການຈັດຕັ້ງ ຂອງພວກເຮົາຍັງຖືກຈຳກັດ ແລະ ພວກເຮົາກໍ່ຍັງບໍ່ທັນຖືເປັນສຳຄັນເທົ່າທີ່ຄວນ ຕໍ່ວຽກ

ງານການຈັດຕັ້ງ. ການຫັນຈາກແບບວິທີຄຸ້ມຄອງບໍລິຫານເບີກຈ່າຍ ໄປສູ່ການປະຕິບັດແບບວິທີຄຸ້ມຄອງການທຸລະກິດສັງຄົມນິຍົມຕາມຈິດ ໃຈຂອງມະຕິດັ່ງທີ່ ກ ນັ້ນ ມັນຮຽກຮ້ອງໃຫ້ມີການກໍ່ສ້າງ ໂຄງປະກອບຄຸ້ມຄອງເສດຖະກິດອັນເໝາະສົມ ໂດຍມີການຈຳແນກ ຢ່າງຈະແຈ້ງລະຫວ່າງການຈັດຕັ້ງທີ່ເຮັດພາລະບົດບາດຄຸ້ມຄອງບໍລິຫານ ກັບການຈັດຕັ້ງທີ່ເຮັດພາລະບົດບາດການຜະລິດ ແລະທຸລະກິດ.

ກ່ຽວກັບໂຄງປະກອບການຈັດຕັ້ງຄຸ້ມຄອງເສດຖະກິດຂອງລັດນັ້ນ ແມ່ນຕ້ອງຈຳແນກລະຫວ່າງລະບົບອົງການທີ່ປະຕິບັດພາລະບົດບາດຄຸ້ມຄອງລັດ( ກະຊວງ, ພະແນກ, ກົມ, ຫ້ອງ ) ກັບລະບົບຈັດຕັ້ງການຜະລິດ ແລະທຸລະກິດ (ໂຮງງານ, ບໍລິສັດ, ນິຄົມກະເສດ, ນິຄົມປ່າໄມ້, ສະຖານທີ່ກໍ່ສ້າງ).

ສາຍພົວພັນ ລະຫວ່າງລັດວິສາຫະກິດກັບອົງການຄຸ້ມຄອງລັດນັ້ນ ຕ້ອງປະຕິບັດຕາມເນື້ອໃນຂອງຂໍ້ກຳນົດວ່າດ້ວຍລັດວິສາຫະກິດທີ່ໄດ້ປະກາດໃຊ້ແລ້ວນັ້ນ ເຊັ່ນ :

+ ຂໍ້ກຳນົດ ວ່າດ້ວຍລັດວິສາຫະກິດ ໄດ້ກຳນົດຢ່າງ ຈະແຈ້ງກ່ຽວກັບສິດຂອງຜູ້ອຳນວຍການ ວິສາຫະກິດ (ມາດຕາ ໑໓) ໃນດ້ານສະໜອງວັດຖຸປະກອນ, ການເງິນ, ແຮງງານ,ເງິນເດືອນ ວິທະຍາສາດເຕັກນິກ, ທຶນຄົງທີ່, ທຶນໝູນວຽນ, ສ້າງແຜນການ ແລະ ປະຕິບັດແຜນການໆຜະລິດ ແລະທຸລະກິດ, ແລະກຳນົດຢ່າງຈະແຈ້ງໜ້າທີ່ຮັບຜິດຊອບໃນດ້ານຕ່າງໆຂອງວິສາຫະກິດ.

+ ຂໍ້ກຳນົດ ວ່າດ້ວຍລັດວິສາຫະກິດກໍ່ໄດ້ກຳນົດຢ່າງຈະແຈ້ງກ່ຽວກັບສິດ ແລະໜ້າທີ່ຂອງວິສາຫະກິດໃນດ້ານຕ່າງໆເຊັ່ນ:ແຜນ

ການງຜະລິດ ແລະທຸລະກິດ, ສະໜອງວັດຖຸປະກອນ, ຈຳໜ່າຍຜະລິດຕະພັນ, ການເງິນ, ສິນເຊື່ອ, ແຮງງານ, ເງິນເດືອນ, ວິທະຍາສາດເຕັກນິກ, ລາຄາ ຯລຯ...

+ ອົງການຄຸ້ມຄອງບໍລິຫານຕອງເຄົາຣົບສິດຂອງວິສະຫະກິດ ແລະສ້າງເງື່ອນໄຂອັນຈຳເປັນຕ່າງໆ (ອະນຸມັດແລະມອບໜ້າທີ່ທຸລະກິດໃຫໄວ, ສະໜອງທຶນ ແລະ ໃຫ້ກູ້ຢືມທຶນ, ສະໜອງວັດຖຸປະກອນ ແລະແຮງງານ, ປະກາດໃຊ້ ບັນດາລະບອບການ, ນະໂຍບາຍຄຸ້ມຄອງ ການຈໍລະຈອນແຈກຢາຍທີ່ຈຳເປັນ...) ທັງນີ້ເພື່ອໃຫ້ວິສາຫະກິດ ນຳໃຊ້ສິດຂອງຕົນ ໂດຍແນໃສ່ສຳເລັດໜ້າທີ່ແຜນການທີ່ໄດ້ຮັບມອບໝາຍນັ້ນໄດ້ຢ່າງເຕັມເມັດເຕັມໜ່ວຍແລະຮອບດ້ານ.

+ ບັນດາອົງການຄຸ້ມຄອງບໍລິຫານ (ກະຊວງ, ພະແນກ,ຄະນະກຳມະການປົກຄອງ ມີແຕ່ມອບໜ້າທີ່ແຜນການໃຫ້ວິສາຫະກິດ, ປະກາດໃຊ້ບັນດານະໂຍບາຍ, ລະບອບການຄຸ້ມຄອງ(ແຜນການ, ການເງິນ, ວັດຖຸປະກອນ, ເງິນເດືອນ, ແຮງງານ, ວິທະຍາສາດເຕັກນິກ) ແລະກວດກາການປະຕິບັດແຜນການ, ນະໂຍບາຍ, ລະບອບການ, ກຳນົດໝາຍດ້ານເສດຖະກິດເຕັກນິກເທົ່ານັ້ນຫາກບໍ່ເຂົ້າຫຍຸ້ງກ່ຽວໂດຍກົງ ໃນວຽກງານຄຸ້ມຄອງ ການຜະລິດ ແລະການທຸລະກິດ ຂອງວິສາຫະກິດ. ບໍ່ລະເມີດສິດ ເປັນເຈົ້າຮວມໝູ່ຂອງວິສາຫະກິດເຊິ່ງໄດ້ລະບຸໄວ້ໃນຂໍ້ກຳນົດວ່າດ້ວຍລັດວິສາຫະກິດອັນເປັນກົດໝາຍຂອງລັດນັ້ນ.

ສຳລັບລະບົບບັນດາອົງການຄຸ້ມຄອງລັດ ແມ່ນໃຫ້ຄົ້ນຄ້ວາປະ

ຕິບັດບັນດາຂໍ້ກຳນົດ ກ່ຽວກັບການຈັດຕັ້ງທີ່ໄດ້ປະກາດໃຊ້ແລ້ວນັ້ນ- ໃຫ້ຖືກຕ້ອງແລະຄົບຖ້ວນ ເຊັ່ນ : ກົດລະບຽບວ່າດ້ວຍການຈັດຕັ້ງ ຂອງສະພາລັດຖະມົນຕີ ສິດ ແລະ ໜ້າທີ່ຂອງລັດຖະມົນຕີ ສິດ- ແລະໜ້າທີ່ຂອງອຳນາດການປົກຄອງແຂວງ, ເມືອງ ໃນການຄຸ້ມ ຄອງເສດຖະກິດ. ກະຊວງ, ຄະນະກຳມະການ ປົກຄອງແຂວງ ຕ້ອງອີງໃສ່ອັນນັ້ນ ເພື່ອສ້າງກົດລະບຽບວ່າດ້ວຍການຈັດຕັ້ງ ຂອງ ຂະແໜງການ ແລະແຂວງຂອງຕົນ ແລ້ວນຳສະເໜີໃຫ້ນາຍົກລັດ ຖະມົນຕີພິຈາລະນາອະນຸມັດໃນຕົ້ນປີ ໑໙໘໑ ຈັດຕັ້ງ ການອົບຮົມຂໍ້ ກຳນົດຕ່າງໆໃຫ້ທຸກຄົນ ເພື່ອກຳແໜ້ນສິດ ແລະຄວາມຮັບຜິດຊອບ ຂອງຕົນແລະເພື່ອສຳເລັດໜ້າທີ່ງໄດ້ຮັບມອບໝາຍຢ່າງຖືກຕ້ອງ. ຈັດຕັ້ງ ການຕິດຕາມການເຄື່ອນໄຫວຂອງທຸກຂະແໜງການ, ທຸກ ຂັ້ນ, ຖ້າເຫັນວ່າມີຂໍ້ໃດທີ່ບໍ່ສົມເຫດສົມຜົນກໍ່ຈະດັດແປງ.

ກ່ຽວກັບລະບົບການຈັດຕັ້ງການຜະລິດ ແລະທຸລະກິດນັ້ນຕ້ອງ ອອກມະຕິຕົກລົງ ກ່ຽວກັບການສ້າງຕັ້ງບັນດາຫົວໜ່ວຍເສດຖະກິດ ຮາກຖານຢ່າງເປັນທາງການ ເພື່ອໃຫ້ເຄື່ອນໄຫວຕາມລະບອບຄຸ້ມ ຄອງຄູນດຽງ ແລະໄດ້ຜົນກຳໄລ. ມີສິດເປັນເອກະລາດທາງດ້ານ ເສດຖະກິດໃນຂອບເຂດທີ່ໄດ້ລະບຸໄວ້ໃນຂໍ້ກຳນົດ ວ່າດ້ວຍລັດວິສາ ຫະກິດແລ້ວນັ້ນ

ຕ້ອງເອົາໃຈໃສ່ເປັນພິເສດໃນການເລືອກເຟັ້ນພະນັກງານທີ່ ມີຄຸນສົມບັດດີ, ມີລະດັບວັດທະນະທຳ ,ມີຄວາມສາມາດ ຄຸ້ມຄອງ ໄປເປັນຜູ້ອຳນວຍການໂຮງງານ, ວິສາຫະກິດ,ສະຖານທີ່ກໍ່ສ້າງ, ນິຄົມກະເສດ,ນິຄົມປ່າໄມ້ ເພື່ອນຳພາ, ສຶກສາອົບຮົມ ແລະຈັດ

ຕັ້ງກຳມະກອນໃນບັນດາຫົວໜ່ວຍເສດຖະກິດຮາກຖານ.

ຕ້ອງວາງແຜນກຳນົດກ່ຽວກັບພະນັກງານ ແລະມີແຜນກໍ່ສ້າງ ສຶກສາອົບຮົມ ບຳລຸງພະນັກງານ ໃນທຸກດ້ານ, ໃນນັ້ນລວມທັງພະນັກງານຄຸ້ມຄອງ, ພະນັກງານເຕັກນິກວິຊາການ ແລະ ກໍ່ສ້າງບຳລຸງເຝິກອົບຮົມກຳມະກອນເຕັກນິກຕາມໂດຍປະກອບອັນສົມເຫດສົມຜົນ, ທັງນີ້ ເພື່ອຕອບສະໜອງ ຄວາມຕ້ອງການ ໃນສະເພາະໜ້າ ແລະຍາວນານຂອງແຜນການຂະຫຍາຍເສດຖະກິດ ຂອງລັດເຮົາ. ຕ້ອງມີນະໂຍບາຍບຳລຸງພະນັກງານເກົ່າ ແລະພະນັກງານໃໝ່, ເສີມຂະຫຍາຍດ້ານຕັ້ງໜ້າ ແລະແກ້ໄຂຈຸດອ່ອນ ຂອງແຕ່ລະປະເພດ, ສົມທົບການນຳໃຊ້ທັງພະນັກງານເກົ່າ ແລະ ພະນັກງານໃໝ່ໃຫ້ໄດ້ດີ, ເອົາໃຈໃສ່ນຳໃຊ້ພະນັກງານໜຸ່ມ ທີ່ມີຄວາມສາມາດ, ກ້າເລື່ອນຊັ້ນພະນັກງານທີ່ເຕີບໃຫຍ່ຂຶ້ນໃນຂະບວນການປະຕິວັດຂອງມະຫາຊົນ.

ຕ້ອງເຊີດຊູຄວາມສາມາດໃນການຈັດຕັ້ງຂອງພະນັກງານຄຸ້ມຄອງຂັ້ນຕ່າງໆ ນັບແຕ່ຂັ້ນກະຊວງ ໄປເຖິງຜູ້ອຳນວຍການວິສາຫະກິດໃຫ້ສູງຂຶ້ນ ດ້ວຍວິທີສະຫຼຸບຖອດຖອນ ບົດຮຽນ, ໄຈ້ແຍກຈຸດດີ, ຈຸດບົກພ່ອງຂອງການຄຸ້ມຄອງໃນແຕ່ລະໄລຍະ, ທັງນີ້ເພື່ອຊ່ວຍໃຫ້ພະນັກງານຄຸ້ມຄອງ ມີຄວາມສາມາດ ໃນການສັງເກດ, ໄຈ້ແຍກ ແລະແກ້ໄຂໜ້າທີ່ຄຸ້ມຄອງໄດ້ຢ່າງຮອບດ້ານ ແລະກວມລວມໂດຍບໍ່ເຫັນແຕ່ດ້ານດຽວ ມະຍົກມະຍຽ, ແຍກວຽກງານອັນນີ້ ອອກຈາກວຽກງານອັນອື່ນ, ແຍກດ້ານນີ້ ອອກຈາກດ້ານອື່ນ ອັນພາໄປເຖິງບ່ອນເຄື່ອນໄຫວຢ່າງບໍ່ຄົບຊຸດ, ບໍ່ກົມກຽວ, ສັບປົນຄົນເລກັນ, ກິດ

ຂວາງກັນ. ກໍ່ສ້າງວິສາຫະກິດ ຕົວຢ່າງທີ່ມີລະດັບຈັດຕັ້ງຄຸ້ມຄອງດີ ເພື່ອຖອດຖອນບົດຮຽນ ແລະເຜີຍແຜ່ບົດຮຽນ ຂອງຕົວຢ່າງນັ້ນໃຫ້ວິສາຫະກິດອື່ນໆ ຢ່າງທັນເວລາ ແນໃສ່ເຊີດຊູຄວາມສາມາດ ໃນການຈັດຕັ້ງ ແລະຄຸ້ມຄອງຂອງວິສາຫະກິດອື່ນໃຫ້ສູງຂຶ້ນ.

ຕ້ອງສ້າງນະໂຍບາຍພະນັກງານ, ນະໂຍບາຍເງິນເດືອນ, ແລະລະບອບການໃຫ້ຄ່າບຳເນັດ ແລະປັບໃໝທີ່ເຄັ່ງຄັດທ່ຽງທຳ. ເຊີດຊູລະບອບວິໄນອອກແຮງງານ ແລະຈັດຕັ້ງການອອກແຮງງານຢ່າງວິທະຍາສາດດີທີ່ໄດ້ກ່າວມາ ໃນພາກວ່າດ້ວຍແຮງງານ ແລະເງິນເດືອນແລ້ວນັ້ນ. ເດັດດ່ຽວຕ້ານສໍ້ລາດບັງຫລວງ, ຟູມເຟືອຍ, ພະຍາດອາດຍາດເຈົ້ານາຍ, ຖືອຳນາດບາດໃຫຍ່, ອື່ຄານ.

### IV - ເພີ່ມທະວີຄວາມສາມັກຄີປອງດອງ, ຄວາມສາມັກຄີບັນດາຊົນຊາດ ເພື່ອປະຕິບັດໜ້າທີ່ແຜນການ 5 ປີແຫ່ງລັດ ( 1981-1985 )ຢ່າງ ມີໄຊ

ຄວາມສາມັກຄີປອງດອງ, ຄວາມສາມັກຄີບັນດາຊົນຊາດເປັນປັດໃຈພື້ນຖານອັນໜຶ່ງທີ່ຕັດສິນຊີ້ຂາດໄຊຊະນະອັນສົມບູນຂອງການປະຕິວັດຊາດ-ປະຊາທິປະໄຕ. ມາດຽວນີ້ ໃນການປົກປັກ ຮັກສາແລະສ້າງສາປະເທດຊາດສັງຄົມນິຍົມນັ້ນ ພາລະກິດແຫ່ງຄວາມສາມັກຄີດັ່ງກ່າວຍິ່ງມີຄວາມສຳຄັນທີ່ສຸດ.

ພວກເຮົາຕ້ອງອອກແຮງສຶກສາອົບຮົມເຮັດໃຫ້ປະຊາຊົນ ບັນດາຊົນຊາດເຫັນແຈ້ງຄວາມໝາຍຍຸດທະສາດອັນໃຫຍ່ຍິ່ງຂອງການເພີ່ມທະວີຄວາມສາມັກຄີ ປອງດອງ, ຄວາມສາມັກຄີບັນດາຊົນຊາດເພີຍແບກົມຊຸບາຍ ຂອງພວກຂະຫຍາຍ ອານາເຂດ ແຜ່ອຳນາດ,

ຊາດໃຫຍ່ ແລະຈັກກະພັດນິຍົມ ໃນການແບ່ງແຍກ, ຍຸແຫຍ່ບັນດາຊົນຊາດລາວໃຫ້ຕ້ານຢັນກັນ.

ພວກເຮົາຕ້ອງເພີ່ມທະວີການສຶກສາອົບຮົມແລະກວດກາການປະຕິບັດ ນະໂຍບາຍສາມັກຄີຊົນຊາດຂອງພັກ, ມີທ່າທີ ຢ່າງເຂັ້ມງວດຕໍ່ການກະທຳທີ່ກໍ່ຄວາມເສັຍຫາຍ ໃຫ້ແກ່ຄວາມສາມັກຄີບັນດາຊົນຊາດ.

ດ້ານໜຶ່ງອີກແມ່ນຕ້ອງຕັ້ງໜ້ານຳເອົາວັດທະນະທຳ, ສຶກສາວິທະຍາສາດ, ສາທາລະນະສຸກ ໄປສູ່ບໍລິເວນຊົນຊາດ ເພື່ອເຮັດໃຫ້ພີ່ນ້ອງຊົນຊາດຫລຸດພົ້ນອອກຈາກການຜູກມັດຂອງຮີດຄອງປະເພນີອັນຫລ້າຫລັງ, ການເຊື່ອຖືຢ່າງງົມງວາຍ ເພື່ອກໍ່ສ້າງຊີວິດໃໝ່ທີ່ສີວິໄລ.

ພວກເຮົາ ຕ້ອງພະຍາຍາມກໍ່ສ້າງແບບຢ່າງ ໃນບໍລິເວນຊົນຊາດ ທາງດ້ານເສດຖະກິດ, ການເມືອງ, ວັດທະນະທຳ ສັງຄົມ ເພື່ອຖອດຖອນບົດຮຽນ ແລະເຜີຍແຜ່ໃຫ້ພີ່ນ້ອງບັນດາຊົນຊາດສ່ວນໜ້ອຍໃນການກໍ່ສ້າງຖິ່ນຖານບ້ານຊ່ອງຂອງຕົນ, ເຮັດໃຫ້ເຂດພູດອຍກ້າວຂຶ້ນທັນກັບເຂດທົ່ງພຽງເທື່ອລະກ້າວ ແລະສ້າງເງື່ອນໄຂເພື່ອເຮັດໃຫ້ຄວາມສະເໝີພາບ ຢ່າງແທ້ຈິງ ລະຫວ່າງບັນດາຊົນຊາດອ້າຍນ້ອງຢູ່ພາຍໃນປະເທດປະກົດເປັນຈິງ.

ຕ້ອງເພີ່ມທະວີວຽກງານແນວໂຮມຢູ່ໃນທ້ອງຖິ່ນຕ່າງໆ; ເຮັດໃຫ້ແນວໂຮມເປັນບ່ອນເຕົ້າໂຮມສາມັກຄີທຸກຊັ້ນຄົນໃນໝູ່ປະຊາຊົນ ສາມັກຄີບັນດາຊົນຊາດຢ່າງແທ້ຈິງ ໃນການປະຕິບັດໂຄງການ ດຳເນີນງານ ຂອງແນວລາວສ້າງຊາດ ແນໃສ່ປຸກລະດົມທຸກຊົນຊາດ,

ທຸກຊັ້ນຄົນປະຕິບັດແນວທາງ, ແຜນນະໂຍບາຍ, ນະໂຍບາຍຂອງພັກ ແລະລັດໃຫ້ໄດ້ດີ.

### IV - ເພີ່ມທະວີວຽກງານຕ່າງປະເທດ

ໃນໄລຍະຕໍ່ໜ້ານີ້, ພວກເຮົາຍັງຄົງສືບຕໍ່ແນວທາງຕ່າງປະເທດ ສັນຕິພາບ, ເອກະລາດ, ເປັນເຈົ້າຕົນເອງ ແລະສັງຄົມນິຍົມ ຂອງພັກ ແລະລັດເຮົາ ແນໃສ່ຍາດແຍ່ງເງື່ອນໄຂສາກົນທີ່ອໍານວຍຄວາມສະດວກ ເພື່ອປະຕິບັດໜ້າທີ່ ປົກປັກຮັກສາ ແລະສ້າງສາປະເທດຊາດ ຂອງພວກເຮົາຢ່າງມີໄຊ ແລະປະກອບສ່ວນຢ່າງສົມກຽດເຂົ້າໃນພາລະກິດລວມ ຂອງປະຊາຊົນໃນໂລກທີ່ຕໍ່ສູ້ ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະສັງຄົມນິຍົມ.

ພວກເຮົາຢືນຢັນອີກເທື່ອໜຶ່ງວ່າ ການປັບປຸງ ແລະເພີ່ມທະວີຢ່າງບໍ່ຢຸດຢັ້ງ ຄວາມສາມັກຄີແບບສູ້ຮົບ ແລະສາຍພົວພັນແບບພິເສດລະຫວ່າງປະເທດເຮົາ ກັບສອງປະເທດອ້າຍນ້ອງຫວຽດນາມ ແລະກໍາປູເຈຍນັ້ນ ເປັນແນວທາງຍຸດທະສາດທີ່ມີຄວາມໝາຍເປັນຕາຍ ຕໍ່ພາລະກິດປົກປັກຮັກສາປະເທດຊາດ ແລະສ້າງສາສັງຄົມນິຍົມໃນແຕ່ລະປະເທດ ຂອງໃຜລາວ, ເປັນປັດໃຈອັນສໍາຄັນທີ່ສຸດ-ສໍາລັບສັນຕິພາບ, ເອກະລາດ, ສະຖຽນລະພາບ ແລະຄວາມວັດທະນາຖາວອນໃນອາຊີອາຄະເນ.

ພວກເຮົາສະໜັບສະໜູນຢ່າງສົມບູນຕໍ່ປະຊາຊົນຫວຽດນາມອ້າຍນ້ອງພາຍໃຕ້ການນໍາພາອັນສະຫລາດສ່ອງໃສ ຂອງພັກກອມມູນິດຫວຽດນາມ ແລະລັດຖະບານສາທາລະນະລັດສັງຄົມນິຍົມຫວຽດ

ນາມ ເຊິ່ງພວມອອກແຮງສ້າງສາ ປະເທດຊາດ, ຜ່ານຜ່າຄວາມ
ຫຍຸ້ງຍາກຕ່າງໆໃນສະເພາະໜ້າ ດ້ານຄວາມກ້າແກ່ນ, ເຮັດໃຫ້
ຊີວິດການເປັນຢູ່ເປັນປົກກະຕິ ແລະໄດ້ຮັບການປົວແປງໃຫ້ດີຂຶ້ນ,ກໍ່
ສ້າງພື້ນຖານວັດຖຸເຕັກນິກ ຂອງສັງຄົມນິຍົມ, ເພີ່ມທະວີເຫງົ້າພະ
ລັງ ທາງດ້ານເສດຖະກິດ ແລະການປ້ອງກັນຊາດ, ປົກປັກຮັກສາ
ປະເທດຊາດຂອງຕົນ, ຕ້ານການກະທຳຂອງກຸ່ມປະຕິການ ໃນວົງ
ການກຳອຳນາດປັກກິ່ງໃນການຂົ່ມຂູ່ຮຸກຮານ, ບຸກຍຶດຊາຍແດນຕໍ່
ຫວຽດນາມ ແລະ ທວງໃຫ້ພວກເຂົາຕ້ອງກັບຄືນ ສູ່ການເຈລະຈາ
ໂດຍໄວ ເພື່ອແກ້ໄຂບັນຫາຕ່າງໆໃນການພົວພັນລະຫວ່າງສອງປະ
ເທດຫວຽດນາມ ແລະຈີນໂດຍສັນຕິ.

ພວກເຮົາຊົມເຊີຍຢ່າງສຸດອົກສຸດໃຈ ຕໍ່ລັດຖະທຳມະນູນໃໝ່
ຂອງສາທາລະນະລັດ ສັງຄົມນິຍົມຫວຽດນາມ ແລະອວຍພອນຢ່າງ
ຈິງໃຈໃຫ້ປະຊາຊົນຫວຽດນາມອ້າຍນ້ອງ ຈົ່ງບັນລຸຜົນສຳເລັດ ອັນ
ໃຫຍ່ຫລວງໃນການກະກຽມຄຳນັບຮັບຕ້ອນກອງປະຊຸມໃຫຍ່ຄັ້ງທີ ໕
ຂອງພັກກອມມູນິດຫວຽດນາມ.

ພວກເຮົາມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງຕໍ່ໄຊຊະນະອັນໃຫຍ່
ຫລວງຂອງປະຊາຊົນກຳປູເຈຍ ໃນພາລະກິດປົກປັກຮັກສາປະເທດ
ຊາດ ແລະໃນການແກ້ໄຂຜົນຮ້າຍອັນຮ້າຍແຮງທີ່ສຸດຂອງໄພດັບສູນ
ເຊື້ອຊາດ, ເຮັດໃຫ້ສະພາບການທຸກດ້ານຂອງຊາດ ເຂົ້າສູ່ຄວາມ
ສະຫງົບປົກກະຕິເທື່ອລະກ້າວ ແລະປົວແປງຊີວິດການເປັນຢູ່ ຂອງ
ປະຊາຊົນ. ການທີ່ສາທາລະນະລັດ ປະຊາຊົນກຳປູເຈຍ ກຽມປະ
ກາດໃຊ້ລັດຖະທຳມະນູນ ແລະດຳເນີນການເລືອກຕັ້ງ ທົ່ວໄປຢ່າງ

ເສລີພາບໃນທົ່ວປະເທດນັ້ນຈະເປັນບາດກ້າວຂະຫຍາຍຕົວໃຫມ່ໃນຊີວິດການເມືອງ ແລະຈິດໃຈຂອງປະຊາຊົນ ກຳປູເຈຍອ້າຍນ້ອງ, ພວກເຮົາ ສະຫນັບສະຫນູນຢ່າງສົມບູນ ຕໍ່ແນວໂຮມສາມັກຄີກູ້ຊາດ ແລະສະພາປະຊາຊົນປະຕິວັດ ກຳປູເຈຍຜູ້ຕາງຫນ້າທີ່ແທ້ຈິງ ແລະ ຖືກຕ້ອງຕາມກົດຫມາຍແຕ່ຜູ້ດຽວຂອງປະຊາຊົນກຳປູເຈຍ. ທຸກຈາດຈຳນົງທີ່ແນໃສ່ແຊກແຊງເຂົ້າວຽກງານພາຍໃນຂອງປະຊາຊົນກຳປູເຈຍນັ້ນ ຈະຕ້ອງປະລາໄຊຢ່າງແນ່ນອນ.

ພວກເຮົາຢືນຢັນວ່າ ການພົວພັນສາມັກຄີ ແລະ ການຮ່ວມມືຢ່າງຮອບດ້ານກັບສະຫະພາບໂຊວຽດທີ່ຍິ່ງໃຫຍ່ ແລະກັບບັນດາປະເທດສັງຄົມນິຍົມ ອ້າຍນ້ອງ ເປັນຫີນສີລາໃນນະໂຍບາຍ ຕ່າງປະເທດຂອງພວກເຮົາ, ມັນເປັນສິ່ງຄ້ຳປະກັນທີ່ຫນັກແຫນ້ນໃຫ້ແກພາລະກິດປົກປັກຮັກສາປະເທດຊາດ ແລະ ສ້າງສາສັງຄົມນິຍົມ ຂອງພວກເຮົາ. ພວກເຮົາຄຳນັບຜົນສຳເລັດອັນໃຫຍ່ຫລວງຂອງປະຊາຊົນໂຊວຽດອ້າຍນ້ອງໃນພາລະກິດກໍ່ສ້າງພື້ນຖານວັດຖຸເຕັກນິກຂອງລັດທິກອມມູນິດ ແລະ ໃນການເພີ່ມທະວີຄວາມສາມາດ ທາງດ້ານປ້ອງກັນຊາດຂອງລັດໂຊວຽດ, ຄຳນັບຜົນງານອັນສະຫງ່າງາມຂອງປະຊາຊົນໂຊວຽດໃນຂະບວນການແຂ່ງຂັນອັນກວ້າງຂວາງເພື່ອຮັບຕ້ອນກອງປະຊຸມໃຫຍ່ຄັ້ງທີ ໒໖ ຂອງພັກກອມມູນິດແຫ່ງສະຫະພາບໂຊວຽດທີ່ມີກຽດສະງ່າ. ພວກເຮົາສະຫນັບສະຫນູນຢ່າງສົມບູນ ຕໍ່ແນວທາງຕ່າງປະເທດເລນິນນິດ ຂອງສະຫະພາບໂຊວຽດ, ຂໍ້ສະເຫນີລິເລີ່ມອັນສຳຄັນຂອງສະຫາຍເລໂອນິດເບຼຊເນັບທີ່ແນໃສ່ຢຸດຕິການຊ່ວງເສງປະກອບອາວຸດ,ທວງ ໃຫ້ລົດຜ່ອນກຳລັງທັບ ເພື່ອ

ການຜ່ອນຄາຍຄວາມເຄັ່ງຕຶງລະຫວ່າງຊາດ, ເພື່ອສັນຕິພາບແລະ ຄວາມປອດໄພຂອງບັນດາປະຊາຊາດ, ການທີ່ສະຫະພາບໂຊວຽດ ໃຫ້ການຊ່ວຍເຫລືອແກ່ອັບພະການິສະຖານຕາມຄຳຮ້ອງຂໍ ຂອງລັດ ຖະບານອັບພະການິສະຖານນັ້ນ ເປັນການກະທຳທີ່ຊອບທຳ,ອັນນັ້ນ ແມ່ນຂຶ້ນກັບອຳນາດອະທິປະໄຕ ຂອງປະຊາຊົນອັບພະການິສະຖານ ຢ່າງສົມບູນ.

ພວກເຮົາຢືນຢັນນະໂຍບາຍສັນຕິພາບ, ມິດຕະພາບກັບ ບັນ ດາປະເທດບ້ານໃກ້ເຮືອນຄຽງບົນພື້ນຖານແຫ່ງການເຄົາຣົບເອກະ ລາດ, ອະທິປະໄຕ ແລະພື້ນແຜ່ນດິນອັນຄົບຖ້ວນຂອງກັນ. ບໍ່ແຊກ ແຊງເຂົ້າວຽກງານ ພາຍໃນຂອງກັນ, ຮ່ວມມືກັນ ຢ່າງຍາວນານ ຕາມຫລັກການ ສະເຫມີພາບ, ຕ່າງຝ່າຍ ຕ່າງໄດ້ຮັບຜົນ ແນໃສ່ ພ້ອມກັນສ້າງອາຊີອາຄະເນ ໃຫ້ເປັນເຂດສັນຕິພາບ, ສະຖຽນລະ ພາບ, ມິດຕະພາບ ແລະການຮ່ວມມື, ປະຊາຊົນລາວພວກເຮົາມີ ຄວາມປາດຖະຫນາຢ່າງແຮງກ້າໃນສັນຕິພາບ. ຍ້ອນແນວນັ້ນເອງ ພວກເຮົາຈຶ່ງເດັດດ່ຽວປົກປັກຮັກສາເອກະລາດ, ອະທິປະໄຕຂອງ ຊາດ, ພ້ອມກັນນັ້ນ ກໍ່ປາກະ ຫນາຢາກແກ້ໄຂທຸກບັນຫາທີ່ເກີດຂຶ້ນ ໃນການພົວພັນກັບບັນດາປະເທດບ້ານໃກ້ເຮືອນຄຽງ ໂດຍສັນຕິວິທີ. ພວກເຮົາຈະເຮັດທຸກຄວາມສາມາດຂອງຕົນຕາມທິດດັ່ງກ່າວ.ພວກ ເຮົາຖືສະເຫມີວ່າ ການພົວພັນມິດຕະພາບລະຫວ່າງປະຊາຊົນເຮົາ ກັບປະຊາຊົນໄທ ແມ່ນສອດຄ່ອງຢ່າງສົມບູນ ກັບຜົນປະໂຫຍດຂອງ ປະຊາຊົນປະເທດທັງສອງ, ຂອງສັນຕິພາບ ແລະສະຖຽນລະພາບ ຢູ່ໃນພາກພື້ນນີ້,ພວກເຮົາຍິນດີປັບປຸງການພົວພັນລະຫວ່າງປະເທດ

ເຮົາກັບປະເທດໄທ ບົນພື້ນຖານ ຂອງຖະແຫລງການຮ່ວມ ເດືອນ ມັງກອນ ແລະເດືອນເມສາ ປີ ໑໙໗໙.

ພວກເຮົາສະໜັບສະໜູນຢ່າງສົມບູນ ຕໍ່ການຕໍ່ສູ້ຂອງປະຊາ ຊົນອາຊີ,ອາຟະລິກກາ ແລະອາເມລິກາ ລາຕິນ ເພື່ອເອກະລາດ ອິສະລະພາບ ແລະກ້າວໜ້າທາງສັງຄົມ.

ໂດຽເປັນສະມາຊິກຂອງຂະບວນການບັນດາປະເທດ ບໍ່ຮ່ວມ ກຸ່ມ, ພວກເຮົາ ຈະເຮັດສຸດຄວາມສາມາດຂອງຕົນ ເພື່ອປະກອບ ສ່ວນເຂົ້າໃນການເພີ່ມທະວີຄວາມສາມັກຄີຕ້ານຈັກກະພັດນິຍົມແລະ ກໍ່ສ້າງລະບົບເສດຖະກິດສາກົນໃໝ່ ບົນພື້ນຖານເຄົາຣົບ ອະທິປະ ໄຕແຫ່ງຊາດ.

ຕາມຈິດໃຈມະຕິຂອງກອງປະຊຸມສຸດຍອດທີ່ລາຮາວານ,ພວກ ເຮົາຈະຕັ້ງໜ້າປະກອບສ່ວນເຂົ້າໃນການເຮັດໃຫ້ກອງປະຊຸມ ຂັ້ນ ລັດຖະມົນຕີຂອງບັນດາປະເທດບໍ່ຮ່ວມກຸ່ມເຊິ່ງຈະເປີດຂຶ້ນຢູ່ນິວແດ ຣີນັ້ນ ໃຫ້ບັນລຸຜົນສຳເລັດຢ່າງດີງາມ, ຕ້ານກົນຊຸບາຽຂອງຈັກກະ ພັດນິຍົມ, ລັດທິຂະຫຍາຽອານາເຂດແຜ່ອຳນາດຊາດໃຫຍ່ ແລະ- ບັນດາອິດທິກຳລັງ ປະຕິການອື່ນໆ ທີ່ພວມຊອກວິທີຮ້ຽແປດ ພັນປະ ການເພື່ອສວຽໃຊ້ຄວາມບໍ່ຖືກຕ້ອງຄ່ອງກັນລະຫວ່າງປະເທດສະມາ ຊິກຈຳນວນໜຶ່ງ ໂດຽຫວັງແບ່ງແຍກ ແລະ ເຮັດໃຫ້ຂະບວນການ ອ່ອນເພຽລົງ.

ພວກເຮົາ ສະໜັບສະໜູນຢ່າງສົມບູນ ຕໍ່ຊົນຊັ້ນກຳມະກອນ ແລະປະຊາຊົນຜູ້ອອກແຮງງານໃນບັນດາປະເທດທຶນນິຍົມທີ່ພວມຕໍ່ສູ້ ເພື່ອສິດດຳລົງຊີວິດ, ປະຊາທິປະໄຕ, ສັນຕິພາບແລະຄວາມກ້າວ

ໜ້າທາງສັງຄົມ.

ພວກເຮົາສືບຕໍ່ນະໂຍບາຍພົວພັນກັບທຸກໆປະເທດຕາມຫລັກ-ການແຫ່ງການພ້ອມກັນຄົງຢູ່ໂດຍສັນຕິ ລະຫວ່າງບັນດາປະເທດທີ່ມີລະບອບການເມືອງ ແລະ ສັງຄົມແຕກຕ່າງກັນ. ໂດຍເປັນສະມາຊິກ ຂອງອົງການສະຫະປະຊາຊາດ, ພວກເຮົາ ຈະສືບຕໍ່ການຕໍ່ສູ້ເພື່ອໃຫ້ຈິດໃຈຂອງກົດບັດສະຫະປະຊາຊາດ ໄດ້ຮັບການປະຕິບັດ, ບັນຫາອັນຮີບດ່ວນ ໃນປະຈຸບັນແມ່ນ ພ້ອມກັນກັບມວນມະນຸດທີ່ກ້າວໜ້າດຳເນີນການຕໍ່ສູ້ຢ່າງບໍ່ຮູ້ອິດຮູ້ເມື່ອຍຕ້ານການກໍ່ຄວາມເຄັ່ງຕຶງໃຫ້ແກ່ສະຖານະການຂອງໂລກ, ຕ້ານການຊ່ວງເສງ ປະກອບອາວຸດ, ທວງໃຫ້ລົດຜ່ອນກຳລັງທັບເພື່ອການຜ່ອນຄາຍຄວາມເຄັ່ງຕຶງລະຫວ່າງຊາດ, ເພື່ອສັນຕິພາບ, ຄວາມປອດໄພ ແລະການຮ່ວມມືລະຫວ່າງບັນດາປະຊາຊາດ.

ບັນດາທ່ານ ທີ່ນັບຖື,

ໃນ ໕ ປີທີ່ຜ່ານມາ, ປະຊາຊົນບັນດາຊົນຊາດເຮົາ ໄດ້ສາມັກຄີເປັນເອກະພາບກັນຢູ່ອ້ອມຂ້າງພັກ ແລະລັດ, ຜ່ານຜ່າຄວາມຫຍຸ້ງຍາກນາໆປະການດ້ວຍຄວາມອົງອາດກ້າແກ່ນ, ບາກບັ່ນສູ້ຊົນກ້າວຂຶ້ນ ແລະຍາດເອົາໄຊຊະນະມາໄດ້ ຢ່າງໃຫຍ່ຫລວງ, ຮອບດ້ານ, ເປັນພື້ນຖານ ແລະມີລັກສະນະໜັກແໜ້ນ.

ນີ້ແມ່ນຜົນງານທີ່ໄດ້ສ້າງຂຶ້ນໃນຂັ້ນເລີ່ມຕົ້ນຂອງການປະຕິວັດໃໝ່ ທີ່ເຕັມໄປດ້ວຍຄວາມທົດສອບ, ຄວາມຫຍຸ້ງຍາກ ແລະທຸກໆຄົນ ຈະແມ່ນຢູ່ໃນຖານະວຽກງານໃດກໍ່ຍັງບໍ່ທັນມີປະສົບການເທື່ອ. ດັ່ງນັ້ນ ຈຶ່ງສາມາດເວົ້າໄດ້ວ່າ ໄຊຊະນະນັ້ນ ແມ່ນມີຄວາມໝາຍ

ອັນໃຫຍ່ຍິ່ງ.

ແຕ່ພວກເຮົາກໍ່ຮັບຮູ້ຢ່າງຈະແຈ້ງວ່າ ນີ້ເປັນພຽງແຕ່ຜົນງານ ໃນຂັ້ນຕົ້ນບົນເສັ້ນທາງອັນຍາວຍືດແຫ່ງການກ້າວຂຶ້ນສູ່ສັງຄົມນິຍົມ.

ບົດຮຽນໃຫຍ່ກວ່າໝູ່ໃນໄລຍະທີ່ຜ່ານມາເຊິ່ງພວກເຮົາຕ້ອງ ກຳແໜ້ນນັ້ນກໍ່ຄື ຕໍ່ໜ້າາງທີ່ຂອງການປະຕິວັດໃໝ່ນັ້ນ ພວກເຮົາຕ້ອງ ຍຶດໝັ້ນ ການປະຕິບັດແນວທາງ, ແຜນນະໂຍບາຍ, ນະໂຍບາຍ ຂອງພັກ ແລະລັດ, ເຮັດໃຫ້ຄວາມຮັບຮູ້ ແລະ ການຈັດຕັ້ງມີການ ຫັນປ່ຽນຢ່າງທັນການ. ເພີ່ມທະວີຄວາມສາມັກຄີປວງຊົນ ຄວາມ ສາມັກຄີບັນດາຊົນຊາດ, ເສີມຂະຫຍາຍເຫງົ້າພະລັງທຸກ ຢ່າງ ຂອງຊາດສົມທົບກັບການຊ່ວຍເຫຼືອ ຂອງສາກົນແລະກຳລັງ ແຮງ ຂອງຍຸກສະໄໝ, ອີງໃສ່ລະບົບສັງຄົມນິຍົມຢ່າງຂາດຂັ້ນ, ເດັດ ດ່ຽວ ຕ້ານລັດທິຂະຫຍາຍອານາເຂດ, ແຜ່ອຳນາດຊາດໃຫຍ່ແລະ ຈັກກະພັດນິຍົມ ທັງນີ້ ເພື່ອປົກປັກຮັກສາ ແລະ ສ້າງສາ ປະເທດ ຊາດສັງຄົມນິຍົມ.,

ບົດຮຽນ ແຫ່ງໄຊຊະນະດັ່ງກ່າວນັ້ນກໍ່ແມ່ນ ແນວຄິດຊີ້ນຳໃຫ້ ພວກເຮົາໃນຄວາມບາກບັ່ນ ບຸກບືນກ້າວຂຶ້ນປະຕິບັດໜ້າທີ່ອັນໜັກ ໜ່ວງໃນໄລຍະຕໍ່ໜ້ານີ້ໃຫ້ປາກົດເປັນຈິງ.

ປະຈຸບັນນີ້ ພວກເຮົາກ້າວເຂົ້າສູ່ທົດສະວັດທີ ໘ ແລະ ພວມ ກຽມພົນຂະຫຍາຍການປະຕິບັດ ແຜນການ ໕ ປີ, ນັບວ່າເປັນຄັ້ງ ທຳອິດ ທີ່ພວກເຮົາກ້າວເຂົ້າສູ່ການສ້າງສາປະເທດຊາດຕາມແຜນ ການໄລຍະຍາວ.

ການປະຕິບັດແຜນການດັ່ງກ່າວຢ່າງສຳເລັດຜົນ ມັນຈະເປັນ

ການປັບປຸງໄຊຊະນະທີ່ພວກເຮົາຍາດເອົາມາໄດ້ ແລະ ເປັນການສ້າງພື້ນຖານອັນໜັກແໜ້ນໃຫ້ແກ່ແຜນການຕໍ່ໄປ ອັນແມ່ນໃສ່ສ້າງປະເທດເຮົາໃຫ້ເປັນປະເທດສັງຄົມນິຍົມທີ່ຮັ່ງມີເຂັ້ມແຂງ, ນຳເອົາຄວາມຢູ່ດີກິນດີ, ຄວາມສົມບູນພູນສຸກ ໃນເອກະລາດ, ອິສະລະພາບມາສູ່ລູກຫລານຂອງພວກເຮົາ.

ດ້ວຍຄວາມໝາຍດັ່ງກ່າວນັ້ນ ຂ້າພະເຈົ້າ ເຊື່ອແນ່ວ່າ ໃນກອງປະຊຸມ ສະພາປະຊາຊົນສູງສຸດຄັ້ງນີ້ ບັນດາທ່ານຈະເສີມ ຂະຫຍາຍສະຕິປັນຍາຂອງຕົນເຂົ້າໃນການປຶກສາຫາລື ແລະຜ່ານໜ້າທີ່ຂອງແຜນການ ໕ ປີຢ່າງເປັນທາງການ. ຈາກນັ້ນ ເພື່ອຈະນຳໄປໂຄສະນາເຜີຍແຜ່ ຢ່າງກວ້າງຂວາງໃນທຸກຂັ້ນ ທຸກຂະແໜງການ, ທ້ອງຖິ່ນຕ່າງໆ, ໃຫ້ພີ່ນ້ອງ ບັນດາຊົນຊາດ, ເຮັດໃຫ້ທິດທາງຂອງແຜນການນີ້ກາຍເປັນຄວາມຮັບຜິດຊອບລະອຽດຕົວຈິງ - ແລະ ເປັນຄວາມຕັດສິນໃຈຂອງມະຫາຊົນ. ພວກເຮົາຕ້ອງເຮັດໃຫ້ພົນລະເມືອງທຸກຄົນເຫັນແຈ້ງວ່າ ອານາຄົດຂອງຕົນແມ່ນຕິດແໜ້ນກັບພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດ ສັງຄົມນິຍົມ ປຸກລະດົມປວງຊົນ ບັນດາຊົນຊາດໃຫ້ເພີ່ມທະວີຄວາມສາມັກຄີ ກັນ ແລະເພີ່ມທະວີຄວາມສາມັກຄີສາກົນ, ຜ່ານຜ່າທຸກຄວາມຫຍຸ້ງ ຍາກດ້ວຍຄວາມ ອົງອາດກ້າຫານ, ຕໍ່ສູ້ກັບສັດຕູທຸກໂຕດ້ວຍຄວາມ ກ້າແກ່ນແໜ້ນໜຽວ, ສຳເລັດໜ້າທີ່ແຜນການ ໕ ປີ ແຫ່ງ ລັດຄັ້ງທຳອິດຢ່າງມີໄຊ.

ໃນສະເພາະໜ້ານີ້, ເຖິງແມ່ນວ່າ ພວກເຮົາຈະປະສົບກັບຄວາມຫຍຸ້ງຍາກ ແລະການທົດສອບແນວໃດກໍ່ຕາມ, ແຕ່ດ້ວຍຄວາມ

ສະດວກອັນເປັນພື້ນຖານ ທັງຢູ່ພາຍໃນ ແລະນອກປະເທດ, ໂດຍເສີມຂະຫຍາຍຈິດໃຈປະຕິວັດບຸກ ແລະມູນເຊື້ອປະຕິວັດ ຂອງຊາດເຮົາ, ພວກເຮົາຈະຕ້ອງມີໄຊຢ່າງແນ່ນອນ.

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ຫມັ້ນຍືນ!.

ພັກປະຊາຊົນປະຕິວັດລາວ ຫມັ້ນຍືນ!.

" ເສີມຂະຫຍາຍທ່າແຮງທຸກຢ່າງຂອງຊາດ ສົມທົບຢ່າງແຫນ້ນແຟ້ນກັບກຳລັງແຮງຂອງຍຸກສະໄຫມ, ພວກເຮົາມີຄວາມສາມາດພຽງພໍ ເພື່ອຜ່ານຜ່າທຸກຄວາມຫຍຸ້ງຍາກ ແລະພາປະເທດຊາດຂອງພວກເຮົາກ້າວເດີນໄປຢ່າງຫນັກແຫນ້ນ ສູ່ຈຸດຫມາຍອັນສູງສົ່ງແຫ່ງສັງຄົມນິຍົມ".

ພິມທີໂຮງພິມແຫ່ງຊາດ
ຈຳນວນ 15.000 ຫົວ 13×18,4 ຊມ
ພິມແລ້ວວັນທີ 20–8–81